ກຸ່ມວິຊາສະເພາະ

ສາຍສ້າງຄູມັດທະຍົມ

# ວິຊາ ປະຫວັດສາດຍີ່ປຸ່ນ



















ສົກຮຽນ 2022-2023

# ຄຳນຳ

ເພື່ອປັບປຸງຄຸນນະພາບ, ປະສິດທິພາບຂອງການກໍ່ສ້າງຄູໃຫ້ສູງ, ແນ່ໃນເພີ່ມສະມັດຖະພາບຂອງຄູ ແລະ ແລະ ພັດທະນາອາຊີຄູໃຫ້ດີຂຶ້ນເທື່ອລະກ້າວນັ້ນ. ພວກຂ້າພະເຈົ້າຈຶ່ງໄດ້ຮຽບຮຽງປຶ້ມແບບຮຽນນີ້ຂຶ້ນມາ ເພື່ອຮັບໃຊ້ຢູ່ພາຍໃນສະຖາບັນສ້າງຄູ , ໂດຍສະເພາະໄດ້ພັດທະນາຕາມທິດທາງການສ້າງຄູແບບໃໝ່ ທີ່ນັ້ນການປູກອຸດົມການ, ຄຸນນຸທຳ ແລະ ຈິດວິນຍານຂອງຄວາມເປັນຄູໃຫ້ແກ່ນັກຮຽນຄູ, ເຮັດໃຫ້ເຂົາເຈົ້າມີທັກສະວິຊາຊີບຄູທີ່ໜັກແໜ້ນ, ເຂົ້າໃຈດ້ານການພົວພັນສາກົນ, ຄວາມຮູ້ທົ່ວໄປ ແລະ ຄວາມຮູ້ວິຊາສະເພາະທີ່ແທດເໝາະກັບຊັ້ນທີ່ຕົນເອງສອນ

ປຶ້ມເຫຼັ້ມນີ້ໄດ້ພັດທະນາດ້ວຍການປະກອບສ່ວນຈາກຄູພະນັກງານ- ຄູອາຈານ , ນັກຮຽນນັກສຶກສາ ທີ່ໃຫ້ຄວາມຮ່ວມມື ແລະ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງເພື່ອແນ່ໃສ່ເຮັດໃຫ້ນັກຮຽນຄູທີ່ຈົບຈາກສະຖາບັນສ້າງຄູມີປະສິດທິພາບດີ, ມີຄວາມຮູ້ ແລະ ຄວາມເຈົ້າໃຈລາຍວິຊາທີ່ຕົນເອງຢ່າງເລິກເຊິ່ງ,ຮູ້ຈັກໝູນໃຊ້ວິທີການສິນສອນຫຼາຍຮູບຫຼາຍສີ ມີຄວາມຊຳນານໃນການສອນ  ແບບເອົານັ້ນຮຽນເປັນໃຈກາງ, ຮູ້ຈັກຜະລິດ ແລະ ນາໃຊ້ອຸປະກອນການຮຽນ-ການສອນທີ່ງ່າຍດາຍ ມີຄວາມຮັບຜິດຊອບໃນການພັດທະນາອາຊີບຄູຂອງຄົນ.

ປຶ້ມເຫຼັ້ມນີ້ຮຽບຮຽງຂຶ້ນມາອາດປະສະຈາກ ໄດ້ຄວາມຂາດຕົກບົກຜ່ອງ, ບໍ່ເໝາະສົມ, ບໍ່ສອດຄ່ອງ ແລະ ບໍ່ທັນສະພາບ ກະລຸນາປະກອບຄຳຕິດຄຳເຫັນຂອງຕົນ ເພື່ອຊ່ວຍປັບປຸ່ງເຮັດໃຫ້ປຶ້ມເຫຼັ້ມນີ້ສົມບູນ ແລະ ມີປະສິດທິຜົນຢ່າງຍິ່ງຂຶ້ນ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູ ສາລະວັນ

ສະພາວິທະຍາສາດ ເລກທີ......05........ສພວສ

## ໜັງສືຮັບຮອງ

## ການອະນຸມັດຜ່ານ ຮັບຮອງການຄົ້ນຄວ້າ, ຂຽນເອກະສານ

- ອີງຕາມ: ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການເຄື່ອນໄຫວກິດຈະກຳສະພາວິທະຍາສາດຂອງວິທະຍາໄລຄູສາລະວັນປະຈຳສົກປີ 2022

ຈາກຜົນການກວດກາ, ກວດສອບດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າ ການຄົ້ນຄວ້າ, ຂຽນເອກະສານ ມີຄວາມຖືກຕ້ອງຕາມເນື້ອໃນຕາມຂໍ້ກຳນົດຂອງສະພາວິທະຍາສາດ ແລະ ສະພາວິທະຍາສາດໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງນຳເຂົ້າໃນຂະບວນການຮຽນ-ການສອນ ໃນວິທະຍາໄລຄູສາລະວັນ

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| 1. ປທ ຄຳຂຶງ ຈັນທະວົງສັກ | |
| 2. ຊອ ປອ ໂພທອງ ພົງສົງຄາມ | |
| 3. ປທ ມອນໄຊ ຂັນທະຈັກ | |

ທີ່ສາລະວັນ, ວັນທີ 16 FEB 2023

**ປະທານສະພາວິທະຍາສາດ**

ອຈ. ປ. ສົມປອງ ແສງພຸດທະວິສຸກ

# ສາລະບານ

ບົດທີ 1 ຮ່ອງຮອຍວັດທະນະທຳຍີ່ປຸ່ນ.........................................................................................1
ບົດທີ 2 ຍີ່ປຸ່ນສະໄໝບູຮານ( Ancien japan ) ....................................................................14
ບົດທີ 3 ການປະກົດຕົວ ແລະ ການພັດທະນາການລັດບູຮານຍີ່ປຸ່ນ.........................................................24
ບົດທີ 4 ຍີ່ປຸ່ນຍຸກກາງ ( ຄສ 1185-1868 )..........................................................................37
ບົດທີ 5 ຍີ່ປຸ່ນສະໄໝເອໂດະ Edo ( ຄສ 1603-1868 ) .........................................................45
ບົດທີ 6 ຍີ່ປຸ່ນສະໄໝການປົກຄອງດ້ວຍຈັກກະພັດ (ຄສ1868- 1945 )..............................................49
ບົດທີ 7 ປະເທດຍີ່ປຸ່ນຫຼັງສົງຄາມໂລກຕັ້ງທີ II ....................................................................69
ບົດທີ 8 ການຮ່ວມມືລາວ-ຍີ່ປຸ່ນ.......................................................................................77

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູ ສາລະວັນ

ສະພາວິທະຍາສາດ

ເລກທີ......05.........ສພວສ

# ໜັງສືຮັບຮອງ

## ການອະນຸມັດຜ່ານ ຮັບຮອງການຄົ້ນຄວ້າ, ຂຽນເອກະສານ

- ອີງຕາມ: ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການເຄື່ອນໄຫວກິດຈະກຳສະພາ ວິທະຍາສາດຂອງວິທະຍາໄລຄູສາລະວັນປະຈຳສົກປີ 2022

ຈາກຜົນການກວດກາ, ກວດສອບດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າ ການຄົ້ນຄວ້າ, ຂຽນເອກະສານ ມີຄວາມຖືກຕ້ອງຕາມເນື້ອໃນຕາມຂໍ້ກຳນົດຂອງສະພາວິທະຍາສາດ ແລະ ສະພາວິທະຍາສາດໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງນຳເຂົ້າໃນຂະບວນການຮຽນ-ການສອນ ໃນວິທະຍາໄລຄູສາລະວັນ

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| 1. ປທ ຄຳຂິງ ຈັນທະວົງສັກ | |
| 2. ຊອ ປອ ໂພທອງ ພົງສິງຄາມ | |
| 3. ປທ ມອນໄຊ ຂັນທະຈັກ | |

ທີ່ສາລະວັນ, ວັນທີ 16 FEB 2023

ປະທານສະພາວິທະຍາສາດ

ອຈ. ບ. ສົມປອງ ແສງພອນວິສຸກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູ ສາລະວັນ

ຫ້ອງການວິທະຍາສາດສັງຄົມ

ເລກທີ ...019...ຫກ.ສກ

## ໜັງສືຮັບຮອງການຄົ້ນຄວ້າ, ຂຽນເອກະສານ,ວິໄຈ

| ລ/ດ | ຊື່ຫົວຂໍ້ | ຫ້ອງການ | ຜູ້ຮຽບຮຽງຂຽນເອກະສານ | ຜູ້ກວດແກ້ |
|---|---|---|---|---|
| 1 | ຮຽບຮຽງເອກະສານ ປະກອບການສອນວິຊາ ປະຫວັດສາດຍີ່ປຸ່ນ | ຫ້ອງການ ວິທະຍາສາດ ສັງຄົມ | ຊອ ນ ລັດສະໝີ ພົນທິສານ | ຊອ ນາງ ອິນປອນ ພັງສຸວັນ<br>ປທ ບຸນທັນ ສຸກສະຫວັນ<br>ປທ ນາງ ລຸ້ງຟ້າ ຂັນຕິວົງ |

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| ຊອ ນາງ ອິນປອນ ພັງສຸວັນ | |
| ປທ ບຸນທັນ ສຸກສະຫວັນ | |
| ປທ ນາງ ລຸ້ງຟ້າ ຂັນຕິວົງ | |

ທີ່ສາລະວັນ, ວັນທີ .......................

**ຫ້ອງການວິທະຍາສາດສັງຄົມ**

ນ. ຄຳສະຫວັນ ຈັນສີຍະວົງ

# ບົດທີ 1

## ຮອງຮອຍວັດທະນະທຳຂອງຍີ່ປຸ່ນ

### 1. ທີ່ຕັ້ງຂອບເຂດພູມສັນຖານຂອງປະເທດຍີ່ປຸ່ນ

ປະເທດຍີ່ປຸ່ນຕັ້ງຢູ່ພາກຕາເວັນອອກຂອງທະວີບອາຊີລະຫວ່າງເສັ້ນຂະໜານທີ 31 ອົງສາເໜືອ ລັກສະນະປະເທດເປັນໝູ່ເກາະຕັ້ງຢູ່ໃນມະຫາສະໝຸດປາຊີຟິກ ມີເນື້ອທີ່ 377.873 ກິໂລຕາແມັດ ເປັນປະເທດທີ່ໃຫຍ່ອັນດັບທີ 62 ຂອງໂລກມີຊາຍແດນອ້ອມຮອບດ້ວຍທະເລ ແລະ ມະຫາສະໝຸດ.

- ພາກຕາເວັນຕົກຕິດກັບຊ່ອງແຄບເກົາຫຼີ ແລະ ສາທາລະນະລັດປະຊາຊົນຈີນໂດຍມີທະເລຍີ່ປຸ່ນຂັ້ນ.
- ທິດເໜືອຕິດກັບປະເທດຣັດເຊຍມີທະເລໂອຫອດເປັນເສັ້ນແບ່ງດິນແດນ.

ເກາະທີ່ນອນຢູ່ໃນປະເທດຍີ່ປຸ່ນມີປະມານ 3000 ໝູ່ເກາະເຊິ່ງເກາະທີ່ສຳຄັນມີຢູ່ 4 ເກາະເຊັ່ນ:

- ເກາະຮອກໄກໂດ ( Hokkaido ) ຕັ້ງຢູ່ເໜືອສຸດມີເນື້ອທີ່ 83.517 ກິໂລຕາແມັດ
- ເກາະຮອນຊູ ( Honshu ) ເປັນເກາະໃຫຍ່ສຸດ ແລະ ເປັນທີ່ຕັ້ງຂອງນະຄອນຫຼວງກຽວໂຕມີເນື້ອທີ່ 230.966 ກິໂລຕາແມັດ
- ເກາະຊິໂກກຸ ( Shikoku ) ແປວ່າ " ສີ່ເມືອງ " ມີເນື້ອທີ່ 18.798 ກິໂລຕາແມັດ
- ເກາະກິວຊູ (Kyushu ) ແປວ່າ " ເກົ້າເມືອງ " 44.364 ກິໂລຕາແມັດ

- ເມືອງຫຼວງຂອງປະເທດຍີ່ປຸ່ນແມ່ນ ໂຕກຽວ ( Tokyo )
- ວັນຊາດ 3 /4 / 1947 ນາຍົກລັດຖະມົນຕີແມ່ນ ທ່ານ ຍາຊຸ ໂອະຟູກະດະ
- ປະຊາກອນມີ 127.433.494 ຄົນ ( ສຳຫຼວດໃນປີ 2007 )



ກ. ສະພາບທາງດ້ານພູມສາດ

ເນື່ອງຈາກວ່າຄົນຍີ່ປຸ່ນເປັນຄົນຢູ່ໃນເກາະທຳມະຊາດ ສິ່ງເສີມໃຫ້ເປັນພວກທີ່ທ່ອງທ່ຽວໄປຕາມທະເລການທີ່ອ່າວບໍ່ມີຄື້ນທະເລແຮງ ແລະ ເກາະຕ່າງໆບໍ່ຢູ່ໃກ້ກັນຫຼາຍ, ເໝາະສົມແກ່ການສ້າງທ່າເຮືອເຊິ່ງຈະຍົກໃຫ້ເຫັນພຽງ 2 ທ່າເຮືອຄື: ທ່າເຮືອນະງະຊະກິ ແລະ ໂຍໂກະຮະມະ ຈັດຢູ່ໃນຈຳພວກທ່າເຮືອທີ່ດີທີ່ສຸດຂອງໂລກ. ນອກນັ້ນຄົນຍີ່ປຸ່ນຍັງມີຊື່ສຽງໃນການຫາປາ ເກາະຕ່າງໆຂອງຍີ່ປຸ່ນຕັ້ງຢູ່ໃກ້ກັບຝັ່ງທະເລຕາເວັນອອກຂອງທະວີບອາຊີ ນັບເປັນການສົ່ງເສີມໃຫ້ຍີ່ປຸ່ນມີຄວາມສຳພັນກັບແຜ່ນດິນໃຫຍ່ ເຊິ່ງເກາະທີ່ຢູ່ໃກ້ສຸດກັບແຜ່ນດິນໃຫຍ່ໄດ້ແກ່:

1. ເກາະແຊຄະລິນທາງເໜືອ
2. ເກາະໂຟໂມຊາ ທາງໃຕ້
3. ເກາະຄິວຊູກັບເກົາຫຼີຕອນກາງເຊິ່ງເປັນບ່ອນທີ່ສຸດຍ້ອນວ່າບັນພະບູລຸດຂອງຍີ່ປຸ່ນໄດ້ເດີນທາງເຂົ້າມາໂດຍຜ່ານທາງເກົາຫຼີ, ວັດທະນະທຳຈີນ ແລະ ວັດທະນະທຳອິນເດຍທີ່ໄຫຼມາສູ່ຍີ່ປຸ່ນກໍ່ຜ່ານມາທາງ ເກົາຫຼີ,ໂຟໂມຊາ ທາງໃຕ້ ເປັນເສັ້ນທາງຕິດຕໍ່ຄ້າຂາຍກັບແຜ່ນດິນໃຫຍ່ທີ່ສະດວກທີ່ສຸດກໍ່ເປັນທາງຜ່ານ ເກົາຫຼີ, ພວກບັນພະບູລຸດໄອນຸ (Ainu) ອາດຈະຜ່ານເຂົ້າມາທາງຄະຣະຟູໂຕສ່ວນເຊື້ອສາຍ ມາຣະຍູ ອາດຈະມີຊົນຊາດອື່ນຈາກແຜ່ນດິນໃຫຍ່ບາງພວກເດີນທາງເຂົ້າມາທາງໝູ່ເກາະໂຟໂມຊາ.

ຄວາມຍາວຂອງເກາະ ລວມກັບການຢູ່ໃກ້ແຜ່ນດິນໃຫຍ່ຂອງທະວີບອາຊີ ມີຄວາມສຳຄັນຕໍ່ກັບປະເທດຍີ່ປຸ່ນ, ໃນສະໄໝປະຫວັດສາດມີຫຼາຍພວກຫຼາຍເຫຼົ່າເຂົ້າມາຍີ່ປຸ່ນທາງສ່ວນຕ່າງໆ ພວກທີ່ຜ່ານເຂົ້າມາທາງ ຄະຣະຟູໂຕ ຄື: ເຜົ່າຕ່າງໆທີ່ຄ້າຍຄືກັບພວກທີ່ຢູ່ໃນ ໄຊບີເລຍ ທີ່ຜ່ານມາທາງເກົາຫຼີ ແລະ ເຜົ່າຕ່າງໆຈາກອາຊີກາງ,ຈີນ,ເກົາຫຼີ ແລະ ເຂົ້າມາທາງໃຕ້ຄືພວກທີ່ມີເຊື້ອສາຍ ມະລາຍູທີ່ຕັ້ງທາງພູມສາດຂອງຍີ່ປຸ່ນເຮັດໃຫ້ຍີ່ປຸ່ນສາມາດຄວບຄຸມການແລ່ນເຮືອ,ການຄ້າຂາຍ ແລະ ການສົ່ງສິນຄ້າ ໃນຕາເວັນອອກໄກຂອງອາຊີໄດ້.

ຈາກທີ່ຕັ້ງທາງພູມີສາດທີ່ມີລັກສະນະຍາວຢຽດແຕ່ເໜືອຫາໃຕ້ຕາມລວງຂອງເສັ້ນແວງ ແລະ ສະພາບພູມີປະເທດທີ່ປະກອບໄປດ້ວຍສາຍພູໃຫ່ຍນ້ອຍເນັ່ງຍາວຢຽດຕາມລວງຍາວຂອງເກາະໂດຍສະເພາະໃນເກາະ Honshu ໄດ້ເປັນຕົວແປທີ່ສຳຄັນເຮັດໃຫ້ຍີ່ປຸ່ນມີພູມອາກາດແຕກຕ່າງກັນໃນແຕ່ລະເຂດແຕ່ເໜືອຫາໃຕ້ ແລະ ຕາເວັນຕົກຫາຕາເວັນອອກ

- ພາກເໜືອໂດຍສະເພາະເກາະ Hokkaido ຍາມໜາວອາກາດໜາວຈັດ ແລະ ແກ່ຍາວຍາມຮ້ອນອາກາດຮ້ອນ
- ທາງພາກໃຕ້ບໍລິເວນເກາະ Kyushu ແລະ Shikoku ມີອາກາດອົບອຸ່ນອຸນະພູມສູງໃນລະດູຮ້ອນ ແລະ ໃນລະດູໜາວອາກາດບໍ່ໜາວຈັດ.
- ພາກຕາເວັນອອກເລາະລຽບຕາມແຄມຝັ່ງທະເລຍີ່ປຸ່ນມີອາກາດມືດຄຶ້ມ ອາກາດປັ່ນປ່ວນເປັນສ່ວນໃຫຍ່ ລະດູໜາວຈະມີຫິມະຕົກຢ່າງໜັກເຮັດໃຫ້ພື້ນດິນໃນແຖບນີ້ມີຫິມະປົກຄຸມໜາເຖິງ 4-5 ແມັດ. ຈາກການປ່ຽນແປງຂອງພູມອາກາດນີ້ເຮັດໃຫ້ຍີ່ປຸ່ນມີ 4 ລະດູຄື



ຮູບທີ 1 ລະດູໃບໄໄມ້ປົ່ງ

1. ລະດູໜາວFuyu

ລະດູການສະກີເລີ່ມຕົ້ນແລະພາກເໜືອແມ່ນປົກຫຸ້ມດ້ວຍຫິມະຝຸ່ນ. ທີ່ບໍ່ມີໃຜຄື ສະພາບອາກາດໃນລະດູການນີ້ແມ່ນເຢັນຕະຫຼອດເດືອນມັງກອນໃນແຜ່ນດິນໃຫຍ່. ແລະມັນຈະກາຍເປັນສີຂີ້ເຖົ່າແລະບໍ່ງາມຄືກັບປົກກະຕິໃນເດືອນກຸມພາ. ອົບອຸ່ນຮ່າງກາຍຂອງທ່ານດ້ວຍ sake ຮ້ອນແລະ sukiyaki.



ຮູບທີ 2 ລະດູໃບໄໄມ້ປົ່ງ

2. ລະດູໃບໄມ້ປົ່ງHaru
3. ລະດູຮ້ອນNatsu
4. ລະດູໃບໄມ້ຫຼົ່ນAki

ເມື່ອອາກາດເຢັນລົງ ລະດູໃບໄມ້ປົ່ງສ່ອງແສງຜ່ານເຂດຊົນນະບົດ. ມັນເລີ່ມຕົ້ນຈາກເກາະທາງເຫນືອຂອງ Hokkaido ແລະລົງໄປພາກໃຕ້. ໃບດູໃບໄມ້ລົ່ນຕົກລົງໃນພື້ນທີ່ທົ່ວປະເທດລະຫວ່າງທ້າຍເດືອນກັນຍາຫາຕົ້ນເດືອນທັນວາ. ຄືກັນກັບພາກຮຽນ spring ລະດູໃບໄມ້ຫຼົ່ນແມ່ນດີເລີດສໍາລັບການສໍາຫຼວດກາງແຈ້ງ ແລະເປັນເວລາທີ່ດີທີ່ຈະລອງອາຫານທີ່ແຕກຕ່າງກັນ. ຂອງຍີ່ປຸ່ນ



ຮູບທີ 3 ລະດູໃບໄໃມ້ປົ່ງ

ຍີ່ປຸ່ນເປັນປະເທດໜຶ່ງທີ່ມີໄພທຳມະຊາດ ເກີດຂຶ້ນຢ່າງເນື່ອງນິດລຽນຕິດເຊິ່ງໄພທຳມະຊາດ ນັ້ນມີຜົນກະທົບຢ່າງຫຼວງຫຼາຍຕໍ່ກັບຊາວຍີ່ປຸ່ນ ບັນດາໄພທຳມະຊາດດັ່ງກ່າວປະກອບມີ ພາຍຸໃຕ້ຝຸ່ນ Taifu ແຜ່ນດນໄຫວ Jisninພູເຂົາໄຟ Kasang.

ປະເທດຍີ່ປຸ່ນ ເປັນລັດເອກະລາດໝູ່ເກາະໃນອາຊີຕາເວັນອອກຕັ້ງຢູ່ໃນມະຫາສະໝຸດປາຊີຟິກນອກຝັ່ງຕາເວັນອອກຂອງແຜ່ນດິນໃຫ່ຍເອເຊຍ ທາງຕາເວັນຕົກຕິດກັບຄາບສະໝຸດເກົາຫຼີ ແລະ ປະເທດຈີນ ໂດຍມີທະເລຍີ່ປຸ່ນຂັ້ນສ່ວນທາງທິດເໜືອຕິດກັບປະເທດລັດເຊຍ ມີທະເລໂອຄ໊ອຕສ ເປັນເສັ້ນແບ່ງແດນ

ຕົວອັກສອນຄັນຈິຂອງຊື່ຍີ່ປຸ່ນ ແປວ່າ ຖິ່ນກຳເນີດຂອງດວງອາທິດ ຈຶ່ງເຮັດໃຫ້ມັກໄດ້ຊື່ວ່າ ດິນແດນແຫ່ງອາທິດອຸໄທ ປະເທດຍີ່ປຸ່ນເປັນໝູ່ເກາະກຣອຍພູເຂົາໄຟສະຫຼັບຊັ້ນເຊິ່ງມີເກາະປະມານ 6,852 ເກາະ ເຊິ່ງຄິດເປັນພື້ນທີ່ແຜ່ນດິນປະມານຮ້ອຍລະ 97 ຂອງະເທດຍີ່ປຸ່ນ ແບ່ງເປັນ 47 ຈັງຫວັດ ໃນ 8 ພູມີພາກ ໂດຍມີ ຮັອກໄກໂດ ເປັນຈັງຫວັດເໜືອສຸດ ແລະ ໂອກິນາວະເປັນຈັງຫວັດໃຕ້ສຸດ ປະເທດຍີ່ປຸ່ນມີປະຊາກອນ 127 ລ້ານຄົນເປັນປະເທດທີ່ມີປະຊາກອນຫຼາຍທີ່ສຸດເປັນອັນດັບ 10 ຂອງໂລກ ຊາວຍີ່ປຸ່ນເປັນຮ້ອຍລະ 98,5 ຂອງປະຊາກອນທັງໝົດຂອງປະເທດຍີ່ປຸ່ນປະມານ 9,1 ລ້ານຄົນ ອາໄສຢູ່ໃນກຸງ ໂຕກຽວ ເມືອງຫຼວງຂອງປະເທດ

ການວິໄຈທາງບູຮານຄະດີລະບຸວ່າມີມະນຸດາໄສໃນຍີ່ປຸ່ນປັດຈຸບັນຄັ້ງແລກຕັ້ງແຕ່ຍຸກຫີນເກົ່າ ການກ່າເຖິງຍີ່ປຸ່ນເປັນລາຍລັກອັກສອນຄັ້ງແລກປະກົດໃນບັນທຶກຂອງລາຊະສຳນັກຈີນຕັ້ງແຕ່ຄຣິດຕະສະຕະວັດທີ 1 ຍີ່ປຸ່ນໄດ້ຮັບອິດທິພົນຈາກຈີນຫຼາຍດ້ານເຊັ່ນ: ພາສາ, ການປົກຄອງ ແລະ ວັດທະນະທຳ ແຕ່ຂະນະດຽວກັນກໍ່ມີການປັບປ່ຽນໃຫ້ເປັນ

ເອກະລັກຂອງຕົນເອງ ຈຶ່ງເຮັດໃຫ້ຍີ່ປຸ່ນມີວັດທະນະທຳທີ່ໂດດເດັ່ນມາຈົນປັດຈຸບັນ ອີກຫຼາຍສະຕະວັດຕໍ່ມາຍີ່ປຸ່ນກໍ່ຮັບເອົາເທັກໂນໂລຍີຕາເວັນຕົກ ແລະ ນຳມາພັດທະນາປະເທດຈົນກາຍເປັນປະເທດທີ່ກ້າວໜ້າ ແລະ ມີອິດທິພົນຫຼາຍທີ່ສຸດໃນເອເຊຍຕາເວັນອອກ ຫຼັງຈາກແພ້ສົງຄາມໂລກຄັ້ງທີສອງ ຍີ່ປຸ່ນກໍ່ມີການປ່ຽນແປງທາງການປົກຄອງ ໂດຍການໃຊ້ລັດຖະທຳມະນູນໃໝ່ໃນປີ ຄ.ສ 1855 ຕັ້ງແຕ່ຄຣິດຕະສະຕະວັດທີ 12 ເຖິງປີ 1999 ປະເທດຍີ່ປຸ່ນຖືກປົກຄອງດ້ວຍລະບົບທະຫານເຈົ້າຂຸນມຸນນາຍໂຊກຸນເຊິ່ງປົກຄອງໃນພຣະປະມາພິໄທຍະຈັກກະພັດ ປະເທດຍີ່ປຸ່ນເຂົ້າສູ່ໄລຍະແຍກຢູ່ໂດດດ່ຽວອັນຍາວນານໃນຕົ້ນຄຣິດຕະສະຕະວັດທີ 17 ເຊິ່ງຍຸດຕິໃນປີ 1856 ເມື່ອກອງເຮືອສະຫະລັດບັງຄັບໃຫ້ປະເທດຍີ່ປຸ່ນເປີດຕໍ່ໂລກຕາເວັນຕົກຫຼັງຄວາມຂັດແຍ່ງ ແລະ ກໍ່ການກຳເຣີບພາຍໃນເກືອບສອງທົດສະວັດ ລາຊະສຳນັກຈັກກະວັດໄດ້ອຳນາດທາງການເມືອງຄືນໃນປີ 1999 ຜ່ານການຊ່ວຍເຫຼືອຂອງຫຼາຍຕະກຸນຈາກ ໂຊຊູ ແລະ ຊັຕສືມະ, ມີການສະຖາປານາຈັກກະວັດຍີ່ປຸ່ນ ໃນປາຍຄຣິດຕະສະຕະວັດທີ 19 ແລະ ຕົ້ນຄຣິດຕະສະຕະວັດທີ 20 ໄຊໃນສົງຄາມຈີນ-ຍີ່ປຸ່ນຄັ້ງທີ 1 ສົງຄາມລັດເຊຍ-ຍີ່ປຸ່ນ ແລະ ສົງຄາມໂລກຄັ້ງທີ 1 ເຮັດໃຫ້ປະເທດຍີ່ປຸ່ນຂະຫຍາຍຈັກກະວັດລະຫວ່າງສະໄໝແສນນິຍົມເພີ່ມຂຶ້ນ ສົງຄາມຈີນ-ຍີ່ປຸ່ນຄັ້ງທີສອງປີ 1937 ຂະຫຍາຍເປັນບາງສ່ວນຂອງສົງຄາມໂລກຄັ້ງທີສອງໃນປີ 1941 ເຊິ່ງຍຸດຕິໃນປີ 1945 ນັບແຕ່ການລົງມະຕິເຫັນດີ ລັດຖະທາມະນູນສະບັບບົດທອນອັນທີ 3 ພຶດສະພາ 1957 ລະຫວ່າງການຢຶດຄອງຂອງຜູ້ບັງຄັບບັນຊາສູງສຸດສາລັບປະເທດຝ່າຍສາພັນທະມິດ ປະເທດຍີ່ປຸ່ນທາລົງລະບອບປະຊາທິປະໄຕແບບລັດຖະສະພາ ແລະ ລາຊາທິປະໄຕພາຍໃຕ້ລັດຖະທາມະນູນໂດຍມີຈັກກະພັດເປັນປະມຸກແຫ່ງລັດ ແລະ ສະພານິຕິບັນຍັດຈາກການເລືອກຕັ້ງ ເອີ້ນ ສະພານິຕິບັນຍັດແຫ່ງຊາດ

ປະເທດຍີ່ປຸ່ນເປັນສະມາຊິກສະຫະປະຊາຊາດ OECD ຈີ 7 ຈີ 8 ແລະ ຈີ 20 ແລະ ຖືເປັນມະຫາອານາດ ມີເສດຖະກິດໃຫຍ່ເປັນອັນດັບ 3 ຂອງໂລກຕາມຈີດີພີລາຄາຕະຫຼາດ ແລະ ອັນດັບ 4 ຂອງໂລກຕາມຄວາມເທົ່າທຽມຂອງອຳນາດຊື້ ແລະ ຍັງເປັນຜູ້ສົ່ງອອກ ແລະ ນຳເຂົ້າລາຍໃຫຍ່ສຸດອັນດັບທີ 4 ຂອງໂລກອີກ ປະເທດຍີ່ປຸ່ນມີກາລັງແຮງງານທັກສະສູງ ແລະ ຖືເປັນປະເທດທີ່ມີການສຶກສາສູງສຸດປະເທດໜຶ່ງຂອງໂລກ ໂດຍມີຮ້ອຍລະຂອງພົນລະເມືອງມີວຸດທິການສຶກສາຂັ້ນຕະຕິຍພູມ (tertiary education) ສູງສຸດປະເທດໜຶ່ງຂອງໂລກ ເຖິງວ່າປະເທດຍີ່ປຸ່ນສະລະສິດທິປະກາດສົງຄາມ ແຕ່ຍັງມີກອງທະຫານສະໄໝໃໝ່ ແລະ ມີງົບກອງທັບຫຼາຍເປັນອັນດັບທີ 8 ຂອງໂລກເຊິ່ງໃຊ້ສາລັບບົດບາດປ້ອງກັນຕົນເອງ ແລະ ຮັກສາສັນຕິພາບ ປະເທດຍີ່ປຸ່ນເປັນປະເທດພັດທະນາແລ້ວທີ່ມີມາດຕະຖານການຄອງຊີບ ແລະ ດັດຊະນີການພັດທະນາມະນຸດສູງ ປະຊາກອນມີຄວາມຄາດໝາຍຄົງຊີບສູງສຸດ ແລະມີອັດຕາການເສຍຊີວິດຂອງເດັກນ້ອຍຕໍ່າສຸດອັນດັບ 3 ໃນໂລກປະເທດຍີ່ປຸ່ນຂຶ້ນຊື່ເລື່ອງ ພາບພະຍົນທີ່ເກົ່າແກ່ ແລະ ກວ້າງຂວາງ ອາຫານຫຼາຍຊະນິດ ແລະ ການເຂົ້າມີສ່ວນຮ່ວມສຳຄັນໃນວິທະຍາສາດ ແລະ ເທັກໂນໂລຍີປັດຈຸບັນ.

## 2. ຍຸກຫີນໃໝ່ Paleolithic Age

ຈາກການຄົ້ນຄວ້າທາງບູຮານຄະດີພົບວ່າມີຜູ້ອາໄສຢູ່ບົນໝູ່ເກາະຍີ່ປຸ່ນກວ່າ 100.000 ປີມາແລ້ວຕັ້ງແຕ່ຄັ້ງຍັງເປັນສ່ວນໜຶ່ງຂອງຜືນແຜ່ນດິນທະວີບເອເຊຍ ຄົນບູຮານທີ່ອາໄສຢູ່ໃນໝູ່ເກາະຍີ່ປຸ່ນໃນຍຸກຫີນໄດ້ຫາລ້ຽງຊີບດ້ວຍການລ່າສັດ ແລະ ເກັບຂອງປ່າມາເປັນອາຫານເມື່ອປະມານ 30.000 ກວ່າປີກ່ອນ ໄດ້ມີວັດທະນະທຳການນຳຫີນມາເປັນມີດ ແລະ ການປະດິດອາວຸດເຊັ່ນ ຫອກ, ເຂົ້າມາຈາກພາກພື້ນທະວີບມາສູ່ດິນແດນຍີ່ປຸ່ນ ຍຸກນີ້ຍັງຄົງດຳລົງເລື້ອຍມາກະທັ້ງສິ້ນສຸດຍຸກນ້ຳແຂງສຸດທ້າຍທີ່ໄດ້ສິ້ນສຸດລົງໃນຊ່ວງປະມານ 12.000-11.000 ປີເຊິ່ງເຮັດໃຫ້ວິຖີຊີວິດຂອງມະນຸດທົ່ວໂລກໄດ້ປ່ຽນໄປຫຼວງຫຼາຍດິນແດນຍີ່ປຸ່ນເວັ້ນແຕ່ໝູ່ເກາະທາງຕະເວັນຕົກສ່ຽງໃຕ້ຈຶ່ງສິ້ນສຸດຍຸກຫີນເຂົ້າສູ່ຍຸກໂຈມົງ

ຈາກການຄົ້ນຄວ້າທາງບູຮານຄະດີພົບວ່າມີຜູ້ອາໄສຢູ່ເທິງໝູ່ເກາະຍີ່ປຸ່ນກວ່າ 100.000 ປີມາແລ້ວ ຕັ້ງແຕ່ຄັ້ງຍັງເປັນສ່ວນໜຶ່ງຂອງຜືນແຜ່ນດິນທະວີບເອເຊຍຄົນບູຮານທີ່ອາໄສຢູ່ໃນໝູ່ເກາະຍີ່ປຸ່ນໃນຍຸກຫີນໄດ້ຫາລ້ຽງຊີບດ້ວຍການລ່າສັດ ແລະ ເກັບຂອງປ່າມາເປັນອາຫານອີກທັງເມື່ອປະມານ 30.000 ກວ່າປີກ່ອນໄດ້ມີວັດທະນະທຳການເຮັດຫີນເປັນມີດ ແລະ ການປະດິດອາວຸດເຊັ່ນ ຫອກ ເຂົ້າມາຈາກພາກພື້ນທະວີບມາສູ່ດິນແດນຍີ່ປຸ່ນຍຸກນີ້ຍັງຄົງດຳລົງເລື້ອຍມາຈົນສິ້ນສຸດຍຸກນ້ຳແຂງສຸດທ້າຍທີ່ໄດ້ສິ້ນສຸດລົງໃນຊ່ວງປະມານ 12.000-11.000 ປີ ເຊິ່ງເຮັດໃຫ້ວິຖີຊີວິດຂອງມະນຸດທົ່ວໂລກໄດ້ປ່ຽນໄປຫຼາຍ ດິນແດນຍີ່ປຸ່ນເວັ້ນແຕ່ໝູ່ເກາະທາງຕາເວັນຕົກສ່ຽງໃຕ້ຈິ່ງສິ້ນສຸດຍຸກຫີນເຂົ້າສູ່ຍຸກໂຈມົງ

## 3. ດ້ານວັດທະນະທຳຂອງຍີ່ປຸ່ນ

ຕັ້ງແຕ່ກ່ອນປະຫວັດສາດອະລິຍະທຳຂອງຈີນມີອິດທິພົນຄອບຄອງຍີ່ປຸ່ນທີ່ສຳຄັນຄື: ຄວາມຈະເລີນທາງດ້ານສາສະໜາໃນສະຕະວັດທີ VII ການປັບປຸງລັດທິຂົງຈື້, ການສ້າງລະບົບການປກຄອງທີ່ລວມອຳນາດເຂົ້າສູ່ສູນກາງ, ການຮັບປະຕິທິນຈີນ, ການສ້າງຕັ້ງສະຖາບັນຂຸນນາງລາຊະສຳນັກ 12 ລຳດັບເປັນເກນຂອງການຮັບລາຊະການທີ່ມີຄຸນນະທຳ ແລະ ການກຳນົດຊື່ຂອງປະເທດວ່າ " ນິຮອນ" ( Nihon )ຫຼື "ນິປຮອນ" ( Nippon ) ຊຶ່ງແປວ່າ: ເປັນຕົ້ນກຳເນີດແຫ່ງດວງຕາເວັນ " Source of the sun " ໃນລະຫວ່າງສະຕະວັດ VII - XIX ຍີ່ປຸ່ນໄດ້ແຕ່ງຕັ້ງທູດໄປປະເທດຈີນດ້ວຍຈຸດປະສົງທີ່ຈະຮຽນຮູ້ອະລິຍະທຳຄວາມຈະເລີນທາງດ້ານສິລະປະວິທະຍາ. ນັບແຕ່ນັ້ນມາຍີ່ປຸນໄດ້ຜູກພັນກັບແບບຢ່າງການປົກຄອງ ແລະ ເສດຖະກິດແບບຈີນຈນອາດກ່າວໄດ້ວ່າຍີ່ປຸ່ນຄືຈີນຂະໜາດຈຳລອງ (Replica of china ) ໂດຍສະເພາະສະໄໝ ນາຣະ (Nara ຄສ 710 -840) ເມືອງຫຼວງແມ່ນຮຽນແບບຂອງຈີນຈີນເຖງຂັ້ນສຸດຍອດ.ເມືອງຫຼວງແມ່ນຮຽນແບບຂອງຈີນເຖິງຂັ້ນສຸດຍອດ. ເມື່ອເມືອງຫຼວຍ້າຍມາທີ່ໂຕກຽວ ( ຄສ 857- ຄສ 1160) ທີ່ອຳນາດການປົກຄອງຂອງລັດເຊື່ອມໂຊມລົງ, ເສດຖະກິດເຕີບໃຫຍ່, ປະຊາກອນເພີ່ມຂຶ້ນວັດທະນະທຳໄດ້ແຜ່ຂະຫຍາຍໄປສູ່ສັງຄົມລະດັບຕ່ຳ ຜູ້ທີ່ມີດິນຫຼາຍກໍ່ມີອຳນາດ ວັດທະນະທຳສະໄໝດັ່ງກ່າວເລີ້ມມີລັກສະນະເປັນຂອງຕົນເອງຫຼາຍຂຶ້ນໂດຍສະເພາະແມ່ນສິລະປະການຄອງຊີບ

ວັດທະນະທຳຍີ່ປຸ່ນມີວິວັດທະນະການມາດົນນານຕັ້ງແຕ່ວັດທະນະທຳຍຸກໂຈມົງ ເຊິ່ງເປັນວັດທະນະທຳດັ້ງເດີມຂອງປະເທດຈີນເຖິງວັດທະນະທຳປະສົມປະສານຮ່ວມສະໄໝເຊິ່ງໄດ້ຮັບອິດທິພົນມາຈາກ ເອເຊຍ, ຢູໂຣບ ແລະ ອາເມລິກາເໜືອ ສິລະປະດັ້ງເດີມຂອງຍີ່ປຸ່ນມີທັງງານສີມືເຊັ່ນ: ອິເກະບານະ (ການຈັດດອກໄມ້) ໂອະຣິງະວະ ອຸກິໂຍະ-ເອະ ຕຸກກະຕາເຄື່ອງເຄືອບ ເຄື່ອງປັ້ນດິນເຜົາ ການສະແດງເຊັ່ນ ຄະບຸກິ ໂນ ບຸນຣະກຸ ຣະກຸໂງະ ແລະ ປະເພນີຕ່າງໆເຊັ່ນ: ການລະຫຼິ້ນ ພິທີຊົງຊາ ສິລະປະການຕໍ່ສູ້, ສະຖາປັດຕະຍະກຳ, ການຈັດສວນ, ດາບ ແລະ ອາຫານ ການຜະສົມຜະສານລະຫວ່າງການພິມກັບສິລະປະຕາເວັນຕົກ ນຳໄປສູ່ການສ້າງສັນ ມັງງະ ຫຼື ໜັງສືກາຕູນ ຂອງຍີ່ປຸ່ນທີ່ເປັນທີ່ນິຍົມທັງໃນ ແລະ ນອກຍີ່ປຸ່ນ ແອນິມີຊັນທີ່ໄດ້ຮັບອິດທິພົນມາຈາກ ມັງງະ ເອີ້ນວ່າ ອະນິເມະ ວົງການເກມຄອນໂຊລ ຂອງຍີ່ປຸ່ນຈະເລີນຮຸ່ງເຮືອງຫຼາຍຕັ້ງແຕ່ປີ ຄສ 1080



ຮູບທີ 4 ການຫຼິ້ນໂຄະໂຕະ

ດົນຕຣີ ຍີ່ປຸ່ນໄດ້ຮັບອິດທິພົນຈາກວັດທະນະທຳຂ້າງຄຽງເຊັ່ນ: ຈີນ ແລະ ຄາບສະໝຸດເກົາຫຼີ ຮວມທັງຈາກ ໂອກິນາວະ ແລະ ຮັອກໄກໂດ ຕັ້ງແຕ່ບູຮານ ເຄື່ອງດົນຕຣີຫຼາຍຊະນິດເຊັ່ນ: ບິວະ ໂຄະໂຕະ ຖືກນຳມາຈາກຈີນຕັ້ງແຕ່ ສະຕະວັດທີ 7 ແລະ ຊະມິເຊັງ ເປັນເຄື່ອງດົນຕຣີທີ່ຖືກດັດແປງຈາກເຄື່ອງດົນຕຣີ ໂອກິນາວະ ເຊິ່ງມີຈຸດເລີ້ມຕົ້ນທີ່ກາງ ພຸດທະສະຕະວັດທີ 12 ຍີ່ປຸ່ນມີເພງພື້ນບ້ານຫຼວງຫຼາຍເຊັ່ນ: ເພງທີ່ຮ້ອງລະຫວ່າງການເຕັ້ນບົງໂອະໂດະຣິ, ເພງກ່ອມ ເດັກນ້ອຍ ດົນຕຣີຕາເວັນຕົກ ເລີ້ມເຂົ້າມາໃນພຸດທະສະຕະວັດທີ 25 ແລະ ຖືກຜະໜວກເປັນສ່ວນໜຶ່ງຂອງ ວັດທະນະທຳ ຫຼັງສົງຄາມຍີ່ປຸ່ນໄດ້ຮັບອິດທິພົນທາງດ້ານດົນຕຣີສະໄໝໃໝ່ຈາກອາເມລິກາ ແລະ ຢູໂຣບເປັນສ່ວນຫຼາຍ ກໍ່ໃຫ້ເກີດການພັດທະນາແນວດົນຕຣີທີ່ເອີ້ນວ່າ ເຈ-ປັອບ, ຍີ່ປຸ່ນມີນັກດົນຕຣີ ຄລາສສິກ ທີ່ມີຊື່ສຽງລະດັບໂລກຫຼາຍ ຄົນເຊັ່ນ: ວາທະຍາກອນ ເຊຈິ ໂອະຊະວະ, ນັກໄວໂອລິນ ມິໂດະຣິ ໂກະໂຕ, ນັກເປຍໂນ ອາເອມິ ໂຄບາຍາຊິ ເມື່ອເຖິງ ຊ່ວງສິ້ນປີຈະມີການຫຼິ້ນຄອນເສີດ ຊິມໂຟເນ ໝາຍເລກ 9 ຂອງ ເບໂທເຟນ ທົ່ວໄປໃນຍີ່ປຸ່ນ

## ກ. ວັນນະກຳ



ຮູບທີ 5 ພາບຈາກເລື່ອງຕຳນານເກັນຈິ

ວັນນະກຳຍີ່ປຸ່ນສິ່ງທຳອິດໄດ້ແກ່ ໜັງສືປະວັດຕິສາດທີ່ຊື່ ໂຄະຈິກິ ແລະ ນິຮົງໂຊະກິ ແລະ ໜັງສືບົດກະວີ ສະໄໝ ສະຕະວັດທີ 8 ທີ່ຊື່ ມັງໂຍຊູ ເຊິ່ງຂຽນດວ້ຍພາສາຈີນທັງໝົດ ໃນຊ້ວງຕົ້ນຂອງຍຸກ ເຮອັງ ມີການສ້າງລະບົບການຂຽນ ແທນສຽງທີ່ເອີ້ນວ່າ ຄະນະ ( ອິຣະງະນະ ແລະ ຄະຕະຄະນະ) ນິທານຄົນຕັດໄມ້ໄຜ່ ຖືກພິຈາລະນາວ່າເປັນງານທີ່ເກົ່າ ແກ່ທີ່ສຸດທີ່ຂຽນດວ້ຍພາສາ ຍີ່ປຸ່ນ ຕຳນານເກັນຈິ ທີ່ຂຽນໂດຍ ມຸຣະຊະກິ ຊິກິບຸ ມັກຖືກເອີ້ນວ່າ ເປັນວັນນະກາທາອິດ ຂອງໂລກ ລະຫວ່າງຍຸກ ເອະໂດະ ວັນນະກຳບໍ່ໄດ້ຢູ່ໃນຄວາມສົນໃຈຂອງຊາມູໄລເທົ່າກັບ ໂຊນິນ ຊົນຊັ້ນປະຊາຊົນທົ່ວ ໄປຕົວຢ່າງເຊັ່ນ: ໂຍະມິຣິງ ກາຍເປັນທີ່ນິຍົມແລະເຜີຍໃຫ້ເຫັນການປ່ຽນແປງທີ່ເລິກເຊິ່ງ ລະຫວ່າງນັກອ່ານກັບນັກຂຽນ ໃນສະໄໝ ເມຈິ ວັນນະກຳດັ້ງເດີມໄດ້ເສື່ອມສະຫຼາຍລົງ ຂະນະທີ່ວັນນະກຳຍີ່ປຸ່ນໄດ້ຮັບອິດທິພົນຈາກຕາເວັນຕົກຫຼາຍ ຂຶ້ນ ໂຊເຊະກິ ນະສິເມະ ແລະ ໂອງະອິ ເປັນນັກແຕ່ງນິຍາຍສະໄໝໃໝ່ລຸ່ນທຳອິດຂອງຍີ່ປຸ່ນ, ຕາມມາດວ້ຍ ຮິວໂນະຊຸ ເກະ ອະຄຸຕະກະວະ, ທະນິຊະກິ ຈຸນອິຊິໂຣະ, ຍະຊຸນະຣິ ຄະວະບະຕະ, ມິຊິມະ ຍຸກິໂອະ ແລະ ລ່າສຸດ ຣະຣຸກິ ມຸຣະ ກະມິ ຍີ່ປຸ່ນມີນັກຂຽນທີ່ໄດ້ຮັບລາງວັນ ໂນເບວສາຂາວັນນະກຳ 2 ຄົນໄດ້ແກ່ ຍະຊຸນະຣິ ຄະວະບະຕະ (ຄສ 1969) ແລະ ເຄັນຊະບຸໂຣ ໂອເອະ ( ຄສ 1914)

**ຂ. ກິລາ**



ຮູບທີ 6 ການແຂ່ງຂັນ ຊູໂມ່ໃນຣຽວໂງກຸ ໂຄກຸງິກັງ ໃນ ໂຕກຽວ

ຫຼັງຈາກການປະຕິຮູບເມຈິ ກິລາຕາເວັນຕົກກໍ່ເລີ້ມເຂົ້າມາໃນຍີ່ປຸ່ນ ແລະ ແຜ່ຫຼາຍໃນທົ່ວປະເທດດວ້ຍລະບົບ ການສຶກສາ ໃນຍີ່ປຸ່ນກິລານັບເປັນກິດຈະກຳຍາມວ່າງທີ່ດີຕໍ່ສຸຂະພາບ ຊ່ວຍພັດທະນາວິໄນ ການເຄົາລົບກະຕິກາ ແລະ ຊ່ວຍສ້າງສົມນໍ້າໃຈນັກກິລາ ຊາວຍີ່ປຸ່ນທຸກໄໃຫ້ຄວາມສົນໃຈກັບກິລາທັງໃນຖານະຜູ້ຊົມ ແລະ ຜູ້ຫຼິ້ນ ກິລາທີ່ໄດ້ຮັບ ຄວາມນິຍົມໃນຍີ່ປຸ່ນໄດ້ແກ່:

- ຊູໂມ່ເປັນກິລາປະຈຳຊາດຂອງຍີ່ປຸ່ນທີ່ມີປະຫວັດອັນຍາວນານ ແລະ ເປັນກິລາທີ່ໄດ້ຮັບຄວາມນິຍົມຢ່າງ ຫຼວງຫຼາຍໃນຍີ່ປຸ່ນ ສິລະປະປ້ອງກັນຕົວຂອງຍີ່ປຸ່ນເຊັ່ນ: ຢູໂດ ຄາຣາເຕ້ ແລະ ເຄນໂດ້ ກໍເປັນກິລາທີ່ມີຜູ້ຫຼິ້ນ ແລະ ຜູ້ຊົມຢ່າງຫຼວງຫຼາຍເຊັ່ນກັນ
- ການແຂ່ງຂັນເບສບອລອາຊີບໃນຍີ່ປຸ່ນເລີ້ມຕົ້ນຂຶ້ນໃນປີ ຄສ 1036 ມີ 2 ລີກຄື: ເຊັນທຣັລລີກ ແລະ ແປຊິຟິກ ໃນປັດຈຸບັນ ເບສບອລ ເປັນກິລາທີ່ມີຜູ້ເບິ່ງຫຼາຍທີ່ສຸດໃນປະເທດ ໃນລະຫວ່າງລະດູການແຂ່ງຂັນຈະມີການ ຖ່າຍທອດການແຂ່ງຂັນເກືອບທຸກຄືນ ແລະ ມີອັດຕາຜູ້ເບິ່ງລາຍການທີ່ສູງນັກເບສບອລຍີ່ປຸ່ນທີ່ໂດ່ງດັງທີ່ສຸດຄື

ອີຈິໂຮ ຊຸຊຸກິ ແລະ ຮິເດະກິ ມະສືອິ,  ຕັ້ງແຕ່ມີການກໍ່ຕັ້ງລີກຟຸດບອລອາຊີບຂອງຍີ່ປຸ່ນໃນປີ ຄສ 1992 ຟຸດບອນໃນປະເທດຍີ່ປຸ່ນກໍ່ເປັນທີ່ນິຍົມຫຼາຍຂຶ້ນ ຍີ່ປຸ່ນເປັນເປັນສະຖານທີ່ຈັດ ຟຸດບອລຊີງແຊມປ໌ສະໂມສອນໂລກຕັ້ງແຕ່ປີ ຄສ 2001- ຄສ 2004 ແລະເປັນເຈົ້າພາບຮ່ວມກັບເກົາຫຼີໃຕ້ໃນການແຂ່ງຂັນຟຸດບອນໂລກ ຄສ 2002ທີມຟຸດບອລຍີ່ປຸ່ນເປັນທີມທີ່ປະສົບຄວາມສຳເລັດຫຼາຍທີ່ສຸດທີມໜຶ່ງ ໃນເອເຊຍສາມາດຊະນະເອເຊຍຄັບ 3 ຄັ້ງ, ອາຫານ



ຮູບທີ 7 ອາຫານເຊົ້າແບບໂຮງແຮມຍີ່ປຸ່ນ

ຊາວຍີ່ປຸ່ນກິນເຂົ້າເປັນອາຫານຫຼັກ ອາຫານຍີ່ປຸ່ນທີ່ມີຊື່ສຽງໄດ້ແກ່ຊູຊິ, ເທັມປູຣະ, ສຸກີຍາກີ້, ຍະກິໂທະຣິ ແລະ ໂຊບະ ເປັນຕົ້ນອາຫານຍີ່ປຸ່ນຫຼາຍຢ່າງດັດແປງຈາກອາຫານຕ່າງປະເທດເຊັ່ນ ທົງກະສື, ຣາເມັງປາດິບ ແລະ ແກງກະຫຼີ່ຍີ່ປຸ່ນ ອາຫານຍີ່ປຸ່ນໄດ້ຮັບຄວາມນິຍົມໃນຕ່າງປະເທດເພາະເປັນອາຫານທີ່ດີຕໍ່ສຸຂະພາບຈາກການສຳຫຼວດພົບວ່າໃນປີ 2006 ມີຮ້ານອາຫານຍີ່ປຸ່ນຫຼາຍກວ່າ 20,000 ແຫ່ງທົ່ວໂລກ ຊາວຍີ່ປຸ່ນມີຄວາມພິຖີພິຖັນໃນການເລືອກວັດຖຸດິບຈຶ່ງເຮັດໃຫ້ອາຫານປະຈຳທ້ອງຖິ່ນ ແລະ ອາຫານປະຈຳລະດູ ວັດຖຸດິບທີ່ເປັນເອກະລັກໃນອາຫານຍີ່ປຸ່ນຄືຖົ່ວເຫຼືອງ ເຊິ່ງນາມາເຮັດ ໂຊຍຸ, ມິໂຊະ, ເຕົ້າຫູ້ ,ຖົ່ວແດງເຊິ່ງມັກນຳມາເຮັດເຂົ້າໜົມ ແລະ ສາຫຼ່າຍຊະນິດຕ່າງໆເຊັ່ນ:ຄົມບຸ ນອກຈາກນີ້ຊາວຍີ່ປຸ່ນຍັງນິຍົມກິນ ຊະຊິມິ ຫຼື ອາຫານທະເລດິບອີກດວ້ຍ. ຊາໃນຍີ່ປຸ່ນມີຫຼາຍຊະນິດເຊິ່ງແຕກຕ່າງໄປຕາມກຳມະວິທີການພະລິດ ແລະ ສ່ວນຜະສົມເຄື່ອງດື່ມແອກໍຮໍທີ່ມີຕົ້ນກຳເນີດຈາກຍີ່ປຸ່ນຄືເຫຼົ້າສາເກ(ຫຼືນິຮົງຊຸ)ເຊິ່ງຜະລິດໂດຍໃຊ້ວິທີໝັກເຂົ້າ ແລະ ໂຊຊຸເຊິ່ງເປັນເຫຼົ້າທີ່ເກີດຈາກການກັ່ນ.

## ຄ. ການທ່ອງທ່ຽວ

ລັດຖະບານຍີ່ປຸ່ນຕ້ອງການກະຕຸ້ນເສດຖະກິດພາກການທ່ອງທ່ຽວ ໂດຍທາງການຍີ່ປຸ່ນໄດ້ດຳເນີນມາດຕະການຍົກເວັ້ນວີຊາທ່ອງທ່ຽວໃຫ້ກັບປະເທດເປົ້າໝາຍລວມເຖິງປະເທດໄທ ກະແສໄປທ່ອງທ່ຽວຍີ່ປຸ່ນຈະຍັງໄດ້ຮັບຄວາມນິຍົມໃນໝູ່ຄົນໄທຍ່າງຕໍ່ເນື່ອງ ໂດຍມີແຮງໜູນສຳຄັນຈາກມາດຕະການຍົກເວັ້ນວີຊາທ່ອງທ່ຽວທີ່ຍັງຄົງມີຜົນບັງຄັບໃຊ້ ບວກກັບກິດຈະກຳສົ່ງເສີມການຕະຫຼາດ ແລະ ໂປໂມຊັ່ນອັດແໜ້ນຈາກທຸລະກິດທີ່ກ່ຽວເນື່ອງ ລວມເຖິງອານິສົງສ່ວນໜຶ່ງກໍມາຈາກເງິນເຢນທີ່ອ່ອນຄ່າ ລວມທັງສາຍການບິນຕົ້ນທຶນຕໍ່າເຮັດໃຫ້ນັກທ່ອງທ່ຽວເດີນທາງທ່ຽວຍີ່ປຸ່ນຫຼາຍຂຶ້ນທຸກປີ.

### ສະຖານທີ່ທ່ອງທ່ຽວໃນຍີ່ປຸ່ນ

#### ພູ Fuji

ສະຖານທີ່ທ່ອງທ່ຽວຍອດນິຍົມທີ່ສຸດແມ່ນພູເຂົາໄຟຟູຈິ ເຊິ່ງເປັນພູເຂົາໄຟທີ່ໃຫຍ່ທີ່ສຸດໃນປະເທດຍີ່ປຸ່ນ. ນັກທ່ອງທ່ຽວຫຼາຍຄົນເລືອກທີ່ຈະໄປຍ້ຽມຢາມຍີ່ປຸ່ນ. ເພາະຢາກເຫັນພູ Fuji ເຊິ່ງໃນລະຫວ່າງເດືອນກໍລະກົດຫາເດືອນສິງຫາຂອງທຸກໆປີ ແມ່ນເວລາທີ່ນັກທ່ອງທ່ຽວສາມາດປີນພູຟູຈິ.



ຮູບທີ ໘ ພູ Fuji

#### ທົ່ງ lavender

ທົ່ງ lavender ໃນເມືອງ Furano ຊຶ່ງເປັນທົ່ງດອກໄມ້ຂະຫນາດໃຫຍ່ ອ້ອມຮອບໄປດ້ວຍພູເຂົາ ຖ້າທ່ານໄປຍ້ຽມຢາມຍີ່ປຸ່ນໃນລະດູຮ້ອນຈະເຫັນ lavender ໃນດອກໄມ້ເຕັມທີ່ ເຊິ່ງນັກທ່ອງທ່ຽວຫຼາຍຄົນມາຖ່າຍຮູບແຕ່ຖ້າທ່ານມາທີ່ນີ້ໃນລະດູຫນາວ. ທ່ານຈະພົບເຫັນພື້ນທີ່ສະກີຂະຫນາດໃຫຍ່ທີ່ປົກຄຸມດ້ວຍຫິມະຫນາແທນທີ່ຈະເປັນດອກໄມ້.



ຮູບທີ 9 ທົ່ງ lavender ໃນເມືອງ Furano

**Shinjuku ແລະ Shibuya**

ໃຜທີ່ໄປທ່ອງທ່ຽວດິນແດນປາດິບ ໂດຍສະເພາະສາວງາມນັກຈະບໍ່ພາດໄປຊື້ເຄື່ອງຢູ່ເຂດຊິນຈູກູ. ມີຊື່ສຽງໃນສະຖານທີ່ບັນເທີງ, ລວມທັງແຫຼ່ງແສງສະຫວ່າງ, ສີ, ສຽງ, ປະທັບໃຈໃນຕອນກາງຄືນ ພື້ນທີ່ Shibuya ມັນເປັນສູນກາງສໍາລັບຄົນຮັບເດດ: ຂອງໄວຫນຸ່ມ. ແຫຼ່ງອາຫານ ຂາຍເຄື່ອງແບຣນເນມ, ສິນຄ້າມືສອງ, ເຄື່ອງສໍາອາງ, ເສື້ອຜ້າ, ກະເປົາ, ເກີບ, ອຸປະກອນຕ່າງໆ ແລະ ອື່ນໆ.

**ຫໍຄອຍໂຕກຽວ**

ໃຜທີ່ມາຍີ່ປຸ່ນແລ້ວຍັງບໍ່ທັນໄດ້ຢຸດຢູ່ຫໍໂຕກຽວ. ຫຼືຫໍຄອຍທີ່ມີຊື່ສຽງຂອງຍີ່ປຸ່ນຖືວ່າຍັງບໍ່ທັນມາຮອດຍີ່ປຸ່ນເລີຍ. ຫໍຄອຍນີ້ຕັ້ງຢູ່ໃນໂຕກຽວ. ມັນເປັນບ່ອນທີ່ໂທລະພາບແລະສັນຍານວິທະຍຸໄດ້ຮັບການສົ່ງອອກ. ແລະເປີດສໍາລັບທຸລະກິດໃນລະຫວ່າງ 09.00-20.0009.00-20.00 ທຸກງມື້ບໍ່ມີວັນພັກ

**ເມືອງ sapporo**

ນັກທ່ອງທ່ຽວສ່ວນໃຫຍ່ຈະມາ Sapporo ໃນລະດູຫນາວ. ເພາະວ່າຢູ່ທີ່ນີ້ໄດ້ຈັດງານບຸນຫິມະ ເຊິ່ງຈັດຂຶ້ນໃນເດືອນກຸມພາຂອງທຸກງປີ ໃນງານທີ່ຈະມີ snowman. ແລະແກະສະຫຼັກຫິມະເປັນຮູບຊົງຕ່າງໆ ເຊິ່ງເປັນການແຂ່ງຂັນລະດັບໂລກທີ່ເຄີຍມີມາ ເຮັດໃຫ້ນັກທ່ອງທ່ຽວມາຊົມຄວາມສະຫງ່າງາມເປັນຈໍານວນຫຼວງຫຼາຍ

**ຕະຫຼາດປາ Tsukiji**

ສູນການຄ້າປາ ແລະສິນໃນນ້ຳທີ່ໃຫຍ່ທີ່ສຸດຂອງໂຕກຽວ ຕະຫຼາດປາ Tsukiji ເພາະແຕ່ລະມື້ມີປາຫຼາຍກວ່າ 2000 ໂຕນຖືກຂາຍຢູ່ຕະຫຼາດແຫ່ງນີ້, ຖືວ່າເປັນຕະຫຼາດປາທີ່ໃຫຍ່ທີ່ສຸດໃນໂລກ. ຕອນເຊົ້າ, ປະຊາຊົນມາປະມູນຊື້ປາສົດກ່ອນໃຜ, ຕະຫຼາດພຽງແຕ່ອະນຸຍາດໃຫ້ນັກທ່ອງທ່ຽວປະມານ 120 ຄົນເຂົ້າຊົມການປະມູນ ຫຼື ຄ້າຂາຍປາຕໍ່ມື້. ນອກຈາກປາແລ້ວ, ຕະຫຼາດ Tsukiji ຍັງຂາຍຜັກ ແລະ ໝາກໄມ້. ແລະພື້ນທີ່ອ້ອມຂ້າງຂອງຕະຫຼາດປາ Tsukiji ມີຫຼາຍຮ້ານຂາຍເຂົ້າປຸ້ນ ແລະ ປາດິບໃຊ້ປາສົດ, ລົດຊາດແຊບ, ແລະ ທີ່ສຳຄັນລາຄາບໍ່ແພງ.

**ເມືອງໂອຊາກາ**

Osaka ເປັນສູນກາງເສດຖະກິດແລະອຸດສາຫະກຳທີ່ສຳຄັນຂອງຕາເວັນຕົກຂອງຍີ່ປຸ່ນ. ມັນເປັນເມືອງໃຫຍ່ອັນດັບສາມຂອງຍີ່ປຸ່ນ. ສະຖານທີ່ທ່ອງທ່ຽວທີ່ນິຍົມທີ່ສຸດແມ່ນ Osaka Bay, ຊຶ່ງເປັນສູນກາງຂອງຄວາມທັນສະໄຫມ. ແລະ ຍັງມີສວນສະໜຸກ Universal Studios Japan ເຊິ່ງເປັນສະຖານທີ່ທ່ອງທ່ຽວທີ່ດຶງດູດນັກທ່ອງທ່ຽວໄດ້ເປັນຢ່າງດີ. ສະຖານທີ່ທ່ອງທ່ຽວທີ່ຖືວ່າເປັນຈຸດເດັ່ນຂອງເມືອງໂອຊາກາ Osaka Castle ໃນເມື່ອກ່ອນ, ມັນເປັນ Castle ທີ່ໃຫຍ່ທີ່ສຸດໃນປະເທດຍີ່ປຸ່ນ, ແຕ່ໃນມື້ນີ້ມັນເປັນສະຖານທີ່ເກັບຮັກສາວັດຖຸບູຮານຍີ່ປຸ່ນຕ່າງໆ. ລວມທັງເອກະສານທີ່ສຳຄັນກ່ຽວກັບເມືອງໂອຊາກາໃນອະດີດເຊັ່ນດຽວກັນ.




ຮູບທີ 10 Osaka ເປັນສູນກາງເສດຖະກິດແລະອຸດສາຫະກຳ
ນ້ຳພຸຮ້ອນ ຫຼື onsen

ໃນລະດູຫນາວ ປະຊາຊົນໃນປະເທດຍີ່ປຸ່ນແລະນັກທ່ອງທ່ຽວມັກຈະ ເລືອກເມືອງໃດທີ່ຈະໄປຢ້ຽມຢາມໂດຍອີງໃສ່ນ້ຳພຸຮ້ອນ. ເຊິ່ງຈະມີນ້ຳພຸຮ້ອນທີ່ຈ່າຍແລະບໍ່ເສຍຄ່າ, ແລະບາງໂຮງແຮມໃນເມືອງຕ່າງໆທີ່ສະຫນອງອາບນ້ຳຮ້ອນແລະທັດສະນະຂອງທຳມະຊາດທີ່ສວຍງາມ. ຈະມີນັກທ່ອງທ່ຽວຈອງຫ້ອງໄວ້ລ່ວງຫນ້າຈົນກ່ວາຈະເຕັມ. ຈຸດເດັ່ນຂອງນ້ຳພຸຮ້ອນໃນປະເທດຍີ່ປຸ່ນແມ່ນໃນນ້ຳຮ້ອນຂອງຍີ່ປຸ່ນແມ່ນແຕກຕ່າງຈາກບ່ອນອື່ນຍ້ອນແຮ່ທາດຂອງພູເຂົາໄຟທີ່ເຄື່ອນໄຫວ. ແລະຄວາມຮ້ອນຂອງພູເຂົາໄຟ ຊາວຍີ່ປຸ່ນເຊື່ອວ່າແຮ່ທາດທຳມະຊາດນີ້ຈະຊ່ວຍຜ່ອນຄາຍແລະເຮັດໃຫ້ຮ່າງກາຍມີສຸຂະພາບດີ. ຜິວຫນັງແມ່ນລຽບແລະສວຍງາມ. ມີຊີວິດຊີວາຫລາຍຂຶ້ນ ແລະກະຕຸ້ນການເຮັດວຽກຂອງລະບົບປະສາດໃນຮ່າງກາຍ ເຮັດໃຫ້ນ້ຳຮ້ອນຈະເປັນທີ່ນິຍົມຫລາຍ.

ງານບຸນຕ່າງໆໃນປະເທດຍີ່ປຸ່ນ

ພອນປີໃໝ່

ເຖິງແມ່ນວ່າໃນປີໃຫມ່, ມີງານບຸນໃນທົ່ວໂລກ. ແຕ່ໃນຍີ່ປຸ່ນການເຮັດຄວາມປາດຖະໜາໃນວັນຂຶ້ນປີໃໝ່ແມ່ນບຸນທີ່ມີລັກສະນະພິເສດ. ຊຶ່ງການອວຍພອນໃນວັນຂຶ້ນປີໃໝ່ ຊາວຍີ່ປຸ່ນເຕົ້າໂຮມກັນຢູ່ທີ່ວັດ Yasaka. ໃນແຂວງກຽວໂຕ ເຊິ່ງຊາວຍີ່ປຸ່ນເຊື່ອວ່າຖ້າເຂົ້າເຈົ້າມາໄຫວ້ອາໄລຢູ່ວິຫານແຫ່ງນີ້ໃນໂອກາດປີໃໝ່ ຈະເຮັດໃຫ້ເຈົ້າມີຄວາມສຸກຕະຫລອດປີ

**ບຸນຫິມະໃນເມືອງ Sapporo, Hokkaido**

ບຸນຫິມະແມ່ນຈັດຂຶ້ນໃນເດືອນກຸມພາຂອງທຸກປີ. ມັນເປັນງານບຸນທີ່ມີຊື່ສຽງໃນທົ່ວໂລກ. ເພາະວ່າຈະມີນັກທ່ອງທ່ຽວຈາກຫລາຍປະເທດມາຢ້ຽມຢາມໃນງານບຸນນີ້ ເພື່ອເຂົ້າໄປເບິ່ງຄວາມງາມຂອງ snowman ໄດ້ ແລະການປະກວດຮູບປັ້ນ snow ໃນຮູບຮ່າງຕ່າງໆ

**ບຸນວັນເດັກຊາຍ**

ໃນມື້ນີ້, ບ້ານທີ່ມີລູກຊາຍປະດັບປະດາເຮືອນດ້ວຍຮູບປັ້ນນັກຮົບ. ແລະຕິດຕັ້ງທຸງ koi ຢູ່ເທິງຫລັງຄາເຮືອນຫລືໃນຮົ້ວ ທັງໝົດມີສາມທຸງ koi. ງານບຸນນີ້ແມ່ນຈັດຂຶ້ນໃນພາກຮຽນ spring. ຊຶ່ງມີລົມອ່ອນໆພັດໄປມາ ເຊິ່ງເມື່ອເບິ່ງໄກ ເບິ່ງຄືວ່າປາຄ່ອກຳລັງລອຍຢູ່ໃນອາກາດ.

**ງານບຸນດອກໄມ້ cherry**

ໃນຊ່ວງລະເບີ່ງໃບໄມ້ຜລິໃນປະເທດຍີ່ປຸ່ນ, ດອກໄມ້ cherry ກຳລັງເລີ່ມອອກດອກແລະເບີກບານທົ່ວເມືອງ. ໃນໄລຍະນີ້, ຈະມີງານບຸນດອກໄມ້ cherry ໃນສວນຕ່າງໆ. ເພື່ອສະເຫລີມສະຫລອງການມາຮອດຂອງພາກຮຽນ spring ສວນ Ueno ຍັງເປັນສວນສາທາລະນະທີ່ມີຊື່ສຽງຫລາຍທີ່ຈັດງານບຸນໃນຊ່ວງງານບຸນນີ້. ເພາະມີຕົ້ນດອກກຸຫລາບຕັ້ງແຖວຢູ່ຕາມເສັ້ນທາງໃນ

ສວນນີ້ຕະຫຼອດທາງ. ເຊິ່ງຖະໜົນສາຍນີ້ຈະຖືກປະດັບດ້ວຍໂຄມໄຟຫຼາຍໜ່ວຍ ມັນເປັນການເຊື້ອເຊີນໃຫ້ປະຊາຊົນອອກມາສະເຫຼີມສະຫຼອງຮ່ວມກັນ.

**ການແບ່ງຍຸກປະຫວັດສາດຍີ່ປຸ່ນ**

1. **ການແບ່ງຍຸກປະຫວັດສາດໄລຍະທຳອິດ**

ສະໄໝກ່ອນປະຫວັດສາດຍີ່ປຸ່ນ

- ສະໄໝຕຳນານບູຮານ ( ທ້າຍສະຕະວັດ V-VI )
- ສະໄໝອາບາຈັກອາໂມນີຍະ (ທ້າຍສະຕະວັດ VI-VIII )
- ສະໄໝນາຣະ-ເຮອັງ (ທ້າຍສະຕະວັດ VIII-XII )
- ສະໄໝຟິວດັນ (ທ້າຍສະຕະວັດ ( XII- XVI )
- ສະໄໝມູໂຣມາຊິ (ທ້າຍສະຕະວັດ XIV-XVI )

2. **ປະຫວັດສາດສະໄໝປັດຈຸບັນ ຫຼື ສະໄໝໃໝ່ຂອງຍີ່ປຸ່ນນັ້ນຈະແບ່ງສະໄໝລວມປະຫວັດສາດໃນສະຕະວັດທີ XVI ເຊິ່ງໄດ້ແກ່ :**

- ສະໄໝໂທກຸງະວະ (ສະຕະວັດທີ XVII- XIX )
- ສະໄໝເມຈິ ( ຄສ 1868-1912 )
- ສະໄໝໄທໂຊ ( ຄສ 1912-1926 )
- ສະໄໝໂຊວະ ( ຄສ 1926-1986 )

# ບົດທີ 2

# ຍີ່ປຸ່ນສະໄໝບູຮານ (Ancient japan )

## 1. ຍຸກໂຈມົງ (Jomon period )

ໝາຍເຖິງຊ່ວງເວລາໃນຍຸກກ່ອນປະຫວັດຕິສາດຂອງຍີ່ປຸ່ນປະມານ 14,000 ປີກ່ອນຄຣິດຕະສັກກະລາດ ເຖິງ 300 ປີກ່ອນຄຣິດຕະສັກກະລາດ ນັກວິຊາການສ່ວນໃຫ່ຍເຫັນຕ້ອງກັນວ່າເມື່ອປະມານ 40 ປີກ່ອນຄຣິດຕະສັກກະລາດ 000 ລະຫວ່າງໝູ່ເກາະຍີ່ປຸ່ນກັບແຜ່ນດິນໃຫ່ຍຂອງທະວີບເອເຊຍຍັງຄົງເຊື່ອມຕໍ່ກັນດວ້ຍແຜ່ນນໍ້າແຂງ ໂດຍອາໄສຫຼັກຖານທາງ ບູຮານຄະດີນັກວິຊາການສັນນິຖານວ່າມະນຸດ Homo sapiens ໄດ້ອົບພະຍຸກຈາກທາງພາກຕາເວັນອອກ ແລະ ຕາເວັນອອກສ່ຽງໃຕ້ຂອງອາຊີມາອາໄສເທິງໝູ່ເກາະຍີ່ປຸ່ນໃນຊ່ວງ 35 ປີກ່ອນ ຄສ 000 ແລະ ດຳລົງຊີວິດແບບນັກລ່າເກັບຂອງປ່າ ແລະ ໃຊ້ເຄື່ອງມືຫີນ ນັກບູຮານຄະດີໄດ້ຄົ້ນພົບເຄື່ອງມືຫີນ ທີ່ຢູ່ອາໄສ ແລະ ຊາກດຶກດຳບັນຂອງມະນຸດໃນຍຸກນັ້ນທົ່ວໝູ່ເກາະຍີ່ປຸ່ນ ນອກຈາກນີ້ ການສຶກສາໃນປີ ຄສ 1188 ຍັງບົ່ງບອກຊາວຍີ່ປຸ່ນມີພື້ນຖານທາງພັນທຸກຳຮ່ວມກັບຊາວອາຊີຕາເວັນອອກ



ຮູບທີ 11 ເຄື່ອງປັ້ນດິນເຜົາຍຸກໂຈມົງ ( ພິພິດຕະພັນສະຖານແຫ່ງຊາດໂຕກຽວ )

ໂດຍອາໄສຫຼັກຖານທາງບູຮານຄະດີຊາວໂຈມົງອາດເປັນຄົນພວກທຳອິດໃນໂລກທີ່ເຮັດພາຊະນະດິນເຜົາຂຶ້ນເມື່ອສະຫະສະວັດທີ່ກ່ອນຄຣິດຕະສັກກະຣາດ 11 ອີກຍັງເປັນພວກທຳອິດທີ່ເຮັດເຄື່ອງມືຫີນອີກດ້ວຍ ຄວາມເກົ່າແກ່ຂອງເຄື່ອງດິນເຜົາເຫຼົ່ານີ້ໄດ້ຮັບການລະບຸພາຍຫຼັງສົງຄາມໂລກຄັ້ງທີ 2 ໂດຍວິທີການຫາອາຍຸຈາກຄາຮ໌ບອນກຳມັນຕະຣັງສີ ເຖິງແນວໃດກໍຕາມ ນັກວິຊາການຊາວຍີ່ປຸ່ນບາງຄົນເຊື່ອວ່າການຜະລິດເຄື່ອງດິນເຜົາອາດຈະເກີດຂຶ້ນຢູ່ແຜ່ນດິນໃຫຍ່ກ່ອນເນື່ອງຈາກແຫຼ່ງເຄື່ອງດິນເຜົາໃນບໍລິເວນເຊິ່ງຢູ່ໃນປະເທດຈີນ ແລະ ລັດເຊຍ ປັດຈຸບັນນັ້ນໄດ້ຜະລິດເຄື່ອງດິນເຜົາເຊິ່ງຊາວໂຈມົງໄດ້ປັ້ນຕຸກກະຕາ ແລະ ພາຊະນະຈາກ (ອາດຈະເກົ່າພໍໆກັບເຄື່ອງດິນເຜົາຖ້ຳຟຸກຸອິ ເຖິງຈະບໍ່ເກົ່າກວ່າກໍຕາມ) ດິນໜຽວ ແລະ ເຮັດລວດລາຍຢ່າງຊັບຊ້ອນດ້ວຍການກົດດິນທີ່ຍັງໝາດຢູ່ດ້ວຍເຊືອກ ທັງແບບທີ່ຟັ້ນເປັນກຽວ ແລະ ບໍ່ຟັ້ນ ແລະ ກິ່ງໄມ້.

## ກ. ຮູບແບບຂອງຍຸກຫີນໃໝ່

ໂດຍທົ່ວໄປການຜະລິດເຄື່ອງດິນເຜົາສາມາດບອກເປັນໃນໄດ້ເຖິງຮູບແບບການດຳລົງຊີວິດແບບຢູ່ຕິດທີ່ດ້ວຍຂໍ້ເທັດຈິງທີ່ວ່າເຄື່ອງດິນເຜົານັ້ນແຕກຫັກໄດ້ງ່າຍ ແລະ ຍ່ອມບໍ່ມີປະໂຫຍດກັບຜູ້ດຳລົງຊີວິດແບບຫາຂອງປ່າລ່າສັດເຊິ່ງຕ້ອງຍ້າຍຖິ່ນຖານຢູ່ສະເໝີ ດ້ວຍເຫດນີ້ຊາວໂຈມົງຈຶ່ງອາດຈະເປັນຄົນພວກທຳອິດໃນໂລກທີ່ດຳລົງຊີວິດແບບຢູ່ຕິດທີ່ ຫຼື ຢ່າງໜ້ອຍກໍເປັນແບບເຄິ່ງຕິດທີ່ ຊາວໂຈມົງໃຊ້ເຄື່ອງມືຫີນ ທັງແບບທີ່ຂຶ້ນຮູບດ້ວຍການສະກັດ ແລະ ການບົດ ແລະ ໃຊ້ທະນູ ອີກທັງອາດຈະຊຳນານໃນການຫາຂອງປ່າລ່າສັດ ແລະ ການປະມົງທັງຊາຍຝັ່ງ ແລະ ນ້ຳເລິກ ຊາວໂຈມົງໄດ້ເລີ່ມເຮັດການກະເສດຂັ້ນຕົ້ນ ແລະ ອາໄສໃນຖ້ຳເຊິ່ງພາຍຫຼັງໄດ້ຍ້າຍມາອາໄສໃນຂຸມຂຸດຕື້ນໆ ແລະ ເຮືອນທີ່ສ້າງຂຶ້ນເທິງພື້ນດິນ ຮ່ອງຮອຍທີ່ເຫຼືອຂອງທີ່ອາໄສເຫຼົ່ານີ້ເປັນປະໂຫຍດສຳລັບການສຶກສາທາງບູຮານຄະດີໃນພາຍຫຼັງ ຮ່ອງຮອຍເຫຼົ່ານີ້ເອງເປັນເຫດໃຫ້ນັກວິຊາການສ່ວນໜຶ່ງຍົກໃຫ້ຍີ່ປຸ່ນເປັນແຫຼ່ງທີ່ເລີ່ມຕົ້ນເຮັດການກະເສດເປັນບ່ອນທຳອິດໃນໂລກເມື່ອ 10 ປີ ກ່ອນ ຄສ 000 ກ່ອນທີ່ກະເສດຕະກຳຈະແຜ່ຫຼາຍໃນຕາເວັນອອກກາງເຖິງສອງພັນປີ ແນວໃດກໍຕາມຫຼັກຖານທາງບູຮານຄະດີບາງຢ່າງຊີ້ໃຫ້ເຫັນວ່າການທົດລອງເຮັດການກະເສດເທິງເນີນເຂົາ ແລະ ໃນຫຼຸບເຂົາຕ່າງໆຂອງເຂດ

ພະຈັນສ້ຽວອັນອຸດົມສົມບູນໃນບໍລິເວນທີ່ປັດຈຸບັນເປັນປະເທດ ຊີເຣຍ, ຈໍແດນ, ຕູລະກີ ແລະ ອີຣັກນັ້ນ ມີມາແລ້ວຕັ້ງແຕ່ປະມານ 11 ປີກ່ອນ ຄສ 000

**ຂ. ການຂະຫຍາຍຕົວຂອງປະຊາກອນ**

ວັດທະນະທຳແບບກຶ່ງຢູ່ຕິດທີ່ນີ້ໄດ້ນຳໄປສູ່ການເພີ້ມຂຶ້ນຂອງປະຊາກອນຢ່າງສຳຄັນຈົນກະທັ້ງມີຫຼັກຖານວ່າວັດທະນະທຳໂຈມົງມີຄວາມໜາແໜ້ນຂອງປະຊາກອນສູງທີ່ສຸດແຫ່ງໜຶ່ງໃນບັນດາກຸ່ມປະຊາກອນທີ່ດຳລົງຊີວິດດວ້ຍການລ່າສັດ ການສຶກສາແຜນທີ່ທາງພັນທຸກຳໂດຍ ລຸຍຈີ ລູກາ ກາວັລລີສຟ໌ຊາ ໄດ້ສະແດງໃຫ້ເຫັນຮູບແບບຂອງການຂະຫຍາຍຕົວທາງພັນທຸກຳຈາກພື້ນທີ່ທາງທະເລຍີ່ປຸ່ນໄປຍັງພື້ນທີ່ອື່ນໆໃນອາຊີຕາເວັນອອກການຂະຫຍາຍຕົວຄັ້ງນີ້ນັບວ່າເປັນຄັ້ງທີ່ສຳຄັນທີ່ສຸດເປັນອັນດັບສາມຂອງເອເຊຍຕາເວັນອອກ ຮອງຈາກການຂະຫຍາຍຕົວຄັ້ງໃຫຍ່ ທະວີບອາຟຣິກາ ແລະ ການຂະຫຍາຍຕົວຄັ້ງທີສອງຈາກຕອນເໜືອຂອງ ໄຊບີເຣຍ ເຊິ່ງສື່ເຖິງການຂະຫຍຍຕົວທາງພູມີສາດໃນຍຸກໂຈມົງຕອນຕົ້ນ ການສຶກສາເຫຼົ່ານີ້ຍັງຊີ້ໃຫ້ເຫັນວ່າການຂະຫຍາຍຕົວຂອງກຸ່ມປະຊາກອນຊາວໂຈມົງຄັ້ງນີ້ອາດແຜ່ໄປຈົນເຖິງທະວີບ ອາເມລິກາ ຜ່ານເສັ້ນທາງລຽບຊາຍຝັ່ງ ມະຫາສະໝຸດປາຊີຟິກ.

**1.1 ດ້ານວັດທະນະທຳ**

ຄຳວ່າ ໂຈມົງ Jomon ມີຄວາມໝາຍຕາມເຄົ້າພາສາເດີມວ່າ: ຮູບຮອຍລາຍເຊືອກທີ່ປະທັບຢູ່ໃນເຄື່ອງປັ້ນດິນເຜົາວັດທະນະທຳນີ້ມີອາຍຸລະຫວ່າງ 8000BC – 3000BC ຈາກຮູບຮອຍລາຍເຊືອກທີ່ະທັບຢູ່ໃນເຄື່ອງປັ້ນດິນເຜົານີ້ນັກປະຫວັດສາດຍີ່ປຸ່ນຈຶ່ງເອີ້ນຊື່ວັດທະນະທນີ້ວ່າ ວັດທະນະທຳໂຈມົນ ຫຼື ສະໄໝໂຈມົນ.

ກຸ່ມຄົນທີ່ສ້າງສັນວັດທະນະທຳນີ້ນັກວິຊາການສັນນິຖານວ່າ ແມ່ນກຸ່ມຄົນພື້ນເມືອງເດີມທີ່ພັດທະນາຄວາມສາມາດໃນການຜະລິດເຄື່ອງໃຊ້ສອຍໃນຊີວິດປະຈຳວັນຂຶ້ນ ຫຼື ກຸ່ມຄົນທີ່ເດີນທາງມາຈາກຖິ່ນອື່ນທີ່ມີຄວາມສາມາດເໜືອກວ່າຄົນພື້ນເມືອງເດີມ.

ເຖິງຢ່າງໃດກໍ່ຕາມມະນຸດໃນຍຸກວັດທະນະທຳ Jomon ກໍ່ສາມາດຜະລິດເຄື່ອງມື ເຄື່ອງໃຊ້ທີ່ເຮັດດ້ວຍຫີນໃຫ້ມີປະສິດທິພາບສູງຂຶ້ນ ມີການແກະສະຫຼັກຢ່າງມີຄວາມປານີດ ແລະ ຂັດຈົນເກີດຄວາມແຫຼມຄົມ ເຄື່ອງມືຫີນທີ່ມະນຸດ Jomon ປະດິດຂຶ້ນມີ ຂວານ,ມີດ ແລະ ເບັດຕຶກປາຍີ່ປຸ່ນເອີ້ນວັດທະນະທຳນີ້ວ່າ: ໂຈມົງ ເຊິ່ງແປວ່າ ລາຍເຊືອກຍ້ອນວ່າເຄື່ອງປັ້ນດິນເຜົາສ່ວນຫຼາຍທີ່ຄົ້ນພົບມີລາຍເຊືອກຢູ່ທາງນອກເຊິ່ງຄົ້ນພົບຢູ່ຫຼາຍແຫ່ງໃນທົ່ວຍີ່ປຸ່ນ ແລະ ເກາະຮິວກິວວັດຖຸທີ່ຄົ້ນພົບສ່ວນຫຼາຍແມ່ນຢູ່ທາງພາກຕາເວັນອອກ ແລະ ພາກເໜືອຂອງຍີ່ປຸ່ນເຊິ່ງເປັນບ່ອນທີ່ວັດທະນະທຳນີ້ຄົງຕົວຢູ່ໄດ້ດົນທີ່ສຸດ. ວັດຖຸທີ່ຄົ້ນພົບມີກອງເປືອກຫອຍ, ອາວຸດຫີນ, ເຄື່ອງປັ້ນດິນເຜົາ ແລະ ຮູບແບບຕ່າງໆຫຼາຍກວ່າ 70 ຊະນິດ, ຕຸກກະຕາປັ້ນເປັນຮູບຄົນ ແລະ ສັດເປັນໂຕນ້ອຍໆເຊິ່ງພົບຢູ່ໃກ້ກັບກອງເປືອກຫອຍ ຫຼື ໃນຂຸມຝັງສົບ, ແລະ ເຄື່ອງປັ້ນດິນເຜົາໃຊ້ສຳລັບປະກອບເຂົ້າໃນພິທີກຳ ຫຼື ສຳລັບແຕ່ງກິນ ການດຳລົງຊີວິດຂອງຄົນກຸ່ມນີ້ແມ່ນມັກຍ້າຍຖິ່ນຖານ ຫາກິນໂດຍການເກັບເດັດ, ລ່າສັດ, ຕຶກປາ, ເກັບຂອງປ່າເປັນອາຫານຮູ້ຈັກນຳໃຊ້ໄຟ ແລະ ເຊື່ອຖືທຳມະຊາດ.

ເຖິງຢ່າງໃດກໍ່ຕາມມະນຸດໃນຍຸກວັດທະນະທຳ ໂຈມົງ ກໍ່ສາມາດປະດິດເຄື່ອງມືໃຊ້ຈາກຫີນໃຫ້ມີປະສິດທິພາບສູງຂຶ້ນ ມີການແກະສະຫຼັກຢ່າງມີຄວາມປານີດ ແລະ ຂັດຈົນເກີດຄວາມແຫຼມຄົມ. ເຄື່ອງມືຫີນທີ່ມະນຸດ ໂຈມົງ ປະດິດຂຶ້ນມີ ຂວານ, ມີດ ແລະ ເບັດຕຶກປາ ນັກບູຮານຄະດີສັນນິຖານວ່າພວກເຂົາຍັງບໍ່ທັນຮູ້ຈັກການຜະລິດກະສິກຳເທື່ອອີງໃສ່ຫຼັກຖານທາງບູຮານຄະດີ ບົ່ງບອກໃຫ້ຮູ້ວ່າເຂົາມີຄວາມສາມາດຕໍ່ສູ້ກັບສະພາບແວດລ້ອມເພື່ອການມີຊີວິດທີ່ດີຂຶ້ນເຊິ່ງສັງເກດໄດ້ຈາກ.

- ການສ້າງທີ່ພັກພາອາໄສ ກຸ່ມຄົນໃນຍຸກ Jomon ມີການຂຸດຫຼຸມເພື່ອສ້າງເປັນທີ່ພັກພາອາໄສເອີ້ນວ່າ Pithouse ລັກສະນະຂອງຫຼຸມເລິກປະມານ 2 foot ມີລວງຮອບ 15 foot ( 1 foot = 30.48cm) ປາກຂອງຫຼຸມມີການນຳເອົາໃບໄມ້ມາມຸງເປັນຫຼັງຄາ ແຕ່ລະຫຼຸມສາມາດບັນຈຸຄົນໄດ້ແຕ່ 4-5 ຄົນ
- ການປະດິດພາຊະນະເຄື່ອງປັ້ນດິນເຜົາ ກຳມະວິທີການຜະລິດຜະລິດດ້ວຍມື, ມີການນຳເອົາດິນໜຽວມາປັ້ນແລ້ວຕົກແຕ່ງໃຫ້ຮຽບຮ້ອຍ ແລ້ວນຳມາເຜົາຢູ່ກາງແຈ້ງໃຊ້ອຸນນະພູມຕ່ຳ, ຮູບຮ່າງລັກສະນະລວດລາຍທີ່ຕົກແຕ່ງປະດັບປະດາພາຊະນະດິນເຜົາມີຄວາມແຕກຕ່າງກັນຕາມກາລະເວລາ ແລະ ສະຖານທີ່ຜະລິດລັກສະນະເຄື່ອງປັ້ນດິນເຜົາ Jomon ເປັນຮູບຈອຍ,ກົ້ນແຫຼມຄ້າຍຄືຫົວລູກປືນ ຕໍ່ມາມການປະດິດເປັນແບບກົ້ນແບນ ຄ້າຍຄືກັບຖ້ວຍ ເອກະລັກສະເພາະຂອງເຄື່ອງປັ້ນດິນເຜົາ Jomon ຈະມີຮູບຮອຍລາຍເຊືອກປະທັບຢູ່.
- ການປະດິດຕຸກກະຕາດິນເຜົາ ແລະ ພາຊະນະປະກອບພິທີກຳ ນອກຈາກພາຊະນະເຄື່ອງໃຊ້ແລ້ວ ຍັງມີການຜະລິດຕຸກກະຕາດິນເຜົາ ແລະ ພາຊະນະທີ່ໃຊ້ໃນການປະກອບພິທີກຳ ຕຸກກະຕາດິນເຜົາໃນຍຸກນີ້ຊື່ວ່າ Dogu ແລະ ມີຫຼາຍຮູບແບບ: ໜ້າເປັນລີງ,ແມວ ແລະ ຮູບແມ່ຍິງທີ່ມີໜ້າຕາປະຫຼາດ ນອກຈາກນີ້ຍັງມີພາຊະນະທີ່ບໍ່ເໝາະສົມໃນການໃຊ້ປະຈຳວັນ ເຊິ່ງສັນນິຖານວ່າ ພາຊະນະດັ່ງກ່າວ ຄົງເອົາໄວ້ໃຊ້ສະເພາະໃນພິທີກຳໃດໜຶ່ງ ສິ່ງປະດິດ ແລະ ພາຊະນະດັ່ງກ່າວສະທ້ອນໃຫ້ເຫັນເຖິງພັດທະນາການດ້ານຄວາມຄິດ,ຄວາມເຊື່ອຂອງມະນຸດໃນເລື່ອງກ່ຽວກັບສິ່ງອຳນາດເໜືອທຳມະຊາດ ນັກວິຊາການສັນນິຖານວ່າ ຕຸກກະຕາ Dogu ນີ້ອາດຈະໃຊ້ເປັນເຄື່ອງສັກສິດສຳລັບປ້ອງກັນໄພພິບັດຈາກອຳນາດທີ່ລຶກລັບ ຫຼື ອາດຈະເປັນສັນຍາລັກບົ່ງບອກເຖິງຄວາມອຸດົມສົມບູນກໍເປັນໄດ້.

ຮ່ອງຮອຍມະນຸດໃນກຸ່ມ Jomon ນີ້ພົບກະຈາຍຢູ່ທົ່ວໄປຕັ້ງແຕ່ເກາະ Hokkaido ຈົນຮອດເກາະ Honshu ສະຫຼຸບແລ້ວມະນຸດໃນກຸ່ມວັດທະນະທຳ Jomon ເປັນຊາວເຄື່ອນທີ່ ອາຊີບແມ່ນການເກັບເດັດ,ລ່າເນື້ອເປັນອາຫານ ເຖິງແມ່ນວ່າຈະຮູ້ຈັກການປັບຕົວເຂົ້າກັບສະພາບແວດລ້ອມດ້ວຍການສ້າງທີ່ພັກພາອາໄສ, ການປະດິດເຄື່ອງມືເຄື່ອງໃຊ້ ແຕ່ກໍ່ຍັງບໍ່ມີການຕັ້ງຖິ່ນຖານແບບຖາວອນ, ບໍ່ທັນມີການຈັດການປົກຄອງ. ຄວາມຄິດຄວາມເຊື່ອໃນການປະກອບພິທີກຳຍັງບໍ່ທັນສະຫຼັບສັບຊ້ອນພໍເທົ່າໃດ ຊີວິດຂອງຄົນສ່ວນໃຫຍ່ອຸທິດໃຫ້ແກ່ການຫາອາຫານເພື່ອການມີຊີວິດຢູ່ລອດ ແລະ ບໍ່ອຶດຫິວເທົ່ານັ້ນ ວັດທະນະທຳ Jomon ສິ້ນສຸດລົງເມື່ອວັດທະນະທາໃໝ່ທີ່ສູງກວ່າກ້າວເຂົ້າມາເມື່ອປະມານ 300 ປີກ່ອນ ຄສ.

## 2. ຍຸກຍະໂຍອິ ( Yayoi period)



ຮູບທີ 12 ແວ່ນສຳລິດໜຶ່ງໃນວັດຖຸບູຮານຂອງຍຸກຍະໂຍອິ

ຕໍ່ມາເມື່ອປະມານ 500 ເຖິງ 300 ປີກ່ອນ ຄສ ຈີນເຖິງກາງສະຕະວັດທີ 3 ຍີ່ປຸ່ນໄດ້ປ່ຽນເຂົ້າສູ່ຍຸກຍະໂຍອິ (ຍະໂຍະອິ ຈິໄດ) ຄຳວ່າ ຍະໂຍະອິນັ້ນໄດ້ມາຈາກແຂວງໜຶ່ງໃນເຂດບຸງກຽວ ກຸງໂຕກຽວ ເຊິ່ງເປັນສະຖານທີ່ທຳອິດທີ່ຄົ້ນພົບຮ່ອງຮອຍກ່ຽວກັບຍຸກນີ້. ຊ່ວງຕົ້ນຂອງຍຸກ ຍະໂຍອິ ປະກົດໃຫ້ເຫັນເຖິງການທີ່ໄດ້ຮຽນຮູ້ເຖິງການກະເສດເຊັ່ນ: ການປູກເຂົ້າ, ການເຮັດເຄື່ອງໃຊ້ໂລຫະ ແລະ ການເຄົາລົບບູຊາພູດຜີປີສາດ ເຊິ່ງເປັນວັດທະນະທຳທີ່ເຂົ້າມາທາງເກົາຫຼີ ແລະແຜ່ນດິນໃຫຍ່. ຊາວຍີ່ປຸ່ນໃຊ້ເຄື່ອງມື, ເຄື່ອງໃຊ້ເຮັດດ້ວຍເຫຼັກທີ່ໃຊ້ໃນການເພາະປູກໃນຊີວິດປະຈຳວັນ ເພື່ອເພີ່ມຜົນຜະລິດທາງການກະເສດ ແລະ ໃຊ້ດາບທີ່ເຮັດດ້ວຍທອງແດງ ແລະ ແວ່ນໃນການປະກອບພິທີກຳທາງສາສະໜາ ການຈັດແບ່ງວຽກເຮັດງານທຳໃຫ້ຊ່ອງວ່າງລະຫວ່າງຜູ້ປົກຄອງດິນແດນ ແລະ ຜູ້ຢູ່ໃຕ້ການປົກຄອງກວ້າງຂຶ້ນ ໃນຊ່ວງນີ້ລັດນ້ອຍໆຈຳນວນຫຼາຍຈຶ່ງໄດ້ກໍ່ຕົວຂຶ້ນທົ່ວປະເທດ. ການກ່າວເຖິງຍີ່ປຸ່ນຄັ້ງທຳອິດປາກົດຂຶ້ນໃນບັນທຶກຂອງລາຊະສຳນັກຈີນສະໄໝລາຊະວົງ ຮັ່ນ (ໃນປີ 57ກ່ອນຄຣິດຕການບັນທຶກໄດ້ກ່າວເຖິງຊາວວະ) ທີ່ຂ້າມທະເລມາສົ່ງບັນດາການນັ້ນປະກອບໄປດ້ວຍ 100 ກວ່າເຜົ່າໜັງສືເວ່ຍ ທີ່ຂຽນຂຶ້ນໃນຊ່ວງສະຕະວັດທີ 3 ຍັງໄດ້ກ່າວອີກວ່າປະເທດດັ່ງກ່າວເປັນການຮວມຕົວຂອງລັດນ້ອຍໆກວ່າ 30 ລັດ ທີ່ມີຜູ້ປົກຄອງເປັນຜູ້ຍິງຊື່ວ່າ ຮິມິໂກະ ແຫ່ງ ຍະມະໄທໂຄະກຸ. ແຫຼ່ງໂຍະຊິໂນະງະຣິ ເປັນແຫຼ່ງບູຮານຄະດີຂະໜາດໃຫຍ່ຂອງຍຸກ ຍະໂຍອິທີ່ຕັ້ງຢູ່ເທິງເກາະ ຄິວຊູ ການຂຸດຄົ້ນປະກົດໃຫ້ເຫັນເຖິງສ່ວນທີ່ເກົ່າແກ່ທີ່ສຸດ ທີ່ຖືກສ້າງຂຶ້ນໃນຊ່ວງ 400 ປີກ່ອນ ຄສ ວັດຖຸສ່ວນຫຼາຍທີ່ຂຸດຄົ້ນພໍ້ນັ້ນເປັນວັດຖຸທີ່ເຮັດຈາກໂລຫະສຳລິດ ລວມທັງສິ່ງທີ່ນຳເຂົ້າມາຈາກຈີນແລ້ວ.

### 2.1 ດ້ານວັດທະນະທຳ

ຫຼັງຈາກທີ່ສະໄໝໂຈມົງ (Jomon )ສິ້ນສຸດລົງ ຕໍ່ມາແມ່ນສະໄໝ ຍະໂຍອິ ( Yayoi ) ເຊິ່ງໄດ້ຊື່ມາຈາກເສັ້ນທາງເສັ້ນໜຶ່ງໃນໂຕກຽວ ( Tokyo )ເຊິ່ງເປັນສະຖານທີ່ຄົ້ນພບເຄື່ອງປັ້ນດິນເຜົາ ເຊິ່ງມີລັກສະນະຄວາມຈະເລີນສູງ

ກວ່າລຸ້ນກ່ອນ ວັດທະນະທຳຍະໂຍອິມີຕົ້ນກຳເນີດມາຈາກເກາະ ຄິວຊູ ແລ້ວແຜ່ຂະຫຍາຍໄປທົ່ວຍີ່ປຸ່ນ ແລະ ຂະຫຍາຍຂຶ້ນໄປທາງພາກເໜືອ ວັດທະນະທຳໂຈມົງກໍ່ສິ້ນສຸດລົງ. ພວກນີ້ຮູ້ຈັກການປູກຝັງ, ລ້ຽງສັດ, ດຳລົງຊີວິດແບບຄົງທີ່ (ຢູ່ໃນຖໍ້າ)ແຕ່ເມື່ອສັງຄົມຂະຫຍາຍຕົກໍ່ຮູ້ຈັກຫຼໍ່ເຄື່ອງມືທີ່ເຮັດດ້ວຍເຫຼັກ ແລະ ທອງສຳລິດ, ແອ່ນ, ຫອກ ແລະ ຊາມ ເຊິ່ງເຄື່ອງປັ້ນດິນເຜົາຂອງັດທະນະທຳຍະໂຍອິຈະມີລວດລາຍ ແລະ ປານີດກວ່າສະໄໝໂຈມົງ ຕົວຢ່າງ  ທອງເຮັດດ້ວຍທອງສຳລິດ ຫຼື ໂດທະກຸ  (Dotaku ) ເຊິ່ງມີຂະໜາດບາງພົບເຫັນຢູ່ໃນຕອນກາງຂອງເກາະ ຮອນຊູ

ລັກສະນະທີ່ເປັນເອກະຂອງວັດທະນະທຳ Yayoi Bunka

- ການກະສິກຳ: ຫຼັກຖານທີ່ບົ່ງບອກເຖິງການກະສິກາຄື: ການປູກເຂົ້າໃສ່ບ່ອນຕ່ຳຕາມແຄມແມ່ນ້ຳການຮູ້ຈັກປູກເຂົ້ານີ້ເຮັດໃຫ້ຄວາມຮູ້ໃນການປູກພືດຊະນິດອື່ນໆເກີດຂຶ້ນ ແລະ ເຮັດໃຫ້ຄົນມີການຮວມກັນເປັນຊຸມຊົນກະສິກຳ ໂດຍມີການສ້າງຕັ້ງຖິ່ນຖານແບບຖາວອນ ໃນບໍລິເວນເຂດທົ່ງພຽງ ຫຼື ດິນຕ່ຳ ກະຈາຍຢູ່ທົ່ວໄປຕາມແຄມແມ່ນ້ຳ ແລະ ຮ່ອມພູ ກຸ່ມຄົນທີ່ດຳລົງຊີວິດໃນຍຸກນີ້ຍຶດຖືອາຊີບການກະສິກຳເປັນຫຼັກ
- ການຮວມກຸ່ມ ແລະ ການຈັດການປົກຄອງໃນກຸ່ມ: ການກະສິກາເກີດຂຶ້ນຮຽກຮ້ອງໃຫ້ຄົນມີການຮວມກຸ່ມໃນຊຸມຊົນດຽວກັນ ໂດຍທີ່ສະມາຊິກກຸ່ມນັ້ນຕ້ອງມີການຮ່ວມມື ແລະ ສາພັນກັນເປັນຢ່າງດີເພື່ອຜົນປະໂຫຍດໃນການປູກຝັງ ການຮ່ວມກຸ່ມພາໃຫ້ເກີດມີຜູ້ນຳຂອງກຸ່ມເກີດຂຶ້ນ ໂດຍແມ່ນສະມາຊິກໃນກຸ່ມເປັນຜູ້ຄັດເລືອກຜູ້ປົກຄອງຂອງກຸ່ມ ການເກີດຜູ້ນຳ ຫຼື ຫົວໜ້າກຸ່ມ ມີຜົນເຮັດໃຫ້ໂຄງສ້າງທາງສັງຄົມມີການປ່ຽນແປງ, ເກີດມີການແບ່ງຊັ້ນຄົນໃນສັງຄົມ ຫຼັກຖານທີ່ບົ່ງບອກວ່າ Yayoi Bunka ເປັນສັງຄົມທີ່ມີຊົນຊັ້ນສະແດງອອກ. ການບັນຈຸຈົບຄົນຕາຍລົງໃນໄຫຂະໜາດໃຫຍ່ ພ້ອມດ້ວຍອາວຸດທີ່ປະດິດຈາກຫີນ ແລະ ທອງສຳລິດຮວມທັງເຄື່ອງປະດັບປະດາຕ່າງໆທີ່ຮັບມາຈາກຈີນ.
- ລະຄັງໂດຕາກຸ Dotaku ເຊິ່ງເປັນລະຄັງທີ່ເຮັດດ້ວຍທອງສຳລິດ ນັກວິຊາການເຊື່ອກັນວ່າ ລະຄັງ Dotakuເປັນສັນຍາລັກແຫ່ງອຳນາດທາງການເມືອງ ຂອງຊົນຊັ້ນປົກຄອງ ແລະ ຜູ້ເປັນເຈົ້າຂອງລະຄັງນີ້ ກໍ່ຕ້ອງມີຖານະເໜືອກວ່າຄົນອື່ນ ລະຄັງ Dotaku ຍັງເຊື່ອກັນວ່າເປັນເຄື່ອງໃຊ້ປະກອບພິທີກຳບວງສວງເທບພະເຈົ້າ ເພື່ອຄວາມອຸດົມສົມບູນພູນສຸກ ເພື່ອປັດເປົ່າຄວາມຊົ່ວຮ້າຍ ຫຼື ໄພພິປັດຕ່າງໆອອກຈາກຊຸມຊົນ ຫຼື ວ່າເປັນເຄື່ອງສະແດງອຳນາດ ແລະ ອິດທິພົນ ຂອງຊົນຊັ້ນປົກຄອງ ເທັກນິກໃນການຫຼໍ່ຫຼອມຄົງນຳມາຈາກຈີນ ແຕ່ບັນດາລວດລາຍທີ່ພົບໃນລະຄັງນີ້ ບໍ່ປາກົດພົບເຫັນໃນຂົງເຂດອື່ນຂອງໂລກ.
- ການປະດິດເຄື່ອງໃຊ້ດ້ວຍໂລຫະ: ການນຳເອົາໂລຫະມາປະດິດເປັນເຄື່ອງມື ເຄື່ອງໃຊ້ ເປັນລັກສະນະເດັ່ນຂອງ Yayoi Bunka ໂດຍສະເພາະການນາເອົາເຫຼັກມາປະດິດເປັນເຄື່ອງມືເຄື່ອງໃຊ້ໃນຊີວິດປະຈຳວັນ ໂດຍມີການຮຽນແບບມາຈາກເຄື່ອງມືທີ່ເຮັດດ້ວຍໄມ້ ແລະ ຫີນ ນອກຈາກນີ້ຍັງມີການນາເອົາທອງສາລິດມາຫຼອມເຮັດເຄື່ອງໃຊ້ອື່ນໆອີກ ເຄື່ອງໃຊ້ດັ່ງກ່າວນັ້ນ ສ່ວນໃຫ່ຍເປັນຂອງກຸ່ມຄົນຊັ້ນສູງ. ສິ່ງປະດິດຈາກທອງສາລິດທີ່ເປັນເອກະລັກສະເພາະ ແລະ ມີຊື່ສຽງຂອງ Yayoi Bunka ຄືລະຄັງ Dotaku.

ຄວາມຮູ້ກ່ຽວກັບປະດິດຄັງ Dotaku ຄົງຈະໄດ້ມາຈາກຈີນແຕ່ສິ່ງທີ່ໜ້າສຶກສາ ແລະ ສົນໃຈຄື ລວດລາຍສີລະປະໃນລະຄັງ ເປັນຈິນຕະນາການທີ່ສ້າງສັນໂດຍກຸ່ມ Yayoi ໂດຍແທ້ ເພາະລວດລາຍທີ່ພົບແມ່ນມີສະເພາະຢູ່ແຕ່ປະເທດຍີ່ປຸ່ນເທົ່ານັ້ນ (NoritakeTsuda,Hand book of Japanese Art.Tokvo: Charles ETutle 1976 P9)

ລະຄັງ Dotaku ພົບຢູ່ທົ່ວໄປໃນເຂດທົ່ງພຽງ Yamatc ທີ່ເປັນສູນກາງຄວາມຈະເລີນຍີ່ປຸ່ນບູຮານ ທັງເປັນສິ່ງທີ່ຢືນຢັນວ່າເຂດນີ້ແມ່ນຈຸດເລີ້ມຕົ້ນຂອງ ສູນກາງການເມືອງການປປົກຄອງຂອງຍີ່ປຸ່ນໃນສະໄໝບູຮານ ລັກສະນະຮູບ

ຮ່າງລະຄັງ Dotaku ຄ້າຍຄືຖັງນ້ຳຂ້ຳ ດ້ານຂ້າງຂອງລະຄັງແບ່ງອອກເປັນຊ່ອງ, ແຕ່ລະຊ່ອງບັນຈຸດວ້ຍລວດລາຍຕ່າງໆ ລວດລາຍທີ່ເປັນເອກະລັກຂອງ Dotaku ຄືລວດລາຍທີ່ສະທ້ອນໃຫ້ເຫັນເຖິງການດາລົງຊີວິດປະຈາວັນເຊັ່ນ:

ຊ່ອງທີ 1 ຜູ້ຊາຍກາລັງແນທະນູໄປຍັງໂຕກວາງ

ຊ່ອງທີ 2 ໝູປ່າຖືກໝາ 5 ໂຕທາການປິດລ້ອມ ແລະ ມີນາຍພານຖືທະນູຢູ່ໃກ້

ຊ່ອງທີ 3 ຮູບໂຕກວາງເປັນຈານວນຫຼວງຫຼາຍ

ຊ່ອງທີ 4 ຮູບພາບພວງຮ້ອຍປາທີ່ເປັນພວງໃຫຍ່

- ການປະດິດເຄື່ອງປັ້ນດິນເຜົາ: ເຄື່ອງປັ້ນດິນເຜົາ Yayoi ມີລັກສະນະກ້າວໜ້າກວ່າ Jomon ເຊິ່ງສະແດງອອກຄື:ພາຊະນະເຄື່ອງປັ້ນດິນເຜົາມີລັກສະນະລຽບງ່າຍ ແຕ່ມີຄວາມປານິດສູງ ແລະ ມີຂະໜາດຊັດສ່ວນທີ່ເໝາະສົມ ໃນການນຳໃຊ້ເຂົ້າໃນຊີວິດປະຈຳວັນ ແລະ ການປະກອບພິທີກຳ ກຳມະວິທີໃນການປະດິດ ຄືການໃຊ້ແປ້ນໝູນເປັນເຄື່ອງຊວ່ຍ ແລະ ໃຊ້ຄວາມຮ້ອນສູງໃນການເຜົາຄື: ປະມານ 800-900•c ແລະ ເຜົາກາງແຈ້ງ ດັ່ງນັ້ນ ສິ່ງປະດິດດິນເຜົາ Yayoi ຈຶ່ງມີຄວາມສວຍງາມ ແລະ ທົນທານຫຼາຍກວ່າຂອງ Jomon ແຕ່ວ່າສິ່ງປະດິດດັ່ງກ່າວນີ້ບໍ່ມີລວດລາຍປະດັບຄືກັບກັບຂອງ Jomon.
- ຄວາມເຊື່ອ ແລະ ການປະກອບພິທີກຳ: ຄວາມເຊື່ອ ແລະ ການປະກອບພິທີກາຂອງຄົນຍີ່ປຸ່ນໃນຍຸກວັດທະນະທຳ Yayoi ກະທຳໄປເພື່ອຄວາມອຸດົມສົມບູນພູນສຸກ ແລະ ເປັນການສືບສານຕໍ່ຄວາມຄິດ,ຄວາມເຊື່ອຂອງຄົນໃນຍຸກວັດທະນະທຳ Jomon ກ່ຽວກັບສິ່ງອຳນາດທີ່ເໜືອທຳມະຊາດ ຫຼັກຖານທີ່ບົ່ງບອກເຖິງຄວາມເຊື່ອນີ້. ພາຊະນະເຄື່ອງປັ້ນດິນເຜົາຊະນິດພິເສດ ທີ່ພົບກະຈາຍຢູ່ທົ່ວໄປໃນບໍລິເວນທົ່ງໄຮ່ ທົ່ງນາ ແລະເຂື່ອນກັ້ນນ້ຳ ບັນດາສິ່ງເຫຼົ່ານີ້ສະທ້ອນໃຫ້ເຫັນເຖິງລະບົບຄວາມເຊື່ອຂອງຄົນໃນຍຸກນີ້ ທີ່ເນັ້ນຄວາມສາຄັນໃນການປູກຝັງ.

ກະດູກສ່ຽງທວາຍທີ່ພົບເຫັນຢູ່ຕາມບໍລິເວນຕ່າງໆ ຂອງຍີ່ປຸ່ນທີ່ມີລັກສະນະ ຄ້າຍຄືກະດູກສ່ຽງທວາຍ ຂອງຄົນຈີນໃນແຜ່ນດິນໃຫຍ່ ການໃຊ້ກະດູກສ່ຽງທວາຍນີ້ ສັນນິຖານວ່າມີສ່ວນກ່ຽວຂ້ອງ ກັບກິດຈະການປະກອບອາຊີບ ເພື່ອຖາມເທບພະເຈົ້າ ກ່ຽວກັບວິທີທາງ ແລະ ຄວາມອຸດົມສົມບູນ ການສ່ຽງທວາຍນີ້ເປັນວັດທະນະທາຕ່າງຖິ່ນທີ່ເຜີຍແຜ່ເຂົ້າມາໃນດິນແດນ ຍີ່ປຸ່ນ ພ້ອມໆກັບການເຂົ້າມາຂອງເທັກນິກວິທະຍາການອື່ນໆ. ນັກວິຊາການຍັງບອກອີກວ່າ Yayoi Bunka ເປັນຍຸກສະໄໝຫົວລ້ຽວຫົວຕໍ່ ລະຫວ່າງຍຸກດຶກດາບັນ ກັບ ຍຸກປະຫວັດສາດ.

## 3. ຍຸກໂຄະຟຸ້ງ

ປະມານປີ ພສ 793 (ຄສ 250) ເລື້ອຍມາຈົນເຖິງການເຂົ້າມາຂອງສາສະໜາພຸດກະທັ້ງຄິຣດຕະສະຕະວັດທີ 7 ເອີ້ນວ່າ ຍຸກໂຄະຟຸງ (ໂຄະຣຸງຈິໄດ) ຕັ້ງຊື່ຕາມສຸສານທີ່ນິຍົມສ້າງຂຶ້ນກັນໃນຍຸກດັ່ງກ່າວທົ່ວປະເທດ ລັດນ້ອຍໆເຫຼົ່ານັ້ນຄ່ອຍໆລົມຕົວກັນ ແລະ ຕໍ່ມາບໍ່ດົນກໍ່ມີຊາວຈີນຈຳນວນໜຶ່ງຍ້າຍມາຕັ້ງຖິ່ນຖານໃນຍີ່ປຸ່ນ ແລະ ນຳອາລິຍະທຳແບບຈີນມາເຜີຍແຜ່ຍີ່ປຸ່ນ ເຊິ່ງຂະນະນັ້ນອາລິຍະທຳຍີ່ປຸ່ນຍັງບໍ່ຈະເລີນຫຼາຍເຮັດໃຫ້ອາລິຍະທຳສ່ວນຫຼາຍມີອິດທິພົນມາຈາກຈີນ ແລະ ຈົນເຖິງປັດຈຸບັນ ອາລິຍະທຳຍີ່ປຸ່ນກໍຍັງຄ້າຍຄືກັບຈີນຢູ່ບໍ່ນ້ອຍ.

ໃນສະຕະວັດທີ 4 ກຸ່ມຜູ້ມີຄວາມເຂັ້ມແຂງທາງການເມືອງເຊິ່ງມີສູນກາງຢູ່ທີ່ຮາບຍະມະໂຕະ (ໃກ້ຈັງຫວັດນາຣາໃນປັດຈຸບັນ) ໄດ້ມີອຳນາດປົກຄອງປະເທດຕັ້ງແຕ່ສະຕະວັດທີ 4 ຈົນເຖິງສະຕະວັດທີ 6 ມີການພັດທະນາທາງດ້ານກະເສດຕະກຳຂະໜານໃຫຍ່ ແລະ ວັດທະນະທຳຈີນລວມທັງລັດທິຂົງຈື້ ແລະ ສາສະໜາພຸດໄດ້ເຜີຍແຜ່ເຂົ້າມາໃນປະເທດຍີ່ປຸ່ນຜ່ານທາງເກົາຫຼີເຖິງປາຍສະຕະວັດທີ 4 ໄດ້ມີການຕິດຕໍ່ລະຫວ່າງຍີ່ປຸ່ນກັບອານາຈັກເທິງຄາບສະໝຸດເກົາຫຼີ

ສິລະປະອຸດສະຫະກຳຕ່າງໆເຊັ່ນ: ການຕໍ່າແຜ່ນ, ງານໂລຫະ, ການຟອກໜັງ ແລະ ການຕໍ່ເຮືອ.ຍີ່ປຸ່ນໄດ້ຮັບເອົາຕົວອັກສອນແບບຈີນເຊິ່ງມີຮາກຖານມາຈາກອັກສອນພາບມາໃຊ້ ແລະ ໂດຍຜ່ານທາງສື່ຕົວອັກສອນນີ້ເອງຊາຍີ່ປຸ່ນໄດ້ຮຽນຄວາມຮູ້ເບື້ອງຕົ້ນທາງການແພດ, ການໃຊ້ປະຕິທິນ ແລະ ດາລາສາດ ຕະຫຼອດຈົນປັດຊະຍາຂອງລັດທິຂົງຈື້.

❖ ການເມືອງ-ປົກຄອງດັ້ງເດີມ

ສືບເນື່ອງມາຈາກ ສະໄໝຍະໂຍອິ ການປູກເຂົ້າໄດ້ກໍ່ໃຫ້ເກີດສັງຄົມກະສິກຳຕາມແຄມແມ່ນ້ຳ ແລະ ໃກ້ພູເຂົາເຊິ່ງກະຈາຍໄປທົ່ວປະເທດ ກຸ່ມຄົນທີ່ເຂັ້ມມີການຮ່ວມກັນ ແລະ ມີຫົວໜ້າປົກຄອງ ລັກສະນະດັ່ງກ່າວໄດ້ສືບທອດຕໍ່ມາເຖິງສະໄໝ ໂຄະພຸ້ງ ເກີດການປົກໃນລັດສະນະກະຈາຍອຳນາດໄປຕາມທ້ອງຖິ່ນຕ່າງໆ .ດັ່ງນັ້ນ,ບັນທຶກປະຫວັດສາດຂອງອານາຈັກເວ່ຍ ( ) ເຊິ່ງຂຽນຂຶ້ນປະມານປີ ຄສ 297 ຈຶ່ງໄດ້ບັນທຶກໄວ້ວ່າ : ປະຊາຊົນ ວະ  ອາໄສຢູ່ກາງມະຫາສະໝຸດ ເທິງເກາະທີ່ເຕັມໄປດ້ວຍພູເຂົາເຊິ່ງຢູ່ຕອນໃຕ້ຂອງແຄວັນ  ໄທຟັ່ງ ພວກ  ວະ ປະກອບດ້ວຍຫຼາຍກວ່າ 100 ກຸ່ມຕາມການບັນທຶກໄວ້ວ່າອານາຈັດເວ່ຍ ມີການປົກຄອງແບບອິດສະຫຼະ ພາຍໃນແຕ່ລະກຸ່ມຂອງຕົນເປັນກຸ່ມການປົກຄອງທີ່ເອີ້ນວ່າ ອຸຈິ  ດຊຶ່ງໃນຕຳນານນີ້ຈະໃຊ້ຄຳວ່າ: ເຜົ່າ ໝາຍເຖິງ ອຸຈິ ໃນແຕ່ລະເຜົ່າປະກອບດ້ວຍຄອບຄົວຫຼາຍຄອບຄົວແຕ່ມີການລວມຕົວກັນຢູ່ພາຍໃຕ້ການນຳຂອງຄົວຄົວທີ່ໄດ້ມາຈາກຕະກຸນຫຼັກທີ່ມີອຳນາດ ຫຼື ຫົວໜ້າຕະກຸນນີ້ຈະເຮັດໜ້າທີ່ເປັນຫົວໜ້າເຜົ່າ, ຄອບຄົວຕ່າງໆທີ່ມາລວມຕົວກັນນີ້ ອາດຈະບໍມີ ຫຼື ບໍມີຄວາມສຳພັນທາງສາຍເລືອດ ຫຼື ອາດຈະຮ່ວມ  ຫຼື ບໍ່ຮ່ວມໃນວົງຕະກູນຫົວໜ້າເຜົ່າກໍ່ໄດ້ດຜົ່າໜຶ່ງຈະຄອບຄອງດິໃນແດນແຫ່ງໜຶ່ງຊື່ມີທີ່ດິນສຳລັບເຂົ້າຫົວໜ້າເປັນຜູ້ປົກຄອງຫົວໜ້າເຜົ່ານີ້ຄື: ຫົວໜ້າຕະກູທີ່ມີອຳນາດໃນເຜົ່ານັ້ນ.

ໃນແຕ່ລະເຜົ່າປະກອບດ້ວຍກຸ່ມຜູ້ປະລິດເຊິ່ງມີການລວມຕົວກັນຕາມສາຂາອາຊີບ ກຸ່ມຜູ້ປະລິດເອີ້ນວ່າ: ເບະ ຫຼື ໂທະໂມະ ເຊັ່ນ: ກຸ່ມຕໍ່າແຜ່ນ, ກຸ່ມຜະລິດອາວຸດ, ກຸ່ມຜະລິດເຄື່ອງປັ້ນດິນເຜົາ ແລະ ກຸ່ມໜ້າທີ່ເຮັດໜ້າທີ່ບໍລິການໄດ້ແກ່: ກຸ່ມເຮັດໜ້າທີ່ປະກອບພິທີກຳທາງສະໜາ  ແລະ ກຸ່ມທະຫານການປົກຄອງໃນແຕ່ລະກຸ່ມອາຊີບນັ້ນໆປົກຄອງສະມາຊິກທີ່ມາຈາກຕະກູນອື່ນ ຕາແໜ່ງຫົວໜ້າກຸ່ມອາຊີບນີ້ສືບທອດຈາກພໍ່ຫາລູກເຊັ່ນດຽວກັບຫົວໜ້າເຜົ່າ, ແຕ່ໃນບາງດຜົ່າອາດຈະມີຫົວໜ້າກຸ່ມອາຊີບບ່າງກຸ່ມສາມາດສະສົມອຳນາດ ແລະ ບາລະມີຈົນມີອຳນາດແຂ່ງຂັນກັບຫົວໜ້າເຜົ່າ.

ການລວມອຳນາດການປົດຄອງໄດ້ຄ່ອຍໆເລີ່ມຂຶ້ນ  ໃນຊ່ວງສະຕະວັດທີ II ໂດຍຫົວໜ້າເຜົ່າເຊິ່ງອ້າງຕົວວ່າຕະກຸນສືບເຊື້ອສາຍມາຈາກເຈົ້າແມ່ ແຫ່ງດວງອາທິດ ຄອບຄອງບໍລິເວນ ຍະມະໂຕະ ເຊິ່ງຢູ່ຕອນກາງຂອງເກາະຮອນຊູ ບໍລິເວນໃກ້ກັບເມືອງໂຕກຽວໃນປະຈຸບັນ ໄດ້ເປັນຜູ້ນຳການລວມຕົວຂອງເຜົ່າຕ່າງໆໃຫ້ເຂົ້າຢູ່ພາຍໃຕ້ອຳນາດເຫດການໃນຊ່ວງນີ້ມີເອກະສານຈີນບັນທຶກໄວ້ວ່າ, ໃນສະໄໝຈັກກະພັດຕິຫວນ ຫູ ຫຼີງ( ປະມານປີຄ.ສ 147-ຄ.ສ 189 ) ແຜ່ນດິນພວກວະ ມີການຕໍ່ສູ້ຊີງອຳນາດກັນ ໃນທີ່ສຸດໄດ້ມີການຜູ້ຍິງຄົນໜຶ່ງຊື່ວ່: ພິມິໂກະ ຫຼື ຮິມິໂກະ ໄດ້ຂຶ້ນມາເປັນຜູ້ປົກຄອງນຳສິ່ງຄວາມສະຫງົບສຸກມາສູ່ແຜ່ນດິນ. ພິມິໂກະເປັນຜູ້ຍິງທີ່ຍັງບໍທັນແຕ່ງງານ, ມີອຳນາດເວເມັນເລີກລັບ ແລະ ນາງມີວິຖີຊີວິດຄວາມເປັນຢູ່ທີ່ຂ້ອນຂ້າງເລີກລັບອີກດ້ວຍລາວຈະປະກົດຕົວໃຫ້ຜູ້ໃດພົບເຫັນນາງຈະໃຊ້ອຳນາດໂດຍຜ່ານຜູ້ຊາຍຄົນໜຶ່ງເຊິ່ງເປັນຕົວກາງໃນການຕິດຕໍ່ອຳນາດຂອງພະນາງ ພິມິໂກະ ແມ່ນມີຢູ່ແຕ່ອຳນາດເວດມົນທາງຄາຖາ ແລະ ການປະກອບພິທີກາທາງສາສະໜາ ບໍ່ມີອຳນາດທາງດ້ານການທະຫານ ທີ່ເໜືອກວ່າເຜົ່າອື່ນໆເຮັດໃຫ້ການລວມຕົວໃນຄັ້ງທຳອິດພາຍໃຕ້ຜູ້ນຳ ເຊິ່ງສືບເຊື້ອສາຍມາຈາກເຈົ້າແມ່ ແຫ່ງດວງຕາເວັນ ເປັນກາລວມຕົວທີ່ບໍ່ໝັ້ນຄົງເຖິງວ່າຕໍ່ມາມີຜູ້ອ້າງຊື່ວ່າ: ເປັນຜູ້

ສືບທອດມາຈາກດວງອາທິດ ຈະປະສະຖາປະນາຕົນເອງເປັນຈັກກະພັດ ກໍ່ບໍ່ສາມາດມີອານາດເໜືອກວ່າເຜົ່າອື່ນໄດ້ ການລວມຕົວກັນໃນລັກສະນະນີ້ຈຶ່ງປະກົດສືບທອດມາຈົນຮອດ ມີການຮັບເອົາວັດທະນະທາດານປົກຄອງຂອງຈີນໃນສະໄໝສະຕະວັດທີ VII ການທີ່ຫົວໜ້າເຜົ່າຕ່າງໆ ຍອມຢູ່ພາຍໃຕ້ຫົວໜ້າເຜົ່າຍະມະໂຕະເຊິ່ງມາສະຖາປະນາເປັນຈັກກະພັດສະນັ້ນສັນນິຖານວ່າມາຈາກເຫດຜົນ 2 ຢ່າງຄື:

1. ອາດເນື່ອງມາຈາກຄວາມເຊື່ໃນການເປັນຜູ້ສືບທອດແບບສືບເຊື້ອສາຍມາຈາກເທບພະເຈົ້າແມ່ແຫ່ງດວງໍທິດທີ່ຄົນຍີ່ປຸ່ນໃຫ້ການເຄົາລົບບູຊາເພາະດວງອາທິດເປັນພະລັງງານທີ່ໃຫ້ແສງສະຫວ່າງກໍ່ໃຫ້ເກີດຄວາມອົບອຸ່ນເຊິ່ງຖືວ່າເປັນຜູ້ໃຫ້ຊີວິດແກ່ສິ່ງທີ່ມີວິດທັງຫຼາຍ.

2. ອາດເປັນເພາະວ່າ ຫົວໜ້າເຜົ່າຕ່າງໆບໍ່ເສຍຜົນປະໂຫຍດໃດໆ ເພາະວ່າເຖິງຈະລວມຢູ່ໃຕ້ອານາດອິດສະຫຼະມຣການປົກຄອງດິນແດນຂອງຕົນ ແລະ ກັບມີອານາດສະເພາະສາມາດເຂົ້າມາມີສ່ວນຮ່ວມໃນການບໍລິຫານລາຊະການໃຫ້ຈັກກະພັດ.

## 1.1 ດ້ານວັດທະນະທຳ

ຕັ້ງແຕ່ກ່ອນປະຫວັດສາດ ອະລິຍະທຳຈີນມີອິດທິພົນຄອບຄອງຍີ່ປຸ່ນທີ່ສຳຄັນຄື: ຄວາມຈະເລີນທາງດ້ານສາສະໜາພຸດ. ໃນສະຕະວັດທີ VII ການປັບປຸງລັດທິຂົງຈື້, ການສ້າງລະບົບການປົກຄອງທີ່ລວມອຊານາດລວມສູນກາງ, ການຮັບປະຕິທິນຈີນ, ການສ້າງສະຖາບັນຂຸນນາງລາຊະສຳຮັກ 12 ລະດັບເປັນເກນຂອງການຮັບລາດຊະການທີ່ມີຄຸນນະທຳ ແລະການກຳນົດຊື່ຂອງປະເທດວ່າ: ນິຮອນ (Nihon ) ຫຼື ນິປຮອນ ( Nippon ) ເຊິ່ງແປວ່າ: ເປັນຕົ້ນກາເນີດແຫ່ງດວງຕາເວັນ. (Source of the son )

ໂຄະຟຸ້ງໝາຍເຖິງຂຸມຝັງສົບຂອງຜູ້ປົກຄອງເພາະສະໄໝນີ້ຈະພົບເຫັນຂຸມຝັງສົບຂອງຊົນຊັ້ນສູງ ຫຼື ຊົນຊັ້ນຜູ້ປົກຄອງເປັນຈຳນວນຫຼາຍ ແລະ ມີຂະໜາດໃຫຍ່, ການສ້າງຂຸມຝັງສົບຂະໜາດໃຫຍ່ຂອງຊົນຊັ້ນຜູ້ປົກຄອງ ເປັນການສ້າງທີ່ຕໍ່ເນື່ອງຈາກຍຸກຍະໂຍອິ ການນິຍົມສ້າງຂຸມຝັງສົບຂະໜາດໃຫຍ່ສືບເນື່ອງມາຈາກຄວາມນິຍົມທີ່ໄດ້ຮັບມາຈາກຈີນ ແລະ ເກົາຫຼີປະກອບເປັນຂຸມສົບຂະໜາດໃຫຍ່ຍັງເປັນສິ່ງທີ່ຊ່ວຍເສີມສ້າງບາລະມີໃຫ້ກັບຊົນຊັ້ນຜູ້ປົກຄອງ ຖ້າມີຂຸມຝັງສົບຂະໜາດໃຫຍ່ເທົ່າໃດກໍ່ສະແດງໃຫ້ເຫັນເຖິງຄວາມຍິ່ງໃຫຍ່ ແລະ ບາລະມີຂອງຜູ້ປົກຄອງເທົ່ານັ້ນ ມາໃນຊ່ວງສະຕະວັດທີ VI ເນື່ອງຈາກພຸດທະສາສະໜາ ໄດ້ສ້າງປະເພນີການປົງສົບໂດຍການຈູດໃຫ້ໄໝ້ໝົດ ປະກອບກັບເຫດຜົນທາງການເມືອງ ທີ່ຜູ້ປົກຄອງສ່ວນກາງ ຕ້ອງການຫຼຸດບົດບາດ ຂອງຜູ້ປົກຄອງທ້ອງຖິ່ນຕ່າງໆ ຈຶ່ງເຮັດໃຫ້ການສ້າງຂຸມຝັງສົບຄ່ອຍໆໝົດຄວາມນິຍົມໄປໃນທີ່ສຸດ.

ຂຸມຝັງສົບທີ່ປາກົດເຫັນຢູ່ໃນສະໄໝ ໂຄະຟຸ້ງ ຈະມີຮູບລັກສະນະເປັນຊົງກົມ ແລະ ເປັນສີ່ລ່ຽມ, ແຕ່ທີ່ນິຍົມຫຼາຍຄືຮູບຮູກະແຈ ໂດຍສ້າງເປັນໂພນອ້ອມຮອບດ້ານໃນ, ພາຍໃນຂຸມຝັງສົບມີຫ້ອງທີ່ກໍ່ດວ້ຍຫີນຢູ່ເທິງສຸດຂອງໂພນເຊິ່ງໃຊ້ເປັນບ່ອນມ້ຽນສົບ ແລະ ໄວ້ເຄື່ອງເອ້ຕ່າງໆໄດ້ແກ່: ແວ່ນສຳລິດ, ດາບສຳລິດ ແລະ ລູກປັດໂຄ້ງເຄິ່ງວົງເດືອນ Magatama ເຊິ່ງເຄື່ອງທັງສ3 ຢ່າງນີ້ ເປັນລັກສະນະຂອງຕະກຸນທີ່ມີອານາດ. ນອກນີ້ຍັງມີຕຸກກະຕາດິນເຜົາ ຮະນິວະ Haniwa ເຊິ່ງເປັນຮູບຕ່າງໆເຊັ່ນ: ຮູບຄົນ, ສັດ, ເຮືອນ ແລະ ອາວຸດ ແຕ່ທີ່ພົບຫຼາຍກວ່າໝູ່ ຈະເປັນຮູບທະຫານໃສ່ເສື້ອເກາະ.



**ຮູບທີ 13 ໂຄະຟຸງສຸສານຈັກກະພັດນິນໂຕະກຸ**

**ກ.ການພັດທະນາທາງດ້ານປະຫວັດສາດ**

ປະຫວັດສາດຂອງຍີ່ປຸ່ນ ແລະ ວັດທະນະທຳສະໄໝທຳອິດ ເປັນເລື່ອງທີ່ຍັງສັບສົນທີ່ສຸດກ່ຽວກັບການກຳເນີດຄວາມເປັນມາ ເມື່ອເຖິງສະໄໝປະຫວັດສາດ ພື້ນທີ່ສ່ວນໃຫຍ່ອາໄສຢູ່ໂດຍປະຊາຊົນທີ່ບົ່ງບອກເຖິງເຜົ່າ ວັດທະນະທາກວ່າສະໄໝຕັ້ງແຕ່ຫຼັກແຫຼ່ງປະກອບສ່ວນໃຫຍ່ປົກຄອງເປັນລະບົບຄອບຄົວ, ເປັນຕະກູນທີ່ນັບວ່າສຳຄັນ ແລະ ມີອຳນາດກວ່າໝູ່ ແມ່ນຕະກູນ ຍະມະໂຕະ ໃນສະຕະວັດທີ XI ເຊິ່ງອີກ 2 ສະຕະວັດຕໍ່ມາຕະກູນນີ້ໄດ້ເຊື່ອອານາດລົງ.

ລະບຽບການປົດຄອງ ຍະມາໂຕະ ເປັນການປົກຄອງເປັນຕະກູນ ມີອົງກອນຕົນແທນຕະກຸນອື່ນໆ ລວມດານປົກຄອງ ເມື່ອສະຕະວັດທີVII-XIX ເປັນດິນແດນຂອງປະເທດໄດ້ໝົດກົດໝາຍ, ການເກັບພາສີສ່ວນກາງສິ້ນສຸດລົງ, ອຳນາດເປັນໃຫຍ່ນັ້ນເປັນພຽນຫຸ່ນເຊີດ ຕະກູນຟູຈິວະ ຕັ້ງຕົນເປັນຜະເດັດການ ດຳເນີນການປົກຄອງຢູ່ເບື້ອງຫຼັງ . ດັ່ງນັ້ນ, ຈິ່ງເຫັນໄດ້ວ່າ ໃນສະຕະວັດ XI ຂຸນນາງລາຊະສຳໜັກ ເປັນຜູ້ສືບທອດຕໍ່ ແລະ ສ້າງ ວັດທະນະທາ ເຖິງແມ່ນວ່າບໍ່ມີອຳນາດໃນການປົກຄອງປະເທດກໍ່ຕາມ.

ລະບົບການປົກຄອງແບບຕະກຸນ ທີ່ມີ ຍະມະໂຕະ ເປັນໃຫຍ່. ເປັນການປົດຄອງແບບຄອບຄົວ ທີ່ປະສົບຄວາມລົ້ມເຫຼວ ໃນການສ້າງລະບົບການປົກຄອງອີງຕາມແບບຂອງຈີນ ອຳນາດລັດຫຼຸດລົງ , ເນື່ອງຈາກ ຂາດລະບົບລາຊະການ, ຂາດລາຍໄດ້ຄື ທີ່ດິນ ແລະ ພາສີ . ຕັ້ງແຕ່ສະຕະວັດທີ XI ຂຸນນາງຕາມຕົວເມືອງຕ່າງໆໄດ້ພາກັນສະສົມທີ່ດິນ, ສ້າງສິດທິອັບສືບຕໍ່ຕົກທອດມາແຕ່ຕະກຸນແລະ ສະສົມອຳນາດ. ຂຸນນາງເຮັດສົງຄາມຍາດຊີງອຳນາດກັນ. ມາຮອດປີຄ.ສ 1185 ຕະກຸນຍະມະໂຕະໄດ້ຕັ້ງຕົນເປັນໃຫຍ່ ຜູ້ນຳຕະກູນໄດ້ຕັ້ງຕົນເປັນໂຊກຸນ ເຊິ່ງເປັນການເລີ່ມຕົ້ນການປົກຄອງແບບຜະເດັດການ ໂດຍມີທະຫານທີ່ຍັງຍຶດເອົາແບບຢ່າງ ການປົກຄອງແບບຄອບຄົວ ລະບອບຈັກກະພັດ ໄດ້ສິ້ນສຸດລົງໃນປີ ຄ.ສ 1121 . ເຖິງວ່າຈະພະຍາຍາມທີ່ຈະກູ້ອຳນາດຫຼາຍຄັ້ງແຕ່ບໍ່ສຳເລັດ ອາດເວົ້າໄດ້ວ່າ ລະຫວ່າງສະຕະວັດທີ XII –XIX ຊົນຊັ້ນທະຫານ ຊົນຊັ້ນທະຫານຄື: ຊົນຊັນປົກຄອງຂອງຍີ່ປຸ່ນ.

ໄລຍະທຳອິດ ຂຸນນາງຍາດຊີງອຳນາດກັນ ແລະ ກັນ ຈັກກະພັດກໍ່ພະຍາຍາມຍາດຊີງອຳນາດຄືນ ລະຫວ່າງປີຄ.ສ 1331- 1392 ສົງຄາມກາງເມືອງໄດ້ລະເບີດຂຶ້ນ ສັງຄົມມີຄວາມວຸ້ນວາຍ. ມາໃນປີ 1277 ແລະ 1281

ກອງທັບມົງໂກນໄດ້ພະຍາຍາມບຸກຕີຍີ່ປຸ່ນດ ແຕ່ບໍ່ສຳເລັດ ຍ້ອນປະສົບກັບລົມໃພະຍຸພັດຈົນເຮັດໃຫ້ກອງທັບແຕກສະຫຼາຍໄປ.

ໃນປີ ຄ.ສ 1603 ຕະກຸນໂທກຸງະວະ ໄດ້ຄອບຄອງຍີ່ປຸ່ນທົ່ວປະເທດ, ການປົກຄອງແບບຜະເດັດການທາງດ້ານທະຫານຂອງຕະກຸນນີ້ໄດ້ແກ່ຍາວຮອດປີ ຄ.ສ 1867 ຈຶ່ງສິ້ນສຸດລົງ.

# ບົດທີ 3
# ການປະກົດຕົວ ແລະ ພັດທະນາການລັດບູຮານຍີ່ປຸ່ນ

## 1. ຍຸກອະຊູກະ (Atsuka period ) ຄສ 538-ຄສ 710



ຮູບທີ 14 ວັດທະນະທຳຍຸອະຊູກະ

ຈິດຕະກຳຝາຜະໜັງເທິງສຸສານທະກະມະສຶຊຶກະ ຈັງຫວັດນະຣະ ແຕ້ມໃນຊວ່ງຄິຣດຕະສະຕະວັດ ທີ່ຍຸກ ອະຊຶກະ

ຍຸກອະຊຶກະ (ອະຊຶກະຈິໄດ) ຄືຍຸກທີ່ສູນກາງຂອງລະບອບກະສັດ ຍະມະໂຕະ ຕັ້ງຢູ່ໃນອາຊຶກະ ຈັງຫວັດ ນະຣະ ດຳລົງຢູ່ຕັ້ງແຕ່ຊວ່ງປາຍຕຣິດຕະສະຕະວັດທີ 6 ເຖິງ 8 ໃນປີ ຄສ 538 ເມື່ອສາສະໜາພຸດໄດ້ເຂົ້າມາໃນຍີ່ປຸ່ນເປັນຄັ້ງທຳອິດ ຈາກປະເທດອິນເດຍ ໂດຍຜ່ານທາງຈີນ ແລະ ເກົາຫຼີ ຜູ້ປົກຄອງຍີ່ປຸ່ນໄດ້ຖືລະບົບການປົກຄອງຂອງຈີນເປັນແນວທາງໃນການສ້າງລະບົບການປົກຄອງຂອງຕົນ.ປະມານປາຍຄຣິດຕະສະຕະວັດທີ 6 ລາຊະວົງ ສຸຍ ຂອງຈີນໄດ້ເຮັດການຮວມປະເທດໃໝ່ອີກຄັ້ງໃນຮອບ 400 ປີ ເຈົ້າຊາຍໂຊໂຕະກຸ ຜູ້ສຳເລັດລາຊະການແທນຈັກກະພັດ ນິຊຸຍໂກະ ໄດ້ສົ່ງຄະນະທູດ "ເຄນຊຸຍຊິ " ໄປຈະເລີນສຳພັນທະໄມຕີກັບຈີນແລ້ວ ດວ້ຍເຫດນີ້ ຍີ່ປຸ່ນຈຶ່ງໄດ້ຮັບຖ່າຍທອດວັດທະນະທຳຈາກແຜ່ນດິນໃຫຍ່ມາຫຼາຍ ນອກຈາກນັ້ນຍັງຊົງຕຣາລັດຖະທຳມະນູນສິບເຈັດມາດຕາ ທີ່ມີໃຈຄວາມສຳຄັນກ່ຽວກັບການຈັດລະບົບຂອງການເມືອງການປົກຄອງ ແລະ ຄວາມສະຫງົບສຸກໃນບ້ານເມືອງອີກດວ້ຍ ແລະ ເພື່ອໃຫ້ພຸດທະສາສະໜາຮຸ່ງເຮືອງໃນຍີ່ປຸ່ນພະອົງຍັງມີຄຳສັ່ງໃຫ້ສ້າງ ວັດໂຮຣິວ ວັດໄມ້ທີ່ເກົ່າແກ່ທີ່ສຸດໃນຍີ່ປຸ່ນດວ້ຍເຊັ່ນກັນ. ປະຫວັດສາດຍີ່ປຸ່ນມີຢູ່ 3 ຄັ້ງທີ່ຕົກຢູ່ໃຕ້ອິດທິພົນວັດທະນະທຳຂອງຊາດອື່ນ:ວັດທະນະທຳຂອງຈີນໃນສະຕະວັດທີ VII ແລະ ວັດທະນະທຳຕາເວັນຕົກໃນສະຕະວັດທີ XIX. ໃນສະຕະວັດທີ VIII ແລະ IX ເປັນຊວ່ງເວລາທີ່ຍີ່ປຸ່ນຕື່ນເຕັ້ນກັບວັດທະນະທຳຈີນທີ່ສູງກວ່າຕົນຍີ່ປຸ່ນຈຶ່ງນຳມາໃຊ້, ແຕ່ໃນຂະນະດຽວກັນກໍ່ວັດທະນະທຳຂອງຕົນຂຶ້ນມາແຂ່ງກັບວັດທະນະທຳຈີນອີກດວ້ຍ.

ຍີ່ປຸ່ນມີຄວາມສຳພັນທາງການເມືອງກັບເກົາຫຼີ ແລະ ວັດທະນະທຳຂອງຈີນມາເປັນເລາດົນນານແລ້ວໂດຍສະເພາະຢ່າງຍິ່ງໃນຊ່ວງສະຕະວັດທີ VII ໃນສະໄໝອະຊຸກະຂະນະທີ່ເຈົ້າຊາຍໂຊໂຕກຸເປັນຜູ້ສຳເລັດລາຊະການ ແລະ

ເປັນພະນັດດາ ( ນ້ອງຊາຍ ) ຂອງພະນາງ ສຸຍໂກະນັ້ນພະອົງເຫັນອຳນາດການປົກຄອງຂອງລັດຖະບານກາງ ຫຼື ລາຊະສຳນັກອ່ອນແອ, ຕົກຢູ່ໃຕ້ອິດທິພົນຂອງຕະກຸນຂຸນນາງຕ່າງໆ ແລະ ສຶກສາວັດທະນະທຳການເມືອງຂອງເພື່ອນບ້ານໃຫ່ຍ ເຊິ່ງໄດ້ແກ່: ຈີນສະໄໝລາຊະວົງຖັງຜູ້ຮຸ່ງເຮືອງ ແລະ ມີແນວຄິດວ່າລັດຖະບານກາງຂອງຈັກກະພັດແຫ່ງລາຊະວົງຖັງນັ້ນມີອຳນາດການປົກຄອງທີ່ເຂັ້ມແຂງໄດ້ກໍ່ຍ້ອນການປະສົມປະສານລັດທິການປົກຄອງຈາກສາສະໜາພຸດ ແລະ ລັດທິຂົງຈື້ເປັນສຳຄັນໃນຂະນະທີ່ລັດຖະບານກາງຂອງຈັກກະພັດຍີ່ປຸ່ນອ່ອນເພຍຍ້ອນມີການປົກຄອງໄປຕາມຄວາມເຊື່ອຂອງວັດທະນະທຳອັນເກົ່າແກ່ຂອງຕົນທີ່ມີຊື່ຕໍ່ມາວ່າ (ຊິນໂຕ ) ດັ່ງນັ້ນ ພະອົງຈິ່ງໄດ້ນຳເອົາວັດທະນະທຳທາງການເມືອງຂອງຈີນມາໃຊ້ການສ້າງລັດຖະບານກາງພາຍໃຕ້ການບໍລິຫານຂອງຈັກກະພັດໄດ້ມີການປະກາດໃຊ້ລັດຖະທຳມະນູນ 17 ມາດຕາ (Seventeen Articles Constitution) ອາດເວົ້າໄດ້ວ່າ ລັດຖະທຳມະນູນ 17 ມາດຕາຈະເປັນລັດຖະທຳມະນູນສະບັບທຳອິດຂອງປະຫວັດສາດຍີ່ປຸ່ນວິວັດທະນາການຈະກາຍເປັນຄ່ານິຍົມໃນການສ້າງຊັບພະຍາກອນມະນຸດຂອງຍີ່ປຸ່ນເຖິງປັດຈຸບັນນີ້ເລີ້ມສະໄໝອະຊູກະ( ຄສ 593-624) ການວາງລະບົບການປົກຄອງດ້ວຍການດຶງອຳນາດເຂົ້າສູ່ສູນກາງ ຫຼື ລັດຖະບານກາງຂອງຈັກກະພັດນັ້ນ ນັບເປັນການປະຕິຮູບການປົກຄອງດັ້ງເດີມທີ່ອົງຈັກກະພັດໄດ້ມອບອຳນາດບໍລິຫານບ້ານເມືອງໃຫ້ພີ່ນ້ອງ ຫຼື ຫົວໜ້າຕະກຸນເຮັດແທນ, ສ່ວນພະອົງເຮັດໜ້າທີ່ທຳພິທີກຳທາງສາສະໜາເທົ່ານັ້ນການວາງຮູບແບບການເມືອງການປົກຄອງຂອງເຈົ້າຊາຍໂຊໂຕກຸດັ່ງກ່າວ ຕໍ່ມາໄດ້ຮັບການປະຕິຮູບເພີ້ມເຕີມອີກໃນສະໄໝໄທກະ (Taika) ໃນທີ່ສຸດລັດຖະບານກໍ່ໄດ້ປະກາດໃຊ້ກົດໝາຍໄທໂຮ ເພື່ອປົກຄອງປະເທດໃຫ້ເປັນປຶກແຜ່ນໃນປີ ຄສ 701 . ທັງລັດຖະບານ ແລະ ກົດໝາຍໄທໂຮເມື່ອປະກາດບັງຄັບໃຊ້ແລ້ວກໍ່ມີຜົນເຮັດໃຫ້ແຜ່ນດິນ ແລະ ປະຊາຊົນທັງໝົດເປັນຂອງຈັກກະພັດ, ຢູ່ພາຍໃຕ້ການປົກຄອງຂອງລັດຖະບານກາງບັນດາຄອບຄົວທ້ອງຖິ່ນທີ່ມີອິດທິພົນມາກ່ອນກໍ່ຕ້ອງສູນເສຍອຳນາດ ແລະ ສິດທິທີ່ເຄີຍມີໄດ້ຮັບສະຖາປະນາໃໝ່ເປັນພວກຂຸນນາງທີ່ເປັນລາຊະການຂັ້ນສູງ, ຂ້າລາຊະການທ້ອງຖິ່ນມີການສຳຫຼວດທີ່ດິນ ແລະ ປະຊາຊົນບັນດາຊາມາຕ່າງໆກໍ່ມີພາລະໃນການເສຍພາສີ ແລະ ຖືກເກນແຮງງານອີກດ້ວຍ. ລັກສະນະການດຶງອຳນາດເຂົ້າສູ່ສູນກາງເປັນການເນັ້ນຄວາມສຳຄັນຂອງລະບົບຂ້າລາຊະການພົນລະເຮືອນ, ເປັນການຮຽນແບບການປົກຄອງຂອງຈີນໃນສະໄໝລາຊະວົງຖັງ ເປັນການເຮັດໃຫ້ຍີ່ປຸ່ນມີຄວາມຈຳເປັນທີ່ຈະຕ້ອງມີເມືອງຫຼວງເຊິ່ງເປັນທີ່ປະທັບຂອງຈັກກະພັດ ແລະ ລັດຖະບານກາງນັ້ນຄື:ການສ້າງເມືອງ ນະຣະ ຂຶ້ນຈາກການຮຽນແບບເມືອງ ຊາງອານ ( ເມືອງຊີອານໃນປັດຈຸບັນ ) ເຊິ່ງເປັນເມືອງຫຼວງຂອງຈີນໃນສະໄໝລາຊະວົງຖັງ.

**1.1. ດ້ານວັດທະນະທຳ**

ຍີ່ປຸ່ນສະໄໝອາຊູກະ Atsuka ເປັນສະໄໝທີ່ຍີ່ປຸ່ນມີຄວາມຕື່ນຕົວ ແລະ ພູມໃຈກັບວັດທະນະທຳທີ່ສູງກວ່າດວ້ຍເຫດນັ້ນ ຍີ່ປຸ່ນຈິ່ງຮັບເອົາວັດທະນະທຳຕ່າງຖິ່ນເຂົ້າມາເພື່ອປະຕິຮູບສັງຄົມໃຫ້ມີຄວາມເປັນລະບົບລະບຽບຄຽງຄູ່ກັນໄປກັບການພັດທະນາສ້າງສາວັດທະນະທຳຂອງຕົນເອງ. ວັດທະນະທຳຕ່າງຖິ່ນທີ່ຊາວຍີ່ປຸ່ນຮັບມາຄື: ວັດທະນະທາຈີນ ໂດຍສະເພາະທາງດ້ານພາສາ ແລະ ການປົກຄອງ ຈຸດປະສົງໃນການຮັບເອົາວັດທະນະທຳຈີນມາໃຊ້ນັ້ນ.

- ເພື່ອໃຫ້ຊາວຍີ່ປຸ່ນມີພາສາຂຽນເປັນຂອງຕົນເອງ ດັ່ງນັ້ນໃນສະຕະວັດທີ VIII ພະຄູ Kai ຈິ່ງໄດ້ດັດແປງຕົວອັກສອນຮູບພາບຂອງຈີນມາເປັນຕົວອັກສອນ Kama ແທນສຽງໃນພາສາຍີ່ປຸ່ນ ໂດຍມີສອງຮູບແບບຄື: ແບບ Hiragana ແລະ ແບບ Katakana .
- ເພື່ອສຶກສາກ່ຽວກັບຕຳລາຄວາມຮູ້ຕ່າງໆຂອງຈີນ ໂດຍສະເພາະພວກຊົນຊັ້ນປົກຄອງຈຳເປັນຕ້ອງຮຽນພາສາ ແລະ ເຂົ້າໃຈພາສາຈີນ ຈິ່ງຈະເຮັດໃຫ້ການສຶກສາຮູບແບບການປົກຄອງຈາກຈີນໄດ້ຢ່າງເລິກເຊິ່ງ.

- ເພື່ອປະຕິຮູບການປົກຄອງພາຍໃນຂອງຍີ່ປຸ່ນໃຫ້ມີຄວາມເປັນລະບົບ ເຮັດໃຫ້ສະບັນກະສັດມີອານາດຢ່າງເດັດຂາດໃນການປົກຄອງ ທັງເປັນການຈຳກັດ ແລະ ລົດຖານະສິດອານາດອິດທິພົນຂອງພວກຂຸນນາງທີ່ເປັນຫົວໜ້າເຜົ່າໃນຂັ້ນຕ່າງໆລົງ.

ຜົນຂອງການຮັບເອົາວັດທະນະທຳການປົກຄອງຈາກຈີນມານຳໃຊ້ໃນນັ້ນ ພາໃຫ້ເກີດການປະຕິຮູບການປົກຄອງໃນຍີ່ປຸ່ນຂຶ້ນເຖິງ 2 ຄັ້ງໃຫຍ່ຄື:

1. ການປະຕິຮູບການປົກຄອງຄັ້ງທີ 1 ເກີດຂຶ້ນໃນສະໄໝການປົກຄອງຂອງພະເຈົ້າຈັກກະພັດ Suiko ໃນປີຄສ 593 ຫາປີ ຄສ 628 ໂດຍມີເຈົ້າຊາຍ Shtoku ເປັນຜູ້ບໍລິຫານລາຊະການແຜ່ນດິນ ແລະ ໄດ້ຮັບການສະໜັບສະໜູນຈາກຕະກຸນຂຸນນາງ Soga Umako 3 ຮູບແບບການປົກຄອງຂອງເຈົ້າຊາຍ Shtoku 4

- ສ້າງລະບົບຂ້າລາຊະການແບບພົນລະເຮືອນ ດວ້ຍການແຕ່ງຕັ້ງບຸກຄົນເຂົ້າດຳລົງຕຳແໜ່ງຕ່າງໆ
- ກຳນົດການແຕ່ງຕັ້ງຕຳແໜ່ງຂ້າລາຊະການສຳນັກຂຶ້ນເຖິງ 12 ຕາແໜ່ງ ແລະ ເອົາໝວກຍົດ ເປັນເຄື່ອງໝາຍບອກຕຳແໜ່ງ
- ການເຂົ້າດຳລົງຕຳແໜ່ງບໍ່ແມ່ນການສືບທອດຕາມຕະກຸນ. ຕາແໜ່ງມີການປ່ຽນແປງໂດຍພິຈາລະນາຕາມຄວາມສາມາດເປັນປະເດັນສຳຄັນ ແລະ ແມ່ນພະເຈົ້າຈັກກະພັດເປັນຜູ້ມີສິດເລື່ອນ ຫຼື ແຕ່ງຕັ້ງ ຖອດຖອນຂ້າລາຊະການຂັ້ນຕ່າງໆ ເຫດຜົນໃນການພິຈາລະນານັ້ນແມ່ນອີງໃສ່ຜົນງານການກະທຳ ແລະ ຄວາມສາມາດເປັນຫຼັກ.

ເພື່ອເຮັດໃຫ້ການປະຕິຮູບມີຄວາມສັກສິດ ແລະ ຖືກນຳໃຊ້ ເຈົ້າຊາຍ ໂຊໂຕະກຸ ໄດ້ປະກາດໃຊ້ກົດທຳມະນູນ 17 ຂໍ້ (The Seventeen Articles Consitution AD 604 ) ໃນປີ ຄສ 604 ເພື່ອໃຫ້ຂ້າລາຊະການຍຶດ ແລະ ປະຕິຖື ແລະ ປະຕິບັດຕາມແບບດຽວກັນ.ກົດທຳມະນູນ 17 ຂໍ້ນີ້ໄດ້ເປັນການປູພື້ນຖານໃຫ້ຈັກກະພັດມີອານາດເດັດຂາດຊີ່ງປະຊາຊົນ ແລະ ຂ້າລາຊະການຕ້ອງນັບຖື ແລະ ປະຕິບັດຕາມພາລະກິດ ຈຸດປະສົງ ຂອງພະເຈົ້າຈັກກະພັດ

2. ການປະຕິຮູບການປົກຄອງຄັ້ງທີ 2 ເກີດຂຶ້ນຫຼັງຈາກແຜນການຂອງ Shtoku ທີ່ນຳເອົາວິທີການ ແລະ ຫຼັກຄຸນະທຳ ຈາກຈີນເຂົ້າມາເພື່ອໃຫ້ລັດຖະບານກາງຂອງຈັກກະພັດມີອຳນາດນັ້ນ ບໍ່ປະສົບຜົນສຳເລັດ ດັ່ງນັ້ນ ມາໃນປີ ຄສ 645 Taika ຈິ່ງດຳເນີນການປະຕິຮູບການປົກຄອງຄືນໃໝ່ ການປະຕິຮູບການປົກຄອງຂອງ Taika ເກີດຂຶ້ນໃນສະໄໝການປົກຄອງຂອງເຈົ້າຊາຍ Naka ທີ່ເປັນຜູ້ສຳເລັດລາຊະການເມືອງນາຊາຍທອງ Shotoko ໂດຍມີຈຸດປະສົງເພື່ອສ້າງສະຖາບັນຈັກກະພັດໃຫ້ມີຄວາມເຂັ້ມແຂງ. ການປະຕິຮູບນີ້ໄດ້ຮັບການສະໜັບສະໜູນຈາກຕະກຸນຂຸນນາງທີ່ຢູ່ໃນຕຳແໜ່ງNakatomi Kamatari ເກີດຂຶ້ນດວ້ຍການເຮັດລັດຖະຫານໂຄ່ນລົ້ມອຳນາດການປົກຄອງຂອງຕະກຸນ Soga ໃນເດືອນ ມິຖຸນາ ປີຄສ 645 ລັກສະນະເນື້ອໃນການປະຕິຮູບຂອງ Taika ສະແດງອອກໃນ 4 ດ້ານໃຫຍ່ຄື: ການປົກຄອງ,ທີ່ດິນ,ພາສີ ແລະ ກົດໝາຍ

- ດ້ານການປົກຄອງ: ມີການແບ່ງການປົກອອກເປັນ 2 ຂັ້ນຄື: ຂັ້ນສູນກາງ ປະກອບມີ ສະຖາບັນຈັກກະພັດ Tenno ສະຖາບັນຂຸນນາງ Daijokan ໃນສະຖາບັນຂຸນນາງ Daijokan ປະກອບມີ Daijo daijin( ອັກຄະມະຫາເສນາບໍດີ)Sadaijin(ເສນາບໍດີຝ່າຍຊ້າຍ) ແລະ U daijin ແມ່ນເສນາບໍດີຝ່າຍຂວາ ແລະ ຂັ້ນທ້ອງຖິ່ນປະກອບມີ Kuni /Ken ໝາຍເຖິງແຂວງ,ຜູ້ປົກຄອງເອີ້ນວ່າ Kokushi Gun ຫຼື Shi ໝາຍເຖິງເມືອງຜູ້ປົກຄອງເອີ້ນ Gunjth ຖັດຈາກນັ້ນມາກໍ່ມີ Ri ແລະ Mura. Ri ໝາຍເຖິງຕາແສງ ແລະ Mura ໝາຍເຖິງບ້ານແຕ່ລະບ້ານປະກອບດວ້ຍ 5 Kazoku (ຄອບຄົວ)

- ການປະຕິຮູບທີ່ດິນ: ໄດ້ກຳນົດທີ່ດິນໃຫ້ເປັນຂອງຈັກກະພັດ ແລະ ຈັກກະພັດຕ້ອງເປັນຜູ້ແບ່ງຕອນດິນໃຫ້ປະຊາຊົນທຳມາຫາກິນຕາມຄວາມເໝາະສົມ ເວລາປະຊາຊົນຜູ້ໃດເສຍຊີວິດ ຜູ້ນັ້ນຈະຕ້ອງໄດ້ຄືນທີ່ດິນໃຫ້ຈັກກະພັດ. ຫຼັກການໃນການແບ່ງດິນແມ່ນແຕກຕ່າງກັນຕາມເພດຄື: ຜູ້ຊາຍຈະໄດ້ຮັບຕອນດິນ 2 ທັນ (ຫົວໜ່ວຍວັດແທກຂອງຍີ່ປຸ່ນບູຮານ) ເຊິ່ງເທົ່າກັບ 1672,24 ຕາລາງແມັດ. ສ່ວນຜູ້ຍິງຈະໄດ້ຮັບ 2/3 ຂອງເພດຊາຍຄືເທົ່າກັບ 1114 ຕາລາງແມັດ.

  ການເກັບພາສີ: ຕາມກົດໝາຍກຳນົດໃຫ້ຜູ້ທີ່ໄດ້ຮັບຕອນດິນຕ້ອງໄດ້ເສຍພາສີໃຫ້ລັດເຊິ່ງປະຕິບັດຕາມຫຼັກການເສຍພາສີໃນ 3 ຮູບແບບ: ພາສີທີ່ດິນ ( ພາສີ So ກາລັງ5 )ພາສີຜົນຜະລິດCho ກຳລັງ6 ແລະ ພາສີແຮງງານກຳລັງ7

- ການປະຕິຮູບກົດໝາຍ: ໃນປີ ຄສ 701 ໄດ້ມີການປະກາດໃຊ້ກົດໝາຍຢ່າງເປັນທາງການເຊິ່ງເອີ້ນວ່າກົດໝາຍ Taiho ປະກອບດວ້ຍສອງພາກສວ່ນທີ່ສຳຄັນຄື: Ryo ເຊິ່ງໝາຍເຖິງກົດລະບຽບວ່າດວ້ຍການບໍລິຫານລາຊະການແຜ່ນດິນ , Ritsll ເຊິ່ງໝາຍເຖິງບົດບັນຍັດໃນການລົງໂທດຜູ້ກະທຳຄວາມຜິດ ເວົ້າລວມສະໄໝອາຊູກະເປັນສະໄໝທີ່ມີການປະກາດປະເທດຍີ່ປຸ່ນເປັນທາງການໃນປີ ຄສ 645 ຕາມຄວາມໝາຍຕົວອັກສອນໃນພາສາຍີ່ປຸ່ນ ເຊິ່ງມີຄວາມໝາຍໃນພາສາລາວວ່າ ດິນແດນແຫ່ງພະອາທິດຂຶ້ນ ແຕ່ວ່າຄານີ້ໄດ້ຖືກນຳໃຊ້ມາແລ້ວໃນປີ ຄສ 607 ເວລາທີ່ Shotoku ຕິດຕໍ່ກັບລາຊະວົງ Tan ຂອງຈີ

## 2. ຍຸກນາຣະ Nara



ຮູບທີ 15 ຫຼວງພໍ່ໂຕວັດໂທໄດ້ສ້າງຂຶ້ນຕາມປະສົງຂອງຈັກກະພັດໂຊມຸ

ຍີ່ປຸ່ນກ້າວເຂົ້າສູ່ຍຸກນະຣະປີ ພສ 1253 ( ຄສ 710) ເມື່ອເມືອງຫຼວງຖາວອນແຫ່ງທຳອິດຂອງຍີ່ປຸ່ນ ເອໂຈຄຽວໄດ້ຮັບການສະຖາປານາຂຶ້ນໂດຍສ້າງຕາມແບບເມືອງ ສາງອານ ( ເມືອງຊີອານໃນປັດຈຸບັນ) ເມືອງຫຼວງຂອງຈີນໃນຂະນະນັ້ນມີລາຊະວົງຂອງຍີ່ປຸ່ນເປັນຜູ້ປົກຄອງ ລາຊະວົງຍີ່ປຸ່ນ ປະທັບຢູ່ທີ່ເມືອງ ນະຣະ  ໂດຍຕະຫຼອດ ແລະຂະຫຍາຍອຳນາດໄປທົ່ວປະເທດເທື່ອລະນ້ອຍຈົນສາມາດຮວມປະເທດເປັນປຶກແຜ່ນໄດ້ (ຍົກເວັ້ນໂອະກິນະວະ ແລະຮອກໄກໂດ) ຫາກແຕ່ວ່າລະບອບການປົກຄອງໃນຍຸກນີ້ໃຊ້ຕາມແນວຄວາມຄິດແບບຈີນ ເຊິ່ງເມື່ອມາໃຊ້ກັບຍີ່ປຸ່ນແລ້ວບໍ່ເໝາະສົມປານໃດ ແລະ ເກີດຜົນກະທົບຈາກຄວາມບໍ່ເໝາະສົມນັ້ນ ແລະ ເກີດເປັນຜົນກະທົບແບບລູກໂສ້ ຜົນສຸດ

ທ້າຍຄື: ຕ້ອງຂຶ້ນພາສີປະຊາຊົນຢ່າງໜັກ ເຮັດໃຫ້ເຮໂຈກຽວເປັນເມືອງຫຼວງໄດ້ບໍ່ດົນປານໃດ ແລະ ເພື່ອໜີອິດທິພົນຂອງພະໃນສາສະໜາພຸດທີ່ມີອຳນາດຫຼາຍ ເມືອງຫຼວງ ເຮໂຈກຽວຈຶ່ງຖືກຍ້າຍໄປຍັງ ນະງະໂອະກະກຽວໃນປີ ພສ 1327 (ຄສ 784) ແລະ ຕໍ່ມາທີ່ ເຮອັງກຽວໃນປີ ພສ 1337 (ຄສ 794)

ທາງດ້ານວັດທະນະທຳ ການແຕ່ງຕົວ, ສະຖາປັດຕະຍະກຳ ແລະ ອື່ນໆ ຍັງປາກົດໃຫ້ເຫັນວັດທະນະທຳທີ່ຍັງຄົງແບບຈີນຢູ່ ອາດຈະມີຄວາມແຕກຕ່າງກັນເລັກນ້ອຍໃນລາຍລະອຽດຍ່ອຍໆ ເຊັ່ນບັນທຶກທີ່ຂຽນເປັນຕົວອັກສອນຈີນແຕ່ອ່ານເປັນພາສາຍີ່ປຸ່ນ ໂຄະຈິກິ (ບັນທຶກທາງປະຫວັດຕິສາດ) ມັງໂຍຊູ (ບັນທຶກກ່ຽວກັບວັນນະກຳ) ຟູໂດະກິ (ບັນທຶກກ່ຽວກັບພູມີອາກາດ) ອິດທິພົນດັ່ງກ່າວອາດຈະມາຈາກການທີ່ລາຊະສຳນັກຍີ່ປຸ່ນໄດ້ສົ່ງຄະນະລາຊະທູດສູ່ລາຊະວົງຖັງຂອງຈີນ " ເຄນໂຕຊິ " ໄປສູ່ແຜ່ນດິນໃຫຍ່ເປັນຈຳນວນຫຼາຍເພື່ອຮັບວັດທະນະທຳ ແລະ ສິ່ງຂອງຕ່າງໆ ຈາກເສັ້ນທາງສາຍໄໝເຊັ່ນ: ຖ້ວຍແກ້ວຈາກຢູໂຣບຕາເວັນອອກກັບມາສູ່ຍີ່ປຸ່ນອີກດວ້ຍຕາມບັນທຶກຂອງວັນນະຄະດີ ປະຫວັດສາດທັງ 2 ສະບັບນັ້ນ ໄດ້ກ່າວເຖິງການສະຖາປະນາປະເທດຍີ່ປຸ່ນໄວ້ວ່າ; ປະເທດຍີ່ປຸ່ນໄດ້ຖືກສະຖາປານາຂຶ້ນໃນປີ 660 ປີກ່ອນຄຣິດຕະການ ໂດຍຈັກກະພັດຈິມມຸ ຜູ້ເປັນເຊື້ອສາຍໂດຍຕົງຂອງເທບພະເຈົ້າ ອະມາເຕຣະສຸ ເລື່ອງນີ້ຈະເປັນເລື່ອງຈິງຫຼືບໍ່ນັ້ນບໍ່ມີໃຜຮູ້ແນ່ນອນ ແຕ່ນັກປະວັດຕິສາດຫຼາຍຄົນເຊື່ອວ່າບາງສ່ວນຂອງບັນທຶກດັ່ງກ່າວເປັນເລື່ອງຈິງ ແຕ່ຈັກກະພັດທີ່ມີພະອົງຈິງພະອົງທຳອິດຄື: ຈັກກະພັດ ດິໂອຈິງ ຈັກກະພັດລຳດັບທີ 15 ແລະ ພະລາຊະສັນຕິວົງຍັງຄົງສືບທອດມາຈົນເຖິງປັດຈຸບັນ ແລະ ຫຼັງຈາກຍຸກ ນະຣະເປັນຕົ້ນມາອຳນາດໃນການບໍລິຫານປະເທດໂດຍຕົງໄດ້ເລີ້ມອອກຫ່າງອອກຈາກລາຊະສຳນັກຍີ່ປຸ່ນ ມາສູ່ຂຸນນາງໃນລາຊະສຳນັກ ໂຊກຸນທະຫານ ແລະ ນາຍົກລັດຖະມົນຕີໃນປັດຈຸບັນໃນທີ່ສຸດ.

ນັບແຕ່ປີ ຄສ 710 - ຄສ 784 ເປັນຍຸກສະໄໝທີ່ຍີ່ປຸ່ນມີສູນກາງການປົກຄອງຂອງລັດຖະບານກາງກໍ່ຄືສະຖາບັນຈັກກະພັດຢູ່ທີ່ເມືອງ Nara ສະໄໝນີ້ເປັນສະໄໝທີ່ລັດຖະບານກາງຂອງຂອງສະຖາບັນຈັກກະພັດມີອຳນາດສູງສຸດເປັນຍຸກສະໄໝທີ່ສາສະໜາພຸດມີຄວາມຮຸ່ງເຮືອງ, ມີການສ້າງສະຖາປັດຕະຍະກຳ ແລະ ປະຕິມະກາແບບພຸດທີ່ສວຍງາມ ຈົນກາຍເປັນສະຖານທີ່ທ່ອງທ່ຽວມາຈົນຮອດປັດຈຸບັນນີ້.

ໃນດ້ານການເມືອງ ສະໄໝນາຣະເປັນສະໄໝທີ່ພະສົງເຂົ້າໄປແຊກແຊງກິດຈະການພາຍໃນຂອງອຳນາດລັດອັນໄດ້ເຮັດໃຫ້ພະສົງກາຍເປັນຜູ້ມີອິດທິພົນ ແລະ ບົດບາດສູງໃນສັງຄົມຈົນເປັນສາເຫດ ເຮັດໃຫ້ມີການຍ້າຍສູນກາງການປົກຄອງໄປຕັ້ງຢູ່ແຫ່ງໃໝ່ຄື ເຮອານ Heian.

- ຍີ່ປຸ່ນສະໄໝ ເຮອານ Heian ນັບແຕ່ປີ ຄສ 794 ສູນກາງການປົກຄອວຂອງຍີ່ປຸ່ນໄດ້ຍ້າຍມາຕັ້ງຢູ່ ເຮອານບໍລິເວນແຂວງ Kyoto ໃນປັດຈຸບັນໃນສະໄໝນີ້ລະບົບການບໍລິຫານຕ່າງໆທີ່ນຳມາຈາກຈີນໄດ້ຮັບການພັດທະນາປັບປຸງໃຫ້ແທດເໝາະກັບວັດທະນະທຳ ຂະນົບທຳນຽມປະເພນີ ແລະ ລັດສະນິຍົມຂອງຊາວຍີ່ປຸ່ນອັນໄດ້ເຮັດໃຫ້ວັດທະນະທຳພື້ນເມືອງຂອງຊາວຍີ່ປຸ່ນໄດ້ຮັບການພັດທະນາໃຫ້ຂະຫຍາຍຕົວຢ່າງວ່ອງໄວ ໂດຍສະເພາະແມ່ນການປະດິດຕົວອັກສອນຂອງຍີ່ປຸ່ນທີ່ດັດແປງມາຈາກຕົວອັກສອນຄັນຈິ Kanji ຂອງຈີນໃຫ້ມີຄວາມສະດວກໃນການໝູນໃຊ້ ງ່າຍຕໍ່ການເຂົ້າໃຈຂອງມະຫາຊົນເຊິ່ງໃຊ້ແທນຄວາມໝາຍຂອງພາສາຍີ່ປຸ່ນໃຫ້ສົມບູນຍິ່ງຂຶ້ນ.

ໃນທາງກົງກັນຂ້າມ ທາງດ້ານການເມືອງພັດ ເປັນຍຸກສະໄໝທີ່ອຳນາດສູນກາງຂອງສະຖາບັນຈັກກະພັດມີຄວາມອ່ອນເພຍ ອັນເນື່ອງມາຈາກການຮວມອຳນາດເຂົ້າສູ່ສູນກາງຂອງສະຖາບັນຈັກກະພັດບໍ່ປະສົບຜົນສຳເລັດ ປັດໃຈທີ່ເຮັດໃຫ້ສະພາບການເມືອງໃນຊ່ວງນີ້ມີຄວາມບໍ່ສະຫງົບມາຈາກ ການເຂົ້າໄປມີອຳນາດສູງຂອງຕະກຸນຂຸນນາງ Fujiwara ການກາເນີດລະບົບ Shoen ແລະ ການກາເນີດສະຖາບັນຈັກກະພັດທີ່ສະຫຼະລາຊະສົມບັດ.

ໃນກາງສະຕະວັດທີ 9 ຫົວໜ້າຕະກຸນ Fujiwara ເລີ້ມມີອານາດທາງການເມືອງໃນສະຖາບັນລາຊະສານັກ ແລະ ມີອໍານາດສູງຂຶ້ນໃນຕົ້ນສະຕະວັດທີ 11 ຄືປະມານປີ ຄສ 1000 ເຊິ່ງຫົວໜ້າຕະກຸນ Fujiwara ເວລານັ້ນມີຊື່ວ່າ Mishinaga ການສະສົມອໍານາດຂອງຕະກຸນ Fujiwara ເລີ້ມເກີດຂຶ້ນເມື່ອຫຼານປູ່ຂອງ Kamatari ສາມຄົນໄດ້ອະພິເສກສົມລົດກັບໂອລົດຂອງພະເຈົ້າຈັກກະພັດ ປະກົດວ່າຕະຫຼອດໄລຍະຕັ້ງແຕ່ສະໄໝ ນາຣະ ແລະ ເຮອານ ຕະກຸນ Fujiwara ໄດ້ອາໄສສາຍສາພັນທາງສາຍໂລຫິດ ຫຼື ສາຍສາພັນກ່ຽວດອງເປັນທາງຜ່ານເພື່ອສະແດງຄວາມກ້າວໜ້າທາງລາຊະການໃຫ້ສະມາຊິກຕະກຸນ Fujiwara ມີອານາດທາງການເມືອງຫຼາຍຂຶ້ນ ຕົວຢ່າງ: ໃນປີ ຄສ 804 ຫາ ຄສ 872 Fujiwara Yoshifusa ໄດ້ເຂົ້າດາລົງຕາແໜ່ງເປັນທີ່ປຶກສາໃກ້ຊິດຂອງພະເຈົ້າຈັກກະພັດໃນຖານະຕາແໜ່ງ Daijo daijin (Grand Minister) ທີ່ເປັນຕໍາແໜ່ງສູງສຸດໃນປີ ຄສ 857  ປີ ຄສ 858 Yoshifusa ໄດ້ຈັດການໃຫ້ຫຼານຊາຍຊື່ວ່າ Seiwa ສະຖາປະນາເປັນພະເຈົ້າຈັກກະພັດ ໂດຍໃຫ້ຕົນເອງເປັນ Sessho ກໍ່ຄືຜູ້ສາເລັດລາຊະການ ປີ ຄສ 891 Mototsune ຫົວໜ້າຕະກຸນ Fujiwara ຖັດຈາກ Yoshifusa ໄດ້ເປັນຜູ້ສາເລັດລາຊະການແທນພະເຈົ້າຈັກກະພັດທັ້ງໆທີ່ພະເຈົ້າຈັກກະພັດມີພະຊົນເຕັມພັນສາໃນການຄອບຄອງບ້ານເມືອງ ປີ ຄສ1016 Mishinaga ໄດ້ເປັນຜູ້ສໍາເລັດລາຊະການ ແລະ ດໍາລົງຕໍາແໜ່ງເປັນເວລາ 30 ປີ.

ການທີ່ຕະກຸນຂຸນນາງ Fujiwara ເຂົ້າໄປມີອໍານາດສູງໃນການປົກຄອງນີ້ໄດ້ເຮັດໃຫ້ອໍານາດຂອງສະຖາບັນຈັກກະພັດຄ່ອຍໆລົດບົດບາດລົງເປັນລໍາດັບ ເພື່ອເຮັດໃຫ້ອໍານາດຂອງ ຟູຈິວາຣະ ມີຄວາມເຂັ້ມແຂງໃນວົງການກາອໍານາດ ຫົວໜ້າຕະກຸນ ຟູຈິວາຣະໄດ້ໃຊ້ລະບົບບໍລິຫານງານຂອງລັດຕາມຮູບແບບການບໍລິຫານຂອງຕະກຸນ ຟູຈິວາຣະ ຄື: ໜ່ວຍງານບໍລິຫານເຊິ່ງເອີ້ນວ່າເ Mandokoro ໜ່ວຍງານການທະຫານ ເຊິ່ງເອີ້ນວ່າ Samurai Dokoro ແລະ ໜ່ວຍງານການຕັດສິນຄະດີ ເຊິ່ງເອີ້ນວ່າ Monchuen ການໃຊ້ລະບົບການບໍລິຫານແບບນີ້ ໄດ້ເຮັດໃຫ້ລະບົບການປົກຄອງຕາມກົດໝາຍ ໄທອິໂຮ ໝົດຄວາມໝາຍລົງທັງເປັນການກັບຄືນໄປສູ່ການບໍລິຫານການບໍລິຫານແບບດັ້ງເດີມຕາມການປົກຄອງແບບ Uji.

ການກໍາເນີດລະບົບ Shoen ໝາຍເຖິງລະບົບການຮອບຮອມທີ່ດິນເຂົ້າເປັນຕອນດິນຜືນໃຫຍ່ຂອງບັນດາຄອບຄົວຕະກຸນຂຸນນາງຢູ່ຕາມຫົວເມືອງ ແລະ ທ້ອງຖິ່ນຕ່າງໆລະບົບນີ້ເປັນຫົວໜ່ວຍທາງເສດຖະກິດຂອງສັງຄົມຍີ່ປຸ່ນໃນຍຸກກາງລະຫວ່າງສະຕະວັດທີ VIII_ XII ທີ່ມີລັກສະນະຄ້າຍຄືເສດຖະກິດແບບ ອຸຈິ ຈຸດປະສົງຂອງການກາເນີດລະບົບ Shoen ນີ້ແມ່ນເພື່ອຜົນປະໂຫຍດໃນການເພີ້ມຜົນຜະລິດ ເພື່ອຫຼີກເວັ້ນການເສຍພາສີອາກອນປະເພດຕ່າງໆໃຫ້ລັດໂດຍອາໄສອໍານາດ ແລະ ອິດທິພົນຂອງພວກຂຸນນາງໃນລາຊະສໍານັກເປັນຜູ້ປົກປ້ອງ. ໂຄງປະກອບສ້າງຂອງ Shoen ມີຄື:

- ຜູ້ຈັດການເຊິ່ງມີຄວາມໝາຍໃນພາສາຍີ່ປຸ່ນວ່າ Rvoshu / Shoke / Shckan ຕໍາແໜ່ງ  Ryoshu ໃນລະບົບ Shoen ອາດແມ່ນເຈົ້າຂອງກາມະສິດທີ່ດິນຕອນນັ້ນ ຫຼື ອາດເປັນຕົວແທນຂອງເຈົ້າທີ່ດິນຫຼາຍຕອນທີ່ເອົາມາຮວມກັນ ໜ້າທີ່ຂອງ Ryoshu ຄືເປັນຜູ້ບໍລິຫານ Shoen, ແຈກຈ່າຍເມັດພັນ, ດູແລຊົນລະປະທານ ແລະ ຄວາມສະຫງົບຂອງ Shoen
- ຜູ້ພິທັກ ເຊິ່ງມີຄວາມໝາຍໃນພາສາຍີ່ປຸ່ນວ່າ Kyoke ສ່ວນໃຫ່ຍເປັນພວກຂຸນນາງໃນລາຊະສໍານັກ, ມີໜ້າທີ່ພິທັກປົກປ້ອງ Shoen ໃຊ້ສິດອໍານາດ ແລະ ອິດທິພົນເພື່ອປົກປ້ອງ ໂຊເອັນ.
- ຜູ້ອຸປະຖໍາ ເຊິ່ງມີຄວາມໝາຍໃນພາສາຍີ່ປຸ່ນວ່າ Honke ແລະ ສ່ວນໃຫ່ຍເປັນພວກຂຸນນາງທີ່ມີບົດບາດສູງໃນລາຊະສໍານັກ, ເປັນຜູ້ມີອໍານາດ ແລະ ອິດທິພົນຫຼາຍກວ່າຜູ້ພິທັກ ເພາະໃນບາງຄັ້ງ Kyoke ຍັງໄປອາໄສບາລະມີຂອງ Honke ມາຊ່ວຍເພື່ອຄຸ້ມຄອງ Shoen ພວກນີ້ສ່ວນໃຫຍ່ແມ່ນໃຊ້ພຽງແຕ່ຊື່ເທົ່ານັ້ນເພື່ອປົກປ້ອງ.

ຜູ້ທຳການຜະລິດເຊິ່ງມີຄວາມໝາຍໃນພາສາຍີ່ປຸ່ນວ່າ Shomin, Shomin ມີສອງປະເພດຄືເປັນເຈົ້າຂອງທີ່ດິນ ແລະ ຜູ້ຮັບເຊົ່າທີ່ດິນ ເຈົ້າຂອງທີ່ດິນ ເຈົ້າຂອງທີ່ດິນໝາຍເຖິງຜູ້ທີ່ນຳເອົາຕອນດິນມາຮວມກັນເປັນໂຊເອັນໜຶ່ງ ພວກນີ້ ສ່ວນໃຫຍ່ມີສິດໃນການບໍຫານຈັດສັນຕອນດິນ ເພື່ອທຳການຜະລິດ. ຜູ້ຮັບເຊົ່າທີ່ດິນ ໝາຍເຖິງຜູ້ທີ່ເຂົ້າມາອາໄສໃນ ຕອນດິນຫຼື ມາຈ້າງເພື່ອບຸກເບີກຕອນດິນ ຫຼື ທຳການຜະລິດຈະບໍ່ມີສິດທິໃດໆ ແລະ ຕ້ອງຢູ່ພາຍໃຕ້ການດູແລເບິ່ງແຍງ ຂອງ Ryoshu

ຜົນກະທົບທີ່ເກີດຈາກ ໂຊເອັນນີ້ແມ່ນການທຳລາຍລະບົບເສດຖະກິດຕາມປະມວນກົດໝາຍໄທອິໂຣຢ່າງຊິ້ນ ເຊີງຄື ລັດບໍ່ສາມາດຄວບຄຸມຕອນດິນ, ແຮງງານ ແລະ ພາສີໄດ້ທັງເປັນການເຮັດໃຫ້ ຊາວນາບໍ່ດຳເນີນການຜະລິດຕາມ ຕອນດິນທີ່ຈັດສັນໃຫ້ ເພາະຕ້ອງເສຍພາສີໃຫ້ລັດ, ຮ້າຍແຮງໄປກວ່ານີ້ ຄືການເພີ້ມອານາດຂອງຜູ້ນາທ້ອງຖິ່ນຂຶ້ນເຊິ່ງມີ ຜົນກະທົບຕໍ່ອຳນາດລັດຖະບານກາງ.

ການກຳເນີດສະຖາບັນຈັກກະພັດທີ່ສະລະລາຊະສົມບັດໃນສະຕະວັດທີ XI ສະຖາບັນຈັກກະພັດໄດ້ຕັດສິນ ໃຈເພື່ອດຶງອຳນາດທາງການເມືອງຄືນມາຈາກຕະກຸນຟຸຈິວາຣະ ດວ້ຍການສ້າງສະຖາບັນຈັກກະພັດທີ່ຢູ່ນອກລາຊະ ບັນລັງຂຶ້ນຄຽງຄູ່ກັນໄປ ເຊິ່ງເປັນສະຖາບັນກະສັດທີ່ມີຄວາມກ່ຽວດອງກັນກັບຝ່າຍບິດາ (ລາຊະໂອລົດ) ອັນເປັນສະຖາ ບັນໃໝ່ທີ່ຈະແບ່ງອຳນາດຈາກຕະກຸນຟູຈິວາຣະ ມາໄດ້ບັນດາຈັກກະພັດທີ່ສັງກັດໃນສະຖາບັນໃໝ່ນີ້ ໄດ້ສະຫຼະລາຊະ ບັນລັງແລ້ວໄປອາໄສໃນເຂດວັດວາອາຣາມ ແລະ ພະຍາຍາມຂະຫຍາຍອິດທິພົນທາງການເມືອງເຂົ້າໄປໃນກິດຈະການ ຂອງລັດເຊິ່ງເປັນການເຮັດໃຫ້ເກີດຂະບວນການປ່ຽນແປງທາງການເມືອງໃໝ່ທີ່ປະເຊີນໜ້າກັນກັບສະຖາບັນຈັກກະພັດ ເກົ່າຂອງ ຟູຈິວາຣະ ຈົນນຳໄປສູ່ການຕໍ່ສູ້ກັນດວ້ຍອາວຸດ ກາຍເປັນສົງຄາມທາງການເມືອງພາຍໃນ ຕັ້ງແຕ່ປີ ຄສ 1185 ເປັນຕົ້ນມາ.

### 2.1 ດ້ານວັດທະນະທຳ

ສະໄໝນາຣະເປັນສະໄໝທີ່ລັດຖະບານກາງມີອຳນາດສູງສຸດທຽບກັບລາຊະການໃນສະໄໝລາຊະວົງຖັງຂອງ ຈີນທັງສາສະໜາພຸດກໍ່ໄດ້ຮັບການອຸປະຖຳເປັນທາງການຈົນຮຸ່ງເຮືອງ ມີການສ້າງສະຖາປັດຕະຍະກຳ ແລະ ປະຕິມະກຳ ແບບພຸດຄື: ວັດວາອາຣາມ ແລະ ພະພຸດທະຮູບທີ່ສຍງາມຈົນກາຍເປັນແຫຼ່ງທ່ອງທ່ຽວຊົມວັດທະນະທຳທີ່ເກົ່າແກ່ຂອງ ຍີ່ປຸ່ນມາຈົນເຖິງທຸກມື້ນີ້, ສ່ວນທາງດ້ານວັນນະຄະດີທີ່ຮຽນແບບມາຈາກຈີນກໍ່ມີການນິພົນຂຶ້ນໃນຍີ່ປຸ່ນເອີ້ນວ່າ: ຄຳ ປະພັນມານິໂອຊູ ແຕ່ລະບົບການເມືອງການປົກຄອງຂອງຈີນຫຼາຍຢ່າງນັ້ນບໍ່ສາມາດນຳໄຊ້ໄດ້ໃນຍີ່ປຸ່ນທັງໝົດ ລະບົບ ການເມືອງຂອງລັດ ກໍ່ມັກຖືກແຊກແຊງຈາກອິດທິພົນຂອງພະສົງ ຈົນໃນທີ່ສຸດລັດຖະບານກາງກໍ່ຍ້າຍເມືອງຫຼວງຈາກ ນາຣະ ໄປຢູ່ ເຮອັນ ( ນະຄອນຫຼວງກຽວໂຕໃນປັດຈຸບັນ )

ຍຸກນາຣະຊ່ວງບ້ານເມືອງມີຄວາມຈະເລີນ





ວັດບຽວໂດອິງ



ສາວໃຊ້ຊາວວັງຜູ້ແຕ້ມເລື່ອງເລົ່າເກນຈິວັນນະຄະດີທີ່

ຮູບທີ 16 ສະແດງເຖິງສະພາບສັງຄົມ ແລະ ວັດທະນະທຳຕ່າງໆໃນຍຸກເຮອັງ

ອົງການຕ່າງໆຂອງລັດທີ່ນຳຈາກຈີນມາໃຊ້ກັບຍີ່ປຸ່ນໄດ້ຖືກປັບປ່ຽນໃຫ້ເໝາະສົມກັບຂະນົບທຳນຽມຮີດຄອງປະເພນີ ລົດສະນິຍົມຂອງຍີ່ປຸ່ນ ເຮັດໃຫ້ວັດທະນະທຳພື້ນເມືອງຂອງຍີ່ປຸ່ນໄດ້ຮັບການພັດທະນາຂຶ້ນຢ່າງໄວວາ ແລະ ຕະກຸນ ຟູຈິວະລະ ທີ່ເລີ້ມມີອຳນາດມາຕັ້ງແຕ່ສະໄໝປະຕິຮູບໄທກະ ກໍ່ໄດ້ເພີ້ມອິດທິພົນເຂົ້າຄວບຄຸມລັດຖະບານ ແລະ ລາຊະສຳນັກໄວ້ ໂດຍໃຊ້ວິທີ ສະໜັບສະໜູນໃຫ້ລູກສາວ ຫຼື ຫຼານສາວ ໃຫ້ເປັນມະເຫສີຂອງຈັກກະພັດ ຈຶ່ງໄດ້ຜູກຂາດຕຳແໜ່ງຜູ້ສຳເລັດລາຊະການຂອງຈັກກະພັດໄດ້ຕະຫຼອດມາ ແລະ ນັບເປັນຕົວຢ່າງໃຫ້ແກ່ຂຸນນາງຊັ້ນສູງທີ່ຕ່າງກໍ່ໃຊ້ປະເພນີສືບສາຍເລືອດໃນການຮັບຕຳແໜ່ງລາຊະການຊັ້ນສູງ

ຂະນະດຽວກັນຮູບແບບຂອງສາສະໜາພຸດ ໃນຍີ່ປຸ່ນກໍ່ໄດ້ປັບຕົວເຂົ້າກັບລົດສະນິຍົມຂອງຄົນຍີ່ປຸ່ນເຊັ່ນດຽວກັນ ກຸ່ມຂຸນນາງເປັນຜູ້ພັດທະນາປະເພນີຫຼຸດພົ້ນຈາກບາບ ດ້ວຍພິທີກຳທີ່ປະສົມຢູ່ກັບເວດມົນຄາຖາທີ່ເລິກລັບ. ໃນຂະນະດຽວກັນລາຊະສຳນັກເປັນຜູ້ນຳໃນການລິເລີ່ມວັດທະນະທຳປະຈຳຊາດທີ່ງົດງາມອ່ອນຊ້ອຍ, ປະດິດຕົວອັກສອນ ຄານະຂອງຍີ່ປຸ່ນທີ່ດັດແປງມາຈາກ



ຮູບທີ 17 ແບບຈຳລອງນະຄອນເອຮັງກຽວ

## 3. ຍຸກເຮອັນ Heian

**ຍຸກເຮອັງ** ( 平安時代; : *Heian-jidai*; ເຮອັງຈິໄດ) ຢູ່ໃນຊ່ວງ ຄ.ສ. 794 – 1185 ໃນທ້າຍສະຕະວັດທີ 8 ມີການຍ້າຍເມືອງຫຼວງໄປທີ່ ເຮອັງກຽວ (平安京 Heian-kyou) ຫລືເມືອງສຽວໂຕະ ໃນປະຈຸບັນ ນັບເປັນຍຸກທອງຂອງປະເທດຍີ່ປຸ່ນ ທີ່ທັງສິນປະແລະວັດທະນະທຳຮຸ່ງເຮືອງເຖິງຂີດສຸດ ມີການພັດທະນາປັບປຸງວັດທະນະທຳຕ່າງໆ ທີ່ຫຍິບຢືມມາຈາກປະເທດຈີນໃນສະໄໝຣາດວົງຖັງ ແລະລັດທິຂົງຈື້ ຈົນກລາຍເປັນວັດທະນະທຳແບບສະເພາະຕົວຂອງຍີ່ປຸ່ນ ເຮອັງ (平安,Heian) ແປວ່າ ຄວາມສະຫງົບສັນຕິ

ໃນຊ່ວງປາຍສະໄໝນາຣະ ເກີດພະຍາດລະບາດພາວະເຂົ້າຍາກໝາກແພງ ຕາມຄວາມເຊື່ອຂອງຊາວຍີ່ປຸ່ນໃນສະໄໝຄລາດສິກວ່າການຍ້າຍທີ່ຢູ່ເພື່ອຫຼີບໜີວິຍຍານຊົ່ວຮ້າຍຈະຊ່ວຍໃຫ້ຮອດພົ້ນຈາກພັຍພິບັດຕ່າງໆ ໃນຄ.ສ. 784 ພະຈັກຣົບຣິນດີຄັມມຸ (桓武, Kammu) ຊົງຍ້າຍລາດຊະສຳນັກຈາກເຮໂຈກຽວໄປຢັງນະງະໂອກະ-ຄຽວ (長岡京, Nagaoka-kyō) ແຕ່ກໍເກີດເຫດການນອງເລືອດໃນລາດຊະສຳນັກອີກພະຈັກຣົບຣິນດີຄັມມຸຊົງຢ້ານຢ້ຳວິຍຍານອາຄາດຂອງພະອນຸຊາຂອງພະອົງ ຈຶ່ງຊົງຍ້າຍລາດຊະສຳນັກມາຍັງເຮອັງກຽວ (平安京, Heian-kyō) ທີ່ເມືອງສ່ຽວໂຕະ ໃນປະຈຸບັນ ໃນຄ.ສ. 794 ການຍ້າຍເມືອງຫຼວງໃນເທື່ອນີ້ເປັນພຽງການຍ້າຍສະຖານທີ່ເທົ່ານັ້ນ ລະບອບການປົກຄອງທີ່ມີຕົ້ນແບບມາຈາກລາຊະວົງຖັງ ຕັ້ງແຕ່ທ້າຍສະໄໝອະສຸກະແລະອິດທິພົນຂອງຕະກູນພູຈິວາລະກໍຢັງຕິດຕາມມາເຊັ່ນເດີມ ໃນສະໄໝເຮອັງຕະກູນຟຸຈິວະຣະມີອຳນາດໃນຖານະເປັນຕະກູນດຽວທີ່ພະຈັກຣົບຣິນດີຈະອະພິເສກພະຈັກຣົບຣິນດີນີ ແລະເປັນຜູ້ສຳເຣັດຣາດການແທນສຳລັບພະຈັກຣົບຣິນດີທີ່ຊົງພະເຍົາ ຮຽກວ່າ *ເຊັສໂຊ* (摂政, Sesshō) ຫລື ເປັນທີ່ປຶກສາການສຳຄັນຂອງພະຈັກກະພັດ ຮຽກວ່າ*ຄັມປະກະ* (関白, Kampaku) ອຳນາດໃນການປົກຄອງຕົກຢູ່ແກ່*ເຊັດໂຊ*ໂດຍ ຈັກກະພັດ ທີ່ຊົງພະເຍົານັ້ນເປັນພຽງຫຸ່ນເຊີດ ໃນສະໄໝເຮອັງສະຕິສູນສຽບບົດບາດ ແລະ ອຳນາດໃນການປົກຄອງ[1]ງຈາກອິດທິພົນແນວຄວາມຄິດຕາມແບບ ລັດທິຂົງຈື້ ຈາກຈີນທີ່ເນັ້ນຄວາມສຳຄັນຂອງບຸຣຸດ ຈະເຫັນໄດ້ຈາກການທີ່ໃນສະໄໝເຮອັງ

ອົງການຕ່າງໆຂອງລັດທີ່ນຳຈາກຈີນມາໃຊ້ກັບນີ່ປຸ່ນ ໄດ້ຖືກປັບປ່ຽນໃຫ້ເໝາະສົມກັບຂະໜົບທຳນຽມ ຮີດຄອງປະເພນີ ລັດສະນິຍົມຂອງຍີ່ປຸ່ນ ເຮັດໃຫ້ວັດທະນະທຳພື້ນເມືອງຂອງນີ້ປຸ່ນ ໄດ້ຮັບການພັດທະນາຂຶ້ນຢ່າງໄວວາ ແລະຕະກູນຟູຈິວະລະ ທີ່ມີອຳນາດມາຕັ້ງແຕ່ສະໄໝປະຕິຮູບໄທກະ ກໍ່ໄດ້ເພີ່ມອິດທິພົນເຂົ້າມາຄວບຄຸມລັດຖະບານ ແລະລາຊະສຳນັກໄວ້ ໂດຍໃຊ້ວິທີ ສະໜັບສະໜູນໃຫ້ລູກສາວ ຫຼື ຫຼານສາວໃຫ້ເປັນມະເຫສີຂອງຈັດດະພັດ ຈົນໄດ້ຜູ້ຂາດຕຳແໜ່ງຜູ້ສຳເລັດລະຊາການຂອງຈັກກະພັດໄດ້ມາຕະຫຼອດ ແລະ ນັບເປັນຕົວຢ່າງໃຫ້ແກ່ຊົນຊັ້ນຂຸນນາງຊັ້ນສູງ ທີ່ຕ່າງກໍ່ໃຊ້ປະເພນີສືບທອດສານເລືອກໃນການຮັບຕຳແໜ່ງລາຊະການຊັ້ນສູງ.

ຂະນະທີ່ຮູບແບບສາສະໜາພຸດ ໃນຍີ່ປຸ່ນກໍ່ໄດ້ປັບຕົວເຂົ້າກັບລັດສະນິຍົມຂອງຄົນຍີ່ປຸ່ນເຊັ່ນດຽວກັນ ກຸ່ມຂຸນນາງເປັນຜູ້ພັດທະນາປະເພນີໃຫ້ຫຼຸດພົ້ນຈາກບາບ ດ້ວຍວິທີກຳທີ່ປະສິບຢູ່ກັບເວນວົນຄາຖາອັນເລີກລັບ. ໃນຂະນະດຽວກັນນັ້ນ ລາຊະສຳໜັກເປັນຜູ້ນຳໃນການລິເລີ່ມວັດທະນະທຳທີ່ປະຈຳຊາດທີ່ງົດງາມອ່ອນຊ້ອຍ , ການປະດິດຕົວອັກສອນຄະນະ ຂອງຍີ່ປຸ່ນໄດ້ດັດແປງມາຈາກຕົວອັກສອນຄັນຈິ ຂອງຈີນໃຫ້ຢູ່ໃນຮູບທີ່ງ່າຍຕໍ່ຄວາມເຂົ້າໃຈຂອງປະຊາຊົນ ແລະໃຊ້ແທນຄວາມໝາຍຂອງພາສາຍີ່ປຸ່ນໃຫ້ສົມບູນຍິ່ງຂຶ້ນ. ພາສາລາວ, ວັນນະຄະດີ, ອັກສອນສາດມີການຂະຫຍາຍຕົວແຄບໆ ຂອງບັນດາຊົນຊັ້ນສູງໄປຫາຊົນຊັ້ນສາມັນໄດ້ຢ່າງວ່ອງໄວ. ມີນັກປະພັນເອກ ຂອງຍີ່ປຸ່ນເກີດຂຶ້ນໃນສະໄໝ ເຮອັນ ນີ້ ໂດຍສະເພາະແມ່ນນັກປະພັນດົນຕີຄື: ທ່ານ ເຊອິ ໂຊນາງອນ ເຈົ້າຂອງໜັງສື ຂ້າງໝອນ ແລະ ທ່ານ ມູລະຊະກິຊິກິບຸ ຜູ້ປະພັນເລື່ອງ ເຈົ້າຊາຍເກນຈິ ທີ່ໄດ້ຮັບການຍ້ອງຍໍໃຫ້ດປັນນັກກະວີທີ່ມີຄຸນຄ່າທີ່ສຸດໃນໂລກ.

## ກ. ການແບ່ງຊ່ວງໃນຍຸກເຮອັງ

**ຍຸກເຮອັງຕອນຕົ້ນ ຄ.ສ. 782-967**

- ຄ.ສ. 782-833 ຍ້າຍຣາດທານີມາສູ່ນະຄອນເຮອັງກຽວ ນາຫນ່ວຍຣາດການໃໝ່ໆ ເຊັ່ນ ສານັກພະຣາດເລຂາ ນຸການສ່ວນພະອົງ ແລະ ສານັກຣາດອົງຄຮັກສ໌ຫຼວງສ່ວນພະຈັກຣົບຣິນດິ ກໍ່ຕັ້ງພຸດທສາດສະຫານິກາຍເທັນໄດ (天台宗 Tendai-shuu) ແລະຊິງງົນ (真言宗 Shingon-shuu) ທີ່ຖືສັນໂດດ ແລະບໍ່ເປັນອັນຕະລາຍຕໍ່ພະຣາດອຳນາດ
- ຄ.ສ. 833-877 ພະຣາດອຳນາດຂອງພະຈັກຣົບຣິນດິເສື່ອມຖອຍລົງ ອານາດການປົກຄອງຕົກຢູ່ໃນເມືອຂຸນນາງຕະກູນຟູຈິວະຣະ ມັກຈະມີຕຳແໜ່ງເປັນຜູ້ສຳເຣັດຣາດການ ແລະ ມະຫາເສນາບດີ
- ຄ.ສ. 887-967 ຊ່ວງການແຍ່ງຊີງອຳນາດລະຫວ່າງພະຈັກຣົນດິແລະຕະກູນຟູຈິວະຣະ

**ຍຸກເຮອັງຕອນປາຍ ຄ.ສ. 967-1167**

- ຄ.ສ. 967-1068 ອານາດການປົກຄອງຕົກຢູ່ໃນມືຕະກູນຟຈິວະຣະຢ່າງສົມບຣູນ໌
- ຄ.ສ. 1068-1156 ອົງຄ໌ພະຈັກຣົບຣິນດິຜູ້ສະລະຣາດຢ໌ຊີງອຳນາດການປົກຄອງກລັບຄືນມາ
- ຄ.ສ. 1156-1167 ການລຸກຮືຂຶ້ນແຍ່ງຊີງອຳນາດຂອງຊົນຊັ້ນຂຸນສຶກ

## ຂ. ສິລະປະວັດທະນະທຳ

ຕົວອັກສອນຄະຕະນະ

ວັດທະນະທຳທີ່ເປັນຮູບແບບຂອງຍີ່ປຸ່ນໂດດເດັ່ນຫລາຍໃນສະໄໝເຮອັງ ໃນທົສະວັດທີ່ 9 ຍີ່ປຸ່ນຍັງຄົງຮັບວັດທະນະທຳຂອລາຊະວົງຖັງຢູ່ ພຸດທະສາດສະຫນານິກາຍມິຄຽວ (密教 Mikkyou) ກັບການຂຽນຮູບປຣະໂຢກແບບຈີນແພຣ່ຫຼາຍຫລາຍ ພໍເຂົ້າສູ່ດຕອນຣົດທີ່ 10 ຫຼັງຈາກທີ່ຍີ່ປຸ່ນບໍ່ໄດ້ຕິດຕໍ່ໂດຍກົງກັບພາກພື້ນທວີບແລ້ວ ໄດ້ເກີດວັດທະນະທຳຊົນຊັ້ນສູງທີ່ມີລັກສະນະພິເສດສະເພາະຂອງຍີ່ປຸ່ນເອງ ວັນນະກຳທີ່ເດັ່ນໃນເວລານີ້ ອາທິ "ໂຄະຄິນວະກູຊູ" (古今和歌集 Kokinwakashuu) ເປັນຫນັງສືທັງຫມົດກະວິນິບນທ໌ຍີ່ປຸ່ນເລ່ມແຮກຕາມພະຣາດໂອງການຂອງຈັກຣົບຣິນດິ (ໃນຕົ້ນສົດວັດທີ່ 10) "ຕຳນານເຄນຈິ" (源氏物語 Genji Monogatari) ນິວນິແມ່ເຖົ້າເລື່ອງຢາວທີ່ນັບວ່າເກົ່າແກ່ທີ່ສຸດເລື່ອງໜຶ່ງໂລກ (ປຣະມານຕົ້ນສົດວັດທີ່ 11) ແລະ "ມາຄູຣະໂນະໂຊຊິ" (枕草子 Makura-no-sōshi) ຫນັງສືຂ້າງໝອນ (ປຣະມານ ຄ.ສ. 1000) ວັນນະກຳເຫຼົ່ານີ້ຂຽນດ້ວຍຕົວອັກສອນ *ຄະນະ* ອີກດ້ວຍ ຕັ້ງແຕ່ຊ່ວງຫຼັງສົດວັດທີ່ 10 ເປັນຕົ້ນມາ ພຸດທສາດສະຫນານິກາຍໂຈໂດະ (浄土教 Joudo-kyo) ຊຶ່ງມຸ້ງຫວັງຄວາມສຸກໃນຊາດໜ້າເປັນທີ່ນັບຖືຢ່າງແພຣ່ຫຼາຍເຊັ່ນດຽວກັບນິກາຍມິກຄຽວ ທີ່ຫວັງຜົນປະໂຫຍດສະເພາະໃນຊາດນີ້ ແລະເຮົາຈະເຫັນເຖິງຄວາມມີເອກລັກສນ໌ແບບຍີ່ປຸ່ນປາກົດຢູ່ໃນວັນນະກຳກັບງານສິນປະ ເຊັ່ນ ສຖາປັດຢົກຣົນມ ການຂຽນພາບ ການແກະສລັກ ເປັນຕົ້ນ

## ຄ. ສາດສະຫນາ

ໃນຍຸກເຮອັງພຸດທສາດສະຫນານິກາຍໄວຍານ ຈາກຈີນຣາດວົງຖັງເຜີຍແຜ່ເຂົ້າມາສູ່ປະເທດຍີ່ປຸ່ນ ແຕ່ເດີມພຸດທສາດສະຫນາໃນຍີ່ປຸ່ນຖືກປົກຄອງໂດຍ ທສາດສະຫນາຫົກສຳນັກແຫ່ງເມືອງນາຣະ (Six schools of Nara) ຊຶ່ງເນັ້ນການຄິດວິເຄາະແລະສຶກສາພະທຳຫລາຍກວ່າການປະຕິບັດ ຄະນະສົງຄ໌ເມືອງນາຣະມີອຳນາດຫລາຍທັງໃນທາງ

ສາດສະໜາແລະທາງໂລກ ເຮັດໃຫ້ພະຈັກຣິບຣິນດິຄັມມູມີພະພຸດປະສົງຈະຫຼີກລ້ຽງອິດທິພົນຂອງຄະນະສົງຄ໌ເມືອງນາ ຣະ ລາດຊະສານັກຍີ່ປຸ່ນໃນຍຸກເຮອັງຈຶ່ງໃຫ້ການສະໜັບສະໜູນແກ່ພຸດທສາດສະໜານິກາຍວັດຣຍານໃໝ່ຊຶ່ງມາຈາກ ປະເທດຈີນເພື່ອຄານອຳນາດກັນກັບຄະນະສົງຄ໌ເມືອງນາຣະ ປະກອບດ້ວຍນິກາຍ*ຊິງງົນ* (<u>ຍີ່ປຸ່ນ</u>: 真言; ໂຣມາ ຈິ *Shingon*) ແລະນິກາຍ*ເທງໄດ* (ຍີ່ປຸ່ນ 天台; : *Tendai*) ນິກາຍວັດຣຍານຊຶ່ງເນັ້ນເລື່ອງພິທີກຳການບູຊາເຮັດໃຫ້ ເກີດການປະສົມຜສານລະຫວ່າງພຸດທສາດສະໜາ ແລະ ສາສະໜາຊິນໂຕ ຫລືຄວາມເຊື່ອດັ້ງເດີມຂອງຊາວຍີ່ປຸ່ນ ຮຽກ ວ່າ *ຊິນບູດສຶ-ຊູໂງ* (<u>ຍີ່ປຸ່ນ</u> : 神仏習合; ໂຣມາຈິ *Shinbutsu-shūgō*)

**ສາດສະໜາຊູເກນໂດ**

ສາດສະໜາ*ຊູເກນໂດ* (: 修験道: *Shugendō*) ເກີດຂຶ້ນຈາກການປະສົມຜສານລະຫວ່າງການປະຕິບັດຝຶກ ຕົນຂອງພຸດທສາດສະໜາ ພິທີກາຂອງວັດຣຍານ ແລະຄວາມເຊື່ອຂອງສາດສະໜາຊິນໃຫຍ່ ສາດສະໜາ*ຊູເກນໂດ* ເກີດຂຶ້ນຈາກ<u>ເອງໂນະອຽວ</u> 役行者; *En no Gyōja*) ນັກບວດໃນຍຸກນາຣະຜູ້ຣິເຣີ່ມການທຸດງຄ໌ເປັນຣືສີບຳເພັຍພຽນ ຕາມປ່າທ່ານເພື່ອຝຶກຈິດແສວງຫາທາງຫຼຸດພົ້ນພຮ້ອມທັງບູຊາເທບເຈົ້າໃນສາດສະໜາຊິນໃຫຍ່ໄປນຳກັນ ຕໍ່ມາໃນຍຸກ ເຮອັງລັດທິ*ຊູເກນໂດ*ຮັບພິທີກຳຂອງພຸດທສາດສະໜາວັດຣຍານໄປປະກອບດ້ວຍ ນັກບວດໃນສາດສະໜາ*ຊູເກນໂດ* ຊຶ່ງອາໄສຢູ່ຕາມປ່າທ່ານຮຽກວ່າ *ຊູເກງຈະ* (: 修験者; ໂຣມາຈິ *Shugenja*) ຫລື *ຢາມາບູຊິ* ( 山伏; ໂຣມາ ຈິ : *Yamabushi*) ສາດສະໜາຊູເກງໂດມີຕົ້ນກຳເນີດແລະມີສູນກລາງຢູ່ທີ່ພູເຂົາໂຢຊິນະ (Yoshino <u>ເມືອນາຣະ</u>ໃນ ປະຈຸບັນ) ຊຶ່ງຕໍ່ມາເຜີຍແຜ່ໄປຍັງພູເຂົາແຫ່ງອື່ນໆໃນປະເທດຍີ່ປຸ່ນ

**ລັດທິ*ອົນມຽວ*** (Abe no Seimei) ນັກພົດໃນລັດທິ<u>ອົນມຽວ</u>ຜູ້ມີຊື່ສຽງໃນຍຸກເຮອັງ

ລັດທິ<u>ອົນມຽວ</u> ຫຼື *ອົນມຽວໂດ* (陰陽道; ໂຣມາຈິ *Onmyōdō*) ແປລວ່າ "ວິທີແຫ່ງຫຢິນແລະຫຢາງ" ຫລື ລັດທິຫຢິນຫຢາງ ເປັນການນຳປັດຊະຍາຂອງ<u>ລັດທິເຕົາ</u> ມາປະສົມທັງຫມົດກັບຄວາມເຊື່ອດັ້ງເດີມຂອງຍີ່ປຸ່ນໃນ ສາດສະໜາຊິນໃຫຍ່ ລັດທິ*ອົນມຽວ*ກ່ຽວຂ້ອງກັບໂຊກລາງແລະໂຫຣາສາດການພະຍາກອນອະນາຄົດ ໃນຍຸກເຮອັງ ຊົນຊັ້ນສູງແລະລາດຊະສຳນັກຍີ່ປຸ່ນມີຄວາມເຊື່ອກ່ຽວກັບຄວາມໂຊຄະດີແລະຄວາມໂຊກຮ້າຍ ມີການຈ້າງນັກພຣິດໃນ ລັດທິ*ອົນມຽວ*ເພື່ອຄອຍຖ້າເບິ່ງແຍງໂຊກຊະຕາຂອງຂຸນນາງແລະປັດເປົ່າສິ່ງຊົ່ວຮ້າຍປຣາບຜີຕ່າງໆ ນັກພຣິດທີ່ຮັບຣາດ ການໃນລາດຊະສຳນັກຍີ່ປຸ່ນຮຽກວ່າ*ອົນມຽວຈິ* (陰陽師 ໂຣມາຈິ: *Onmyōji*) ຊຶ່ງມີຫນ້າທີ່ຄອຍຖ້າປັດເປົ່າສິ່ງຊົ່ວ ຮ້າຍໃຫ້ອອກໄປຈາກບ້ານເມືອງທັງຫມົດທັງແປລຄວາມຫມາຍຂອງລາງບອກເຫດທຳມະຊາດພະຍາກອນເຫດການ ສຳຄັນຕ່າງໆ ນັກພຣິດອົນມຽວຈິທີ່ມີຊື່ສຽງໃນຍຸກເຮອັງໄດ້ແກ່<u>ອະເບະໂນະເຊເມ</u> 安倍 晴明;ໂຣມາຈິ *Abe no Seimei*)

ຮູບແບບສຖາປັດຍກຳທີ່ໂດດເດັ່ນໃນຍຸກນີ້ຄື ສຖາປັດຍກຳແບບຊິນເດັງ (寝殿造 Shinden-zukuri) ຫຼັກໆ ຈະປະກອບດ້ວຍເຮືອນຫຼັກ ( Shinden ) ແລະເຮືອນຕໍ່ຂະຫຍາຍດ້ານຕະເວັນຕົກ ແລະ ຕະເວັນອອກ ເຊື່ອມກັບ ເຮືອນຫຼັກດ້ວຍທາງເດີນທີ່ມີຫຼັງຄາກລຸມ ເຮືອນຫຼັກຈະຫັນໜ້າໄປທາງທິໃຕ້ຊຶ່ງເປັນທິດມົງຄຸນຕາມຄຕິແບບຈີນ ເຮືອນ ທາງທິດເໜືອນັ້ນຈະຈັດໃຫ້ເປັນທີ່ພຳນັກຂອງພັນລະຍາຫຼວງສະເໜີ ດັ່ງນັ້ນໃນສະໄໝນັ້ນຮຽກພັນລະຍາຫຼວງວ່າ ຄິຕະ ໂນະຄະຕະ (北の方 Kita-no-kata - ຜູ້ທີ່ຢູ່ທາງທິດເໜືອ ) ດ້ານໜ້າເປັນສວນທີ່ປະກອບດ້ວຍສຣະນ້ຳ ເກາະ ໂນນ ພູຈຳລອງ ແລະຂົວ ມີກຳແພງດິນລ້ອມອ້ອມໝູ່ກຣິຫາດນ໌ທັງໝົດ ຫຼັງຄານິຍົມມຸງດ້ວຍເປລືອກສົນທີ່ຊ້ອນກັນເປັນຊັ້ນ ໜາຫລາຍກວ່າກະເບື້ອງ ເພາະກະເບື້ອງແບບຈີນນັ້ນບໍ່ເໝາະກັນອາກາດຂອງຍີ່ປຸ່ນ ພື້ນຈະເປັນພື້ນໄມ້ກຣະດານ ບໍ່ມີ

ເສື່ອວາງ ເຮືອນດ້ານຕະເວັນອອກສ່ວນໃຫຍ່ຈະມີທາງເດີນຢາວເຊື່ອມສູ່ເຮືອນຕຶກປລາ (釣殿 Tsuri-dono) ທີ່ສ້າງເ ໜືອລຳທານຫລືສະນ້ຳ

ເຮືອນແບບຊິນເດັງແຕ່ລະຫຼັງ ສາມາດແບ່ງຫ້ອງໄດ້ຕັ້ງແຕ່ 4 ຫ້ອງເຖິງ 9 ຫ້ອງ ໂດຍໃຊ້ສາກ ຫລື ຣາວຜ້າມ່ານ ເປັນເຄື່ອງກັ້ນຫອງຕາມຂະໜາດຄວາມຕ້ອງການໃຊ້ງານ ຫ້ອງທີ່ມີຂ້າງຝາແລະປຣະຕູມິດຊິດມີ 1 ຫ້ອງຮຽກວ່າ ໂມະ ຢະ ສຖາປັດຢກຳແບບຊິນເດັງນີ້ຈະເຢັນສະບາຍໃນລະດູຮ້ອນ ແຕ່ໃນລະດູໜາວຈະໜາວເຢັນຫລາຍ

## ງ. ເຫດການທີ່ສຳຄັນ

- ຄ.ສ. 794 - ຍ້າຍເມືອງຫຼວງໄປທີ່ເຮອັງກຽວ (ເມືອງຄຽວໂຕະະໃນປະຈຸບັນ)
- ຄ.ສ. 804 - ສົ່ງພະໄຊໂຊ (最澄 Saichou) ແລະ ຄູໄກ (空海 Kukai) ໄປຢັງປະເທດຈີນໃນສະໄໝຣາດ ວົງຖັງຕາມຄຳແນະນຳຂອງລາດຊະທູດຍີ່ປຸ່ນ
- ຄ.ສ. 805 - ພະໄຊໂຊ ເດີນທາງກລັບຍີ່ປຸ່ນ ແລະກໍ່ຕັ້ງສາດສະໜາພຸດທ ນິກາຍເທນໄດ
- ຄ.ສ. 806 - ພະຄູໄກ ເດີນທາງກລັບຍີ່ປຸ່ນ ແລະກໍ່ຕັ້ງສາດສະໜາພຸດທ ນິກາຍຊິນງອນ
- ອຳນາດຂອງຈັກຣິບຣິນດີເຣີ່ມສັ່ນຄລອນ ຈາກການຂຶ້ນມາມີອຳນາດຂອງຕະກູນຟູຈິວາຣະ ທີ່ໄດ້ຮັບຕຳແໜ່ງສູງ ໃນລາດຊະສຳນັກ ນອກຈາກນີ້ຍັງໄດ້ອຳນາດມາຈາກການໄປແຕ່ງງານກັບເຊື້ອພະວົງຂອງຈັກຣິບຣິນດີດ້ວຍ
- ຄ.ສ. 884 - ໂມໂຫດສີເນະ ຟຸຈິວະຣະ ໄດ້ຮັບແຕ່ງຕັ້ງເປັນ ຄັມປາກຸ ຕາແໜ່ງຜູ້ສຳເຣັດຣາດການຜູ້ອາວຸໂສ ຊຶ່ງ ເປັນຕຳແໜ່ງສູງສຸດຂອງຂຸນນາງ ແລະເຮັດໃຫ້ຕະກູນພູຈິວະ ຢຶດຄອງອຳນາດໃນລາດຊະສຳນັກ
- ຄ.ສ. 894 - ມິຈິຊາເນະ ສຸງາວາຣະ (ຊຶ່ງເປັນຕະກູນທີ່ຈັກຣິບຣິນດີຊົງໃຫ້ການອຸບປະຖຳເພື່ອຢັບຢັ້ງການມີ ອຳນາດຂອງຕະກູນຟູຈິວາຣະ) ໄດ້ສັ່ງຣະງັບການສົ່ງທູດໄປເມືອງຖັງຂອງຈີນ (ເນື່ອງຈາກການເມືອງໃນຈີນກຳ
- ລັງວຸ້ນວາຍ) ສິ່ງຜົນໃຫ້ການຮັບວັດທະນະທຳຈາກແຜ່ນດີນໃຫຍ່ຍຸດຕິລົງດ້ວຍ ແຕ່ສິ່ງຜົນເຮັດໃຫ້ອາລະຍະທຳ ຍີ່ປຸ່ນເຣີ່ມທີ່ຈະມີລັກສະນະແລະຮູບແບບພິເສດສະເພາະເປັນຂອງຕົນເອງ
- ຄ.ສ. 901 - ສຸງາວາຣະ ຖືກເນນທົດໄປຢູ່ທີ່ດາໄຊຟຸ ເກາະກິວຊູ □ນຶ່ງຈາກຖືກກລ່າວຫາວ່າມີສ່ວນຮ່ວມໃນ ການວາງແຜນລົ້ມລ້າງການປົກຄອງ
- ມີການປະດິດອັນສອນນາຄະ ໂດຍພະຄູໄກ ປະກອບດ້ວຍພຢາງຄ໌ທັງໝົດ 47 ຕົວ ໂດຍດັດແປງມາຈາກຕົວ ອັກສອນຂອງຈີນ ແລະ ນຳມາໃຊ້ກັນຢ່າງກວ້າງຂວາງ ນັບເປັນການເປີດທາງໃຫ້ແກ່ງານຂຽນທີ່ມີຮູບແບບເປັນ ຂອງຍີ່ປຸ່ນຢ່າງແທ້ຈິງ ແລະ ມີການໃຊ້ກັນຢ່າງແພ່ຫຼາຍແທນຖ້ອຍຄຳສຳນວນທີ່ຢືມມາຈາກພາສາຈີນ
- ຄ.ສ. 1010 -ຊິກິບຸມຸຣາຊາກິເຂີຍນນິແມ່ເຖົ້າເລື່ອງເກນຈິໂມໂນງາຕາລິ
- ຄ.ສ. 1016 - ມິຈິນາງະຟຸຈິວະຣະ ໄດ້ເປັນຜູ້ສຳເລັດແາດການແຜ່ນດິນ ແລະຕະກູນຟຸຈິວະຣະໄດ້ກ້າວເຂົ້າສູ່ ຍຸກແຫ່ງຄວາມຣຸ່ງເຮືອງກລຸ່ມຂຸນນາງທີ່ປົກຄອງໃນສ່ວນພູມິພາກໄດ້ເຣີ່ມຕັ້ງຕົນເປັນຫົວໜ້າຂອງພວກນັກຣົບ ຫລື ພວກບູຊິໂດ ທີ່ເກີດຈາກການທີ່ສະມາຊິກຕ່າງໆຂອງຄອບຄົວໄດ້ຈັດຕັ້ງອົງຄ໌ກຣທາງທະຫານຂອງຕົນຂຶ້ນ ມາກໍ່ການປົກຄອງມົນຖິນຕ່າງໆ
- ໃນຕອນປາຍຂອງສິດວັດທີ່ 11 ໄດ້ເກີດການຕໍ່ສູ້ລະຫວ່າງກອງທະຫານຂອງພວກນັກຣົບໃນມົນຖິນທາງ ເຫນືອຫຼາຍເທື່ອ ແລະ ຕະກູນມິນາໂມໂຕະ ໄດ້ມີຊື່ສຽງອິດທິພົນທີ່ສຸດໃນແຖບຄັນໃຫຍ່

- ຄ.ສ. 1051 - ໂຢຣິໂຢຊິ ມິນາໂມໂຕະ ໄດ້ປຣາບປຣາມກລຸ່ມກະບົດຂອງຕະກູນອາເບະທີ່ໂອຊູ
- ຄ.ສ. 1053 - ຫອນກາຟີນິກຊ໌ໃນວັດບຽວໂດອິນ ໄດ້ສ້າງສຳເລັດສົມບູນ
- ຄ.ສ. 1083 - ໂຢຊິອິເອະ ມິນາໂມໂຕະ ໄດ້ປຣາບປຣາມຕະກູນຄິໂຢຮາຣະທີ່ໂອຊູ
- ຄ.ສ. 1086 - ຈັກຣິບຣິນດີຊິຣາກາວະ ເປັນຈັກຣິບຣິນດີອົງຄ໌ແຮກທີ່ສະລະບັນລັງອອກບວດ ແຕ່ຍັງກຸມ
- ອຳນາດທາງການເມືອງຢູ່ເບື້ອງຫຼັງ ແລະຕໍ່ມາກໍມີຈັກຣິບຣິນດີອີກຫຼາຍອົງຄ໌ທີ່ເຮັດເຊັ່ນດຽວກັນ ຈັກຣິບຣິນດີຊິຣາກາວະໄດ້ແສວງຫາວິທີການທີ່ຈະຕໍ່ຕ້ານອິດທິພົນຂອງຕະກູນມິນາໂມໂຕະ ຈຶ່ງໄດ້ແຕ່ງຕັ້ງຄົນໃນຕະກູນໄທຣະ ເປັນທີ່ບຣຶກສາຂອງພະອົງ
- ຄ.ສ. 1156 - ສຶກໂຮເງນ ສະແດງໃຫ້ເຫັນເຖິງຄວາມຮຸ່ງເຮືອງແລະຄວາມມີອຳນາດຂອງຊົນຊັ້ນນັກຣົບ
- ຄ.ສ. 1180 - ເກີດສົງຄາມເກມປາ ປັນການຕໍ່ສູ້ລະຫວ່າງຕະກູນໄທຣະ ກັບຕະກູນມິນາໂມໂຕະ ຜົນຄືຕະກູນມິນາໂມໂຕະ ເປັນຝ່າຍຊະນະ ແລະເຮັດໃຫ້ຕະກູນມິນາໂມໂຕະ ຂຶ້ນມາມີອຳນາດສູງສຸດໃນລາດຊະສຳນັກ
- ຄ.ສ. 1185- ຕະກູນໄທຣະ ຖືກທຳລາຍລ້າງໂດຍຕະກູນມິນາໂມໂຕະ ໃນສຶກດັນໂນະອຸຣະ

## ຈ. ຍຸກເມຈິ

ການປະຕິຮູບເມຈິເຮັດໃຫ້ຍຸກເອໂດະສິ້ນສຸດໃນປີ ພສ 2411 (ຄສ 1868) ແລະປິດປ໊ອກັນນັ້ນນັບເປັນການເລີ່ມຕົ້ນຂອງຍຸກ ເມຈິ ເປັນສະໄໝທີ່ເດັ່ນທີ່ສຸດສະໄໝໜຶ່ງໃນບັນດາປະຫວັດຕິສາດຂອງປະເທດພາຍໃຕ້ການປົກຄອງຂອງສົມເດັດພະຈັກກະພັດເມຈິ ຍີ່ປຸ່ນໄດ້ບັນລຸຄວາມສຳເລັດໃນການພັດທະນາປະເທດໂດຍໃຊ້ເວລາພຽງບໍ່ເທົ່າໃດທົດສະວັດ ກ່າວຄືການສ້າງສັນປະເທດໃຫ້ເຂົ້າສູ່ຍຸກໃໝ່ດ້ວຍອຸດສະຫະກຳ ພັດທະນາສະຖາບັນທາງການເມືອງ ແລະ ຮູບແບບຂອງສັງຄົມແບບໃໝ່ ທັງທີ່ປະເທດຕາເວັນຕົກຕ້ອງໃຊ້ເວລາພັດທະນາດົນນັບສະຕະວັດ.

ໃນຊ່ວງປີທຳອິດຂອງການຄອງລາດສົມເດັດພະຈັກກະພັດ ເມຈິ ໄດ້ຍ້າຍເມືອງຫຼວງຈາກກຸງກຽວໂຕໄປໄປຢູ່ທີ່ເມືອງ ເອໂດະ ເຊິ່ງເປັນທີ່ຕັ້ງຂອງລັດຖະບານລະບົບສັກດີນາທີ່ຜ່ານມາ ແລະ ໄດ້ຊົງປ່ຽນຊື່ເມືອງຫຼວງເປັນ ໂຕກຽວ ຊຶ່ງແປວ່າ ເມືອງຫຼວງຕາເວັນອອກ ມີການປະກາດໃຊ້ລັດຖະທຳມະນູນ ຕະຫຼອດຈົນຕັ້ງຄະນະລັດຖະມົນຕີ ແລະ ສະຖາບັນນິຕິບັນຍັດ ລະບົບສອງສະພາ ຍົກເລີກການແບ່ງຊົນຊັ້ນແບບເກົ່າຂອງສະໄໝສັກດີນາ ຍີ່ປຸ່ນທັງປະເທດທຸ່ມເທພະລັງງານ ແລະ ຄວາມກະຕືລືລົ້ນໃນການສຶກສາ, ຮັບອາຣິຍະທຳຕາເວັນຕົກມາໃຊ້.

# ບົດທີ 4

# ຍີ່ປຸ່ນໃນຍຸກກາງ ( ຄສ 1185-1868)

## 1. ຍຸກຄາມະກູຣະ kamakula period

ໄຊຊະນະຂອງຕະກູນ ມິນະໂມະໂຕະສະແດງເຖິງຄວາມເສື່ອມຂອງບັນລັງອຳນາດທາງການເມືອງຂອງຈັກກະພັດຢ່າງແທ້ຈິງ ແລະ ເປັນຈຸດເລີ້ມຕົ້ນຂອງການປົກຄອງໂດຍລະບອບສັກດີນາ ຍຸກກາງຂອງຍີ່ປຸ່ນ ພາຍໃຕ້ການປົກຄອງຂອງໂຊກຸນ ຫຼື ຜູ້ປົກຄອງທາງການທະຫານທີ່ສືບຕໍ່ກັນມາອີກ 700 ປີ; ຖັດຈາກຍຸກເຮອັງຄືຍຸກ ຄະມະກຸຣະ ເລີ້ມຕົ້ນໃນປີ ພສ 1728 (ຄສ 1185) ຕໍ່ມາໃນປີ ພສ 1735 (ຄສ 1192) ໂຍະຣິໂຕະໂມະ ຫົວໜ້າຕະກູນ ມິນະໂມະໂຕະ ທີ່

ເປັນຜູ້ຊະນະສົງຄາມໄດ້ສະຖາປານາລະບົບ ໂຊກຸນ ຫຼື ລັດຖະບານທະຫານຂຶ້ນທີ່ເມືອງ ຄະມະກຸຣະ ໃກ້ກັບນະຄອນຫຼວງ ໂຕກຽວ ໃນປັດຈຸບັນ ແລະ ຢຶດອຳນາດບໍລິຫານບາງປະການທີ່ເຄີຍເປັນອຳນາດຂອງຈັກກະພັດໃນກຸງກຽວໂຕະເພື່ອຕ້ານສິ່ງທີ່ຖືວ່າເປັນຄວາມເສື່ອມຂອງກຽວໂຕະ ທີ່ໄດ້ຝັກໄຝ່ໃນສັນຕິພາບໂຊກຸນ ທີ່ເມືອງ ຄະມະກຸຣະໄດ້ສະໜັບສະໜູນຄວາມມັດທະຍັດອົດອອມ ແລະ ສິລະປະການຕໍ່ສູ້ປ້ອງກັນຕົວ ຕະຫຼອດຈົນຄວາມມີລະບຽບວິໄນເຊິ່ງເປັນສິ່ງຈຳເປັນທີ່ຈະຟື້ນຟູອຳນາດການຄວບຄຸມທົ່ວທັງແຜ່ນດິນຢ່າງມີປະສິດທິພາບກັບຄືນມາໂດຍສະເພາະຢ່າງຍິ່ງການຄວບຄຸມກຸ່ມທີ່ມີອິດທິພົນທາງການທະຫານໃນຈັງຫວັດທີ່ຢູ່ໄກອອກໄປ ສະໄໝ ຄະມະກຸຣະ ເຊິ່ງເປັນຊື່ເອີ້ນຍຸກຂອງລະບົບໂຊກຸນຂອງ ໂຍະຣິໂຕະໂມະ ເປັນຍຸກທີ່ມີແນວຄິດໃນເລື່ອງຂອງຄວາມກ້າຫານ ແລະ ຮັກກຽດຕິຍຸດ ເຊິ່ງເປັນວິຖີຊີວິດຂອງຊາມູໄລ

ໃນປີ ພສ 1761 (ຄສ 1213) ອຳນາດທີ່ແທ້ຈິງໄດ້ປ່ຽນມືຈາກຕະກຸນ ມິນະໂມະໂຕະ ໄປຍັງຕະກຸນ ໂຮໂຈ ເຊິ່ງເປັນຕະກຸນທາງພັນລະຍາຂອງ ໂຍະຣິໂມະໂຕະ ໂດຍເປັນຜູ້ສຳເລັດລາຊະການໃຫ້ໂຊກຸນ ຕະກຸນໂຮໂຈຄ້ຳຈູນລັດຖະບານທີ່ເມືອງ ຄະມະກຸຣະໄວ້ໄດ້ຈົນເຖິງ ພສ 1876 (ຄສ 1333) ໃນລະຫວ່າງນັ້ນກອງທັບ ມອງໂກໄດ້ບຸກຕອນເໜືອຂອງເກາະ ຄິວຊູ ເຖິງ 2 ຄັ້ງ ໃນປີ ພສ 1817 (ຄສ 1274) ແລະ ພສ 1824 (ຄສ 1281) ເຖິງວ່າຈະມີອາວຸດທີ່ດອ້ຍກວ່າແຕ່ນັກຮົບຍີ່ປຸ່ນກໍ່ສາມາດຮັກສາພື້ນທີ່ໄວ້ໄດ້ ແລະ ປ້ອງກັນບໍ່ໃຫ້ຜູ້ຮຸກຮານບຸກເຂົ້າໄປຕອນໃນຂອງປະເທດ ຫຼັງຈາກທີ່ກອງທັບເຮືອສ່ວນໃຫຍ່ຂອງຊົນເຜົ່າ ມອງໂກ ປະສົບຄວາມເສຍຫາຍຢ່າງໜັກຈາກພາຍຸໃຕ້ຝຸ່ນທີ່ຍີ່ປຸ່ນເອີ້ນວ່າ: "ຄະມິຄະເຊ່" ໃນການບຸກຍີ່ປຸ່ນທັງສອງຄັ້ງກອງທັບມົງໂກ ຈຶ່ງໄດ້ຖອຍທັບໄປຈາກຍີ່ປຸ່ນ ແລະ ອຳນາດຂອງຄ້າຍທະຫານ ຄະມະກຸຣະ ກໍໝົດລົງໃນປີດຽວກັນນັ້ນເອງ

ການຂຶ້ນກຳອຳນາດຂອງຕະກຸນຄະມະກູຣະປີ ຄສ 1185 ຖືເປັນປີຂອງການເລີ້ມຕົ້ນຂອງການປ່ຽນແປງຈາກຍີ່ປຸ່ນສະໄໝບູຮານມາສູ່ຍີ່ປຸ່ນສະໄໝກາງ (ຄສ 1185 – 1568) ເຊັ່ນດຽວກັບຄອບຄົວຂຸນນາງຄົນອື່ນ "ກຸ່ມອເກະ" ຕ່າງກໍ່ໄດຮັບຕຳແໜ່ງຂ້າລາຊະການ ຕຳແໜ່ງສູງຂອງລັດຖະບານກາງ ຕໍ່ມາ ມິນະໂມະໂຕະ ໂຍຣິໂຕໂມະ ຫຼື ໂຍຣິໂຕໂມະ ມິນະໂມະໂຕະ ເປັນເຊື້ອສາຍຂອງກຸ່ມ ເກນຈິ ຜູ້ທີ່ສາມາດໂຄ່ນລົ້ມອຳນາດຂອງພວກ ເອກະ ຫຼື ພວກໄທຣະ ພວກເຂົາໄດ້ຍ້າຍການປົກຄອງຈາກໂຕກຽວໄປເມືອງ ຄະມະກຸຣະ ເຊິ່ງຢູ່ທາງຕາເວັນອອກຂອງຍີ່ປຸ່ນ ພ້ອມທັງສະຖາປານາລັດຖະບານທະຫານທີ່ເອີ້ນວ່າ ບາກູຟຸ ຫຼື ລັດຖະບານໂຊກຸນ ຄະມະກູຣະ ຍ້ອນວ່າ ໂຍະຣິໂທະໂມະ ໄດ້ຮັບແຕ່ງຕັ້ງເປັນຈັກກະພັດຢ່າງເປັນທາງການໃຫ້ໄດ້ເປັນໂຊກຸນຄັ້ງທຳອິດ ແລະ ໄດ້ແຕ່ງຕັ້ງລູກນ້ອງ ສະໂມໄລຂອງຕົນຮັບຕຳແໜ່ງ ຊູໂງ ແລະ ຈິໂຕ.

ອຳນາດຂອງໂຊກຸນ ສາຍເກນຈິ ຫຼື ໂຍຣິໂຕະໂມະ ມິນະໂມະໂຕະ ມີຢູ່ພຽງ 3 ລຸ້ນເທົ່ານັ້ນໃນທີ່ສຸດຕະກຸນ ໂຮໂຈ ເຊິ່ງເປັນຕະກຸນຂອງເມຍ ໂຍະຣິໂທະໂມະ ກໍ່ເຂົ້າມາຄຸມອຳນາດການປົກຄອງໄວ້ ແລະ ຢຶດຕາແໜ່ງຜູ້ສາເລັດລາຊະການ ໂຊກຸນທີ່ຍັງນ້ອຍຢູ່ ຕະກຸນ ໂຮໂຈ ເລີ້ມອອກກົດໝາຍ ໂຈເອ Joei Code ກນບັງຄັບໃຊ້ເນື້ອໃນກົດໝາຍລ້ວນເປັນກົດເກນ ຫຼື ຂໍ້ບັງຄັບຂອງພວກນັກຮົບ. ໃນສະໄໝນີ້ໄດ້ເກີດເຫດການສຳຄັນຂຶ້ນ ໃນຄວາມສາພັນກັນກັບຕ່າງປະເທດນັ້ນແມ່ນການທີ່ພວກມົງໂກນ ພາຍໃຕ້ການປົກຄອງຂອງພະເຈົ້າ **ກຸບໄລຂ່ານ** ໄດ້ຍົກກອງທັບເຮືອມາຕີຍີ່ປຸ່ນເຖິງ 2 ຄັ້ງ ຄສ 1274- 1281 ສະມູໄລຂອງຍີ່ປຸ່ນສາມາດປ້ອງກັນແຜ່ນດິນຂອງຕົນໄວ້ຢ່າງສຸດຄວາມສາມາດ. ນອກຈາກນີ້ ຍັງເກີດລົມພາຍຸພັດເຂົ້າໃສ່ກອງທັບມົງໂກນເຖິງ 2 ຄັ້ງ ດັ່ງນັ້ນ ຈຶ່ງໃສ່ຊື່ລົມພາຍຸນີ້ວ່າ "ລົມພາຍຸແຫ່ງພະເຈົ້າ ( ຄະມິກາເຊະ)"ສຸດທ້າຍ ການທີ່ໂຊກຸນບໍ່ສາມາດຫາລາງວັນຈາກການຕໍ່ສູ້ມາໃຫ້ບັນດາສະມູໄລ ແລະ ໂຊກຸນ ກໍ່ຍັງຢູ່ໃຕ້ການປົກຄອງຂອງຕະກຸນ ໂຮໂຈ ຈຶ່ງເປັນຜົນໃຫ້ສະໂມໄລ ແລະ ລູກນ້ອງໝົດຄວາມເຊື່ອຖືໃນ ໂຊກຸນ.

### 1.1 ການກໍ່ຕັ້ງລັດຖະບານໂຊກຸນ

ການກໍ່ຕັ້ງລັດຖະບານທະຫານໃນຄັ້ງນີ້ ມິນະໂມະໂຕະ ໂຍະຣິໂທະໂມະ ເອີ້ນລັດຖະບານໃໝ່ວ່າ ບະກຸຟຸ ຫຼື ເອີ້ນອີກຢ່າງໜຶ່ງວ່າ: ລັດຖະບານໂຊກຸນ ການກໍ່ຕັ້ງລັດຖະບານທະຫານໃນຄັ້ງນີ້ ເຖິງວ່າຈະໄດ້ຊື່ວ່າເປັນຈຸດເລີ້ມຕົ້ນເປັນ ຍຸກກາງຂອງຍີ່ປຸ່ນ ແຕ່ກໍ່ຍັງມີລັກສະນະຫຼາຍຢ່າງທີ່ຢູ່ໃນກອບປະເພນີຂອງການປົກຄອງດັ້ງເດີມຫຼາຍ ໂຍະຣິໂທະໂມະ ໄດ້ເຮັດໃຫ້ການຂຶ້ນມາສູ່ອຳນາດຂອງເຂົາໄດ້ມາຈາກຈັກກະພັດ ເຊັ່ນດຽວກັບບັນດາຫົວໜ້າຕະກຸນທີ່ສຳຄັນໃນອະດີດ ໃນທີ່ສຸດປີ ຄສ 1192 ໂຍະຣິໂທະໂມະ ກໍ່ໄດ້ຮັບຕຳແໜ່ງໂຊກຸນ ເຊິ່ງ ທະມຸຣະມະໂຣະຜູ້ຍິ່ງໃຫ່ຍທີ່ເຄີຍໄດ້ຮັບຕຳແໜ່ງ ນີ້ເປັນຄົນທຳອິດໃນລະຫວ່າງທ້າຍສະຕະວັດທີ 8-9 ໂຍະຣິໂທະໂມະໄດ້ຈັດຕັ້ງລັດຖະບານຕາມຮູບແບບການປົກຄອງ ຂອງຕະກຸນ ຟູຈິວະຣະ ແລະ ຕະກຸນຂຸນນາງອື່ນໆໃນລາຊະສຳນັກ. ລັກສະນະທີ່ເດັ່ນຂອງລັດຖະບານນີ້ກໍ່ຄືການທີ່ຕຳແ ໜ່ງຕ່າງໆໃນຄະນະລັດຖະບານມາຈາກສະມາຊິກຂອງຕະກຸນຕ່າງໆເຊິ່ງໄດ້ແກ້ໄຂຕຳແໜ່ງດັ່ງຕໍ່ໄປນີ້:

1 ຄະນະກຳມະການຝ່າຍບໍລິຫານ

2 ຄະນະກຳມະການຝ່າຍທະຫານ

3 ຄະນະກຳມະການຝ່າຍຕຸລາການ

ການໄດ້ຮັບໄຊຊະນະຈາກຕະກຸນ ໄທຣະ ໃນປີ ຄສ 1185 ເຮັດໃຫ້ໂຍະຣິໂທະໂມະ ຈະຕ້ອງຂະຫຍາຍ ພື້ນຖານທາງດ້ານເສດຖະກິດໄປດິນແດນຕ່າງໆ ທີ່ໄດ້ຈາກຕະກຸນ ໄທຣະ ທັງໃນເຂດພາກກາງ ແລະ ພາກຕາເວັນຕົກ ເຂົາໄດ້ບັງຄັບໃຫ້ລາຊະສຳນັກຍອມຮັບການແຕ່ງຕັ້ງໃຫ້ພວກລູກນ້ອງຂອງຕົນໄປຮັບຕຳແໜ່ງຜູ້ຮັກສາ ແລະ ຄຸ້ມຄອງໄປ ໃນຕົເມືອງຕ່າງໆຈິ່ງເຮັດໃຫ້ໂຍະຣິໂທະໂມະ ຂະຫຍາຍອຳນາດຕ່າງໆ ເຊິ່ງ ໂຍະຣິໂທະໂມະກໍ່ໄດ້ຮັບຕຳແໜ່ງຜູ້ຄຸ້ມຄອງ ທີ່ມີອຳນາດສູງສຸດ

ເຖິງຢ່າງໃດກໍ່ຕາມ ລັດຖະບານໂຊກຸນ ຄະມະກຸຣະ ກໍ່ຍັງບໍ່ໄດ້ເປັນລັດຖະບານກາງຂອງປະເທດຢ່າງເຕັມສ່ວນ ປີ ຄສ 1189 ໂຍະຣິໂທະໂມະ ແລະ ລູກນ້ອງໄດ້ເຮັດສົງຄາມຂະຫຍາຍອຳນາດເຂົ້າທາງພາກເໜືອ ແລະ ສາມາດທຳລາຍ ເຊື້ອສາຍຕະກຸນໜຶ່ງຂອງ ຟູຈິວະຣະ ເຊິ່ງມີອຳນາດຢູ່ໃນເຂດນັ້ນ, ແຕ່ເຖິງຢ່າງໃດກໍ່ຕາມລັດຖະບານທະຫານຈົນເຖິງ ສະໄໝ ຄະມະກຸຣະ ( ຄສ 1185-1333) ກໍ່ບໍ່ສາມາດນຳອຳນາດເຂົ້າໄປໃນແຄ້ວນທາງພາກເໜືອ ແລະ ພາກຕາເວັນຕົກ ໄດ້ໝົດ ຍ້ອນພວກຂຸນນາງໃນລາຊະສຳນັກ ແລະ ກຸ່ມສະຖາບັນທາງສາສະໜາຮ່ວມກັບສະຖາບັນທາງສາສະໜາໃນ ລະບົບເກົ່າ ຍັງມີສ່ວນໃນການຖືກຳມະສິດທີ່ດິນ ແລະ ສິດທາງດ້ານການສາສາໜາຮ່ວມກັບລັດຖະບານທະຫານຂອງ ຕະກຸນນັກຮົບ ເຊິ່ງມີສູນກາງຢູ່ຄະມະກູຣະ ລະບົບຄວາມສຳພັນລະຫວ່າງຂຸນນາງກັບຜູ້ທີ່ຢູ່ໃນທີ່ດິນ ນັບວ່າມີສ່ວນສຳ ຄັນຕໍ່ຄວາມເຂັ້ມແຂງຂອງລັດຖະບານໂຊກຸນຄວາມຈົງຮັກພັກດີຕໍ່ຜູ້ທີ່ຢູ່ໃນທີ່ດິນທີ່ມີຕໍ່ຂຸນນາງນີ້ ເປັນຕົ້ນກຳເນີດຂອງ ສັງຄົມນັກຮົບໃນທາງຕາເວັນອອກ. ຍິ່ງກວ່ານີ້ ໂຍະຣິໂທະໂມະ ໄດ້ປຽບໃນການຮຽກຮ້ອງສິດຄວາມເປັນຜູ້ນຳໂດຍສືບ ເຊື້ອສາຍມາຈາກ ລາຊະຕະກຸນ ຂອງພະເຈົ້າຈັກກະພັດ ໂຍະຣິໂທະໂມະ ໄດ້ມີການຈັດຕັ້ງອີງຄະລັກໃນຕະກຸນ ໂຊກຸນ ເຮັດໃຫ້ທາງພາກຕາເວັນອອກມີຄວາມຈະເລີນທຽບເທົ່າກັບ ກຽວໂຕ ສະຫຼຸບແລ້ວ ໂຍະຣິໂທະໂມະ ມີບົດບາດສຳຄັນທີ່ ໄດ້ສ້າງຄາມເປັນອັນໜຶ່ງອັນດຽວ ໃນເຂດຊິນນະບົດ ເຊິ່ງກ່ອນໜ້ານັ້ນມີການຍາດຊິງອຳນາດກັນ ແລະ ເປັນສັດຕູກັນ ລະຫວ່າງຫົວໜ້າຕະກຸນຍ່ອຍໆ

ໃນປີ ຄສ 1199 ໂຍະຣິໂທະໂມະ ໄດ້ເສຍຊີວິດເຊິ່ງເພິ່ນບໍ່ມີໂອກາດໄດ້ກຽມຕົວໃຫ້ ໂຍະຣິເອະ ລູກຊາຍທີ່ຍັງ ນ້ອຍໃຫ້ສືບທອດແທນ ດັ່ງນັ້ນໂຍະຣິເອະ ຈິ່ງກາຍເປັນຫຸ່ນເຊີດ ຫຼື ຫົວໜ້າຕະກຸນ ມິນະໂມະໂຕະ ແຕ່ໃນນາມບໍ່ມີອຳ ນາດຢ່າງແທ້ຈິງ ໃນຂະນະທີ່ໂຊກຸນຂາດກຳລັງທີ່ເຂັ້ມແຂງ ໄດ້ເປີດໂອກາດໃຫ້ຕະກຸນນັກຮົບໃນເຂດຕ່າງໆທາງພາກ ຕາເວັນອອກຍາດຊິງອຳນາດກັນເຊິ່ງໄຊຊະນະນັ້ນໄດ້ຕົກເປັນຂອງ ຕະກຸນໂຮໂຈທີ່ໄດ້ປຽບກວ່າຕະກຸນອື່ນໆ ແຕ່ຍ້ອນມີ

ຄວາມກ່ຽວດອງກັບຕະກູນ ມີນະໂມະໂຕະ ແລະ ໂຍະຣິໂທະໂມະ ໄດ້ແຕ່ງງານກັບ ມະສະໂກະ ລູກສາວຂອງ ໂຮໂຈ ໂທະຄິມະສະ ເຮັດໃຫ້ໂຍະຊິໂທະຄິ ເຊິ່ງເປັນຜູ້ນຳຂອງຕະກູນໂຮໂຈ ກໍ່ເຂົ້າມາມີອຳນາດເໜືອກວ່າລັດຖະບານໂຊກຸນ ຕະກຸນໂຮໂຈ ແມ່ນໜຶ່ງໃນບັນດາເຊື້ອສາຍຂອງຕະກຸນ ໄທຣະ ທີ່ສະໜັບສະໜູນ ໂຍະຣິໂທະໂມະ ໃນປີ ຄສ 1180 ພວກໂຮໂຈ ພໍໃຈທີ່ຈະໃຊ້ອຳນາດເປັນຜູ້ແທນຂອງ ໂຊກຸນ ຫຼາຍກວ່າ ໂດຍໃຊ້ສະມາຊິກຈາກຕະກຸນ ຟູຈິວາຣະ ແລະ ໃນລາຊະວົງ ເປັນຫຸ່ນເຊີດຮັບຕຳແໜ່ງໂຊກຸນ ແຕ່ພຽງໃນນາມ.

ຕະຫຼອດໄລຍະເວລາທີ່ມີການຍາດຊິງອຳນາດກັນທີ່ ຄະມະກຸຣະ ເຊິ່ງກິນເວລາເກືອບ 20 ປີຄວາມສຳພັນລະຫວ່າງໂຊກຸນ ແລະ ລາຊະສຳນັກໂຕກຽວຢູ່ໃນສະພາບເຄັ່ງຕຶງຫຼັງຈາກທີ່ ໂຍະຣິໂທະໂມະໄດ້ສິ້ນພະຊົນແລ້ວ ການຕິດຕໍ່ລະຫວ່າງລັດທັງ 2 ໄດ້ຫຼຸດບົດບາດລົງ ແລະ ມີການຕໍ່ຕ້ານລັດຖະບານໂຊກຸນໂດຍອາດີດຈັກກະພັດ ໂກະໂທະບະ ທີ່ຢາກໃຫ້ລາຊະສຳນັກເຂົ້າມາມີອຳນາດຄືໃນອາດີດ ໃນປີ ຄສ 1221 ພະເຈົ້າໂຄະໂທະບະ ໄດ້ປະກາດວ່າຜູ້ແທນ ໂຊກຸນ ໂຍະທິໂທະຄິ ເປັນກະບົດໄດ້ຮຽກຮ້ອງໃຫ້ປະຊາຊົນທົ່ວປະເທດລຸກຂຶ້ນຕໍ່ຕ້ານ ໂຍະທິໂທະຄິ ໄດ້ສົ່ງກອງທັບຂະໜາດໃຫ່ຍຈາກ ຄະມະກຸຣະ ໄປປາບປາມຂະບວນຂອງເຈົ້າ ໂຄະໂທະບະ ແລະ ເຂົ້າຍຶດເມືອງກຽວໂຕໄດ້ຢ່າງງ່າຍດາຍ

ໃນການຕໍ່ສູ້ຄັ້ງນີ້ຕໍ່ມາເອີ້ນກັນວ່າ ເຫດການໂຈຄິວ ຫຼື ໂຊຄິວສະແດງໃຫ້ເຫັນອຳນາດທີ່ແທ້ຈິງ ແລະ ຄວາມຈິງຮັກພັກດີຂອງບັນດານັກຮົບ ໃນສະໄໝຄາມະກູຣະຕອນຕົ້ນ ເຖິງວ່າ ໂຍະຣິໂທຄິ ຈະໄດ້ກະທາການລົບລູ່ອາດີດຈັກກະພັດຢ່າງເປີດເຜີຍ, ແຕ່ກໍ່ຍັງໄດ້ຮັບການສະໜັບສະໜູນຈາກສະມາຊິກຂອງໂຊກຸນ ໃນຂະນະທີ່ພະເຈົ້າ ໂຄະໂທະບະ ວ່າເປັນຜູ້ທຳລາຍຄວາມສະຫງົບສຸກຂອງ ອານາຈັກຢ່າງເຫັນແກ່ຕົວ ແລະ ໄຮ້ມະນຸດສະທຳຈຶ່ງເນລະເທດພະເຈົ້າ ໂຄະໂທະບະ ກັບໂອລົດທັງສອງຄົນ ເຊິ່ງເປັນອາດີດຈັກກະພັດຄືກັນ.

ຈາກຄວາມສຳເລັດໃນເຫດການໂຈຄິວເຮັດໃຫ້ຕະກູນ ໂຮໂຈສາມາດຂະຫຍາຍອຳນາດການປົກຄອງແບບທະຫານອອກໄປຢ່າງກວ້າງຂວາງກວ່າເກົ່າທັງດ້ານການເມືອງ ແລະ ເສດຖະກິດຕັ້ງແຕ່ນັ້ນມາ ເມື່ອລາຊະສຳນັກເຮັດສິ່ງໃດກໍ່ຕາມຕ້ອງໄດ້ຮັບການຍິນຍອມຈາກລັດຖະບານໂຊກຸນແຕ່ບັນດາລາຊະສຳນັກຍັງມີກຳມະສິດໃນທີ່ດິນ ດັ່ງນັ້ນ ເຖິງວ່າລາຊະສຳນັກຈະເສຍອຳນາດການເມືອງໄປກໍ່ຕາມແຕ່ກໍ່ບໍ່ຖືກຕັດຖານະທາງດ້ານເສດຖະກິດ.

ເມື່ອ ໂຮໂຈ ຍະຣິໂທະຄິ ເສຍຊີດໃນປີ ຄສ 1224 ລູກຊາຍຂອງ ຍະສຸໂທະຄິ ໄດ້ອານາດໃນນາມຂອງ ໂຊກຸນ ຍະສຸໂທະຄິ ເຄີຍເປັນຜູ້ບັນຊາການ ທະຫານຂອງລັດຖະບານໂຊກຸນ ໃນລະຫວ່າງເຫດການ ໂຈຄິວ ແລະ ພາຍຫຼັງກໍ່ໄດ້ຢູ່ທີ່ກຽວໂຕໃນຕຳແໜ່ງຜູ້ແທນຖາວອນຂອງລັດຖະບານໂຊກຸນ ທີ່ໄດ້ຮັບການແຕ່ງຕັ້ງຂຶ້ນເປັນຊຸດທຳອິດ ໂຍະສຸໂທະຄິ ເປັນຜູ້ທີ່ມີຄວາມສາມາດຄົນໜຶ່ງ ເຖິງວ່າຈະທຽບກັບບັນດາຜູ້ທີ່ມີຕຳແໜ່ງຜູ້ແທນໂຊກຸນຂອງຕະກຸນ ໂຮໂຈ ເຊິ່ງໄດ້ຊື່ວ່າເປັນກຸ່ມນັກປົກຄອງຂອງຕະກຸນໂຮໂຈ ທີ່ສາມາດເຮັດໃຫ້ຍີ່ປຸ່ນໃນຍຸກກາງມີຄວາມໝັ້ນຄົງ.

ໃນຊວ່ງສະໄໝການປົກຄອງຂອງ ຍະສຸໂທະຄິ ຈາກປີ ຄສ 1224-1242 ໄດ້ມີເຫດການທີ່ສຳຄັນ 2 ເຫດການຄື ການຕັ້ງລັດຖະສະພາ ( ຄສ 1225) ແລະ ການປະກາດໃຊ້ກດໝາຍທະຫານສະບັບທາອິດທີ່ເອີ້ນວ່າ : ກົດໝາຍໂຈເອ Joei Code ໃນປີ ຄສ 1232 ໃນຊ່ວງການປົກຄອງຂອງຕະກຸນ ໂຮໂຈ ພາຍໃຕ້ການປົກຄອງຂອງ ຍະສຸໂທະຄິ ແມ່ນການປົກຄອງແບບກະຈາຍອຳນາດ.

> ການພັງທະລາຍຂອງອຳນາດການປົກຄອງຂອງພວກຈັກກະພັດ ສືບເນື່ອງມາຈາກບັນຫາ ແລະ ອຸປະສັກ ທີ່ເຮັດໃຫ້ການຮວມອຳນາດເຂົ້າສູ່ສູນກາງແບບຈີນບໍ່ບັນລຸຕາມຄວາມຄາດຫວັງ ເຊິ່ງປະກອບມີຫຼາຍສາເຫດຄື: ການມີອຳນາດຢ່າງສູງຂອງຂຸນນາງຕະກຸນ ຟູຈິວາຣະ, ເກີດຈາກສະຖາບັນຈັກກະພັດສະລະລາຊະບັນລັງ, ເກີດຈາກການຮວມທີ່ດິນຂະໜາດໃຫຍ່ Shoen , ການເພີ້ມອານາດທ້ອງຖິ່ນທີ່ເປັນທະຫານສິ່ງທີ່ກ່າວມານີ້ໄດ້ເຮັດໃຫ້ອຳນາດຂອງຈັກກະພັດຄ່ອຍສິ້ນສຸດລົງໄປໃນທີ່ສຸດ.

### 1.2 ດ້ານວັດທະນະທຳ

ວັດທະນະທຳຂອງຊົນຊັ້ນນັກຮົບ ໄດ້ກໍ່ກຳເນີດຂຶ້ນໂດຍມີວັດທະນະທຳຂອງຊົນຊັ້ນປົກຄອງ ເປັນຮາກຖານແຕ່ຍັງຄົງເອກະລັກຂອງຊົນຊັ້ນນັກຮົບໄວ້ໄດ້ແກ່ຄວາມມີພົນລະວັດ ແລະ ການສະທ້ອນຄວາມເປັນຈິງຢ່າງລຽບງ່າຍໃນດ້ານສາສະໜາພຸດສາສະໜາແບບຄະມະຄຸຣະກໍ່ໄດ້ກຳເນີດຂຶ້ນໂດຍພະເຖຣະຜູ້ມີຊື່ສຽງຢ່າງໂຮເນັນ ຊິນຣັນ ແລະ ນິສິເຣນເປັນຕົ້ນນັກຮົບຝັ່ງທີ່ຮາບ ຄັນໂຕຈະນັບຖືສາສະໜາເຊນ ອັນໄດ້ຮັບການຖ່າຍທອດຈາກຈີນແຜ່ນດິນຊ່ວງໃນສະຕະວັດທີ 12 ເປັນຫຼັກຮູບແບບສິລະປະໃໝ່ໆກໍ່ເກີດຂຶ້ນໃນຍຸກນີ້ເຊັ່ນ:ປະຕິມະກຳສະໄໝ ຄະມະຄູຣະ ຕອນຕົ້ນນັ້ນຈະມີລາຍເສັ້ນທີ່ໜັກແໜ້ນມີພະລັງເໝືອນຂອງຈິງ ແລະ ສະແດງອອກເຖິງຄວາມເປັນມະນຸດ ວັນນະສິນສ່ວນໃຫຍ່ຈະເປັນສິ່ງທີ່ຊົນຊັ້ນນັກຮົບນິຍົມເຊັ່ນ: "ເຮເຄະໂມໂນງາຕາຣິ" ເຊິ່ງແຕ່ງຂຶ້ນເມື່ອຕົ້ນສະຕະວັດທີ 13 ເປັນຜົນງານທີ່ດີທີ່ສຸດໃນຈຳນວນນິຍາຍກ່ຽວກັບການສູ້ຮົບ ແລະ ກໍ່ຍັງມີໜັງສືຮວບຮວມບົດລຽງຄວາມເລື່ອງ ໂຮໂຈກິ ເຊິ່ງແຕ່ງໃນສະຕະວັດທີ 13 ແລະ ສີເຣຊູເຣງູຊະ ເຊິ່ງແຕ່ງໃນສະຕະວັດທີ 14

## 2. ຍຸກມຸໂຣະມະຊິ ( Murom chi period)

ຖັດຈາກຍຸກ ຄະມະກຸຣະກໍເຂົ້າສູ່ຍຸກການຟື້ນຟູອຳນາດການປົກຄອງໂດຍຈັກກະພັດໃນຊ່ວງສັ້ນໆຕັ້ງແຕ່ ຄສ 1876 ຈົນເຖິງ ຄສ 1335 ແລ້ວຕໍ່ມາສູ່ ຍຸກມຸໂຣະມະສິ ຕະກູນອະຊິຄະງະ ໄດ້ຂຶ້ນເປັນຕະກູນໂຊກຸນ ໂດຍມີໂຊກຸນຄົນທຳອິດຄື: ອະຊິຄະງະ ທະກະອຸຈິ ມີ ບະກຸຣຸ ຫຼື ຄ່າຍທະຫານຢູ່ທີ່ ມຸໂຣະມະຈິ ໃນກຸງກຽວໂຕຍຸກນີ້ມີການພັດທະນາລະບົບຊົນລະປະທານ ການເພາະປູກ ແລະ ເກີດການເຕີບໂຕຂອງກິດຈະການຄ້າຂາຍ ແລະ ບໍລິການໃນຍຸກນີ້ລະບຽບວິໄນທີ່ເຄັ່ງຄັດຂອງລັດທິ ບຸຊິໂດ ສະແດງໃຫ້ປະກົດທັງໃນດ້ານຄວາມງາມທາງສິລະປະ ແລະ ສາສະໜາ ແລະ ມີອິດທິພົນລຶກລ້ຳຕໍ່ສິລະປະຂອງປະເທດ ລັກສະນະເດັ່ນເຊິ່ງຄົງຢູ່ຮອດປັດຈຸບັນນີ້ຄືລັກສະນະຂອງຄວາມອົດກັ້ນ ແລະ ຄວາມລຽບງ່າຍຍຸກນີ້ຍັງມີຍຸກທຳອິດທີ່ຊາຕາເວັນຕົກກຸ່ມທຳອິດ ຊາວໂປຕຸເກດໄດ້ເຂົ້າມາສູ່ຍີ່ປຸ່ນໃນປີ ແຕ່ໃນປີ ພສ 1984 (ຄສ 1441) ເກີດການລອບສັງຫານໂຊກຸນຂຶ້ນ ເຮັດໃຫ້ການປົກຄອງລະບອບໂຊກຸນເສື່ອມຖອຍລົງ ແລະ ເກີດເປັນສົງຄາມກາງເມືອງຂຶ້ນໃນປີ ພສ 2019 (ຄສ 1476) ສົງຄາມດຳເນີນມາຢ່າງຍາວນານກວ່າ 100 ປີ ຈົນຍີ່ປຸ່ນເຂົ້າສູ່ຍຸກຍ່ອຍໆເອີ້ນວ່າ ຍຸກເຊັງໂງະກຸ ທີ່ມີຄວາມໝາຍວ່າຍຸກສົງຄາມກາງເມືອງໃນປີ ຄສ 1588 ໂນະບຸນະງະ ໂອະດະ ເຊິ່ງຢູ່ໃນສະຖານະເຈົ້າເມືອງໄດ້ເປັນໃຫ່ຍໃນບໍລິເວນຕອນກາງຂອງ ເກາະຮອນຊູ ແລະ ຕ້ອງການຮວບຮວມປະເທດໃຫ້ເປັນປຶກແຜ່ນ ໃນປີດຽວກັນນັ້ນເຂົາຈຶ່ງເລີ້ມກຳຈັດອິດທິພົນອຳນາດຂອງ ມຸໂຣະມະຈິ ແລະ ສ້າງອະລິຍະທຳ ອະຊຸຈິໂມໂມະຍະມະຂຶ້ນມາແທນ ໃນຂະນະດຽວກັນກໍ່ສ້າງຄວາມໝັ້ນຄົງແກ່ຕົນດອ້ຍ ໃນປີ ຄສ 1538 ອາລິຍະທຳມຸໂຣະມະຈິຫາຍໄປ ອາລິຍະທຳ ອະຊຸຈິໂມໂມະຍະມະຂຶ້ນມາແທນທີ່ ດັ່ງນັ້ນ, ຊວ່ງ ຄສ 1588-1583 ຈຶ່ງເປັນຊ່ວງປ່ຽນແປງອາລິຍະທຳໃນປະຕິທິນເຫດການຍີ່ປຸ່ນ ພສ 2086 (ຄສ 1543).

ໄດ້ປາບປາມຊົນຊັ້ນປົກຄອງລົງຢ່າງຮາບຄາບ ແລະ ຕັ້ງລັດຖະບານໂຊກຸນຂຶ້ນອີກຄັ້ງທີ່ຄຽວໂຕະ ເຊິ່ງລັດຖະບານໂຊກຸນນີ້ໄດ້ປົກຄອງຍີ່ປຸ່ນຕໍ່ມາເປັນເວລານານ ເຖິງສອງສະຕະວັດອັນເປັນຊ່ວງເວລາທີ່ວັດທະນະທຳຂອງຊົນຊັ້ນນັກຮົບກໍ່ໄດ້ກືນວັດທະນະທຳຂອງຊົນຊັ້ນປົກຄອງລົງຢ່າງຮາບຄາບ ເຊັ່ນດຽວກັນເຖິງຢ່າງໃດກໍ່ຕາມລັດຖະບານໂຊກຸນຂອງຕະກຸນ ອະຊິຄະງະ ເກີດຈາກການລວມຕົວຂອງຂຸນສຶກສຳຄັນໆຕາມຫົວເມືອງຕ່າງໆເຂົ້າດ້ວຍກັນຈຶ່ງເປັນທຳມະດາທີ່ການຮວບອຳນາດໃຫ້ລັດຖະບານມີສະຖຽນລະພາບນັ້ນເປັນໄປໄດ້ຢ່າງລຳບາກ ດັ່ງນັ້ນໃນເຄິ່ງຫຼັງສະຕະວັດທີ 15 ເປັນຕົ້ນມາຂຸນສຶກຕາມຫົວເມືອງຕ່າງໆຈຶ່ງເລີ້ມເຮັດສົງຄາມແຍ່ງຊີງອຳນາດກັນຈົນທັງປະເທດຍີ່ປຸ່ນຕົກເຂົ້າສູ່ຍຸກສົງຄາມ ພາຍໃນຍຸກນີ້ເປັນຍຸກທີ່ຊົນຊັ້ນນັກຮົບມີອຳນາດເໜືອກະເສດຕະກອນ ແລະ ມີກຳມະສິດເໜືອທີ່ດິນຈຶ່ງເປັນ

ການປົກຄອງລະບົບສັກດີນາໂດຍສົມບູນ ດ້ານເສດຖະກິດກໍ່ຈະເລີນຮຸ່ງເຮືອງຫຼາຍເນື່ອງຈາກເຮັດການຄ້າກັບຈີນສະໄໝໜຶ່ງ

**ການກຳເນີດພວກໄດມຽກ ( ເຈົ້ານາຍສັກດີນາ) ສະໄໝ ມຸໂຣະມະຊິ ແລະ ສະໄໝສົງຄາມລະຫວ່າງລັດ ( ຄສ 1333-1573)**

ເມື່ອລັດຖະບານ ຄະມະກຸຣະ ອ່ອນເພຍລົງຫຼາຍກໍ່ເປັນໂອກາດດີໃຫ້ຈັກກະພັດ ໂກະໄດໂງະ ຍ້ອນຄວາມຊ່ວຍເຫຼືອຈາກແມ່ທັບ ອະຊິກະງະ ທາເກົາຈິ (ເຊື້ອສາຍຂອງມີນະໂມະໂຕະ)ທີ່ເປັນສັດຕູກັບໂຮໂຈ ເຊິ່ງສາມາດໂຄ່ນລົ້ມອຳນາດໂຊກຸນ ຄະມະກຸຣະ ລົງໄດ້ໃນປີ ຄສ 1333 ແຕ່ກໍ່ເປັນພຽງໄລຍະສັ້ນໆເທົ່ານັ້ນ ທີ່ຈັກກະພັດ ແລະ ລາຊະສານັກດຶງອຳນາດການປົກຄອງມາໄວ້ໄດ້ ເພາະວ່າລາຊະສຳນັກບໍ່ໄດ້ໃຫ້ຜົນປະໂຫຍດ ແລະ ເອົາໃຈໃສ່ ສະມຸໄຣເຊິ່ງເປັນເຫດໃຫ້ ອະຊິກະງະ ທາເກົາຈິ ໄດ້ສະໜັບສະໜູນ ສະມູໄຣ ເຂົ້າແຍ່ງຊີງອຳນາດຈາກພະເຈົ້າ ໂກະໄດໂງະ, ພະເຈົ້າໂກະໄດໂງະ ໄດ້ໜີໄປຕັ້ງລັດຖະບານຢູ່ທາງໃຕ້ຂອງກຽວໂຕ ສ່ວນທະເກົາຈິ ກໍ່ໄດ້ສ້າງຕັ້ງຈັກກະພັດໃໝ່ຂຶ້ນທີ່ກຽວໂຕ ດັ່ງນັ້ນໃນຊ່ວງປີ 60 ເຮັດໃຫ້ຍີ່ປຸ່ນມີລັດຖະບານ 2 ລັດຖະບານ ແລະ 2 ຈັກກະພັດຄື: ຈັກກະພັດທາງເໜືອກຽວໂຕ ແລະ ຈັກກະພັດທາງໃຕ້ ໂຍຊິໂນະ

ຜົນຈາກເຫດການດັ່ງກ່າວ ເຮັດໃຫ້ຈັກກະພັດ ແລະ ລາຊະສຳນັກ ຕ້ອງສູນເສຍອຳນາດທາງການເມືອງໃຫ້ແກ່ໂຊກຸນ ອະຊິກະງະ ແລະ ລັດຖະບານ ມຸໂຣະມະຊິ ໃນກຽວໂຕຂອງໂຊກຸນ ອະຊິກະງະ ກໍ່ດຳເນີນບົດບາດເປັນລັດຖະບານກາງຂອງຍີ່ປຸ່ນ, ແຕ່ລັດຖະບານ ມຸໂຣະມາຊິ ໃນຊ່ວງນີ້ບໍ່ສາມາດມີອຳນາດເໜືອກວ່າບັນດານັກຮົບ ແຕ່ມີອຳນາດໃນຂົງເຂດຂອງຕົນເອງເທົ່ານັ້ນ ດ້ວຍເຫດນີ້ ສັງຄົມນັກຮົບຂອງຍີ່ປຸ່ນຈຶ່ງມີວິວັດທະນາການມາເປັນອີກຮູບແບບໜຶ່ງ ນັ້ນແມ່ນບັນດາເຈົ້າຂອງທີ່ດິນເຂດທ້ອງຖິ່ນທີ່ເປັນພວກຂຸນນາງທ້ອງຖິ່ນເກົ່າ ຫຼື ຫົວໜ້ານັກຮົບຕ່າງກໍ່ສ້າງອານາດການປົກຄອງໃນແຕ່ລະເຂດທີ່ດິນຂອງຕົນຢ່າງສົມບູນຂຶ້ນ. ລະບອບການປົກຄອງຂອງຍີ່ປຸ່ນໃນຊ່ວງນີ້ ຈຶ່ງຢູ່ໃນຮູບແບບການປົກຄອງແບບກະຈາຍອຳນາດ, ເຈົ້ານາຍທ້ອງຖິ່ນຕ່າງກໍ່ຕັ້ງອານາຈັກໃຜລາວ ແລະ ກໍ່ໄດ້ຮັບຕຳແໜ່ງໄດມຽກ ບັນດາໄດມຽກເຫຼົ່ານີ້ມັກຈະສູ້ຮົບຍາດຊີງອຳນາດກັນ ມາຮອດປີ ຄສ 1467 ຈຶ່ງເກີດສົງຄາມ ໂອນິນ Onin War ຂຶ້ນໃນກຽວໂຕ ແລະ ແຜ່ລາມໄປທົ່ວປະເທດຍີ່ປຸ່ນ ດັ່ງນັ້ນ ຍີ່ປຸ່ນໃນສະໄໝນີ້ຈຶ່ງມີຊື່ວ່າ ຍຸກຂອງສົງຄາມລະຫວ່າງລັດຕ່າງໆ Age Warring State ເຊິ່ງລວມໄລຍະເວລາໄດ້ 100 ກວ່າປີ.

ປະຫວັດສາດຍີ່ປຸ່ນໃນຊ່ວງນີ້ ແມ່ນລັດຖະບານກາງອ່ອນເພຍ ສວ່ນລັດຖະບານ ຫຼື ອານາຈັກທ້ອງຖິ່ນມີຄວາມເຂັ້ມແຂງຂຶ້ນ ແລະ ແຂ່ງຂັນກັບເມືອງຫຼວງໃນການສະໜັບສະໜູນບັນດາສິລະປິນສາຂາຕ່າງໆ ຍີ່ປຸ່ນໃນສະໄໝ ມຸໂຣະມະຊິ ຈຶ່ງເປັນຍຸກທອງຂອງວັດທະນະທຳທີ່ຍີ່ປຸ່ນມີຊື່ສຽງໂດ່ງດັງທົ່ວໂລກເຊັ່ນ: ລະຄອນໂນ, ລະຄອນຄຽວເງິນ, ຄາປະພັນ, ສິລະປະການຊົງຊາ, ການຈັດດອກໄມ້ ແລະ ການຈັດສວນຂອງຍີ່ປຸ່ນທີ່ສວຍງາມ ເປັນຕົວຢ່າງຂອງວັດທະນະທຳຍີ່ປຸ່ນມາຈົນເຖິງປັດຈຸບັນນີ້.

ໃນປີ ຄສ 1543 ເຮືອຂອງ ໂປຕຸເກດ ໄດ້ເຂົ້າມາໃນເມືອງ ທະເນງະຊິມະ (ທາງໃຕ້ຂອງເກາະຄິວຊູ) ເຮັດໃຫ້ຍີ່ປຸ່ນໄດ້ມີໂອກາດເຫັນອາວຸດຊະນິດໃໝ່ຂອງຍີ່ປຸ່ນຄື: ປືນໄຟຂອງໂປຕຸເກດ ເຊິ່ງໄດ້ຮັບຄວາມສົນໃຈ ແລະ ແຜ່ຫຼາຍໃນອານາຈັກໄດມຽກຂອງຍີ່ປຸ່ນ. ນອກຈາກນີ້ໃນປີ ຄສ 1449 ຟຣານະຄຣິດຊິດຊາເວຍ ພໍ່ຂອງ ເຢຊູອູ ຊາວສະເປນກໍ່ເຂົ້າມາເກາະ ຄິວຊູ ແລ້ວເຜີຍແຜ່ສາສະໜາຄຣິດ ໂດຍສະເພາະທາງດ້ານຕາເວັນຕົກຂອງຍີ່ປຸ່ນ ມີດັນເນຣີ ປະທັບໃຈໃນສັງຄົມຂອງຍີ່ປຸ່ນ ເຊິ່ງເປັນຄົນທີ່ປຽບທຽບເມືອງ ຊາໄກ ຂອງຍີ່ປຸ່ນກັບເມືອງ ເນນິດ ຂອງອິຕາລີ.

ເຖິງວ່າຈະມີກຳລັງທີ່ເຂັ້ມແຂງ ແລະ ລະບົບການປົກຄອງທີ່ມີອຳນາດເດັດຂາດພຽງໃດຕະກຸນ ໂຕະກຸງະວະ ກໍ່ເຫັນວ່າງົບປະມານເປັນປັດໃຈທີ່ສຳຄັນ ແລະ ເປັນຖານອຳນາດສຳຄັນທາງດ້ານເສດຖະກິດ. ຕະກຸນ ໂຕະກຸງະວະ ໄດ້

ຄວບຄຸມຜູກຂາດ ຫຼື ເປັນເຈົ້າຂອງທຸກແຫ່ງທີ່ມາຂອງລາຍໄດ້ ຂອງແຜ່ນດິນ ເຊິ່ງມີ ທີ່ດິນ, ຊັບພະຍາກອນທາມະຊາດ, ຜົນຜະລິດ ແລະ ແຮ່ທາດ ຕະກຸນ ໂຕະກຸງະວະ ເປັນເຈົ້າຂອງທີ່ດິນກວ່າເຄິ່ງໜຶ່ງຂອງຍີ່ປຸ່ນ ທີ່ມີອັດຕາຜົນຜະລິດເຂົ້າໄດ້ປະມານ 17 ລ້ານໂກກູ ຕະກຸນນີ້ໄດ້ຄວບຄຸມພື້ນທີ່ການປູກຝັງ ແລະ ພື້ນທີ່ທຸກແຫ່ງທີ່ເປັນຈຸດຍຸດທະສາດທີ່ສາຄັນຄື: ພາກກາງນະຄອນຫຼວງ ເອໂດະ ຂອງຕະກຸນກຽວໂຕ ແມ່ນບ່ອນຢູ່ຂອງຈັກກະພັດ ແລະ ບັນດາເມືອງສາຄັນທີ່ວປະເທດ ຕະກຸນ ໂຕະກຸງະວະ ເຊື່ອວ່າທີ່ດິນແມ່ນພື້ນທີ່ອໍານາດ ແລະ ກໍາລັງ **Force** ນອກນັ້ນຍັງໄດ້ຄວບຄຸມການຄ້າພາຍໃນປະເທດ ແລະ ຄວບຄຸມພໍ່ຄ້າໂດຍສະເພາະການຄບຄຸມການຄ້າລະຫວ່າງປະເທດ ແລະ ການເດີນເຮືອອີກດ້ວຍ. ຄວາມຄິດຄວາມເຊື່ອໃນຊ່ວງສະຕະວັດ **XII-XIX**.

ຄວາມຄິດຄວາມເຊື່ອດັ້ງເດີມຂອງຄົນຍີ່ປຸ່ນຄື ສາສະໜາຊິນໂຕ ແລະ ສາສະໜາທີ່ຮັບມາຈາກຈີນໄດ້ແກ່: ສາສະໜາມະຫາຍານ, ຂົງຈື້ ແລະ ເຕົ໋າ ເຊິ່ງໄດ້ປະສົມປະສານກັນ ສາສະໜາຍີ່ປຸ່ນນັ້ນມີອິດທິພົນຕໍ່ຄົນທຸກລະດັບຊັ້ນ ແຕ່ຄວາມສະແດງອອກໃນຄວາມເຊື່ອນັ້ນ ອາດຈະປະກົດອອກໃນຫຼາຍລັກສະນະ ຂຶ້ນກັບພວກປະພຶດປະຕິບັດເຊັ່ນ: ຄວາມເຊື່ອ ແລະ ການສະແດງອອກໃນຄວາມເຊື່ອ ໃນກຸ່ມສາມັນຊົນກໍ່ຈະມີການສະແດງອອກໃນຮູບຂອງສາສະໜາພື້ນບ້ານ **Folk Religion** ເປັນຕົ້ນຊາວຍີ່ປຸ່ນໃນຊວ່ງສະຕະວັດທີ **XII-XIX** ຍັງສືບທອດຄວາມເຊື່ອໃນສາສະໜາຍີ່ປຸ່ນມາຈາກບັນພະບູລຸດ.

ເຖິງຢ່າງໃດກໍ່ຕາມການປ່ຽນແປງທາງດ້ານການເມືອງ ການປົກຄອງໃນສະໄໝດັ່ງກ່າວ ມີອິດທິພົນຕໍ່ການພັດທະນາ ຮູບແບບຄວາມຄິດ ຄວາມເຊື່ອ ຈາກແບບຄວາມຄິດ ຄວາມເຊື່ອພື້ນຖານທີ່ມີຢູ່ໃນສັງຄົມ ໃຫ້ມີລັກສະນະໃໝ່ຂຶ້ນມາຄວາມຄິດ ຄວາມເຊື່ອໃນຮູບແບບໃໝ່ນີ້ເປັນສິ່ງຍຶດໝັ້ນ ເປັນຂວັນ ແລະ ກໍາລັງໃຈ ຂອງຄົນຍີ່ປຸ່ນ ເຊິ່ງຕ້ອງຕໍ່ສູ້ ຊີວິດໃນການປ່ຽນແປງ ທາງດ້ານການເມືອງ ແລະ ສົງຄາມ

ການປ່ຽນແປງທາງດ້ານການເມືອງການປົກຄອງເຮັດໃຫ້ຂຸນນາງ ແລະ ພະລາຊະວັງໃນລາຊະສານັກຕ້ອງໝົດບົດບາດ ນັກຮົບ ຫຼື ສະມູໄຣ ໄດ້ກ້າວເຂົ້າມາມີບົດບາດໃນສັງຄົມແທນໃນຖານະເປັນຜູ້ປົກຄອງ ພາຍໃຕ້ການປົກຄອງຂອງລະບົບພິວດັນຂອງທະຫານ ເສດຖະກິດໄດ້ປ່ຽນແປງຈາກການຜະລິດແບບເພິ່ງຕົນເອງມາເປັນການຄ້າ. ສະນັ້ນການຄ້າຈິ່ງເປັນສິ່ງສໍາຄັນທາງເສດຖະກິດໃນສະຕະວັດທີ **XIV-XIX**

### 2.1 ດ້ານວັດທະນະທໍາ

ລັດທິເຊນເປັນສ່ວນເພີ່ມເຕີມໃຫ້ກັບວັດທະນະທໍາຂອງຊົນຊັ້ນປົກຄອງ ແລະ ຊົນຊັ້ນນັກຮົບເຊິ່ງເຫັນຮູບແບບໄດ້ຈາກຕໍາໜັກທອງ Kinkaku ໃນປາຍສະຕະວັດທີ 14 ອັນເປັນຕົວແທນຂອງວັດທະນະທໍາຄິຕະຍະມະ Kitayama ແລະ ຕໍາໜັກເງິນ Ginkaku ໃນປາຍສະຕະວັດທີ 15 ອັນເປັນຕົວແທນຂອງວັດທະນະທໍາ ຮິງະຊິຍະມະ Higashiyama ການລະຄອນ ເຊັ່ນ: ໂນຄຽວເງັນ ແລະ ການຕໍ່ເພງກໍ່ເລີ້ມແຜ່ຫຼາຍສູ່ປະຊາຊົນພາຍນອກ ສີລະປະວັດທະນະທໍາດັ້ງເດີມຂອງຍີ່ປຸ່ນເຊັ່ນ ພິທີຊົງຊາ, ການຈັດດອກໄມ້ ກໍ່ເລີ້ມມີຮາກຖານມາຈາກຍຸກນີ້ ແລະ ໃນຊວ່ງກາງສະຕະວັດທີ 16 ພວກຝຣັ່ງ ເຊັ່ນ ປັອກຕຸຍການ ແລະ ສະເປນກໍ່ໄດ້ນໍາອາວຸດປືນຍາວ ແລະ ສາສະໜາຄິດເຂົ້າມາເຜີຍແຜ່ຢູ່ຍີ່ປຸ່ນ

## 3 ຍຸກເຊັງໂກກຸ ( sengoku period )

### 3.1 ດ້ານວັດທະນະທໍາ

ຍຸກເຊັງໂກກຸ ຍຸກນີ້ແມ່ນເກີດມີຄວາມບໍ່ສະຫງົບພາຍໃນຍີ່ປຸ່ນເອງ ຫຼື ຍຸກແຫ່ງໄພສົງຄາມ ອັນເຮັດໃຫ້ອານາດການປົກຄອງຂອງ ໂຊກຸນຕະກຸນອະຊິຄະງະ ໃນຍຸກມຸໂຣະມະຈິເສື່ອມລົງເຮັດໃຫ້ບັນດາ ໄດເມຽວຜູ້ປົກຄອງແຄ້ວນຕ່າງໆໃນຍີ່ປຸ່ນພາກັນແຍກຕົວອອກເປັນອິດສະຫຼະພາບພໍໃຜພໍລາວ ໂດຍສະເພາະບັນດາແຄ້ວນທີ່ຢູ່ຫ່າງຕົວເມືອງໂຕກຽວ ແລະ ເກີດມີສົງຄາມທາງດ້ານການເມືອງເກີດຂຶ້ນຢ່າງກວ້າງຂວາງ ຈົນເຮັດໃຫ້ລັດຖະບານໂຊກຸນທີ່ກຽວໂຕບໍ່ສາມາດແກ້ໄຂບັນຫາໄດ້ ເພາະວ່າລັດຖະບານເປັນພຽງຫຸ່ນເຊີດຂອງ ໄດເມຽວ ຜູ້ທີ່ມີອຳນາດເທົ່ານັ້ນ. ອີກຢ່າງໜຶ່ງໃນສະໄໝແຫ່ງວິລະບູລຸດທີ່ມີທັງສາມທີ່ສາມາດເຕົ້າໂຮມະເທດຍີ່ປຸ່ນໃຫ້ເຂົ້າມາເປັນອັນໜຶ່ງອັນດຽວກັນ ອັນເຮັດໃຫ້ການເປັນໄລຍະສຸດທ້າຍຂອງຍຸກ ເຊັງໂກກຸ ເຊິ່ງໄດ້ແກ່: ອະໂດະ ໂນບຸນະງະ, ໂທະໂຍະໂຕະມິ ຮິເດະໂຍະຊິ ແລະ ໂທະກຸງະວະ ອິເອະຍະຊິ ແລະ ໄດເຍ້າຍເມືອງຫຼວງໄປທີ່ເມືອງ ເອະໂດະ

ຍຸກເຊັງໂງກຸເປັນຊ່ວງເວລາຂອງຄວາມບໍ່ສະຫງົບໃນຍີ່ປຸ່ນ ອັນເກີດຈາກອຳນາດການປົກຄອງຂອງໂຊກຸນ ຕະກຸນອາຊິກາງະໃນຍຸກມູໂຣມາຈິເສື່ອມລົງ ເຮັດໃຫ້ບັນດາໄດມຽວຜູ້ປົກຄອງແຄວ້ນຕ່າງໆໃນຍີ່ປຸ່ນຕ່າງຕັ້ງຕົນເປັນອິສະຫຼະໂດຍສະເພາະໄດມຽວທີ່ຢູ່ຫ່າງຈາກເມືອງຫຼວງກຽວໂຕຫຼາຍ ແລະ ເຮັດສົງຄາມກັນເອງ ເຮັດໃຫ້ຍີ່ປຸ່ນລຸກເປັນໄຟ ບ້ານເມືອງບໍ່ມີຂື່ມີແປ ໂຊກຸນທີ່ກຽວໂຕບໍ່ສາມາດເຮັດຫຍັງໄດ້ ເພາະເປັນພຽງຫຸ່ນເຊີດ ຂອງໄດມຽວທີ່ມີອຳນາດ ສະໄໝເຊັງໂກກຸ ເປັນສະໄໝແຫ່ງວິລະບູລຸດ ໂດຍສະເພາະວິລະບູລຸດທັງສາມທີ່ລວມປະເທດຍີ່ປຸ່ນໃຫ້ກັບເປັນໜຶ່ງດຽວອີກຄັ້ງເປັນການສິ້ນສຸດສະໄໝເຊັງໂກກຸໄດ້ແກ່ ໂອດະ, ໂນບູນາງະ, ໂທໂຍໂຕມິ ອິເດໂຍຊິ ແລະ ໂທກູງາວະ ອິເອຍາຊຸ ອັກສອນຄັນຈິຂອງຄຳວ່າຍຸກເຊັງໂງກຸຖືກກັບຄຳວ່າ ຍຸກຈ້ານກວໍ ໃນພາສາຈີນ ໝາຍເຖິງ ຍຸກຄະນະລັດ ເຊິ່ງເກີດຂຶ້ນຢູ່ໃນຊວ່ງລະຫວ່າງ 477-222 ປີ ກ່ອນ ຄສ ຍຸກເຊັງໂງກຸຂອງຍີ່ປຸ່ນ ນັບເປັນສ່ວນໜຶ່ງຂອງຍຸກຄູໂຣມາຈິ ໃນຍຸກນີ້ເອງກໍ່ມີຍຸກສະໄໝຍ່ອຍແຝງຢູ່ຄື ສະໄໝ ອາຊູຈິ ແລະ ສະໄໝ ໂມໂມຍາມະ ເອີ້ນລວມກັນວ່າ ຍຸກອາຊູຈິ-ໂມໂມຍາມະ

ສົງຄາມໂອນິນ: ຕຳແໜ່ງເຄນເຣ ຄືຜູ້ແທນໂຊກຸນເປັນຕຳແໜ່ງທີ່ມີອຳນາດຫຼາຍ ໂອໂຊກາວະ ຄັດສືໂມໂຕະ ເປັນເຄນເຣໃນສະໄໝຂອງໂຊກຸນ ອາຊິກາງະ ໂຍຊິອາຊະ ເປັນໂຊກຸນແທນ ສົງຄາມໂອນິງຈິ່ງເລີ່ມຕົ້ນໃນປີ ຄສ 1467 ໂຊກຸນປະກາດວ່າຖ້າຝ່າຍໃດເລີ້ມກ່ອນຈະເປັນກະບົດ ເຖິງຝ່າຍ ໂອໂຊກາວະຈະເລີ້ມກ່ອນ ແຕ່ກໍ່ເກ້ຍກ່ອມໃຫ້ໂຊກຸນເຊື່ອວ່າຝ່າຍ ຍາມານະເລີ້ມກ່ອນ ໂຊກຸນຈິ່ງປະກາດໃຫ້ ຍາມານະ ເປັນກະບົດ ທັງສອງຝ່າຍຕ່າງຫວັງຈະສ້າງຄວາມເສຍຫາຍໃຫ້ອີກຝ່າຍ ໂດຍການເຜົາບ້ານເຮືອນ ການຕໍ່ສູ້ເຮັດໃຫ້ເມືອງກຽວໂຕພິນາດຍ່ອຍຍັບ ຊາວບ້ານຫອບເຄື່ອງຂອງໜີອອກນອກເມືອງ ສົງຄາມລຸກລາມໄປທົ່ວຍີ່ປຸ່ນ ບັນດາໄດມຽວແຕກເປັນສອງຝ່າຍ ເຖິງປະເທດຈະຕົກຢູ່ໃນກຣີຍຸກ ແຕ່ໂຊກຸນຍັງຄົງອາໄສຢູ່ໃນປະສາດ ຄິງກາກູຈິ ປານກັບວ່າບໍ່ມີຫຍັງເກີດຂຶ້ນ ເປັນໂອກາດໃຫ້ ໄດມຽວຕ່າງໆ ຕັ້ງຕົນເປັນອິດສະຫຼະໃນປີ ຄສ 1471 ຈັງຫວັດຄາງະ ພະສົງນິກາຍແດນບໍລິສຸດກ່ອນກະບົດຂັບໄລ່ພວກ ໄດມຽວອອກໄປເອີ້ນວ່າກະບົດ ອິກໂກ-ອິກກິ ປະກອບດ້ວຍປະຊາຊົນ ແລະ ຊາມູໄລລະດັບຕໍ່າ ກະບົດອິກໂກ-ອິກກິ ສະສົມກາລັງໄດ້ຫຼາຍໃນຕອນເໜືອລວມທັງ ໂອໂຊກາວະ ແລະ ຍາມານະໄດ້ເສຍຊີວິດໃນ ຄສ 1473 ແຕ່ສົງຄາມຍັງບໍ່ຈົບ ຄວາມເສຍຫາຍຂອງເມືອງ ກຽວໂຕຄັ້ງນີ້ຮ້າຍແຮງເກີນຟື້ນຟູ ຈົນພາຍຫຼັງ ໂທກູງາວະ ອິເອຍາຊຸ ຕ້ອງຍ້າຍເມືອງຫຼວງໄປທີ່ ເອໂດະໃນທີ່ສຸດ.

## 4. ຍຸກອະຊຸຈິ ໂມໂມະຍະມະ

### 4.1 ດ້ານວັດທະນະທຳ





ຮູບທີ 18  ໂອະດະ ໂນະບຸນະງະ                                    ໂທະ ໂຍະ ໂຕະມິຮິເດະ ໂຍະຊິ

ຍີ່ປຸ່ນເຂົ້າສູ່ ຍຸກອະຊຸຈິໂມໂມະຍະມະ ໃນປີ ພສ 2116 (ຄສ 1573) ເປັນຍຸກສັ້ນໆທີ່ມີຜູ້ສະຖາປານາຄື ໂອະດະ ໂນະບຸນະງະ ເຂົາມີເຈຕະນາລົມທີ່ຈະຮວມປະເທດຍີ່ປຸ່ນທີ່ຍັງບໍ່ເປັນປຶກແຜ່ນໃຫ້ຢູ່ໃນຜູ້ນຳພຽງຄົນດຽວ ແຕ່ເມື່ອເກີດເຫດການທີ່ວັດຮັນໂນໃນປີ ພສ 2125 (ຄສ 1582) ໂນະບຸນະງະ ເສຍຊີວິດ ໂທະໂຍະໂຕະມິ ຮິເດະ ໂຍະຊິ ນາຍພົນນາຍໜຶ່ງຂອງເຂົາຈິ່ງໄດ້ເປັນຜູ້ສືບທອດເຈຕະນາລົມຕໍ່ມາ ແລະ ສາມາດຮວບຮວມປະເທດຍີ່ປຸ່ນໄດ້ສຳເລັດໃນປີ ພສ 2133 (ຄສ 1590). ຍຸກນີ້ເປັນຍຸກທີ່ມີການພັດທະນາອຸດສະຫະກຳຕໍ່າແຜ່ນ, ເຊຣາມິກ ພາບວາດ ເຄື່ອງເງິນ ອຸປະກອນກ່ຽວກັບຊາ ແລະ ອື່ນໆເຊິ່ງເຮັດໃຫ້ ນັບໄດ້ວ່າຍຸກນີ້ເປັນຍຸກທີ່ຫຼາທີ່ສຸດຍຸກໜຶ່ງຂອງຍີ່ປຸ່ນ ວັດທະນະທຳໃໝ່ໆ ຈາກຕາເວັນຕົກເຊັ່ນ: ການໃຊ້ປືນ ດາບສີລາ ການສອນຄຣິດຕະສາດສະໜາ ກໍ່ໄດ້ຈະເລີນຮຸ່ງເຮືອງໃນຍຸກນີ້ດວ້ຍ.

ແຕ່ໄດ້ບໍ່ດົນ ສຸຂະພາບທີ່ບໍ່ດີ ແລະ ອຳນາດຕ່າງໆໃນຕົວຮິເດະໂຍະຊິໄດ້ຫຼຸດລົງຢ່າງຕໍ່ເນື່ອງ ອັນເນື່ອງມາຈາກການຍົກທັບບຸກເກົາຫຼີທີ່ບໍ່ປະສົບຜົນສຳເລັດ ແລະ ປັນຫາຮອບຕົວທີ່ຮອບລ້ອມຕົວເຂົາຢູ່ເຈົ້າເມືອງ 5 ເມືອງຈິ່ງຕັ້ງຕົນເປັນໃຫຍ່ ແລະ ສົງຄາມຍາດຊິງອຳນາດກັນອີກຄັ້ງ ການຮົບສິ້ນສຸດລົງໃນປີ ພສ 2143 (ຄສ 1600) ໂດຍເຈົ້າເມືອງໂທະກຸງະວະ ອິເອະຍະສຶ

# ບົດທີ 5

# ຍີ່ປຸ່ນສະໄໝ ເອໂດະ (ຄສ. 1603 -1868 )

## 1. ສະພາບທາງດ້ານການເມືອງການປົກຄອງ



ຮູບທີ 13   ໂທະກຸງະວະ ອິເອະຍະສຶ

ອິເອະຍະສຶຕັ້ງຕົນເປັນຜູ້ປົກຄອງຍີ່ປຸ່ນທັ້ງປະເທດທີ່ມີອຳນາດຢ່າງແທ້ຈິງ ໂດຍຂຶ້ນດຳລົງຕຳແໜ່ງໂຊກຸນທີ່ເມືອງເອໂດະ  ແລະ ສ້າງອະຣິຍະທຳໃໝ່ ເຮັດໃຫ້ຍຸກ ອະຊຸຈິໂມໂນະຍະມະຈົບລົງໃນປີ ຄສ 1603 ແລະ ປີດຽວກັນນັ້ນກໍ່ຖືເປັນຈຸດເລີ້ມຕົ້ນຂອງ ຍຸກເອໂດະ (ເອໂດະຈິໄດ)ເຊິ່ງເປັນຈຸດປ່ຽນແປງທີ່ສຳຄັນໃນປະຫວັດຕິສາດຍີ່ປຸ່ນ ໂຊກຸນອິເອະຍະສຶ ໄດ້ສ້າງແບບແຜນເກືອບຈະທຸກແງ່ມຸມຂອງວິຖີຊີວິດຂອງປະເທດຍີ່ປຸ່ນ ໂດຍສະເພາະຢ່າງຍິ່ງ ສະຖາບັນທາງການເມືອງ ແລະ ສັງຄົມໃຫ້ເປັນແບບຢ່າງຕໍ່ມາອີກ 265 ປີ.  ການທີ່ໂຊກຸນ ໂທະກຸງະວະດາເນີນການປິດປະເທດຈາກໂລກພາຍນອກດຍສິ້ນເຊີງໃນປີ ພສ 2182 ( ຄສ 1639) ນັບເປັນວິທີໜຶ່ງທີ່ຈະຮັກສາສະຖຽນລະພາບຂອງໂຄງສ້າງທາງສັງຄົມ ແລະ ການເມືອງ ທີ່ອິເອະຍະສຶໄດ້ກໍ່ຕັ້ງ ຊາວຕາເວັນຕົກກຸ່ມທຳອິດໄດ້ເດີນທາງມາເຖິງຊາຍຝັ່ງຍີ່ປຸ່ນໃນສະຕະວັດກ່ອນ ຄືໃນສະໄໝ ມຸໂຣະມາຈິ ພໍ່ຄ້າຊາວໂປຣຕຸເກດຂຶ້ນບົກຢູ່ເກາະນ້ອຍໆ ເກາະໜຶ່ງທາງຕາເວັນຕົກສ່ຽງໃຕ້ຂອງຍີ່ປຸ່ນໃນປີ ພສ 2086 ( ຄສ 1543 ) ໂດຍໄດ້ນາເອົາອາວຸດປືນເຂົ້າໃນປະເທດຍີ່ປຸ່ນ ອີກໄມ້ກີ່ປີຕໍ່ມາຄະນະຜູ້ສອນສາສະໜາຄຣິດ ນິກາຍໂລມັນແຄໂທຣິກ ນຳໂດຍນັກບຸນ ຟຣານຊິສໂກຊາເວຍຣ໌ ຕະຫຼອດຈົນຊາວສະເປນ ອີກຫຼາຍກຸ່ມໄດ້ເດີນທາງເຂົ້າມາໃນປະເທດຍີ່ປຸ່ນ ກຸ່ມພໍ່ຄ້າ ຊາວນິເທີຣ໌ແລນດ໌ ແລະ ອັງກິດກໍ່ໄດ້ເຂົ້າມາຕັ້ງຮາກຖານໃນແຜ່ນດິນຍີ່ປຸ່ນດວ້ຍເຊັ່ນກັນ. ການຫຼັ່ງໄຫຼເຂົ້າມາຂອງຊາວຢູໂຣບມີຜົນກະທົບຕໍ່ຍີ່ປຸ່ນຢ່າງຫຼວງຫຼາຍຄະນະຜູ້ສອນສາສະໜາເຮັດໃຫ້ຊາຍີ່ປຸ່ນປ່ຽນສາສະໜາກັນຫຼາຍ ໂດຍສະເພາະທາງຕອນໃຕ້ຂອງຍີ່ປຸ່ນ ໂຊກຸນຮູ້ດີວ່າສາສະໜາຄຣິດອາດຈະມີອະນຸພາບໃນການທຳລາຍເທົ່າກັບອາວຸດປືນທີ່ເຂົ້າມາໃນຍີ່ປຸ່ນ ໃນທີ່ສຸດໄດ້ມີການສັ່ງຫ້າມການເຜີຍແຜ່ສາສະໜາຄຣິດໃນຍີ່ປຸ່ນ ແລະ ໂຊກຸນໂທະກຸງະ ໄດ້ອອກຄຳສັ່ງໃຫ້ຊາຕ່າງຊາດທຸກຄົນເຂົ້າປະເທດຍີ່ປຸ່ນ ຍົກເວັ້ນພວກພໍ່ຄ້າຊາວເນເທີແລນກຸ່ມນ້ອຍໆ ກຸ່ມໜຶ່ງທີ່ຖືກຈຳກັດບໍລິເວນຢູ່ທີ່ ເກາະເດະຈິມະ ທີ່ ອ່າວນະງະຊະກິ ຕະຫຼອດຈົນຊາວຈີນຈຳນວນໜຶ່ງທີ່ອາໄສຢູ່ທີ່ ນະງະຊະກິ ແລະ ທູດຈາກລາຊະວົງລີ ຂອງປະເທດເກົາຫຼີທີ່ເດີນທາງມາປະເທດຍີ່ປຸ່ນເປັນຄັ້ງຄາວເປັນເວລາ 250 ປີທີ່ຍີ່ປຸ່ນຕິດຕໍ່ກັບໂລກພາຍນອກຜ່ານກຸ່ມຄົນເຫຼົ່ານີ້ເທົ່ານັ້ນ ນັກວິຊາການຍີ່ປຸ່ນໄດ້ຮັບຄວາມຮູ້ເບື້ອງຕົ້ນກ່ຽວກັບການແພດຕາເວັນຕົກ ແລະ ວິທະຍາສາດຂະແໜງອື່ນໆ ໂດຍຜ່ານທາງກຸ່ມພໍ່ຄ້າທີ່ເມືອງ ເດະຈິມະ ໃນລະຫວ່າງໄລຍະເວລາແຫ່ງການແຍກຕົວອອກຢູ່ຢ່າງໂດດດ່ຽວອັນຍາວນານຂອງປະເທດ.



ຮູບທີ 19  ໜັງສືກ່ຽວກັບກາຍະວິພາກ ທວີທຳອິດຂອງຍີ່ປຸ່ນແລ້ວສົມບູນເມື່ອປີ ພສ 2317 ( ຄສ 1774)



ຮູບທີ 15   ຮູບພາບອຸກິໂຍະ



ຮູບທີ 20  ການສຶກສາໃນ ທຣະລະເທະຣະໂກະຍະ

ປະຊາກອນທັງໝົດແບ່ງອອກເປັນ 4 ລະດັບ ເອີ້ນກັນວ່າ ( ມີບຸງເຊ )ປະກອບດ້ວຍ:

1 ນັກຣົບ (ບູຊິ) ຫຼື ຊາມູໄຣ (ປະມານຮ້ອຍລະ 5 ຂອງປະຊາກອນທັງໝົດ )

2 ຊາວໄຮ່ຊາວນາ (ໂນມິງ ປະມານຮ້ອຍລະ 80 ຂອງປະຊາກອນທັງໝົດ )

3 ຊ່າງຝີມື (ໂຊະກຸນິງ)

4 ພໍ່ຄ້າ (ໂຊນິງ)

ສຳລັບຊ່າງຝີ ແລະ ພໍ່ຄ້ານັ້ນບາງຄັ້ງຈະເອີ້ນລວມກັນວ່າ ຊາເມືອງ ( ໂຈນິງ) ແລະ ຢູ່ໃຕ້ການປົກຄອງຂອງເຫຼົ່ານັກຣົບ ມີພຽງຊາວນາເທົ່ານັ້ນທີ່ອາໄສຢູ່ໃນົນນະບົດ ທີ່ເຫຼືອອີກສາມຊັ້ນຈະອາໄສຢູ່ໃນເມືອງເຊິ່ງສ້າງຢູ່ອ້ອມຮອບປະສາດຂອງ ໄດມຽວ ໃນແຕ່ລະທ້ອງຖິ່ນ

ຄວາມສະຫງົບສຸກຈາກການປິດປະເທດເປັນເວລານານເຮັດໃຫ້ປະຊາຊົນທີ່ຢູ່ໃຕ້ອຳນາດປົກຄອງຢ່າງເຊັ່ນ ຊາວເມືອງໄດ້ມີໂອກາດທີ່ຈະປະດິດສິ່ງຕ່າງໆໃໝ່ໆ ຂຶ້ນມາໄປເປັນທາງຂອງຕົນເອງ ມີການສະແດງ ຄະບຸກິ ເກີດຂຶ້ນຕາມເມືອງໃຫ່ຍຕ່າງໆ ທີ່ວປະເທດມີການາດພາບ ອຸກິໂຍະ ທີ່ສະແດງເຖິງຊີດປະຈຳວັນຂອງຊາວເມືອງ ແລະ ຊາວນາ ເຊິ່ງແຕກຕ່າງຈາກພາບທີ່ຊົນຊັ້ນປົກຄອງຂຽນຂຶ້ນຢ່າງຊັດເຈນ ພໍມາເຖິງກາງຄຣິດຕະສະຕະວັດທີ 18 ໄດ້ເກີດຄວາມນິຍົມໃນການຮຽນິທະຍາການໃໝ່ໆ ເຊັ່ນ: ແພດສາດ, ດາລາສາດ, ພູມີສາດ, ຄະນິດສາດ, ປະຫວັດຕິສາດແລະ ອື່ນໆຊາວນາເອງທີ່ມີໜ້າທີ່ເຮັດນາຍັງຕ້ອງມາສຶກສາວິທະຍາການເຫຼົ່ານີ້ເພື່ອຄິດຄຳນວນຜົນກຳໄລທີ່ຕົນເອງໄດ້ ການສຶກສາທີ່ສະເໝືອນກັບການຮຽນພິເສດທີ່ເອີ້ນວ່າ ເທຣະໂກຍະ ຈິ່ງໄດ້ຮັບຄວາມນິຍົມຢ່າງຫຼວງຫຼາຍ

ໃນຊ່ວງປາຍສະຕະວັດທີ 18 ແລະ ຕົ້ນສະຕະວັດທີ 19 ຍີ່ປຸ່ນຕົກຢູ່ພາຍໃຕ້ຄວາມກົດດັນທີ່ເພີ້ມຫຼາຍຂຶ້ນເລື້ອຍໆເພື່ອໃຫ້ເປີດປະຕູສູ່ໂລກພາຍ ອີກຄັ້ງໂຄງສ້າງທາງສັງຄົມ ແລະ ການເມືອງອັນເຂັ້ມງວດທີ່ ອິເອະຍະສືເປັນຜູ້ກຳນົດຂຶ້ນພາຍໃນປະເທດຍີ່ປຸ່ນ ກໍເລີ້ມທີ່ຈະເຮັດໃຫ້ເກີດຄວາມຕຶງຄຽດອັນເນື່ອງມາຈາກຍຸກສະໄໝທີ່ປຽ່ນໄປ

ໃນປີ ພສ 2396 ( ຄສ 1853)ພົນຫຼືຈັດຕະວາ ແມທທິວ ຊີ ເພີຣ໌ຣີ ແຫ່ງສະຫະລັດອາເມລິການຳກອງເຮືອ 4 ລຳເຂົ້າມາໃນອ່າວ ໂຕກຽວ ພົນ ຫຼື ຈັດຕະວາ ແມທທິວ ຊີ ເພີຣ໌ຣີ ກັບມາອີກຄັ້ງໃນປີຕໍ່ມາ ແລະ ປະສົບຄວາມສຳເລັດໃນການຊັກຈູງໃຫ້ຍີ່ປຸ່ນລົງນາມໃນສົນທິສັນຍາສຳພັນທະໄມຕີຣ ກັບປະເທດສະຫະລັດອາເມລິກາ ຕໍ່ມາໃນປີດຽວກັນນັ້ນເອງ ຍີ່ປຸ່ນໄດ້ລົງນາມໃນສົນທິສັນຍາທຳນອງດຽວກັນກັບປະເທດລັດເຊຍ, ອັງກິດ ແລະ ເນເທີຣ໌ແລນດ໌ ດັ່ງນັ້ນຈິ່ງເປັນການເປີດປະເທດຍີ່ປຸ່ນອີກຄັ້ງໜຶ່ງ ສີ່ປີຕໍ່ມາສົນທິສັນຍາເຫຼົ່ານີ້ໄດ້ຖືກປ່ຽນເປັນສົນທິສັນຍາທາງການຄ້າ ແລະ ຍີ່ປຸ່ນໄດ້ລົງນາມໃນສົນທິສັນຍາທຳນອງດຽວກັນນີ້ກັບປະເທດປະເທດຝັ່ງເສດດວັຍ.

ຜົນກະທົບຈາກເຫດການເຫຼົ່ານີ້ ເພີ້ມຄວາມກົດດັນແຫ່ງກະແສທາງສັງຄົມ ແລະ ການເມືອງເຊິ່ງກັດກິນຮາກຖານຂອງໂຄງສ້າງລະບບສັກດີນາເທື່ອລະນ້ອຍ ຄວາມວຸ້ນວາຍຄັ້ງໃຫຍ່ໄດ້ເກີດຂຶ້ນກິນເວລາປະມານທົດສະວັດຈົນກະທັ້ງລະບົບສັກດີນາຂອງໂຊກຸນ ໂຕກຸງະວະ ໄດ້ສິ້ນສຸດລົງໃນປີ ພສ 2410 (ຄສ 1867) ແລະ ໄດ້ຖວາຍອຳນາດອະທິປະໄຕທັງມວນຄືນພະຈັກກະພັດ ໃນການປະຕິຮູບ ເມຈິ Meiji Restoration ໃນປີຕໍ່ມາ

## ຍຸກເມຈິ

ການປະຕິຮູບເມຈິເຮັດໃຫ້ຍຸກເອໂດະສິ້ນສຸດໃນປີ ພສ 2411 (ຄສ 1868) ແລະ ປິດບັອກນັ້ນນັ້ນນັບເປັນການເລີ່ມຕົ້ນຂອງຍຸກເມຈິ ເປັນສະໄໝທີ່ເດັ່ນທີ່ສຸດສະໄໝໜຶ່ງໃນບັນດາປະຫວັດຕິສາດຂອງປະເທດພາຍໃຕ້ການປົກຄອງຂອງສົມເດັດພະຈັກກະພັດເມຈິ ຍີ່ປຸ່ນໄດ້ບັນລຸຄວາມສຳເລັດໃນ

ການພັດທະນາປະເທດໂດຍໃຊ້ເວລາພຽງບໍ່ເທົ່າໃດທົດສະວັດ ກ່າວຄືການສ້າງສັນປະເທດໃຫ້ເຂົ້າສູ່ຍຸກໃໝ່ດ້ວຍອຸດສະຫະກຳ ພັດທະນາສະຖາບັນທາງການເມືອງ ແລະ ຮູບແບບຂອງສັງຄົມແບບໃໝ່ ທັງທີ່ປະເທດຕາເວັນຕົກຕ້ອງໃຊ້ເວລາພັດທະນາດົນນັບສະຕະວັດ.

ໃນຊ່ວງປີທຳອິດຂອງການຄອງລາດສົມເດັດພະຈັກກະພັດ ເມຈິ ໄດ້ຍ້າຍເມືອງຫຼວງຈາກກຸງກຽວໂຕໄປໄປຍູ່ທີ່ເມືອງ ເອໂດະ ເຊິ່ງເປັນທີ່ຕັ້ງຂອງລັດຖະບານລະບົບສັກດີນາທີ່ຜ່ານມາ ແລະ ໄດ້ຊົງປ່ຽນຊື່ເມືອງຫຼວງເປັນ ໂຕກຽວ ຊຶ່ງແປວ່າ ເມືອງຫຼວງຕາເວັນອອກ ມີການປະກາດໃຊ້ລັດຖະທຳມະນູນ ຕະຫຼອດຈົນຕັ້ງຄະນະລັດຖະມົນຕີ ແລະ ສະຖາບັນນິຕິບັນຍັດ ລະບົບສອງສະພາ ຍົກເລີກການແບ່ງຊົນຊັ້ນແບບເກົ່າຂອງສະໄໝສັກດີນາ ຍີ່ປຸ່ນທັງປະເທດທຸ່ມເທພະລັງງານ ແລະ ຄວາມກະຕືລືລົ້ນໃນການສຶກສາ ແລະ ຮັບອາຣິຍະທຳຕາເວັນຕົກມາໃຊ້.

ຄວາມເຂັ້ມແຂງຂອງຂະນົບທຳນຽມປະເພນີຍີ່ປຸ່ນ.

# ບົດທີ 6

# ຍີ່ປຸ່ນໃນສະໄໝການປົກຄອງຂອງຈັກກະພັດ (ຄສ 1868-1945)

## 1. ການປົກຄອງຂອງຈັກກະພັດເມຈິ

ຍຸກເມຈິ (ຄສ 1868-1912) ຈັກກະພັດເມຈິເປັນຈັກກະພັດທີ່ຊຸດຄົ້ນອຳນາດການປົກຄອງຂອງຈັກກະພັດຂຶ້ນມາອີກເທື່ອໜຶ່ງ ແລະ ໄດ້ຍ້າຍເມືອງຫຼວງຈາກເມືອງກຽວໂຕໄປຕັ້ງທີ່ເມືອງ ເອໂດະ ແລ້ວປ່ຽນຊື່ມາເປັນ ໂຕກຽວ ນອກນັ້ນກໍມີການປະຕິຮູບປະເທດຍີ່ປຸ່ນໃນຫຼາຍໆດ້ານ ແລະ ເອີ້ນການປະຕິຮູບນີ້ວ່າ: ການປະຕິຮູບສະໄໝເມຈິ ເຊິ່ງມີການປັບປຸງລະບົບການປົກຄອງໃນທຸກໆດ້ານນັບແຕ່ສູນກາງລົງຮອດທ້ອງຖິ່ນ.

- **ດ້ານການປົກຄອງ**: ແມ່ນປົກຄອງປະເທດໃນລະບອບປະຊາທິປະໄຕໃຕ້ລັດຖະທຳມະນູນເຊິ່ງເປັນກົດໝາຍສູງສຸດໃນລະບົບບໍລິຫານປະເທດ. ບັນດາຈັກກະພັດຕ່າງໆທີ່ຍັງມີອຳນາດໃນການປົກຄອງແຕ່ກ່ອນຖືກຍົກເລີກໝົດໂດຍສະເພາະແມ່ນການປົກຄອງແບບສັກດີນາ

- **ດ້ານເສດຖະກິດ**: ການປະກາດຍົກເລີກການປົກຄອງແບບສັກດີນານັ້ນໄດ້ເຮັດໃຫ້ລັດຖະບານອອກກົດໝາຍໂດຍສະເພາະການຄຸ້ມຄອງທີ່ດິນ, ກໍ່ສ້າງພື້ນຖານໂຄງລ່າງຂອງສັງຄົມໃຫ້ປະຊາຊົນສາມາດສ້າງສາພັດທະນາເສດຖະກິດສັງຄົມ, ການສ້າງສາທາງລົດໄຟ, ຫົນທາງ, ການຄົມມະນາຄົມຂົນສົ່ງທາງທະເລເພື່ອເສີມສ້າງການຄ້າພາຍໃນ ແລະ ນອກນັ້ນຍັງໄດ້ປັບປຸງລະບົບໄປສະນີ, ການເງິນ ແລະ ທະນາຄານມີການວາງລະບົບອຸດສາຫະກຳໂດຍລັດຖະບານເຂົ້າມາລົງທຶນອຸດສະຫະກຳຫຼັກເຊັ່ນ: ອຸດສະຫະກຳເຫຼັກ, ນອກນັ້ນຍັງມີການສະໜັບສະໜູນໃຫ້ບັນດາເອກະຊົນມີສ່ວນຮ່ວມໃນການລົງທຶນໃນການພັດທະນາອຸດສະຫະກຳໃນ ຄສ 1911 ປະເທດຍີ່ປຸ່ນໄດ້ມີອຳນາດໃນການຈັດຕັ້ງລະບົບພາສີອາກອນໃນເວລານັ້ນຍີ່ປຸ່ນກາຍເປັນປະເທດທີ່ມີອຸດສາຫະກຳທີ່ສຳຄັນຢູ່ໃນທະວີບອາຊີ

- **ດ້ານສັງຄົມ**: ປະເທດຍີ່ປຸ່ນໄດ້ປະກາດຍົກເລີກສິດທິພິເສດຂອງ ຊາມູໄຣ ປະຊາຊົນທຸກຄົນມີສິດເທົ່າທຽມກັນ ຄສ 1872 ລັດຖະບານໄດ້ປະກາດນະໂຍບາຍການສຶກສາໃຫ້ປະຊາຊົນ ສາມາດເຂົ້າຮຽນໄດ້ທຸກຄົນ ມີການປູກຈິດສຳນຶກ, ແນວຄວາມຄິດ ແລະ ຄ່ານິຍົມແບບດັ້ງເດີມຄື: ລັດທິຂົງຈື້ ໃນແຜນການສຶກສາເພື່ອເນັ້ນຄວາມຈົງຮັກພັກດີຕໍ່ອົງຈັກກະພັດ.

- **ດ້ານການທະຫານ**: ລັດຖະບານໄດ້ມີການເກນປະຊາຊົນເຂົ້າເປັນທະຫານຕາມມາດຕະຖານສາກົນ ຈັດຕັ້ງກະຊວງປ້ອງກັນປະເທດທີ່ເຮັດໜ້າທີ່ກ່ຽວກັບທະຫານປັບປຸງກອງທັບໃຫ້ມີປະສິດທິພາບທັງມີລະບຽບຂອງກອງທັບ ແລະ ປະສິດທິພາບຂອງອາວຸດ ອັນເຮັດໃຫ້ປະເທດຍີ່ປຸ່ນກ້າວຂຶ້ນເປັນປະເທດມະຫາອຳນາດຊາດໜຶ່ງຂອງໂລກ. ການປະຕິຮູບສະໄໝເມຈິໃຊ້ເວລາ 20 ປີ ກໍສາມາດພັດທະນາເສດຖະກິດສັງຄົມຂອງປະເທດຈາກປະເທດດ້ອຍພັດທະນາມາເປັນປະເທດທີ່ພັດທະນາແລ້ວໃນພູມີພາກອາຊີ.

### 1.1 ສົງຄາມຍີ່ປຸ່ນ ກັບ ຈີນ ແລະ ຣັດເຊຍ

ສົງຄາມຍີ່ປຸ່ນ ແລະ ຣັດເຊຍເປັນສົງຄາມໃຫຍ່ຄັ້ງທຳອິດຂອງສະຕະວັດທີ 20 ອັນເນື່ອງມາຈາກລັດທິຈັກກະພັດນິຍົມຂອງຈັກກະພັດຣັດເຊຍ ແລະ ຈັກກະພັດຍີ່ປຸ່ນໃນບໍລິເວນທາງຕອນໃຕ້ຂອງຈູເລຍໃນບໍລິເນແຄມຝັ່ງມະຫາສະໝຸດຫຼຽວຕົງ, ເສິນຢາງ ແລະ ບໍລິເວນແຄມມະຫາສະໝຸດຂອງເກົາຫຼີ ແລະ ທະເລເຫຼືອງ. ຣັດເຊຍໄດ້ຮຽກຮ້ອງຂໍທ່າເຮືອກະແສນໍ້າອຸ່ນໃນມະຫາສະໝຸດປາຊີຟິກໄວ້ສຳລັບຮັບໃຊ້ກອງທັບເຮືອ ແລະ ເພື່ອການຄ້າທາງທະເລຂອງພວກເຂົາເຊິ່ງເມືອງ ລາຄິວສຕ໋ອກຂອງລັດເຊຍສາມາດເປີດດຳເນີນການໄດ້ຢ່າງເສລີ ສະເພາະໃນລະດູຮ້ອນເທົ່ານັ້ນ ແຕ່ເມືອງຟຣໍອາເທີສາມາດເປີດໃຫ້ບໍລິການໃກ້ຕະຫຼອດທັງປີ ເຊິ່ງນັບແຕ່ສົງຄາມຈີນກັບຍີ່ປຸ່ນຄັ້ງທີ 1 ຢຸດຕິລົງໃນປີ ຄສ 1903 ລັດເຊຍຕົກລົງເຈລະຈາກັບຍີ່ປຸ່ນໄດ້ ຍີ່ປຸ່ນຈຶ່ງສາມາດເລືອກວິທີການດຳເນີນສົງຄາມເພື່ອຄອບງຳຄາບມະຫາສະໝຸດເກົາຫຼີ ພາຍຫຼັງການເຈລະຈາອັນຫຍຸ້ງຍາກກໍ່ສາມາດຈົບລົງໃນປີ ຄສ 1904 ກອງທັບຈັກກະພັດ ດົນາວິ ຍີ່ປຸ່ນ ໄດ້ບຸກເຂົ້າທາງທິດຕາເວັນອອກຂອງລັດເຊຍທີ່ເມືອງ ຟຣໍອາເທີ ແລະ ກອງທັບເຮືອໃນແຂວງຫຼຽວຕົງ ທີ່ຣັດເຊຍເຊົ່າຈາກຈີນສາມາດຕໍ່ສູ້ຕ້ານກັບກອງທັບຂອງສົມເດັດພະຈັກກະພັດໄດ້ບໍ່ວ່າຈະເປັນທາງທະເລ ແລະ ທາງບົກ.

ສາເຫດຂອງສົງຄາມ: ສະຖານະການຂອງຈີນເປັນປັດໃຈໜຶ່ງທີ່ອຳນວຍຄວາມສະດວກໃຫ້ຍີ່ປຸ່ນສາມາດດຳເນີນນະໂຍບາຍຮຸກຮານແມນຈູເລຍໄດ້ຢ່າງງ່າຍດາຍຍີ່ປຸ່ນໄດ້ເຫັນເຖິງຄວາມສຳຄັນໃນດິນແດນດັ່ງກ່າວເຊັ່ນ: ເປັນດິນແດນທີ່ອຸດົມສົມບູນດ້ວຍຊັບພະຍາກອນທຳມະຊາດ ແລະ ວັດຖຸດິບທາງດ້ານອຸດສະຫະກຳອັນມະຫາສານ ອີກຢ່າງເຂດນີ້ສາມາດເປັນຕະຫຼາດຈຳໜ່າຍສິນຄ້າຢ່າງພຽງພໍ ໃນນາມລັດຖະບານຈຶ່ງບໍ່ສາມາດຕອບໂຕ້ທາງດ້ານການທະຫານໄດ້ຢ່າງເຕັມທີ່. ຍີ່ປຸ່ນເລີ້ມຮຸກຮານດິນແດນດັ່ງກ່າວຢ່າງເປີດແປນພາຍຫຼັງກຳລະນີມຸກເດນ ໃນເດືອນ ກັນຍາ 1931 ຫຼັງຈາກການຕໍ່ສູ້ກັນມາເດືອນ ຍີ່ປຸ່ນໄດ້ສ້າງທະຫານຫຸ່ນເຊີດແມນຈູກົວຂຶ້ນ ໂດຍແຕ່ງໃຫ້ຈັກກາພັດປູຢີ ອະດີດຈັກກະພັດອົງສຸດທ້າຍແຫ່ງລາຊະວົງຊິງເປັນຜູ້ສຳເລດລາຊະການແຜ່ນດິນ ແລະ ເປັນຈັກກະພັດພຽງໃນນາມ ລັດຖະບານຈີນແຕ່ບໍ່ສາມາດຕອບໂຕ້ທາງດ້ານການທະຫານໄດ້ ດັ່ງນັ້ນຈຶ່ງຮຽກຮ້ອງໃຫ້ອົງການສັນນິບາດຊາດດຳເນີນການສອບສວນກັບເຫດການທີ່ເກີດຂຶ້ນ ແລະ ຖະແຫຼງການນີ້ ລິດຕັນ ເພື່ອປະນາມເຖິງການກະທຳຂອງຍີ່ປຸ່ນໃນການຮຸກຮານ ແມນຈູເລຍ ເຮັດໃຫ້ຍີ່ປຸ່ນຕ້ອງຖອນກຳລັງອອກຈາກດິນແດນນັ້ນໂດຍບໍ່ມີການປະທະກັນ.

ການປະຕິຮູບ ເມຈິ ເໝືອນກັບການທະລາຍຂອງເຄື່ອນທີ່ກໍ່ດ້ວຍພະລັງງານ ແລະ ແຮງຜັກດັນສະສົມມານັບສະຕະວັດ ຕ່າງຊາດເອງຮູ້ສຶກເຖິງຄວາມຮຸນແຮງ ແລະ ຄວາມຕື່ນຕົວທີ່ເກີດຈາກການປົດປ່ອຍພະລັງເຫຼົ່ານີ້ອອກມາໃນໄວວາ ກ່ອນຈະສິ້ນສະຕະວັດທີ່ 19 ຍີ່ປຸ່ນເຂົ້າຮ່ວມສົງຄາມຈີນ-ຍີ່ປຸ່ນຄັ້ງທີໜຶ່ງລະຫວ່າງປີ ຄສ 1894-1895 ຊຶ່ງລົງເອີຍດ້ວຍໄຊຊະນະຂອງຍີ່ປຸ່ນຜົນຂອງສົງຄາມຄືຍີ່ປຸ່ນໄດ້ໄຕ້ຫວັນຈາກຈີນ ສິບປີຕໍ່ມາຍີ່ປຸ່ນປະສົບໄຊຊະນະອີກຄັ້ງໜຶ່ງໃນສົງຄາມລັດເຊຍ-ຍີ່ປຸ່ນ ລະຫວ່າງປີ ຄສ 1904-1905 ແລະ ຢຶດໄດ້ຊັດຄາລິນຕອນໃຕ້ເຊິ່ງຍົກໃຫ້ລັດເຊຍເມື່ອປີ ຄສ 1875 ເພື່ອແລກກັບເກາະຄູຣິນ ແລະ ເຮັດໃຫ້ຊາວໂລກຮັບຮູ້ວ່າຍີ່ປຸ່ນມີຄວາມສົນໃຈໃນດິນແດນ ແມນຈູເຣຍເປັນພິເສດຫຼັງຈາກທີ່ໄດ້ກຳຈັດອຳນາດອື່ນໆທີ່ຈະມາມີອິດທິພົນເໜືອເກົາຫຼີແລ້ວໃນຕອນທຳອິດຍີ່ປຸ່ນໄດ້ຈັດການໃຫ້ເກົາຫຼີເປັນດິນແດນໃນອາລັກຂາ ແລະ ຜະໜວກເກົາຫຼີໃນເວລາຕໍ່ມາຄືໃນປີ ຄສ 1910. ສົມເດັດພະຈັກກະພັດ ເມຈິ ຊົງປົກຄອງປະເທດດ້ວຍຄວາມເຂົ້າໃຈຖ່ອງແທ້ ແລະ ສ້າງສັນເຊິ່ງການປົກຄອງຂອງພະອົງຊ່ວຍນຳປະເທດໃຫ້ຜ່ານພົ້ນຊ່ວງທົດສະວັດແຫ່ງການປ່ຽນແປງພະອົງສະເດັດສະຫວັນນະຄົດໃນປີ ຄສ 1912 ກ່ອນຈະເກີດສົງຄາມໂລກຄັ້ງທີ 1 ເມື່ອສົງຄາມໂລກຄັ້ງນີ້ສິ້ນສຸດລົງຍີ່ປຸ່ນກໍ່ໄດ້ຮັບການຍອມຮັບວ່າເປັນໜຶ່ງໃນປະເທດມະຫາອຳນາດຂອງໂລກ ເພາະຍີ່ປຸ່ນໄດ້ເຂົ້າຮ່ວມສົງຄາມໂລກເນື່ອງຈາກໄດ້ເຮັດສັນຍາເປັນພັນທະມິດກັບປະເທດອັງກິດໄວ້ເມື່ອປີ ຄສ 1902 ແລະ ສົມເດັດພະຈັກກະພັດ ໄທໂຊ ໄດ້ສະເດັດຂຶ້ນຄອງລາດຕໍ່ ຈາກສົມເດັດພະເຈົ້າກະພັດ ເມຈິ ໃນປີ ຄສ 1912 ເຮັດໃຫ້ປີ

1912 ນັບເປັນປີສິ້ນສຸດຂອງຍຸກເມຈິ ແລະ ເປັນຈຸດເລີ້ມຕົ້ນຂອງ ຍຸກໄທໂຊ ແລະ ຈັກກະພັດ ໄທໂຊສະເດັດສະຫັວນ ນະຄົດໃນ ຄສ 1926 ແລະ ສົມເດັດພະຈັກກະພັດ ຮິຣິໂຣຮິໂຕຄອງລາດຕໍ່ຈາກສົມເດັດພະຈັກກະພັດ ໄທໂຊ ເຊິ່ງເຮັດ ໃຫ້ປີ 1926 ເປັນຈຸດສິ້ນສຸດສະໄໝໄທໂຊ ແລະ ເປັນຈຸດເລີ້ມຕົ້ນຂອງຍຸກ ໂຊວະ.



ຮູບທີ 21 ປະຕູຊູຊະກຸປະຕູເມືອງຫຼວງ ເອໂຈວຄຽວ ສະໄໝນະຣະ( ບູລະນະຂຶ້ນມາໃໝ່)



ຮູບທີ 22 ຄື້ນຍັກນອກຝັ່ງ ຄະນະງະວະ ໃນຊຸດ ທັດສະນີຍະພາບມຸມຂອງພູເຂົາ ຟູຈິ 36 ອາດພາບເມື່ອປີ ພສ 2369 ໂດຍ ຄະສືຊິກະ ໂຮະກຸໄຊ

## 2. ຍີ່ປຸ່ນໃນກຸ່ມພັນທະມິດ

ປະຫວັດສາດເສດຖະກິດສະໄໝໃໝ່ ຍີ່ປຸ່ນ ແບ່ງເປັນສະໄໝຢ່າງຈະແຈ້ງ ສະໄໝທຳອິດເລີ່ມແຕ່ປີ ຄສ 1905 ມີຄວາມຈະເລີນຮຸ່ງເຮືອງ ແລະ ປ່ຽນແປງເປັນສະໄໝຂອງ ການຂະຫຍາຍຕົວໃນທຸກໆດ້ານຢ່າງສະໝ່ຳສະເໝີຕົນເຖິງປີ ຄ.ສ 1913 ເຮົາສາມາດພິຈາລະນາຢ່າງລະອຽດເຖິງອຸປະສັກ (Demamd ) 3 ເຊິ່ງເປັນໝາກຫົວໃຈທີ່ສຳຄັນຂອງຄວາມກ້າວໜ້າ ເພາະວ່າເປັນຕົ້ນສະບັບຂອງພະລັງງານ ເຊິ່ງເຮັດໃຫ້ເສດຖະກິດຂະຫຍາຍຕົວຈົນເຖິງປີ 1930-1940 ດັ່ງທີ່ພວກເຮົາໄດ້ເຫັນກັນແລ້ວວ່າ ເສດຖະກິດສ່ວນທີ່ເປັນປະເພນີເກົ່າເມື່ອຄ່າຈ້າງສູງຂຶ້ນລົດສະນິຍົມຂອງຜູ້ບໍລິໂພກຂ້ອງຂ້າງຄົນທີ່ ກໍ່ມີຄວາມຕ້ອງການແບບເດີມຫຼາຍກວ່າການຜະລິດຂອງອຸດສາຫະກຳໃໝ່ ເພື່ອສະໜອງຄວາມຕ້ອງການເຫຼົ່ານີ້ໄດ້ມີການໃຊ້ແຮງງານເປັນສ່ວນເກີນ, ແຕ່ມີຄວາມຕ້ອງການເງິນທຶນໜ້ອຍ ແລະ ການຊ່ວຍເຫຼືອໃຫ້ມີອຸປະສັກຫຼາຍຂຶ້ນກໍ່ຊ່ວຍຮັກສາລະດັບຂອງເສດຖະກິດໃຫ້ຢູ່ສູງໄດ້. ອຸປະສົງທາງແບບທີ 2 ທີ່ເກີດຂຶ້ນທາງພາຍໃນ ແລະ ທາງພາຍນອກປະເທດຄື: ຄວາມຕ້ອງການຝ້າຍ, ລົດຈັກ 2 ລໍ້ ແລະ ຜົນຜະລິດອຸດສາຫະກຳເບົາຂອງຍີ່ປຸ່ນ, ອຸປະສົງທີ 3 ທີ່ເກີດ

ຂຶ້ນຈາກການໃຊ້ຈ່າຍຂອງລັດຖະບານເອງ ການໃຊ້ຈ່າຍເຫຼົ່ານັ້ນເພີ່ມຂຶ້ນເປັນ 6 ເທົ່າໃນໄລຍະ 20 ປີ ກ່ອນ, ປີຄສ 1913 ແລະ ການໃຊ້ຈ່າຍເພີ່ມຂຶ້ນ ສ່ວນໃຫຍ່ເປັນທາງການທະຫານຕະຫຼອດໄລຍະເວລາ 1889-1940 ລັດຖະບານລົງທຶນທາງເສດຖະກິດ ເຊິ່ງເປັນສ່ວນໜຶ່ງຂອງການລົງທຶນທັງໝົດພາຍໃນປະເທດນັ້ນຄິດໄລສະເລ່ຍແລ້ວເກີນ 50% ອັດຕາສ່ວນນີ້ສູງກວ່າປະເທດອື່ນໆໃນເອີຣົບ( ຍົກເວັ້ນຣັດເຊຍ ) ແລະ ເປັນອັດຕາທີ່ສະຫະລັດອາເມຣິກາ ເຮັດໄດ້ພຽງຄັ້ງດຽວເທົ່ານັ້ນ. ສະໄໝເສດຖະກິດຕົກຕໍ່າຂອງໂລກມີຄົນເຄີຍແນະນຳວ່າ ການທີ່ລດຖະບານສ້າງອຸປະສົງໃຫ້ຢູ່ລະດັບສູງເຊັ່ນນີ້ ແລະ ໃນເວລາດຽວກັນກໍ່ຂ້ອນຂ້າງຈະໝັ້ນຄົງ ເຊິ່ງກົງກັນຂ້າມກັບຣັດເຊຍໃນສະໄໝພະເຈົ້າຊາ ເມື່ອການໃຊ້ຈ່າຍຂອງລັດຖະບານກໍ່ມີບົດບາດພໍພຽງໃນການພັດທະນາເສດຖະກິດ ເປັນປັດໄຈໃຈສຳຄັນ ຕໍ່ຮູບແບບຂອງການພັດທະນາອຸດສາຫະກຳຂອງນີ່ປຸ່ນໃນສະໄໝກ່ອນສົງຄາມການລົງທຶນຂອງລັດຖະບານດັ່ງກ່າວມີຄື: ການສ້າງຂົວ, ທ່າເຮືອ, ຖະໜົນ,ທາງລົດໄຟ, ໂຮງງານເຫຼັກ ແລະ ເຫຼັກກ້າລວມທັງການໃຊ້ຈ່າຍທາງດ້ານການທະຫານ ໃນການຕໍ່ເຮືອ ແລະ ການຜະລິດອາວຸດ. ສິ່ງເຫຼົ້ານີ້ໄດ້ກໍ່ໃຫ້ເກີດຕະຫຼາດທີ່ໝັ້ນຄົງສຳລັບຜົນຜະລິດຂອງອຸດສາຫະກຳໜັງຂອງຍີ່ປຸ່ນ ໃນຂະນະທີ່ຍັງບໍ່ສາມາດທີ່ຈະໄປແຂ່ງຂັນກັບຕາເວັນຕົກໄດ້.

ລັດຖະບານເພີ່ມຄ່າໃຊ້ຈ່າຍນີ້ດ້ວຍການເພີ່ມພາສີເສດຖະກິດທີ່ກຳລັງຂະຫຍາຍຕົວຢູ່ສາມາດຮັບພາລະໄດ້ຢ່າງງ່າຍດາຍ ແລະ ລັດຖະບານຍັງຜູກຂາດກິດຈະກຳຕ່າງໆເຊັ່ນ: ຜູ້ຂາດາສູບ ເຊິ່ງເລີ່ມແຕ່ປີ ຄສ1898 , ຜູກຂາດເກືອໃນປີຄສ 1905 ແລະ ຍັງມີການໃຊເງິນທຶນຈາກຕ່າງປະເທດຢ່າງກວ້າງຂວາງ. ການລົງທຶນຂອງຕ່າງຊາດໃນຍີ່ປຸ່ນ ສ່ວນໃຫຍ່ເປັນໄປໃນຮູບແບບການຊື້ພັນທະບັດຂອງລັດຖະບານການຂະຫຍາຍຕົວພັນທະບັດເຫຼົ່ານີ້ ໄດ້ຊ່ວຍລັດຖະບານສາມາດສ້າງໂຮງງານເຫຼັກເຊັ່ນ: ໂຮງງານຍະວະຕະແລະ ຍັງໃຊ້ຄ່າສົງຄາມໃຫ້ແກ່ລັດເຊຍ ແລະ ຍີ່ປຸ່ນລວມໃຫ້ລັດຖະບານຍີ່ປຸ່ນມີເງິນຈ່າຍ, ລົດໄພຂອງຍີ່ປຸ່ນທີ່ຖືກໂອນເຂົ້າເປັນຂອງລັດໃນປີ ຄສ 1906 ພາຍໃນປະເທດ ແລະ ການຂະຫຍາຍຕົວຂອງການຄ້າກັບຕ່າງປະເທດ ການທີ່ມີເງິນທຶນຈາກຕ່າງປະເທດກໍ່ຍ້ອນປັດໄຈ 2 ຢ່າງນີ້:

- ຍີ່ປຸ່ນ ເຊິ່ງມີຄວາມເຊື່ອໝັ້ນໃນກຳລັງຂອງຕົນບໍ່ຍ້ານທ່າຈະຖືກຕ່າງຊາດຄວບຄຸມເສດຖະກິດຂອງຕົນ ບັນດານັກລົງທຶນ ແລະ ນັກທຸລະກິດຕ່າງຊາດກໍ່ເຫັນຍີ່ປຸ່ນເປັນແຫຼ່ງທີ່ຈຳນຳເງິນມາລົງທຶນ.
- ອີກປັດໄຈໜຶ່ງກໍ່ຄື ຍີ່ປຸ່ນຄວບຄຸມພາສີອາກອນຄື: ພຽງສ່ວນໜຶ່ງໃນປີ 1899 ແລະ ຄວາມຄຸມທັງໝົດໃນປີຄສ 1911 ເຮັດໃຫ້ນີ່ປຸ່ນສາມາດໃຊ້ລະບົບພາສາອາກອນຊ່ວຍປ້ອງກັນອຸດສາຫະກາທີ່ສາຄັນ.

ອັດຕາການໃຊ້ຈ່າຍການລົງທຶນທີ່ສຳຄັນຂອງລັດຖະບານຍີ່ປຸ່ນໃນປີ ຄສ 1905 ປາກົດວ່າ ຢູ່ໃນລະດັບສູງເກີນໄປຈະເຮັດໃຫ້ລັດຖະບານບໍ່ສາມາດທີ່ຈະຫາເງິນມາໝູນໄດ້ທັນ ປະມານປີ ຄສ 1911 ລັດຖະບານຍີ່ປຸ່ນໄດ້ຮັບແມ່ນ ການຄ້າລະຫວ່າງປະເທດຫຼຸດລົງຢ່າງໜັກ ແຕ່ປີ ຄສ 1915 ສົງຄາມຊ່ວຍສິ່ງແຮງດັນທີ່ເຂັ້ມແຂງຂຶ້ນ ຊ່ວຍໃຫ້ເສດຖະກິດຂະຫຍາຍຕົວເພາະຍີ່ປຸ່ນມີສ່ວນຮ່ວມໃນກຳລັງທະຫານໜ້ອຍ ແຕ່ກາລັງຊື້ອາວຸດກໍ່ລັ່ງໄຫຼເຂົ້າມາຈາກໄປເທດພັນທະມິດ. ນອກນັ້ນ, ຕະຫຼາດອາຊີ ແລະ ບ່ອນອື່ນໆ ເຊິ່ງຕັດຂາດຈາກການຕັດສິນເດີມໃນເອີຣົບ ກໍ່ກາກັນສັ່ງອາວຸດຈາກຍີ່ປຸ່ນເພີ່ມຂຶ້ນເປັນຈຳນວນຫຼວງຫຼາຍ.

ລະຫວ່າງປີ ຄສ 1915-1920 ເສດຖະກິດຍີ່ປຸ່ນຂະຫຍາຍຕົວໄວ ການຂົນສົ່ງທາງເຮືອຂອງເອີຣົບຖືກທຳລາຍ ເຊິ່ງເປັນໂອກາດດີໃຫ້ແກ່ເຮືອຂອງຍີ່ປຸ່ນມີຂະໜາດໃຫຍ່ຂຶ້ນ ໂດຍອາໄສອັດຕາຄ່າຂົນສົ່ງທີ່ສູງຂຶ້ນແລະ ການຂົນາສົ່ງຝ້າຍກໍ່ໄດ້ກຳລັງມະຫາສານເຖິງວ່າສິນຄ້າຈະສູງຂຶ້ນແຕ່ອັດຕາເງິນວົງທຶນກໍ່ສູງຂຶ້ນເຊັ່ນກັນ. ນອກນີ້ ກໍ່ເປັນຄັ້ງທາອິດຍີ່ປຸ່ນເປັນເຈົ້າໜີ້ ໂດຍມີທອງຄຳສຳຮອງຢູ່ທັງພາຍໃນ ແລະ ຕ່າງປະເທດຫຼາຍກວ່າ ສອງພັນລ້ານເຢນ ເປັນການເພີ່ມຂຶ້ນ 6 ເທົ່າໃນເວລາ 6 ປີ ( ປຶ້ມອາຊີຕາເວັນອອກສຽງໃຕ້ ,ຜູ້ຂຽນ:ຂັນຈະເລີນພັນທຸ ຫົວທີ 3 ພສ. 2525 ໜ້າທີ 614 )

ເວົ້າລວມແລ້ວ ຍີ່ປຸ່ນແມ່ນປະເທດໜຶ່ງທີ່ນອນໃນທະວີບອາຊີທີ່ມີການພັດທະນາທາງດ້ານເສດຖະກິດຂະຫຍາຍຕົວຢ່າງໄວວາ ແລະ ພະຍາຍາມທີ່ຈະຊອກສະແຫວງຫາຫົວເມືອງຂຶ້ນ ເວລາທີ່ເຢຍລະມັນ ແລະ ອີຕາລີແຂ່ງຂັນກັບຝຣັ່ງ, ອັງກິດ ເພື່ອຊອກຫາອານານິຄົມ ແລະ ຕະລາດສິນຄ້ານັ້ນ, ຍີ່ປຸ່ນກໍກາຍເປັນມະຫາອຳນາດໃນອາຊີຫຼັງຈາກຊະນະສົງຄາມກັບຈີນ ຄສ 1895 ແລະ ຊະນະລັດເຊຍ ຄສ 1905 ຍີ່ປຸ່ນໄດ້ເກາະໃຕ້ຫ້ວນຂອງຈີນ ແລະ ເກາະຈາຄາລິນ ດິນຕອນໃຕ້ຂອງລັດເຊຍນອກນັ້ນຍີ່ປຸ່ນຍັງແຜ່ອຳນາດຂະຫຍາຍດິນແດນເຂົ້າໄປໃນເກົາຫຼີ ແລະ ແມນຈູລີຂອງຈີນການແຂ່ງຂັນຊອກຫາອານານິຄົມ ແລະ ຂະຫຍາຍອານານິຄົມຂອງປະເທດມະຫາອຳນາດໄດ້ເຮັດໃຫ້ສະຖານະການຂອງໂລກກ່ອນສົງຄາມໂລກຄັ້ງທີ 1 ຕົກຢູ່ໃນສະພາບທີ່ເອີ້ນວ່າ ອານາທິປະໄຕລະຫວ່າງຊາດ ໂດຍກົດໝາຍລະຫວ່າງຊາດບໍ່ອາດສາມາດຢັບຢັ້ງບໍ່ໃຫ້ປະເທດມະຫາອຳນາດໃຊ້ສົງຄາມເປັນເຄື່ອງມືໃນການຂະຫຍາຍດິນແດນ ແລະອິດທິພົນ ແຕ່ເນື່ອງຈາກເຫດຜົນທີ່ປະເທດມະຫາອຳນາດຕ່າງກໍຮູ້ສຶກບໍ່ປອດໄພທີ່ຈະຢູ່ຢ່າງໂດດດ່ຽວ ແລະ ຕ້ອງປະເຊີນໜ້າກັບຄູ່ແຂ່ງຈາກປະເທດທີ່ຂະຫຍາຍຕົວອື່ນໆ. ດັ່ງນັ້ນ, ຈິ່ງພະຍາຍາມກຳຈັດ ແລະ ຮ່ວມມືເພື່ອຜົນປະໂຫຍດຮ່ວມກັບບັນດາປະເທດທີ່ຄ້າຍຄືກັນ ນັບແຕ່ປີ ຄສ 1870 ເປັນຕົ້ນມາຊາດມະຫາອຳນາດຕ່າງໆໃນເອີຣົບໄດ້ພາກັນເພີ່ມງົບປະມານການສ້າງຕັ້ງ ແລະ ປັບປຸງກອງທັບໄປຄຽງຄູ່ກັບການຂະຫຍາຍເສດຖະກິດຈາກການແຂ່ງຂັນທາງດ້ານການທະຫານນີ້ໄດ້ນຳຜົນດີໄປສູ່ການສ້າງຕັ້ງກຸ່ມການເມືອງ, ການທະຫານ ສ້າງຕັ້ງຂຶ້ນໃນວັນທີ 20 ພຶດສະພາ ຄສ 1882 ເຢຍລະມັນ, ໂອຕຣິດ, ຮົງກາລີ ແລະ ອີຕາລີ ໄດ້ເຊັນສັນຍາເປັນພັນທະໄມຕີຕໍ່ກັນທີ່ກຸງວຽນ ເອີ້ນວ່າ ກຸ່ມສຳພັນທະມິດ ຫຼື ກຸ່ມສົນທິສັນຍາໄຕມິດ ມາໃນປີ ຄສ 1907 ປະກອບມີ ຝຣັ່ງ, ອັງກິດ ແລະ ລັດເຊຍ ໄດ້ເຊັນສັນຍາເປັນພັນທະມິດເພື່ອຊ່ວຍເຫຼືອກັນໃນກໍລະນີຖືກປະເທດອື່ນບຸກໂຈມຕີ ເອີ້ນວ່າ: ກຸ່ມສົນທິສັນຍາ ຫຼື ກຸ່ມຕຣີມິດ. ດັ່ງນັ້ນ, ການປະກົດຕົວຂອງກຸ່ມທະຫານດັ່ງກ່າວ ໄດ້ກໍ່ໃຫ້ເກີດຄວາມເຄັ່ງຕຶງຂຶ້ນຈົນກ້າວໄປສູ່ສົງຄາມໂລກຄັ້ງທີ 1 .

ສະພາບການຂອງໂລກກ່ອນສົງຄາມໂລກ ຄັ້ງທີ I ເປັນສະພາບຂອງການແຂ່ງຂັນກັນ ເພື່ອຂະຫຍາຍອານາດ ແລະ ດິນແດນໄວ້ໃນຄອງຄອງຂອງຊາດມະຫາອຳນາດ ໂດຍສະເພາະນັບຕັ້ງແຕ່ ອີຕາລີ ແລະ ເຢຍລະມັນປະສົບຜົນສຳເລັດໃນການໂຮມປະເທດໃນປີຄ.ສ 1821 ແລະ 1870 ສິ່ງຜົນເຮັດໃຫ້ສອງປະເທດມີກຳລັງທີ່ເຂັ້ມແຂງເທົ່າທຽບກັບບັນດາປະເທດມະຫະອຳນາດອື່ນໃນຂະນະນັ້ນ ດິນແດນທີວີບອາຟຣິກາ ແລະ ມະຫາສະໝຸດ ແລະ ແຂ່ງຂັນກັບກັບມະຫາອຳນາດອື່ນໆຢ່າງຈິງຈັງ

**ກ. ອັງກິດ:** ໄດ້ດິນແດນສ່ວນໜຶ່ງປະເທດໃນທະວີບອາຝຣິກກາເປັນອານານິຄົມເຊັ່ນ: ໄນຈີເລຍ: ສະຫະພາບອາຝຣິກກາ, ອູກັນດາ,ໂຊມາລີ ແລະ ອື່ນໆອີກ ນອກຈາກນີ້ຍັງມີດິນແດນໃນແຖບມະຫາສະໝຸດປາຊີຟິກຫຼາຍແຫ່ງ.

**ຂ. ຝຣັ່ງ:** ໄດ້ດິນແດນສ່ວນໜຶ່ງປະເທດໃນທະວີບອາຝຣິກກາເປັນອານານິຄົມເຊັ່ນ: ອານເຊຣີ, ກົງໂກ, ເກາະມາດາກັດສກາ ແລະ ອື່ນໆ ນອກຈາກນີ້ຍັງມີດິນແດນໃນແຖບມະຫາສະໝຸດປາຊີຟິກຫຼາຍແຫ່ງໄວ້ຄອບຄອງ.

**ຄ. ເຢຍລະມັນ:** ໄດ້ດິນແດນສ່ວນໜຶ່ງປະເທດໃນທະວີບອາຝຣິກກາເປັນອານານິຄົມເຊັ່ນ: ອາຝຣິກາຕາເວັນຕົກສຽງໃຕ້, ກາເມີຣຸນ ແລະ ແຂ່ງຂັນກັບຝຣັງໃນການຂະຫຍາຍອານານິຄົມໄປຍັງດິນແດນປະເທດມາຣົກທີ່ຍັງເປັນເອກະລາດ. ນອກນັ້ນ ເຢຍລະມັນຍັງໄດ້ດິນແດນແຖບມະຫະສະໝຸດປາຊີຟິກເຊັ່ນ: ໝູເກາະມາກແຊນ, ຄາໂລໄຣ , ມາເຣຍນາ, ບິດສມາດ, ນິວກີນີຕາເວັນຕົກໄວ້ໃນຄອບຄອງ.

**ງ. ອີຕາລີ:** ໄດ້ດິນແດນສ່ວນໜຶ່ງປະເທດໃນທະວີບອາຝຣິກກາໜ້ອຍກວ່າມະຫະອຳນາດອື່ນເປັນອານານິຄົມຄື: ລີບີໄວ້ໃນຄອບຄອງ. ດັ່ງນັ້ນ, ອີຕາລີຈຶ່ງຕ້ອງການດິນແດນໃນພາກສ່ວນອື່ນໆອີກທີ່ບໍ່ໄດ້ເປັນຂອງມະຫາອຳນາດໃດມາເປັນອານານິຄົມເຊັ່ນ: ເອທິໂອບີ,ໂຊມາລີ ນອກຈາກນັ້ນ ອີຕາລີ ຍັງພະຍາຍາມຂະຫຍາຍອິດທິພົນຂອງຕົນໄປຍັງຊີງເຂດຕາເວັນ

ອອກກາງ ເຊິ່ງເປັນເຂດອິດທິພົນຂອງຈັກກະພັກໂອໂຕມານ ເຊິ່ງເປັນເປົ້າໝາຍແຊກແຊງຈັກກະພັດອັງກິດ, ຝຣັ່ງ ແລະ ຣັດເຊຍມາກ່ອນແລ້ວ .

**ຈ. ຍີ່ປຸ່ນ:** ເປັນປະເທດປະເທດດຽວໃນທະວີບອາຊີ ທີ່ມີການພັດທະນາທາງດ້ານເສດຖະກິດໃຫ້ຂະຫຍາຍຕົວຢ່າງວ່ອງໄວ ແລະ ກໍ່ພະຍາມຍາມທີ່ຈະສະແຫວງຫາຫົວເມືອງຂຶ້ນຄືກັນບັນດາປະເທດອື່ນໆ. ໃນເວລາທີ່ເຢຍລະມັນ ແລະ ອີຕາລີແຂ່ງຂັນກັບອັງກິດ, ຝຣັ່ງ ໃນການຊອກຫາອານານິຄົມ ແລະ ຕະຫຼາດການຄ້ານັ້ນ, ຍີ່ປຸ່ນເປັນປະເທດດຽວທີ່ກາຍມາເປັນປະເທດມະຫາອຳນາດໃນອາຊີ ຫຼັງຈາກສູ້ຣົບກັບຈີນຊະນະ ໃນປີ ຄ.ສ 1905 ເຮັດຍີ່ປຸ່ນໄດ້ດິນແດນເພີ່ມຂຶ້ນຄື: ເກາະສະຕາລິນຕອນໃຕ້ ຈາກລັດເຊຍ. ຫຼັງຈາກນັ້ນ ຍີ່ປຸ່ນກໍ່ຂະຫຍາຍດິນແດນເຂົ້າໄປໃນເກົາຫຼີ ແລະ ເຂດແມນຈູລີຂອງຈີນ.

**ສ. ສະຫະລັດອາເມລິກາ** ກໍເປັນມະຫາອຳນາດອີກປະເທດໜຶ່ງ ທີ່ພະຍາຍາມຂະຫຍາຍອິດທິພົນເຂົ້າຄອບຄອງດິນແດນໃນພາກສ່ວນອື່ນໆຂອງໂລກ ເຊັ່ນ: ອາເມຣິກາລາຕິນ, ໝູ່ເກາະໃນມະຫາສະໝຸດປາຊີຟິກ ໄດ້ແກ່ ໝູ່ເກາະຮາຍວາຍ, ຟີລິບປິນ ແລະ ອື່ນໆ. ຫຼັງຈາກຣົບຊະນະສະເປນ ຫຼື ປະເທດແອັດສະປາຍ ໃນປີ ຄ.ສ 1899 ອາເມຣິກາກໍ່ໄດ້ເກາະຟີລິບປິນເປັນອານານິຄົມ ແລະ ໃຊ້ເປັນຖານທີ່ໝັ້ນໃນການຂະຫຍາຍການຄ້າເຂົ້າສູ່ປະເທດຈີນ.

ສັງລວມແລ້ວ ເຫດການຂອງໂລກໃນຊ່ວງກ່ອນເກີດສົງຄາມໂລກຄັ້ງທີ 1 ນັ້ນເປັນປະກົດການແຫ່ງການແຂ່ງຂັນສະແຫວງຫາອານານິຄົມ ແລະ ຂະຫຍາຍອິດທິພົນຂອງປະເທດມະຫາອຳນາດເຊິ່ງສົ່ງຜົນໃຫ້ສະຖານະການຂອງໂລກຕົກຢູ່ໃນສະພາບ ອານາທິປະໄຕລະຫວ່າງຊາດ ໂດຍທີ່ກົດໝາຍລະຫວ່າງຊາດບໍ່ສາມາດຢັບຢັ້ງປະເທດມີຫາອຳນາດໃຊ້ສົງຄາມເປັນເຄື່ອງໃນການຂະຫຍາຍດິນແດນ ແລະ ອິດທິພົນ. ສຸດທ້າຍກໍ່ກ່າວໄປສູ່ການຈັດຕັ້ງກຸ່ມຮ່ວມມືຂຶ້ນເພື່ອຜົນປະໂຫຍດທາງດ້ານການເມືອງ ແລະ ການທະຫານ  ເພື່ອບໍໃຫ້ຕົນເອງຢູ່ໂດດດ່ຽວ ແລະ ຕ້ອງປະເຊີນກັບຄູ່ແຂ່ງຂັນຕາມລຳພັນ ເຊັ່ນ: ໃນປີ ຄ.ສ 1882 ເຢຍລະມັນ, ໂອຕຣິດ-ຮົງກາລີ ແລະ ອີຕາລີ ໄດ້ຈັດຕັ້ງກຸ່ມສຳພັນ 3 ປະເທດຂຶ້ນເອີ້ນວ່າ: ກຸ່ມສົນທິສັນຍາໄຕຣມິດ . ໃນປີຄ.ສ 1907 ອັງກິດ, ຝຣັ່ງ ແລະ ຣັດເຊຍ ໄດ້ຈັດຕັ້ງກຸ່ມສັນຍາ 3 ປະເທດຂຶ້ນ ເອີ້ນວ່າ ກຸ່ມສົນທິສັນຍາຕຣີມິດ ການສ້າງຕັ້ງກຸ່ມການເມືອງນີ້ ໄດ້ກໍ່ໃຫ້ເຮັດໃຫ້ເກີດຄວາມເຄັ່ງຕຶງລະຫວ່າງປະເທດຂຶ້ນໃນເອີຣົບທີ່ມີລັກສະນະກຽມພ້ອມກ້າວສູ່ສົງຄາມ.

### 2.1 ການເຂົ້າຮ່ວມສງຄາມໂລກຄັ້ງທີ 1

- ແມ່ນເຂົ້າຮ່ວມຕາມສັນຍາທີ່ລະບຸໄວ້
- ຍີ່ປຸ່ນແລເຫັນຜົນປະໂຫຍດ (ໂດຍສະເພາະແມ່ນຫົວເມືອງຂຶ້ນຂອງເຢຍລະມັນ) ໃນທະວີບອາຊີ. ໂອເຊອານີ
- ຍີ່ປຸ່ນຊ່ວຍອັງກິດຕໍ່ຕ້ານກອງທັບເຮືອຂອງເຢຍລະມັນ ໃນບໍລິເວນທະເລຈີນໃຕ້ ແລະ ປາຊີຟິກ
- ເປັນປະເທດທີ່ມີບົດບາດຢູ່ໃນອາຊີໃນການຊອກຫາອານານິຄົມໂດຍສະເພາະບັນດາອານານິຄົມໃນທະວີບອາຊີ



ຍີ່ປຸ່ນເຂົ້າສູ່ສົງຄາມໂລກຄັ້ງທີ 1 ໂດຍເຂົ້າຮ່ວມຢູ່ຝ່າຍສຳພັນທະມິດໃນປີ ຄ.ສ. 1914 ໃນຂະນະທີ່ມະຫາອຳນາດຢຸໂຣບບໍ່ສົນໃຈອາຊີ ແລະ ກຳລັງຕິດພັນກັບສະໜໍລະພູມໃນຢຸໂຣບ ແຕ່ຍີ່ປຸ່ນກັບເບິ່ງເຫັນໂອກາດດີຈາກສົງຄາມໃນຢຸໂຣບ ຍີ່ປຸ່ນຖືໂອກາດໃນການບ່ຽງເບນຄວາມສົນໃຈຂອງເຢຍລະມັນ ກັບສົງຄາມຢຸໂຣບເພື່ອຂະຫຍາຍຂອບເຂດອິດທິພົນຂອງຕົນໃນຈີນ ແລະ ອີຊີປາຊີຟິກຢ່າງສະດວກ

ເນື່ອງຈາກເຫັນວ່າຝ່າຍສຳພັນທະມິດໄດ້ປຽບໃນສົງຄາມ ຍີ່ປຸ່ນຈຶ່ງປະກາດສົງຄາມກັບຈັກກະພັດເຢຍລະມັນ ເມື່ອວັນທີ 23 ສິງຫາ ຄ.ສ. 1914 ຍີ່ປຸ່ນໄດ້ເປັນພັນທະມິດກັບຈັກກະພັດອັງກິດເຂົ້າໂຈມຕີເມືອງຊິງເຕົາ ແລະ ອານາບໍລິເວນເຢຍລະມັນໃນເມືອງຈີນ ກອງທັບປະສົມອັງກິດ-ຍີ່ປຸ່ນໃນບໍ່ຊ້າກໍເຂົ້າໄປຍຶດປ້ອມປາການຊິງເຕົ່າຊຶ່ງເປັນຖານບັນຊາການດິນແດນອານານິຄົມຕາເວັນອອກຂອງເຢຍລະມັນ (ດິນແດນເຂດເຊົ່າເຢີຣມັນບໍລິເວນ ມົນທົນຊານຕຸງ ອີກທັງຍີ່ປຸ່ນຍັງບຸກໝູ່ເກາະຕ່າງໆຂອງເຢຍລະມັນທີ່ເປັນອິນແດນອານານິຄົມແຢະມັນໃນອາຊີ ອື່ນໆ ປະກອບດ້ວຍ  ໝູາເກາະມາເຣຍນາ, ໝູ່ເກາະແຄໂຣໂລນາ, ໝູ່ເກາະມາແຊນ ໃນມະຫາສະໝຸດປາຊີຟິກ ເຊິ່ງເປັນສ່ວນໜຶ່ງຂອງ ນິວກີນີຂອງເຢຍລະມັນ

ການບຸກຢ່າງວ່ອງໄວໃນດິນແດນເຢຍມັນບໍລິເວນເຂດສະປະທານອ່າວກຽວໂຈ ແລະ ການລ້ອມເມືອງຊິງເຕົາພິສູດນຄວາມສຳເລັດຂອງຍີ່ປຸ່ນ ກອງທະຫານອານານິກຄົມຂອງເຢຍລະມັນຍອມຈຳນົນຕໍ່ກອງທັບຍີ່ປຸ່ນໃນວັນທີ 7 ພະຈິກ ຄ.ສ. 1915 ແລະ   ຍີ່ປຸ່ນໄດ້ຄອບຄອງດິນແດນຊິງເຕົ່າທັງຫມົດເຖິງອານານິກມໃນປາຊີຟິກທັງໝົດຈາກເຢຍຍມັນ



ຮູບທີ 23 ກອງທັບຍີ່ປຸ່ນຢຶດສະໜາມຈາກເຢຍມັນໃນການປິດລ້ອມເມືອງຊິງເຕົ່າ

ນອກຈາກນີ້ຍີ່ປຸ່ນຍັງຫາຜົນປະໂຫຍດທາງເສດຖະກິດທ່າມກາງສົງຄາມທີ່ເກີດຂຶ້ນໃນຢູໂຣບ ດ້ວຍພັນທະມິດຕະເວັນຕົກໂດຍສະເພາະອັງກິດມີສ່ວນຮ່ວມຢ່າງຫຼາຍໃນສົງຄາມໃນຢູໂຣບ ຍີ່ປຸ່ນຈຶ່ງສົ່ງກອງທັບເຮືອເຂົ້າຊ່ວຍເຫລືອສົ່ງສິນຄ້າໃຫ້ຝ່າຍສົມພັນທມິດໃນທະເລເມດິແຕລາເນ ເຮັດໃຫ້ຜົນຜະລິດ, ການສົ່ງອອກຂອງຍີ່ປຸ່ນທະຍານສູງຂຶ້ນຢ່າງຕໍ່ເນື່ອງ

ຫຼັງສົງຄາມໂລກເທື່ອທີ່ໜຶ່ງຍຸດຕິ ຍີ່ປຸ່ນເປັນໜຶ່ງໃນປະເທດສົມພັນທມິດຫຼັກທີ່ຊະນະສົງຄາມໄດ້ເຂົ້າຮ່ວມຖືສິດທິປະໂຫຍດນສົນທິສັນຍາແວກຊາຍຈາກນີ້ຍີ່ປຸ່ນຍັງໄດ້ເປັນການຍອມຮັບຈາກກຸ່ມປະເທດສົມພັນທະມິດຈັດໃຫ້ເປັນຊາດ[ມະຫາອຳນາດ]ໜຶ່ງໃນຫ້າຊາດຫຼັງສົງຄາມ ຢຸກຫຼັງສົງຄາມໂລກເທື່ອທີ່ໜຶ່ງຈຶ່ງເປັນຢຸກທອງອີກຢຸກໜຶ່ງຂອງຍີ່ປຸ່ນໂດຍທີ່ຍີ່ປຸ່ນບໍ່ຕ້ອງທຸນຢ່າງຫລາຍແລະກລັບໄດ້ຜົນປະໂຫຍດກລັບມາທີ່ຄ່ອນຂ້າງສູງ

ນະໂຍບາຍຕ່າງປະເທດດ້ານການຮຸກຮານຂອງຍີ່ປຸ່ນຊ່ວງນີ້ໄດ້ສະແດງໃຫ້ຊາວໂລກໄດ້ເຫັນຢ່າງຊັດເຈນຂຶ້ນຫຼັງສົງຄາມຍຸດຕິພຽງບໍ່ຈັກປີ ເມື່ອຍີ່ປຸ່ນໄດ້ຖືໂອກາດລອບສະເໜີຂໍ້ຮຽກຮ້ອງ 21 ຕໍ່ລັດຖະບານຈີນເປນຢາງ ຂອງຢຸຫວຽນີເພື່ອຍີ່ປຸ່ນໄດ້ມີສິດທິພິເສດທາງເສດຖະກິດເພື່ອຂູດຮີດເອົາຜົນປະໂຫຍດໃນດິນແດນຈີນ ເຮັດໃຫ້ເກີດກຣະແສຕວາມຮູ້ສຶກຕໍ່ຕ້ານຍີ່ປຸ່ນຂຶ້ນໃນໝູ່ເກາະຊາວຈີນ ເມື່ອການເຈນຈາຕໍ່ຮອງກັບລັດຖະບານຈີນເປັນຢ່າງເຊື່ອງຊ້າປະນາມກົດດັນຈາກລະດັບນານາຊາດເຮັດໃຫ້ຍີ່ປຸ່ນຍອມຜ່ອນຜັນລຸດຂໍ້ຮຽກຮ້ອງລົງ ແຕ່ກໍມີການລົງນາມສັນຍາໃນເດືອນພຶດສາພາ ຄ.ສ. 1915 ສ່ວນສົນທິສັນຍາພັນທະມິດອັງກິດ-ຍີ່ປຸ່ນໄດ້ຮັບການຕໍ່ອາຍຸຂະຫຍາຍຂອບເຂດໃນສອງເທົ່າໃນປີ ຄ.ສ. 1905 ແລະ ຄ.ສ. 1911 ກ່ອນທີ່ຈະສັນຍາຈະໝົດອາຍຸໃນປີ ຄ.ສ. 1921 ໄດ້ຖືກຍົກເລີກຢ່າງເປັນທາງການໃນປີ ຄ.ສ. 1923

## ການແທກແຊງໄຊບ ິເຣຍ

ຫຼັງຈາກການລົ້ມລະລາຍ ຂອງລະບອບກະສັດຊາຣ໌ໃນຣັດເຊຍ ລະບອບການປົກຄອງຊົ່ວຄາວໃນປີ ຄ.ສ. 1917 ພັກໂບນເຊວິກໄດ້ຕັ້ງລັດຖະບານໃໝ່ທີ່ໄດ້ລົງນາມເຮັດສັນສາເສິກແຍກ ກັບ ເຢຍລະມັນ ຫຼັງຈາກເຫດການນີ້ຊາວຣັດເຊຍໄດ້ສູ້ຮົບກັນເອງໃນ[ສົງຄາມກາງເມືອງໃນຫຼາຍຝ່າຍ]



ຮູບທີ 24 ກອງພົນຍີ່ປຸ່ນສອນສະໜາມຫຼັງຍຶດເມືອງໃນໄຊບີເຣຍ

ໃນເດືອນກຣິກດາກມ ຄ.ສ. 1918 ປຣະທານາທິບດີວູດໂຣວິນສັນ ຂໍໃຫ້ລັດຖະບານຍີ່ປຸ່ນຈັດຫາດທານ 7,000 ນາຍຊຶ່ງເປັນສ່ວນຫນຶ່ງຂອງພັນທມິດລະຫວ່າງປະເທດຈຳນວນ 25,000 ນາຍວາງແຜນທີ່ຈະສະໜັບສະໜູນກອງກຳລັງນອກປະເທດອາເມຣິກາໃນໄຊບີເຣຍ ນາຍົກລັດຖະມົນຕີ ມະຊະທະເກະ ເທະຣະອຸຈິ ຕົກລົງທີ່ຈະສົ່ງທະຫານ 12,000 ນາຍ ແຕ່ມີເງື່ອນໄຂທີ່ຈະຕ້ອງຢູ່ພາຍໃຕ້ການບັງຄັບບັນຊາຂອງຍີ່ປຸ່ນແທນທີ່ຈະເປັນສ່ວນຫນຶ່ງຂອງພັນທະມິດລະຫວ່າງປະເທດ ຍີ່ປຸ່ນມີແຮງຈູງໃຈຊ່ອນເລັ້ນຫຼາຍຢ່າງສຳລັບການສົ່ງທະຫານເຂົ້າຮ່ວມດັ່ງກ່າວຊຶ່ງທັງຫມົດເຖິງການ

ເປັນສັດຕູທີ່ຮຸນແຮງ ແລະ ຄວາມຢ້ານຕໍ່ລັດທິກອົມມິວນິດຕ໌ ຄວາມມຸ້ງມັ່ນທີ່ຈະຊົດໃຊ້ຄວາມເສຍຫາຍໃນອະດີດໃຫ້ກັບຣັດເຊຍ ຄວາມປາດຖະໜາທີ່ຈະສ້າງ "ບັນຫາທາງເຫນືອ" ໃນການຖືຮັກສາຄວາມປອດໄພຂອງຍີ່ປຸ່ນບໍ່ວ່າຈະໂດຍການສ້າງສະຖານະລັດກັນຊົນ ຫລື ຜ່ານການໄດ້ມາຊຶ່ງດິນແດນທັນທີ

ໃນເດືອນພະຈິກ ປີ ຄ.ສ. 1918 ກອງທັບຍີ່ປຸ່ນ ກວ່າ 70,000 ນາຍພາຍໃຕ້ເສນາທິການຢູອິ ມິດຊຶເອະໄດ້ບຸກເຂົ້າຄອບຄອງທ່າເຮືອເມືອງໃຫຍ່ໆ ທັງໝົດໃນຂອງລັດເຊຍ ແລະ ຕະເວັນອອກ ຂອງໄຊບີເຣຍ

ໃນເດືອນມິຖຸນາຍນ ຄ.ສ. 1920 ມີພົນລະເຮືອນຍີ່ປຸ່ນປຣະມານ 450 ຄົນແລະທະຫານຍີ່ປຸ່ນ 350 ນາຍພ້ອມດ້ວຍຜູ້ສະໜັບສະໜູນກອງທັບສີຂາວຂອງຣັດເຊຍຖືກສັງຫານໝູ່ໂດຍກອງກໍາລັງພົນທີ່ກ່ຽວຂ້ອງກັບ ກອງທັບແດງ ທີ່ນິໂຄເລັບເທິງແມ່ນໍ້າອາມູນ ພັນທມິດຈຶ່ງຖອນຕົວອອກຈາກວາລາດິວອສຕ໋ອກຫຼັງຈາກການຈັບກຸມ ແລະ ການປະຫານຊີວິດຂອງຜູ້ນໍາກອງທັບຂາວພົນເຮືອເອກອສເລັດຊານເດີ ໂຄນແຊນ ໂດຍກອງທັບແດງ ຢ່າງໃດກໍຕາມຍີ່ປຸ່ນຕັດສິນໃຈທີ່ຈະຄົງກໍາລັງທະຫານປະຈໍາການໄວ້ຢູ່ສ່ວນໃຫຍ່ເນື່ອງຈາກຄວາມຢ້ານກົວການແພ່ກຣະຈາຍຂອງລັດທິກອົມມິວນິດຕ໌ເຂົ້າໃກ້ປະເທດຍີ່ປຸ່ນແລະອານານິກມເກົາຫຼີຂອງຍີ່ປຸ່ນແລະແມນຈູເຣຍ ກອງທັບຍີ່ປຸ່ນໃຫ້ການສະໜັບສະໜູນທາງທະຫານແກ່ ລັດຖະບານຊົ່ວຄາວປ່ຽນມູນເຍຍຊຶ່ງເປັນລັດຖະບານທີ່ນິຍົມຍີ່ປຸ່ນໃນເມືອງວລາດິວອົດຕ໊ອກໃຫ້ຕໍ່ຕ້ານສາທາລະນະລັດຕາເວັນອອກໄກຊຶ່ງໄດ້ຮັບການໜຸນຫຼັງຈາກລັດຖະບານບອນເຊວິກໃນກຣຸງມອດໂກ

ການມີສ່ວນຮ່ວມຂອງຍີ່ປຸ່ນໃນການຮົບຢ່າງຕໍ່ເນື່ອງກ່ຽວຂ້ອງກັບສະຫະຣັດອາເມຣິກາ ຊຶ່ງສົງໄວ່ວ່າຍີ່ປຸ່ນມີການອອກແບບດິນແດນໃນໄຊບີເຣຍ ແລະ ຣັດເຊຍຕະເວັນອອກໄກ ພາຍໃຕ້ແຮງກົດດັນທາງການທູດຢ່າງຮຸນແຮງຈາກສະຫະລັດອາເມຣິກາ ແລະ ອັງກິດປະເຊີນໜ້າກັບຄວາມຂັດແຍ້ງພາຍໃນປະເທດທີ່ເພີ່ມຂຶ້ນເນື່ອງຈາກຕົ້ນທຸນທາງເສດຖະກິດສິ່ງຄົນອອກໄປເທິງອີກປະເທດຂອງນາຍົກລັດຖະມົນຕີໂທະໂມະ ຊະບຸໂຣຖະໂຕ ຈຶ່ງຕັດສິນໃຈຖອນກໍາລັງທະຫານຍີ່ປຸ່ນອອກໃນເດືອນຕຸລາ ຄ.ສ. 1922 ມີຜູ້ເສຍຊີວິດ 5,000 ລາຍຈາກການຕໍ່ສູ້ຫລືເຈັບປ່ວຍ ດ້ວຍຄ່າໃຊ້ຈ່າຍໃນເຂົ້າຮ່ວມຮົບກວ່າ 900 ລ້ານເຢນ

ລະບົບການເມືອງສອງພັກທີ່ພັດທະນາໃນຍີ່ປຸ່ນຕັ້ງແຕ່ຊ່ວງປ່ຽນສິດວັດນັ້ນມີມາຊ້າດົນຫຼັງສົງຄາມໂລກເທື່ອທີ່ 1 ເຮັດໃຫ້ເກີດຊື່ຫລິ້ນສໍາລັບຊ່ວງເວລານີ້ວ່າ "ປະຊາທິປະໄຕໄທໂຊ" ປະຊາຊົນເຣີ່ມບໍ່ສົນກັບໜີ້ສິນຂອງປະເທດທີ່ເພີ່ມຂຶ້ນໃນຂະນະດຽວກັນກົດຫມາຍການເລືອກຕັ້ງສະບັບໃໝ່ໄດ້ເກີດຂຶ້ນສໍາລັບຜູ້ມີສິດທິເລືອກຕັ້ງແລະໄດ້ມີການຮຽກຮ້ອງໃຫ້ມີການລົງຄະແນນສຽງສາກົນແລະການຮື້ເຄືອຂ່າຍພັກການເມືອງເກົ່າ ນັກສຶກສາ,ອາຈານມະຫາວິທະຍາໄລ ແລະ ນັກຂ່າວຊຶ່ງໄດ້ຮັບການສະໜັບສະໜູນຈາກສຫພາບແຮງງານໄດ້ຮັບແຮງບັນດານໃຈຈາກແນວຄິດປະຊາທິຫປະຊາທິປະໄຕ  ສັງຄົມນິຍົມ ຄອມມິວນິດຕ໌ ຜູ້ນິຍົມອານາທິປະໄຕຄວາມຄິດອື່ນໆ ທີ່ຫຼາກຫຼາຍ ເຮັດໃຫ້ມີການປະທ້ວງໃນທີ່ສາທາລະນະເປັນຈໍານວນຫລາຍແຕ່ເປັນລະບຽບເພື່ອສະໜັບສະໜູນການລົງຄະແນນສຽງຂອງຜູ້ຊາຍທົ່ວໆ ໄປໃນປີ ຄ.ສ. 1919 ແລະ ຄ.ສ. 1920

ການເລືອກຕັ້ງ ທະກະອະທິຄະໂຕະ ເປັນນາຍົກລັດຖະມົນຕີຂອງຍີ່ປຸ່ນຍັງຄົງດໍາເນີນການປະຕິຮູບປະຊາທິປະໄຕທີ່ໄດ້ຮັບການສະໜັບສະໜູນຈາກຜູ້ມີອິດທິພົນທາງດ້ານຊ້າຍ ຈຸດສິ້ນສຸດຂອງການອອກສຽງລົງຄະແນນຊາຍແບບສາກົນໃນເດືອນມີນາ ຄ.ສ. 1925 ຮ່າງກົດຫມາຍສະບັບນີ້ໃຫ້ສິດທິຊາຍທຸກຄົນທີ່ອາຍຸເກີນ 25 ປີມີສິດທີໃນການອອກສຽງລົງຄະແນນ ຫາກພວກທ່ານອາໄສຢູ່ໃນເຂດເລືອກຕັ້ງຢ່າງນ້ອຍໜຶ່ງປີ ແລະ ຕ້ອງບໍ່ມີທີ່ຢູ່ອາໄສ ຜູ້ມີສິດເລືອກຕັ້ງຈຶ່ງເພີ່ມຂຶ້ນຈາກ 3.3 ລ້ານເປັນ 12.5 ລ້ານ

ໃນສະຖານນະການທາງການເມືອງໃນສະໄໝນີ້ມີບຣິນຄການເມືອງໃໝ່ເພີ່ມຈຳນວນຂຶ້ນເຣື່ອຍໆ ທັງຫມົດທັງພັກສັງຄົມນິຍົມແລະພັກຄອມມິວນິດຕ໌ ຄວາມຢ້ານຕໍ່ຜູ້ມີສິດທິເລືອກຕັ້ງໃນວົງກວ້າງ ອານາດຝ່າຍຊ້າຍ ແລະການປ່ຽນແປລງທາງສັງຄົມທີ່ເພີ່ມຂຶ້ນນຳໄປສູ່ຊຶ້ນເລື່ອງຂອງກົດໝາຍສັນຍາສັນຕິພາບໃນປີກ.ສ. 1925 ຊຶ່ງຫ້າມບໍ່ໃຫ້ມີການປ່ຽນແປລງໂຄງສ້າງທາງການເມືອງ

**ການຍ ິດຄອງແມນຈ ູເຣຍ** ຈັກກະວັດຍີ່ປຸ່ນເຂົ້າຢຶດຄອງແມນຈູເຣຍເມື່ອປີ 2474 ສະຖາປະນາປະເທດໃໝ່ "ແມນຈູກົວ" ພ້ອມກັບໃຫ້ຈັກກະພັດ ອົງຄ໌ສຸດທ້າຍແຫ່ງລາຊະວົງຊິງຂຶ້ນະຄອນອົງລາດເປັນຈັກກະພັດແຫ່ງແມນຈູກົວແຕ່ເປັນພຽງຈັກຣິບຣິນດິຫຸ່ນເຊີດ ບໍ່ມີອຳນາດໃນການປົກຄອງຕົນເອງ ອານາດການປົກຄອງທັງໝົດລ້ວນຢູ່ກັບຍີ່ປຸ່ນແມ່ນພັກກົກມິນຕັງ ແລະ ນານາປະເທດບໍ່ຍອມຮັບຮອງແຕ່ກັບມີການເຈນຈາສະຫງົບສຶກໃນປີດຽວກັນ

ພາຍຫຼັງໄດ້ຢຶດຄອງແມນຈູເຣຍແລ້ວ ກອງທັບຈັກກະພັດຍີ່ປຸ່ນເລີ່ມຣຸກຮານຈີນທີ່ແຂວງ ຊາຮາ ແຕ່ກໍຖືກຕໍ່ຕ້ານໂດຍກອງທັບກົກມິນຕັງ ພົນທີ່ 29 ຂອງຈີນຢັງຄົງໃຊ້ຫອກດາບ, ອາວຸດລ້າສະໄໝຢູ່ຈຶ່ງພ່າຍແພ້ ເຮັດໃຫ້ພາກຕະເວັນຕົກຂອງປັກກິ່ງຕົກຢູ່ພາຍໃຕ້ອິດທິພົນຂອງຍີ່ປຸ່ນ ຈາກນັ້ນຍີ່ປຸ່ນກໍຄ່ອຍໆ ບຸກລຸກ ແລະ ຜົນວົກແຜ່ນດິນຈີນໄປເລື້ອຍໆເຖິງປີ ພສ 2480 ກໍ່ສາມາດຢຶດຄອງແຜ່ນດິນໂດຍອ້ອມກຸງປັກກິ່ງໄວ້ໄດ້ເກືອບໝົດເຫຼືອສະເພາະດ້ານໃຕ້ ຍີ່ປຸ່ນໄດ້ຕັ້ງຕັ້ງລັດຖະບານຫຸ່ນຂຶ້ນປົກຄອງເຂດພື້ນທີ່ທີ່ຢຶດໄດ້ອີກຫຼາຍແຫ່ງທັງຫມົດທັງທີ່ເມືອງ ໜານຈິງ (ດົນກົງ)

ເມື່ອເກີດການປະທະກັບຍີ່ປຸ່ນທີ່ຂົວມາຣ໌ໂຄໂປໂລເມື່ອວັນທີ 7 ກໍລະກົດ (ຄ.ສ. 1937) ຊາວຈີນຈຳນວນຫລາຍໄດ້ຮ່ວມມືກັນຕໍ່ສູ້ເພື່ອຕໍ່ຕ້ານຍີ່ປຸ່ນ ຢ່າງໃດກໍດີຈີນໄດ້ຮ້ອງຮຽນຂໍຄວາມຊ່ວຍເຫລືອຈາກສັນນິບາດແຫ່ງຊາດ ແຕ່ຜົນທີ່ອອກມາຄືລົ້ມເຫລວ ທັງຫມົດທັງສົນທິສັນຍາ 9 ມະຫາອຳນາດດ້ວຍ ແລະເມື່ອເກີດການປະທະກັບຍີ່ປຸ່ນທີ່ຂົວມາຣ໌ໂຄໂປໂລໃກ້ ກຸງປັກກິ່ງ ຈຶ່ງເປັນຂໍ້ອ້າງທີ່ທາງການຍີ່ປຸ່ນສົ່ງທະຫານຍີ່ປຸ່ນເຂົ້າຢຶດເມືອງໃຫຍ່ຕ່າງ ໆ ຂອງຈີນທັງຫມົດທັງຊາຍຝັ່ງທາງເໜືອຈົນດຣອດໃຕ້

ປາຍເດືອນມິຖຸນາ ຄສ 1937 ຍີ່ປຸ່ນສົ່ງທະຫານຈຳນວນຫຼາຍຮ້ອຍນາຍມາຕັ້ງຫນ່ວຍປະຈຳທີ່ຂົວມາຣ໌ໂຄ ໂປໂລແລະກໍ່ການຝຶກຢູ່ບ່ອນນັ້ນ ໃນຂະນະດຽວກັນກໍມີກອົງກຳລັງທະຫານຈີນກົກມິນຕັ້ງທີ່ປະຈຳຢູ່ທີ່ເມືອງມື້ປີງໃກ້ ໆກັນ ຄອຍຖ້າເຝົ້າຣະວັງເບິ່ງຢູ່ຢ່າງໃກ້ຊິດ ໃນເຊົ້າວັນທີ 7 ກໍລະກົດ ອົງກຳລັງຍີ່ປຸ່ນໄດ້ໂທລະເລກໄປເຖິງກອງກຳລັງກົກມິນຕັ່ງວ່າມີທະຫານຂອງຕົນຫາຍໄປ ແລະ ເຊື່ອວ່າໄປຊ່ອນຢູ່ໃນເມືອງມື້ປີງຈຶ່ງຂອງເຂົ້າໄປຄົ້ນຫາ (ພາຍຫຼັງໄດ້ພົບຕົວໂດຍບໍ່ໄດ້ຮັບອັນຕະລາຍ) ມີຂອດຖຽງກັນວ່າເປັນເຫດບັງເອີນ ຫລື ເປັນການສ້າງເລື່ອງຂອງຝ່າຍຍີ່ປຸ່ນເພື່ອໃຊ້ອ້າງເພື່ອເປັນຈຸດເຣີ່ມຕົ້ນບຸກເຂົ້າຢຶດພາກກລາງຂອງປະເທດຈີນ

ຝ່າຍຈີນປະຕິເສດບໍ່ຍອມໃຫ້ກອງກຳລັງຍີ່ປຸ່ນເຂົ້າເມືອງ ໃນຕອນເຢັນມື້ນັ້ນ ຝ່າຍຍີ່ປຸ່ນຈຶ່ງຍື່ນຄຳຂາດໃຫ້ຝ່າຍຈີນຍອມໃຫ້ຝ່າຍຕົນບຸກເຂົ້າໄປຄົ້ນຄົນໃນເມືອງໄດ້ພາຍໃນ 1 ຊົ່ວໂມງ ບໍ່ດັ່ງນັ້ນຈະຍິງຖະຫຼົ່ມດ້ວຍປືນໃຫຍ່ ເມື່ອເຖິງເວລາທ່ຽງຄືນ ຍີ່ປຸ່ນລົ່ມຍິງປືນໃຫຍ່ເຄື່ອນກອງກຳລັງຂ້າມຂົວມາໂຄໂປໂລກົງໄປຈະເຂົ້າເມືອງ ຝ່າຍກົກມິນຕັ້ງຈຶ່ງສົ່ງທະຫານຈຳນວນ 1000 ນາຍ ເຂົ້າປ້ອງກັນຂົວຢ່າງສຸດຄວາມສາມາດ ແຕ່ຍີ່ປຸ່ນກໍບຸກຂ້າມໄປໄດ້ ແຕ່ຫຼັງຈາກໄດ້ຮັບກຳລັງເສີມທີ່ມີຈຳນວນຫລາຍກວ່າຝ່າຍຍີ່ປຸ່ນ ຝ່າຍຈີນຈຶ່ງສາມາດຢຶດຂົວຄືນໄດ້ສຳເລັດໃນມື້ຕໍ່ມາ ຍີ່ປຸ່ນດ້ວຍຈຳນວນກອງກຳລັງທີ່ນ້ອຍກວ່າຈຶ່ງຂໍເຈນຈາ ເຮັດໃຫ້ເຫດການຂັ້ນທີ່ 1 ສະຫງົບລົງໄດ້ຊົ່ວຄາວ ແຕ່ກອງກຳລັງຍີ່ປຸ່ນຍັງຄົງຕັ້ງປະຈຳຢູ່ທີ່ເດີມບໍ່ຍອມຖອຍ

ຝ່າຍກົກມິນຕັ໋ງໄດ້ປະຊຸມກັນຕົກລົງວ່າຈະຢຶດຂໍ້ວຕໍ່ໄປພະຍາຍາມທີ່ຈະບໍ່ເຈນຈາກັບຍີ່ປຸ່ນ ເພາະເຊື່ອຖືບໍ່ໄດ້ ແຕ່ຢ່າງໃດກໍດີ ຝ່າຍຈີນໄດ້ສົ່ງຄົນໄປເຈນຈາເພື່ອຍຸດຕິຄວາມຂັດແຍ່ງດ້ວຍສັນຕິວິທີ ຝ່າຍຍີ່ປຸ່ນຍອມເຈນຈາແຕ່ຈະຖືວ່າຫາກຈີນເພີ່ມກອງກຳລັງກໍຈະຖືວ່າເປັນການຍົວະໃຫ້ຮ້າຍ ຊຶ່ງໂດຍແທ້ຈິງຂະນະນັ້ນຝ່າຍຍີ່ປຸ່ນກຳລັງຊື້ເວລາດ້ວຍການຍອມເຈນຈາເພື່ອການເຄື່ອນຍ້າຍກອງກຳລັງຈາກສ່ວນອື່ນມາ

ການເຈນຈາເທື່ອນີ້ ຝ່າຍຍີ່ປຸ່ນສັນຍາວ່າຈະບໍ່ຮຸກຮານປັກກິ່ງ ແລະ ເທີນເຈີນ ແຕ່ຝ່າຍຈີນຕ້ອງກໍຕໍ່ຕ້ານຍີ່ປຸ່ນໃນເມືອງທັງສອງ ຈະຕ້ອງຮັບຜິດຊອບຕໍ່ເຫດການປະທະກັນເມື່ອວັນທີ 7 ກໍລະກົດ ທີ່ຂົວມາໂຄໂປໂລຈະຕ້ອງໃຫ້ນາຍພົນຊົງຜູ້ບັນຊາການກອງພົນ 29 ເທົ່ານັ້ນເປັນຜູ້ມາກອົກມາຕໍ່ອກອົງກຳລັງຍີ່ປຸ່ນ ເມື່ອຝ່າຍຈີນບໍ່ສາມາດຮັບເງື່ອນໄຂໄດ້ທັງໝົດ ຝ່າຍຍີ່ປຸ່ນຈຶ່ງບຸກເຂົ້າກຣຸງປັກກິ່ງໂດຍໃຊ້ກອງກຳລັງເຕັມອັດຕາທີ່ມີຢູ່ ກອງກຳລັງຝ່າຍຈີນກອງພັນທີ່ 37 ແລະ132 ພະຍາຍາມຝ່າແນວຍີ່ປຸ່ນເຂົ້ານະຄອນປັກກິ່ງຖືກປິດກັ້ນຢ່າງໜັກກໍສາມາດຝ່າເຂົ້າໄປໄດ້ຢ່າງບອບຊ້ຳ ຫຼາຍມື້ຕໍ່ມາເມື່ອຖືກລ້ອມໜັກຫຼາຍຂຶ້ນ ກອງພົນ 29 ຈຶ່ງໄດ້ຕີຝ່າວົງລ້ອມຂອງຂ້າສຶກອອກໄປຈາກປັກກິ່ງແຕ່ກໍຖືກລ້ອມອີກ ກອງທັບຍີ່ປຸ່ນສາມາດເຂົ້າກຸງປັກກິ່ງໄດ້ເມື່ອວັນທີ 18 ສິງຫາ ໂດຍປາດສະຈາກການຕໍ່ຕ້ານຕັ້ງນາຍພົນຊົງເປັນນາຍກເທດມົນຕຣີ ແຕ່ທ່ານກໍໜີອອກຈາກເມືອງໄປຢ່າງລັບໆ ໃນອາທິດຕໍ່ມາ

ຫຼັງຈາກກຸງປັກກິ່ງ, ທຽນຈິນຖືກຢຶດຄອງ ທົ່ງຮາບຈີນຕອນເໜືອກໍຕົກເປັນເປົ້າການຮຸກຮານຂອງກອງທັບຍີ່ປຸ່ນທີ່ມີອາວຸດທັນສະໄໝຕ່ອດນຖືກຍຶດຄອງທັງໝົດໃນປາຍປີນັ້ນ ກອງທັບຈີນກົກມິນຕັ໋ງແລະກອງທັບຈີນຄອມມິວນິດຕ໌ກໍໄດ້ຮົບໄປແຕ່ລ່າດອີຍໄປໂດຍຕະຫລອດຈົນກະທັ້ງໄດ້ຮັບຊັຍຊະນະຕໍ່ກອງທັບຍີ່ປຸ່ນ

ກ້າວເຂົ້າສູ່ທົດສະຕະວັດທີ 2 ຂອງສະຕະວັດທີ 20 ສັງຄົມໂລກໄດ້ມີການປຽນໄປຢ່າງຫຼວງຫຼາຍ ຊຶ່ງມີການປຽນແປງມີຜົນສືບເນື່ອງຈາກສົງຄາມໂລກຄັ້ງທີ I ພາຍຫຼັງທີ່ສົງຄາມສິ້ນສຸດລົງໂລກກໍກ້າວເຂົ້າສູ່ໄລຍະສັນຕິພາບໂລກ. ບັນດາປະເທດທີ່ໄດ້ຮັບໄຊຊະນະ ຫຼື ກຸ່ມຕຣີມິດໄດ້ເປີດກອງປະຊຸມຂຶ້ນທີ່ປາຣີໃນວັນທີ 18 ມັງກອນ ປີ ຄ.ສ 1919 ເພື່ອຮ່າງສົນທິສັນຍາຕິພາບເຊັ່ນ: ປະເທດທີ່ປະລາໄຊໃນສົງຄາມ, ເຊິ່ງມີ 27 ເຂົ້າຮວ່ມ.ກອງປະຊຸມໄດ້ຄົ້ນຄວ້າປຶກສາຫາລືກ່ຽວກັບຫຼັກການ 14 ຂໍ້, ຂອງ ວູດໂຣວິນສັນ ນາຍົກລັດຖະມົນຕີ ຂອງ ສະຫະລັດອາເມຣິກາ ຮ່າງຂຶ້ນເພື່ອຮັກຄວາມເປັນທຳໃຫ້ແກ່ທຸກປະເທດບໍ່ວ່າຈະປະລາໄຊ ແລະຊະນະສົງຄາມ ມາໃນວັນທີ 28 ມີນາ 1919 ກອງປະຊຸມໄດ້ຈັດຂຶ້ນທີ່ ພະລາຊະວັງແວກຊາຍ ໄດ້ມີການຕົກລົງກັນກ່ຽວກັບການເສຍຄ່າມະຕິມະກຳສົງຄາມ.ກອງປະຊຸມດັ່ງກ່າວຮູ້ຈັກກັນໃນນາມສົນທິສັນຍາແວກຊາຍ "ມາຣອດວັນທີ"28 ເມສາ ປີ ຄ .ສ 1919 ອົງການສັນນິບາດຊາດໄດ້ຮັບການສ້າງຕັ້ງຂຶ້ນ ເຊິ່ງມີ ຈຸດປະສົງຄື ເພື່ອ ຮັກສາສັນຕິພາບຂອງໂລກົດ ແລະ ສົ່ງເສີມຮວ່ມມືລະຫວາງປະເທດ. ນອກນີ້ກໍຍັງໄດ້ມີສົນທິສັນຍາຕ່າງໆເກີດຂຶ້ນ,ເຊິ່ງເປັນການລົງໂທດຕໍ່ປະເທດທີ່ປະລາໄຊໃນສົງຄາມສະຖຽນນະພາບຂອງໂລກໃຫ້ມີຄວາມໝັ້ນຄົງຕໍ່ມາໄດ້ມີການເຈລະຈາກ່ຽວກັບອາວຸດທາງທະເລເຊັ່ນ:ກອງປະຊຸມວໍຊິງຕັນເຖິງ 3 ຄັ້ງໃນລະຫວ່າງປີ ຄ.ສ 1921

ສະພາບການນັບແຕ່ປີ ຄ.ສ 1919 - ຄ.ສ 1939ແບ່ງອອກເປັນ 3 ໄລຍະຄື: ໄລຍະທີ່ 1 ນັບແຕ່ປີ ຄ.ສ 1919 - 1929ເອີ້ນວ່າໄລຍະສັນຕິພາບເປັນຊວ່ງໄລຍະເວລາແຫ່ງການຟື້ນຟູເສດຖະກິດ,ສັງຄົມ ແລະ ການເມືອງຂອງປະເທດມະຫາອຳນາດຕ່າງທີ່ຖືກສົງຄາມໂລກຄັ້ງທີ I ທຳລາຍໂດຍມີການແຂ່ງຂັນຜະລິດສິນຄ້າ ເພື່ຈຳໜ່າຍ ມີການດັດແປງໂຮງງານຜະລິດອາວຸດເປັນໂຮງງານຜະລິດສິນຄ້າ. ໄລຍະທີ່ 2 ນັບແຕ່ປີ ຄ.ສ 1929 -1933 ເອີ້ນວ່າໄລຍະວິກິດການທາງດ້ານເສດຖະກິດ ເນື່ອງມາຈາກການແຂ່ງຂັນກັນຜະລິດສິນຄ້າ. ເຮັດໃຫ້ສິນຄ້າລົ້ນຕະຫຼາດ,ລາຄາສິນຄ້າຕົກຕ່ຳເປັນສາເຫດເຮັດໃຫ້ນາຍທຶນຕ້ອງປິດໂຮງຈັກ,ໂຮງງານແລະໄລຍະທີ່ 3 ນັບແຕ່ ປີ ຄ.ສ 1933 - 1939 ເອີ້ນວ່າໄລຍະກຳເນີດ

ຊາດນິຍົມເນື່ອງມາຈາກວິກິດການທາງດ້ານເສດຖະກິດເຮັດໃຫ້ປະເທດຕ່າງໆຕົກຢູ່ໃນສະພາບການທີ່ອ່ອນແອ, ປະຊາຊາຊົນມີມີຄວາມຕອ້ງການຜູ້ນຳທີ່ເຂັ້ງແຂງແລະເດັດດ່ຽວເພື່ອແກ້ໄຂການຢູ່ພາຍໃນປະເທດເຊັ່ນ: ໃນປະເທດເຢຍລະມັນ, ອີຕາລີ, ຍີ່ປຸ່ນ,.ໄດ້ຊອກຫາຕະຫຼາດເພື່ອຈຳໜ່າຍສິນຄ້າ. ດວ້ຍການຂະຫຍາຍອຳນາດເຂົ້າສູ່ຂົງເຂດຕ່າງໆເຊິ່ງນັກປະຫວັດສາດເອີ້ນວ່າ ລັດທິຟາຊິດ ແລະໄດ້ສ້າງຕັ້ງແກນໂຣມ - ແບັກແລັງ ໂຕກຽວຂຶ້ນໃນປີ ຄ.ສ 1937

ພາຍຫຼັງພາຍຫຼັງສະຕະວັດທີ 21 , ພື້ນການທາງດ້ານເສດຖະກິດສິນຄ້ານາຍທຶນໄດ້ຫຍາຍຕົວໄວ, ວິທະຍາສາດ-ເຕັກນິກກ້າວໜ້າ, ບັນດາປະເທດມີຄວາມຮຽກຮ້ອງຕ້ອງການທາງດ້ານຈຳໜ່າຍສິນຄ້າ ແລະ ກຳລັງແຮງງານ, ເປັນຄັ້ງທຳອິດທີ່ມວນມະນຸດເຮົາຮູ້ເຖິງສະຖານະການທັງໝົດຂອງໂລກ. ຂະບວນການປະຕິວັດວິທະຍາສາດໄດ້ທຳລາຍການຜູກຂາດຂອງພື້ນຖານທາງດ້ານເສດຖະກິດທຳມະຊາດ, ນຳໄປສູ່ການກຳເນີດຂອງຕະຫຼາດໂລກ ລະຫວ່າງບັນດາປະເທດກໍ່ໄດ້ລົບລ້າງຂອບເຂດຈຳກັດທາງດ້ານພາກພື້ນ, ເລີ່ມຕົ້ນໂດຍການພົວພັນແລກປ່ຽນໃນພາກພື້ນສາກົນຕົວຈິງ.ເປັນຄັ້ງທຳອິດຄວາມສຳນຶກກ່ຽວກັບສາກົນໄດ້ມີຄວາມໝາຍຄົບຖ້ວນຂອງມັນ, ໄດ້ແຜ່ຂະຫຍາຍອອກຈາກຂອບເຂດປະເທດນ້ອຍຂອງບໍລິເວນ, ລັດ, ປະຊາຊາດ. ທ່ານມາດ ແລະ ອັງກັນ ເວົ້າວ່າ: ອຸດສາຫພກຳໃຫຍາ ຄັ້ງທຳອິດທີ່ໄດ້ເປີດສາກປະຫວັດສາດໂລກ, ຍ້ອນການບີບບັງຄັງຂອງຕະຫຼາດໂລກ, ຊົນຊັ້ນນາຍທຶຮໄດ້ເຮັດໃຫ້ການຜະລິດ ແລະ ການຊົມໃຊ້ຂອງຫາບັນດາປະຊາຊາດທັງໝົດມີລັກສະນະສາກົນ... ປ່ຽນແທນໃຫ້ແກ່ສະພາວະໂດດດ່ຽວຂອງບັນດາທ້ອງຖິ່ນ ແລະຊົນຊາດຊົນເຜົ່າ ທີ່ຍັງເພິ່ງຕົນເອງກຸ່ມຕົນເອງກ່ອນໜ້ານີ້, ພວກເຮົາເຫັນວ່າ ບັນດາປະເທດໄດ້ມີການຂະຫຍາຍສາຍພົວພັນ, ມີການຂຶ້ນຕໍ່ກັນຢ່າງກວ້າງຂວາງ, ການເມືອງ, ເສດຖະກິດ ແລະ ການດຳລົງຊີວິດຂອງຄົນນັບມື້ນັບຍິ່ງຫັ່ນເປັນສາກົນ, ການພົວພັນເສດຖະກິດສາກົນຂະຫຍາຍຕົວຢ່າງແຂງແຮງ.

ທ້າຍສະຕະວັດທີ 19 ແລະ ຕົ້ນສະຕະວັດທີ 20 ລັດທິທຶນນິຍົມເສລີແກ່ງແຍ້ງກັນກ້າວເຂົ້າໄລຍະໃໝ່, ລະດັບການຫັນເປັນສັງຄົມຂອງການຜະລິດ ແລະ ການຫັນເປັນທັນສະໄໝຂອງເຕັກນິກນັບມື້ນັບສູງ ຍ້ອນແນວນັ້ນ, ໄດ້ເກີດມີຕະຫຼາດໂລກທີ່ເປັນເອກະພາບກັນ. ພ້ອມກັນນັ້ນໃນທົ່ວໂລກ ກໍ່ເກີດມີສອງກຸ່ມປະເທດຄື: ໜຶ່ງແມ່ນກຸ່ມປະເທດຈຳນວນໜ້ອຍໄປກົດຂີ່, ຂູດຮີດ, ສອງແມ່ນກຸ່ມປະເທດຈຳນວນຫຼວງຫຼາຍຖືກກົດຂີ່ຂູດຮີດ, ເນື້ອໃນຂອງການເມືອງສາກົນໃນໄລຍະຈັກກະພັດແມ່ນ:

- ຕໍ່ສູ້ຍາດເອົາສິດເປັນເຈົ້າໂລກ.
- ຕໍ່ສູ້ຍາດເອົາເອກະລາດ ແລະ ປົດປ່ອຍຊົນຊາດ.
- ການຕໍ່ສູ້ຂອງຊົນຊັ້ນກຳມະຊີບໂລກ ເພື່ອປົດປ່ອຍຕົນເອງ ແລະ ສ້າງສັງຄົມນິຍົມ.

## 3. ການກາຍເປັນຟາຊິດ

ສະພາບການໂລກໄລຍະປີຄ.ສ 1919 -1929 ເປັນໄລຍະແຫ່ງສັນຕິພາບ, ເພາະຄວາມຂັດແແຍ່ງລະຫວ່າງປະເທດສາມາດຕົກລົງກັນໄດ້ໂດຍສັນຕິວິທີ. ເຖິງຢ່າງໃດກໍ່ຕາມ, ສັນຕິພາບທີ່ມີຢູ່ ກໍ່ບໍ່ໄດ້ເກີດມາຈາກຄວາມສາມາດທີ່ຕົກລົງກັນໄດ້ໃນບັນຫາຄວາມຂັດແຍ່ງໃນແຕ່ລະປະເທດ. ແຕ່ເກີດຈາກນາໆຊາດຈຳຕ້ອງຍອມຮັບພາລະເດີມທັງໆທີ່ບໍ່ພໍໃຈ, ທັງນີ້ກໍ່ເພາະວ່າບໍ່ສາມາດປ່ຽນແປງສະພາບການຕ່າງກັນໄດ້. ການດຳເນີນງານຂອງບັນດາປະຊາຊາດໃນໂລກ ເພື່ອສະແຫວງຫາສະຖຽນລະພາບ ແລະ ສັນຕິພາບລະຫວ່າງປີ 1919-1929 ນັ້ນໄດ້ດຳເນີນໄປຕາມຮູບແບລັກສະນະແຕກຕ່າງກັນ.

ຍີ່ປຸ່ນເປັນປະເທດທຳອິດໃນທະວີບອາຊີທີ່ນຳເອົາການປົກຄອງແບບຟາດຊິດມານຳໃຊ້ຫຼັງຈາກໄດ້ຮັບໄຊຊະນະໃນການຮົບກັບລັດເຊຍເມື່ອປີ ຄສ 1905 ແລ້ວເຮັດໃຫ້ຍີ່ປຸ່ນເລີ້ມມີບົດບາດທາງດ້ານການເມືອງລະຫວ່າງປະເທດຫຼາຍຂຶ້ນ

**ກ.ຍີ່ປຸ່ນມີພື້ນຖານລັດທິຊຸນເສີກມາແຕ່ດົນນານ.**

ແຕ່ໃດໆມາຍີ່ປຸ່ນເປັນຊາດໜຶ່ງ ທີ່ມີລະບົບການປົກຄອງແບບບຸກຄົນດຽວມີອຳນາດ ແລະ ມີອົງການຈັດຕັ້ງຕ່າງໆທີ່ມີລັກສະນະເປັນພື້ນຖານໃຫ້ແກ່ລັດທິຊຸນເສີກໃນຫຼາຍອົງການທີ່ຄົງຕົວມາຈົນຮອດສະຕະວັດທີ XX . ນັບແຕ່ປີ ຄ.ສ1930 ກຸ່ມທະຫານທີ່ມີອິດທິພົນ ແລະ ມີບົກບາດທາງການເມືອງສູງໃນການບໍລິຫານປະເທດ ເຮັດໃຫ້ຮູບແບບການປົກຄອງຂອງຍີ່ປຸ່ນກ້າວສູ່ລັດທິທະຫານນິຍົມ(Militarsm) ປະກອບກັບຄວາມພາກພູມໃຈໃນເຜົ່າພັນຢ່າງຮ້າຍແຮງກ້າຂອງຄົນຍີ່ປຸ່ນກັນໄປຢຶດຖືອຸດົມການຕາມແບບຝາດຊິດຄືກັນກັບອີຕາລີ ແລະ ເຢຍລະມັນ.

**ຂ. ຄວາມຕ້ອງການເພື່ອແກ້ໄຂບັນຫາວິກິດການເສດຖະກິດ.**

**ກ້າວເຂົ້າສູ່ສະຕະວັດທີ** XX ການພັດທະນາປະເທດໄປສູ່ຄວາມທັນສະໄໝຂອງຍີ່ປຸ່ນຕາມຮູບແບບເສດຖະກິດທຶນນິຍົມເລີ່ມມີອຸປະສັກ.ເນື່ອງຈາກວ່າເປັນປະເທດທີ່ມີເນື້ອທີ່ດິນແຄບ, ປະຊາກອນຫຼາຍ, ຊັບພະຍາກອນມີໜ້ອຍ, ສະບຽງອາຫານ, ແລະ ວັດຖຸດິບຂາດເຂີນ. ນອກຈາກນີ້ ຍັງເປັນປະເທດຫົວເມືອງຂຶ້ນໜ້ອຍ.

ກ້າວເຂົ້າສູ່ ຄສ 1930 ກຸ່ມທະຫານທີ່ໄດ້ມີອິດທິພົນ ແລະ ບົດບາດທາງດ້ານການເມືອງສູງ ໃນການບໍລິຫານປະເທດເຮັດໃຫ້ຮູບແບບການປົກຄອງຍີ່ປຸ່ນກ້າວເປັນລັດທິທະຫານນິຍົມ ແລະ ມີຄວາມພາກພູມໃຈໃນເຜົ່າພັນຂອງຕົນໄດ້ນຳໄປສູ່ລັດທິຊາດນິຍົມ ເຊິ່ງເຮັດໃຫ້ຍີ່ປຸ່ນຢຶດຖືອຸດົມການຕາມລະບອບຟາຊິດ. ກ້າວເຂົ້າປີ ຄສ 1930 ສະພາບທາງດ້ານເສດຖະກິດ,ສັງຄົມ ແລະ ການເມືອງເກີດມີຄວາມປ່ວນ.ຂະບວນຊາດນິຍົມຫົວຮຸນແຮງໄດ້ເກີດຂຶ້ນ ແລະ ໄດ້ຮຽກຮ້ອງໃຫ້ປະຊາຊົນ-ທະຫານຮ່ວມຫົວກັນຕໍ່ຕ້ານລັດຖະບານ.



ຮູບທີ 25 ນາຍພົນໂຕໂຈ ຮິເດກິ ຜູ້ນຳຟາດຊິດຍີ່ປຸ່ນ

ດັ່ງນັ້ນ, ມາຮອດ ຄສ 1936 ຄະນະທະຫານພາຍໃຕ້ການນຳພາຂອງນາຍພົນໂຕໂຈຮິເດກິ ໄດ້ເຂົ້າຢຶດອຳນາດ ແລະ ດຳເນີນແຜນການຂະຫຍາຍອານາເຂດດ້ວຍຄຳຂວັນທີ່ວ່າ “ທະວີບອາຊີຕ້ອງເປັນຂອງຄົນອາຊີ” ແລະ ສ້າງວົງໄພບູນອາຊີເພື່ອເປັນສາກບັງໜ້າດວ້ຍການຢຶດເອົາພາກຕາເວັນອອກສ່ຽງເໜືອຂອງປະເທດຈີນໃນປີ ຄສ 1937 . ສັງລວມແລ້ວການກຳເນີດລະບອບຟາຊິສໃນສະຕະວັດທີ 20 ມີຜົນເຮັດໃຫ້ສະພາບສັງຄົມໂລກມີການປ່ຽນແປງທັງນີ້ກໍເນື່ອງມາຈາກແຜນນະໂຍບາຍຂອງພວກຟາຊິສທີ່ສຳພັນກັນເພື່ອຂະຫຍາຍດິນແດນ ແລະ ຈາກຄວາມອ່ອນແອຂອງປະເທດທຶນນິຍົມໂດຍສະເພາະລັດຖະບານຝຣັ່ງ, ອັງກິດ ທີ່ມີລັກສະນະໂຍະຍານໃຫ້ພວກຟາຊິສກຽມກຳລັງເພື່ອດັບ

ສູນສະຫະພາບໂຊວຽດ ແຕ່ຕໍ່ມາສິດຜົນປະໂຫຍດຂອງບັນດາປະເທດນາຍທຶນຕ່າງໆໄດ້ຖືກພວກຟາຊິສແຕະຕ້ອງເຊິ່ງນັບມື້ນັບຮຸນແຮງຂຶ້ນ ອັນເປັນສາເຫດນໍາໄປສູ່ການກໍາເນີດສົງຄາມໂລກຄັ້ງໃໝ່.

## 4. ການເຂົ້າຮ່ວມສົງຄາມໂລກຄັ້ງທີ II

ໃນຊ່ວງປີ 1920 ເປັນຊ່ວງປະຊາທິປະໄຕ ທີ່ກໍາລັງຮຸ່ງເຮືອງໃນຍີ່ປຸ່ນ ແຕ່ກໍຍັງບໍ່ສາມາດແກ້ໄຂບັນຫານທາງດ້ານເສດຖະກິດ ແລະ ການເມືອງທີ່ເກີດຂຶ້ນຢ່າງຕໍ່ເນື່ອງທັງພາຍໃນ ແລະ ຕ່າງປະເທດ. ທາງພາຍໃນແມ່ນບັນດາກຸ່ມນັກການເມືອງຝ່າຍຊ້າຍ ແລະ ຝ່າຍຂວາຕໍ່ສູ້ແຍ່ງຊີງອໍານາດກັນ ສ່ວນທາງພາຍນອກ ຍີ່ປຸ່ນຕ້ອງໄດ້ປະເຊີນກັບຄວາມຮູ້ສຶກທາງຊາດນິຍົມ ທີ່ກໍາລັງຂະຫຍາຍຕົວກ້ວາງຂວາງໃນກຸ່ມຊາວອາຊີ ເຊິ່ງເປັນການຕໍ່ຕ້ານຂະບວນການຂະຫຍາຍອານາດຂອງຍີ່ປຸ່ນ. ນອກຈາກນີ້ ຍັງຖືກຂັດຂວາງຈາກອາເມລິກາ ແລະ ອັງກິດ ຍີ່ປຸ່ນຍັງຕ້ອງຮັບພາລະທາງການເງິນຢ່າງໜັກຍ້ອນຍີ່ປຸ່ນໄດ້ທຸ້ມເທງົບປະມານທາງການທະຫານເພີ່ມຂຶ້ນທຸກປີ ຫຼັງຈາກການເຂົ້າຮ່ວມເຈລະຈາຕົກລົງຫຼຸດກໍາລັງທາງເຮືອທີ່ ວໍຊິງຕັນ  ໃນປີ 1922 ແລະ ທີ່ລອນດອນ ໃນປີ 1930 ແຕ່ຂໍ້ຕົກລົງດັ່ງກ່າວ ກໍ່ບໍ່ເປັນທີ່ພໍໃຈຂອງນັກຊາດນິຍົມໃນຍີ່ປຸ່ນ. ນອກຈາກນັ້ນ ເສດຖະກິດທົ່ວໂລກກໍຕົກຕໍ່າໃນປີ ຄ.ສ 1920 ເປັນຕົ້ນມາ. ເຊິ່ງມີຜົນກະທົບຂອງຍີ່ປຸ່ນອີກດ້ວຍ ເພາະສິນຄ້າຂອງຍີ່ປຸ່ນຖືກກີດກັນໃນຕະຫຼາດໂລກ ລັດຖະບານຍີ່ປຸ່ນຈິ່ງຕົກຢູ່ໃນສະພາບທີ່ບໍ່ມີປະສິດທິພາບຈໍາເປັນຕ້ອງເປີດທາງໃຫ້ແກ່ລັດຖະບານພະເດັດການທາງການທະຫານ ແລະ ກຸ່ມນັກຊາດນິຍົມຫົວຮຸນແຮງຄົນຍີ່ປຸ່ນຄິດວ່າການມີຊີວິດຢູ່ລອດ ມີພຽງສາມທາງຄືຕ້ອງມີຕະຫຼາດຈໍາໜາຍສິນຄ້າໃນປະເທດ ສາມາດລະບາຍຈານວນປະຊາກອນທີ່ລົ້ນປະເທດໄດ້ ເຮັດວຽກພາຍນອກປະເທດ ແລະ ຢູ່ລອດໄດ້ດ້ວຍການຂະຫຍາຍອານາດທາງການທະຫານແຕ່ທາງລອດທີສອງ ທາງທໍາອິດແມ່ນຖືກປິດຕາຍສໍາລັບຍີ່ປຸ່ນແລ້ວ ຍີ່ປຸ່ນຈິ່ງຕ້ອງເລືອກທາງ ເອົາທາງລອດທີສາມຄືລັດທິທະຫານນິຍົມ ຈິ່ງຮຽກຮ້ອງໃຫ້ປະຊາຊົນທັງໝົດ ໃຫ້ພັກການເມືອງຂອງຝ່າຍພົນລະເຮືອນຢຸດຕິບົດບາດທາງການເມືອງຂອງຕົນ ແລະ ຕ້ອງເຂົ້າລວມຕົວກັບລັດຖະບານ ຂອງລັດທິຫຼົງຊາດ ຂອງບ້ານເມືອງໃນທີ່ສຸດ.

ໃນປີ 1930 ຍີ່ປຸ່ນຈິ່ງມີບົດບາດໃນການຮຸກຮ້ານເພື່ອນບ້ານຂອງຕົນ ໂດຍການຮຸກຮານ ແມນຈູເລຍ ໃນປີ 1931 ແລະ ສະຖາປະນາປະເທດໃຫ້ເປັນປະເທດ ແມນຈູກົວ ໃນປີ 1932 ພາຍໃຕ້ອິດທິພົນຂອງຍີ່ປຸ່ນ ຈາກນັ້ນ ຍີ່ປຸ່ນກໍປະກາດເຮັດສົງຄາມຈີນ ໃນປີ 1937 ເຊິ່ງໄດ້ຮັບການຕໍ່ຕ້ານຈາກປະເທດມະຫາອໍານາດ ໂດຍສະເພາະແມ່ນ ສະຫາລັດອາເມລິກາ ໃນປີ 1937 ຍີ່ປຸ່ນກໍໄດ້ເຮັດສັນຍາກັບ ເຢຍລະມັນ ແລະ ອີຕາລີ ເມື່ອສົງຄາມລະເບີດຂຶ້ນໃນ ເອີຣົບ ໃນປີ 1939 ຍີ່ປຸ່ນຈິ່ງສວຍໂອກາດ ຕອນທີ່ພັນທະມິດຂອງຕົນມີໄຊໃນໄລຍະຕົ້ນຂອງສົງຄາມ ເຂົ້າຄວບຄຸມອິນດູຈີນຂອງຝຣັ່ງ ຕໍ່ມາໃນເດືອນ ທັນວາ ປີ 1941 ຍີ່ປຸ່ນເຂົ້າສູ່ສົງຄາມຕໍ່ຕ້ານພັນທະມິດ ທີ່ນໍາໂດຍ ສະຫາລັດອາເມລິກາ ເຖິງວ່າຍີ່ປຸ່ນຈະມີໄຊ ໃນໄລຍະທໍາອິດຂອງສົງຄາມອາຊີ ຈົນສໍາເລັດແຜນສ້າງ ວົງໄພບູນອາຊີບົວລະພາ ໃນປີ 1942 ຕາມຈິ່ງກໍາລັງທາງອາວຸດ ແລະ ເສດຖະກິດຂອງ ສະຫາລັດອາເມລະກາ ກໍມີຫຼາຍເຊິງພາຍກໍພິກສະຖານະການເປັນຕໍ່ຍີ່ປຸ່ນໄດ້ໃນທີ່ສຸດສົງຄາມດ້ານມະຫາອາຊີບົວລະພາຈິ່ງສິ້ນສຸດລົງໂດຍການປະລາໄຊຂອງຍີ່ປຸ່ນ ຫຼັງຈາກຍີ່ປຸ່ນຖືກລະເບີດປາລະມານູຂອງສະຫາລັດອາເມລິການ ທີ່ເກາະຮິໂລຊິມາ ແລະ ເກາະນາກາຊາກິ ໃນວັນທີ 6 ແລະ 9 ສິງຫາ 1945  ຕາມລໍາດັບນອກນັ້ນຍີ່ປຸ່ນຍັງຖືກລັດເຊຍທໍາລະຍົດສັນຍາບໍ່ຮຸກຮານຍີ່ປຸ່ນ ( ສັນຍາໝົດອາຍຸໃນປີ 1946 ) ໃນວັນທີ 8 ສິງຫາ.

**ຕົວຢ່າງ :**

**ສະໜາມຮົບອາຊີຕາເວັນອອກ ແລະ ມະຫາສະມຸດປາຊີຟິກ**

ເມື່ອສົງຄາມໂລກໄດ້ລະເບີດຂຶ້ນ ແລະ ແຜ່ລາມຢູ່ເອີຣົບ, ຍີ່ປຸ່ນເຊິ່ງຍຶດຄອງພາກຕາເວັນອອກສ່ຽງເໜືອເມືອງຊາຍຝັ່ງທະເລຂອງຈີນ ມາຕັ້ງແຕ່ປີ 1938 ເປັນຕົ້ນມານັ້ນກໍ່ໄດ້ພະຍາຍາມແຜ່ອິດທິພົນເຂົ້າອາຊີຕາເວັນອອກສ່ຽງໃຕ້ ແລະ

ບຸກຍຶດເກາະດອນຕ່າງໆໃນມະຫາສະໝຸດປາຊິຟິກໃນເດືອນ ມິຖຸນາ ປີ ຄ.ສ 1940 ຍີ່ປຸ່ນໄດ້ປະກາດເຂົ້າຮ່ວມສົງຄາມກັບເຢຍລະມັນ ແລະ ອິຕາລີໂດຍມີເນື້ອໃນວ່າຈະຊ່ວຍເຫຼືອເຊິ່ງກັນແລະກັນ ທາງດ້ານການເມືອງ, ເສດຖະກິດ ແລະ ການທະຫານຖ້າປະເທດໃດໜຶ່ງຖືກຮຸກຮານຈາກພາຍນອກ. ໃນຄະນະທີ່ສົງຄາມພວມລະເບີດຂຶ້ນນັ້ນຝຣັ່ງ, ອັງກິດ ແລະ ໂຮນລັງໄດ້ສຸມກຳລັງໃສ່ເອີຣົບເຊິ່ງເປັນການປະປ່ອຍຫົວເມືອງຂຶ້ນຢູ່ອາຊີຕາເວັນອອກສ່ຽງໃຕ້. ສະນັ້ນ, ເປັນໂອກາດດີໃຫ້ແກ່ຟາຊິດຍີ່ປຸ່ນໃນການຂະຫຍາຍອຳນາດໃນຂົງເຂດນີ້ຄື: ໃນເດືອນ ກໍລະກົດ ປີ ຄ.ສ 1941 ກອງທັບຍີ່ປຸ່ນໄດ້ບຸກເຂົ້າພະມ້າ ( ມຽນມາ ), ໄທ, ອິນໂດເນເຊຍ, ຖານທັບອັງກິດຢູ່ສິງກະໂປ ແລະ ອິນດູຈີນ. ແຕ່ເຫດການເຫຼົ່ານີ້ໄດ້ຖືກກີດຂວາງຈາກສະຫະລັດອາເມລິກາເຊິ່ງກຳລັງຂະຫຍາຍບົດບາດໃນຂົງເຂດມະຫາສະໝຸດປາຊີຟິກ.

ສະນັ້ນ, ໃນວັນທີ 7 ທັນວາ ຄ.ສ 1941 ຍີ່ປຸ່ນຈຶ່ງໄດ້ທຳການບຸກໂຈມຕີຖານທັບເຮືອຂອງສະຫະລັດອາເມຣິກາຢູ່ອ່າວເພີນລ໌ຫາເບີ ບໍລິເວນເກາະຮາວາຍ ແລະ ເກາະໂຮໂນລູລູເຮັດໃຫ້ກອງທັບເຮືອຂອງອາເມລິກາເສຍຫາຍເປັນຈຳນວນຫຼາຍຄືຕາຍເຖິງ 2.343 ຄົນ ແລະ ບາດເຈັບ 1.200 ຄົນ.

ຫຼັງຈາກນັ້ນຍີ່ປຸ່ນກໍຍຶດເອົາເກາະໃນມະຫາສະໝຸດປາຊີຟິກເຊັ່ນ: ເກາະກວມ, ເກາະເວກ ແລະ ເກາະຟີລິບປິນ ໃນເດືອນ ທັນວາ ຄ.ສ 1941 ແລະ ຍຶດສິງກະໂປຈາກອັງກິດ ໃນວັນທີ 15 ກຸມພາ ຄ.ສ 1942 ແລ້ວສືບຕໍ່ປະຕິບັດການເພື່ອບຸກຍຶດເອົາເກາະອິດສະຕາລີ. ພາຍຫຼັງທີ່ສຳເລັດໃນການຍຶດເອົາອານານິຄົມຂອງປະເທດຕາເວັນຕົກໝົດແລ້ວ, ຍີ່ປຸ່ນຈຶ່ງສະໜັບສະໜູນໃຫ້ຊາວພື້ນເມືອງເຂົ້າຮ່ວມໃນການປົກຄອງດ້ວຍຄຳຂວັນ “ ວົງໄພບູນມະຫາອາຊີບົວລະພາ “ ແລະມີຍຸດໂທບາຍມອບເອກະລາດໃຫ້ແກ່ປະເທດເຫຼົ່ານັ້ນແລ້ວສ້າງຕັ້ງລັດຖະບານຫຸ່ນຂຶ້ນເພື່ອຮັບໃຊ້ຈຸດປະສົງຂອງຍີ່ປຸ່ນ. ສ່ວນບັ້ນຮົບມະຫາສະໝຸດປາຊີຟິກນັ້ນ, ໃນໄລຍະທຳອິດຂອງສົງຄາມກອງທັບເຮືອອັນຍິ່ງໃຫຍ່ຂອງຍີ່ປຸ່ນສາມາດຄວບຄຸມທະເລຕອນໃຕ້ໄວ້ໄດ້ຈົນສາສມາດທີ່ຈະຮຸກຮານອິດສະຕາລີໄດ້. ສ່ວນມະຫາສະໝຸດຕອນເໜືອກອງທັບເຮືອຍີ່ປຸ່ນກໍຄຸງວບບຄຸມເສັ້ນທາງເດີນເຮືອໄດ້ເທິງເກາະມິດເວຂອງອາເມຣິກາກ ເຖິງຢ່າງໃດກໍຕາມກອງທັບເຮືອຂອງຍີ່ປຸ່ນກໍ່ຄອງຄວາມເປັນເຈົ້າທະເລພຽງແຕ່ 6 ເດືອນທຳອິດຂອງສົງຄາມເທົ່ານັ້ນກໍ່ໝົດອິດທິພົນເນື່ອງຈາກປະລາໄຊຢ່າງໜັກໜ່ວງໃນການສູ້ຮົບກັບກອງທັບອາເມຣິກາ ໃນເດືອນ ເມສາ ຄ.ສ 1942 ເທິງສະໜາມຮົບຄໍຣານ ລະຫວ່າງອິດສະຕາລີກັບໝູ່ເກາະຊາໂລມົງ ກອງບິນອາເມຣິກາໄດ້ໂຈມຕີກອງທັບຍີ່ປຸ່ນຢ່າງນັກ. ກອງທັບຍີ່ປຸ່ນຈຳຕ້ອງສູນເສຍເຮືອບັນທຸກເຄື່ອງບິນ 1 ລາ, ເຮືອລາດຕະເວນ 4 ລາ, ເຮືອປະຈັນບານ 2 ລາ ແລະ ເຮືອບິນສູ້ຮົບ 322 ລາ. ນອກຈາກນີ້ກອງທັບຍີ່ປຸ່ນຍັງປະລາໄຊໃນບໍລິເວນໝູ່ເກາະມິດເວອີກໃນເດືອນ ພຶດສະພາ ຄ.ສ 1942. ນັບຕັ້ງແຕ່ນັ້ນມາກອງທັບເຮືອຍີ່ປຸ່ນກໍສາມາດດຳເນີນການຮົບໃນທະເລໄດ້ອີກຕໍ່ໄປ ແລະ ກາຍເປັນຝ່າຍຮັບການບຸກໂຈມຕີຂອງກອງທັບເຮືອອາເມຣິກາ.

ໃນປີ ຄ.ສ 1944 ກອງທັບເຮືອອາເມຣິກາກໍ່ເລີ່ມບຸກຍຶດເອົາບັນດາໝູ່ເກາະຕ່າງໆຈາກຍີ່ປຸ່ນຄືນໄດ້ເຊັ່ນ: ເກາະມາກຊານ ( Marshall ), ເກາະກາໂລຣີ ( Calories ) ແລະ ໝູ່ເກາະມາຣິອານ ( Marian ) , ຮອດເດືອນ ຕຸລາ ຄ.ສ 1944 ອາເມຣິກາໄດ້ສຳເລັດໃນການຍຶດຄອງເອົາຟີລິປິນຄືນມາ

ແລະ ມາໃນຕົ້ນປີ ຄ.ສ 1975 ຍີ່ປຸ່ນກໍ່ສູນເສຍໝູ່ເກາະໂອກິນາວາ ແລະ ເກາະກິວຊິວ ໃຫ້ແກ່ອາເມຣິກາພາຍຫຼັງການສູ້ຮົບກັນມາເປັນເວລາ 90 ວັນ. ຈາກນັ້ນກອງທັບອາກາດ ແລະ ຝູງບິນອາເມຣິກາຈາກຖານທັບຕ່າງໆກໍ່ໄດ້ບິນທາລາຍຕົວເມືອງຕ່າງໆຂອງຍີ່ປຸ່ນເຮັດໃຫ້ຍີ່ປຸ່ນຖືກສຍຫາຍຢ່າງໜັກໜ່ວງຄື: ໂຮງງານອຸດສາຫະກຳ 550 ແຫ່ງຖືກທາລາຍ ແລະ ເສັ້ນທາງຄົມມະນາຄົມຖືກຕັດຂາດ.

ວັນທີ 6 ສິງຫາ ຄ.ສ 1945 ປະທານາທິບໍດີທຣູແມນແຫ່ງສະຫະລັດອາເມຣິກາກໍ່ຕັດສິນໃຈໃຊ້ລະເບີດປະລະມະນູໄປຖິ້ມໃສ່ເມືອງຮີໂຣຊິມະໄດ້ເຮັດໃຫ້ປະຊາຊົນຍີ່ປຸ່ນຕ້ອງສູນເສຍຊີວິດ ແລະ ຊັບສິນເປັນຈຳນວນຫຼວງຫຼາຍ.ຈາກນັ້ນ 2 ວັນຕໍ່ມາຄື: ວັນທີ 8 ສິງຫາ ຄ.ສ 1945 ອາເມຣິກາກໍ່ໄດ້ນາເອົາລູກລະເບີດປະລະມະນູລູກທີ 2 ມາຖິ້ມໃສ່ເມືອງນາ

ກາຊາກິອັນໄດ້ເຮັດໃຫ້ປະຊາຊົນຍີ່ປຸ່ນຜູ້ທີ່ບໍ່ມີຄວາມຜິດຫຍັງຕ້ອງສູນເສຍຊີວິດເຖິງ 360.000 ຄົນ ແລະ ທຳລາຍເຮືອນຊານບ້ານຊ່ອງຢ່າງຮາບກ້ຽງ.ການຖິ້ມລະເບີດປະລະມະນູຂອງອາເມຣິກາຄັ້ງນີ້ໄດ້ເຮັດໃຫ້ຊາວໂລກກ່າວປະນາມເພາະເປັນການບໍ່ສົມຄວນທີ່ອາເມຣິກາຈະຕ້ອງກະທຳແບບນີ້.

ວັນທີ 8 ສິງຫາ ຄ.ສ 1945 ໂດຍປະຕິບັດຕາມສົນທິສັນຍາປົດສະດາມສະຫະພາບໂຊວຽດກໍ່ໄດ້ປະກາດສົງຄາມກັບຍີ່ປຸ່ນ ແລະ ວັນທີ 9 ສິງຫາ ຄ.ສ 1945 ກອງທັບແດງໂຊວຽດກໍ່ໄດ້ເປີດສາກບຸກໂຈມຕີທະຫານຍີ່ປຸ່ນຢູ່ມານຈູຣີ, ເກົາຫຼີ ແລະ ປົດປ່ອຍພາກຕາເວັນອອກສ່ຽງເໜືອຂອງປະເທດຈີນ.

ດ້ວຍອຳນາດທຳລາຍຢ່າງມະຫາສານຂອງລະເບີດປະລະມະນູສົມທົບກັບການປະລາໄຊຂອງກອງທັບຍີ່ປຸ່ນໃນເຂດກວາງຕຸ້ງຈາກການບຸກໂຈມຕີຂອງກອງທັບແດງໂຊວຽດຈັກກະພັດຍີ່ປຸ່ນໄດ້ປະກາດຍອມຈຳນົນໃນວັນທີ 15 ສິງຫາ ຄ.ສ 1945 ເຮັດໃຫ້ສົງຄາມຄັ້ງທີ II ຢຸດຕິລົງ.ຫຼັງຈາກການສູ້ຮົບກັນມາເປັນເວລາ 6 ປີໃນສາມສະໜາມຮົບໃຫ່ຍຂອງສາມທະວີບ.

**ຜົນກະທົບຂອງສົງຄາມ.**

ສົງຄາມໂລກຄັ້ງທີ II ໄດ້ເປີດສາກຂຶ້ນນັບແຕ່ວັນທີ 1 / 9 / 1939 ແລະ ສິ້ນສຸດລົງໃນວັນທີ 2 / 9 /1945ໂດຍນຳໃຊ້ອາວຸດທີ່ທັນສະໄໝເຂົ້າຮ່ວມໃນສົງຄາມເຊິ່ງບໍ່ເຄີຍມີມາກ່ອນໃນປະຫວັດສາດໂລກມັນໄດ້ທຳລາຍຊີວິດ ແລະ ຊັບສິນຂອງມວນມະນຸດເປັນຈຳນວນຫຼວງຫຼາຍເຊິ່ງສິ່ງຜົນສະທ້ອນຕໍ່ເສດຖະກິດ-ສັງຄົມ ແລະ ລະບອບການເມືອງການປົກຄອງຂອງໂລກ ແລະ ສິ່ງຜົນກະທົບຕໍ່ຈິດໃຈຂອງປະຊາຊາດໃນໂລກຈົນບໍ່ສາມາດປະເມີນຄ່າເປັນຕົວເລກໄດ້. ສົງຄາມໄດ້ແກ່ດຶງເອົາ 61 ປະເທດໃນໂລກເຂົ້າຮ່ວມ,ກວມເອົາຈານວນພົນ 1.700.000.000 ຄົນ,ມີຜູ້ເສຍຊີວິດ 58.000.000 ຄົນ,ທະຫານ 32.000.000 ຄົນ, ເສຍຊີວິດຫຼາຍກວ່າໝູ່ແມ່ນສະຫະພາບໂຊວຽດ ຄື : 17 ລ້ານຄົນ, ທະຫານ 6.115.000 ຄົນ,ນາໃຊ້ທຶນເຂົ້າທັງໝ 4.000.000.000.000 $ ( 4.000 ຕື້ $ ) ບໍ່ນັບເງິນເດືອນທະຫານ, ສ່ວນມູນຄ່າຄວາມເສຍຫາຍບໍ່ສາມາດປະເມີນໄດ້ຖ້າທຽບໃສ່ສົງຄາມໂລກຄັ້ງທີ I ເຮົາຈະເຫັນໄດ້ດັ່ງຕາຕະລາງ

| ເນື້ອໃນ | ສົງຄາມໂລກຄັ້ງທີ I | ສົງຄາມໂລກຄັ້ງທີ II |
|---|---|---|
| ເວລາ | 4 ປີ 3 ເດືອນ ( 28/7/1914-11/11/1918 ) | 6 ປີ ( 1/9/1939-2/9/1945) |
| ປະເທດທີ່ເຂົ້າຮ່ວມສົງຄາມ | 36 ປະເທດ | 61 ປະເທດ |
| ຈຳນວນພົນເຂົ້າຮ່ວມທັງໝົດ | 1.000.000.000 | 1.700.000.000 ຄົນ |
| ຈຳນວນຜູ້ເສຍຊີວິດ | 8.524.831 ຄົນ | 58.000.000 ຄົນ |
| ທຶນທີ່ນຳມາໃຊ້ | 338.000.000.000 $ | 4.00.00.00.0 $ |

ສົງຄາມໂລກຄັ້ງທີ II ເປັນສົງຄາມຂະໜາດໃຫ່ຍກວມເອົາຫຼາຍປະເທດ,ບັນດາປະເທດທີ່ປະກາດສະພາວະສົງຄາມນີ້ມີ 76 ປະເທດເຂົ້າຮ່ວມ,ມີການໃຊ້ກຳລັງພົນ 1,7 ຕື້ຄົນ ແລະ ອາວຸດທີ່ທັນສະໄໝເຂົ້າຮ່ວມໃນສົງຄາມເຊິ່ງບໍ່ເຄີຍມີມາກ່ອນໃນປະຫວັດສາດໂລກມັນໄດ້ທຳລາຍຊີວິດ ແລະ ຊັບສິນຂອງມວນມະນຸດເປັນຈານວນຫຼວງຫຼາຍເຊິ່ງສິ່ງຜົນສະທ້ອນຕໍ່ເສດຖະກິດ-ສັງຄົມ ແລະ ລະບອບການເມືອງການປົກຄອງຂອງໂລກ.

- **ດ້ານການເມືອງ**

ຫຼັງສົງຄາມໂລກຄັ້ງທີ II ການເມືອງ-ການປົກຄອງໄດ້ມີການປ່ຽນແປງໃນຫຼາຍປະເທດເຊັ່ນ : ເຢຍລະມັນໄດ້ຖືກຕັດແບ່ງອອກເປັນ 4 ເຂດ ( 1 ສິງຫາ ຄ.ສ 1945 )ກໍ່ຄືເຂດຕາເວັນອອກປົກຄອງໂດຍໂຊວຽດ,ອີກ 3 ເຂດແມ່ນປົກຄອງໂດຍ 3 ປະເທດມະຫາອໍານາດ ( ອາເມຣິກາ,ອັງກິດ,ຝຣັ່ງ ),ເກົາຫຼີຖືກແບ່ງອອກເປັນ 2 ເຂດຄື : ພາກເໜືອປົກຄອງໂດຍໂຊວຽດ,ພາກໃຕ້ ແມ່ນສະຫະລັດອາເມຣິກາ,ສ່ວນບັນດາຫົວເມືອງຂຶ້ນຂອງພວກຈັກກະພັດໄດ້ລຸກຮືຂຶ້ນຕໍ່ສູ້ຍາດເອົາເອກະລາດ,ອິດສະຫຼະພາບຢ່າງລຽຕິດໂດຍສະເພາະແມ່ນຢູ່ທະວີບອາຊີ,ອາຟຣິກາ,ອາເມຣິກາລາຕິນການປ່ຽນແປງດັ່ງກ່າວນັ້ນໄດ້ກໍ່ໃຫ້ເກີດຄວາມຂັດແຍ່ງທີ່ເລິກເຊິ່ງກວ່າເກົ່າໂດຍສະເພາະປະເທດທີ່ມີລະບອບການເມືອງທີ່ແຕກຕ່າງກັນເຊັ່ນ : ລະບອບເສລີປະຊາທິປະໄຕໂດຍມີສະຫະລັດອາເມຣິກາເປັນຜູ້ນໍາ ແລະ ລະບອບສັງຄົມນິຍົມ ( ຄອມມູນິດ ) ໂດຍມີສະຫະພາບໂຊວຽດເປັນຜູ້ນໍາ.ແຕ່ເຖິງຢ່າງໃດກໍ່ຕາມທ່າອ່ຽງຂອງສັງຄົມໂລກກໍ່ມີຄວາມພະຍາຍາມໄປໃນທາງທີ່ສ້າງສັນຕິພາບ, ອິດສະຫຼະພາບ ແລະ ຮັບປະກັນສິດທິມະນຸດຂອງບັນດາຊາດຫຼາຍຂຶ້ນ.

- **ດ້ານເສດຖະກິດ**

ງົບປະມານທີ່ໃຊ້ເຂົ້າໃນການເຮັດສົງຄາມລວມທັງຝ່າຍໄດ້ຮັບໄຊຊະນະ ແລະປະລາໄຊໃນສົງຄາມລວມເປັນເງິນເຖິງ 4.000 ຕື້ໂດລາສະຫະລັດ (ບໍ່ນັບເງິນເດືອນຂອງທະຫານ)ປະເທດທີ່ຊະນະສົງຄາມໄດ້ຕິດໜີ້ຕ່າງປະເທດເປັນຈໍານວນຫຼວງຫຼາຍເພາະໄດ້ຊ່ວງສົງຄາມພວກເຂົາໄດ້ກູ້ຢືມເງິນເພື່ອຊື້ອາວຸດ ແລະ ສະບຽງອາຫານມາຮັບໃຊ້ເຂົ້າໃນການເຮັດສົງຄາມເຊັ່ນ : ອັງກິດ,ຝຣັ່ງ,ອີຕາລີ...(ສໍາລັບຈໍານວນກູ້ຢືມບໍ່ສາມາດລະບຸໄດ້).ດັ່ງນັ້ນ,ເມື່ອສົງຄາມໂລກຄັ້ງທີ II ສິ້ນສຸດລົງບັນດາປະເທດທີ່ປະລາໄຊລ້ອນຕ່າຖືກບັງຄັບໃຫ້ໃຊ້ຄ່າເສຍຫາຍ (ໃຊ້ໜີ້ສົງຄາມ).ແຕ່ບາງປະເທດຖືກມະຫາອໍານາດເຂົ້າມາຍາດແຍ່ງອິດທິພົນເຊິ່ງມັນໄດ້ສະແດງໃຫ້ເຫັນກໍ່ຄື: ຂໍ້ຂັດແຍ່ງໃນກຸງເບີລິນຂອງເຢຍລະມັນ,ບັນຫາຈີນ,ບັນຫາເກົາຫຼີ...ນອກຈາກນີ້ຫຼັງສົງຄາມສະຫະລັດອາເມຣິກາໄດ້ວາງນະໂຍບາຍຟື້ນຟູເສດຖະກິດຂອງບັນດາປະເທດຕ່າງໆທີ່ໄດ້ຮັບຄວາມເສຍຫາຍຈາກສົງຄາມພ້ອມກັນນັ້ນຍັງມີນະໂຍບາຍໃຫ້ກູ້ຢືມເງິນເພື່ອນໍາເອົາເງິນມາບູລະນະປະເທດຊາດຂອງຕົນ.

- **ດ້ານສັງຄົມ**

**ກ.ດ້ານບວກ** : ເຮັດໃຫ້ບັນດາປະເທດຫົວເມືອງຂຶ້ນ ແລະ ເຄິ່ງເມືອງຂຶ້ນທີ່ເຄີຍຕົກຢູ່ໃຕ້ອິດທິພົນຂອງບັນດາປະເທດຈັກກະພັດລ້ອນແຕ່ພາກັນລຸກຮືຂຶ້ນຕໍ່ສູ້ຍາດເອົາເອກະລາດ,ອິດສະຫຼະພາບເພື່ອສ້າງປະເທດຂອງຕົນຂຶ້ນເຊັ່ນ:
- ຫວຽດນາມໄດ້ສ້າງປະເທດຂອງຕົນຂຶ້ນເອີ້ນວ່າ : ສາທາລະນະລັດ ປະຊາທິປະໄຕຫວຽດນາມ ( 2 ກໍລະກົດ 1976 ).
- ຈີນສ້າງປະເທດຂອງຕົນເອງຂຶ້ນເອີ້ນວ່າ : ສາທາລະນະລັດ ປະຊາຊົນຈີນ ( 1 ຕຸລາ ຄ.ສ 1949 ).
- ຄິວບາໄດ້ສ້າງຕັ້ງປະເທດຂອງຕົນຂຶ້ນເອີ້ນວ່າ : ສາທາລະນະລັດ ຄິວບາ ( 1 ມັງກອນ ຄ.ສ 1959 )ສ່ວນຢູ່ທະວີບອາຟຣິກາເຊິ່ງເມື່ອກ່ອນຕົກຢູ່ໃຕ້ການປົກຄອງຂອງຈັກກະພັດກໍ່ລ້ອນແຕ່ພາກັນລຸກຮືຂຶ້ນຕໍ່ສູ້ຍາດເອົາເອກະລາດ.

**ຂ. ດ້ານລົບ :**

ສົງຄາມເຮັດໃຫ້ເກີດຄວາມສັບສົນວຸ້ນວາຍ,ປະຊາຊົນລົ້ມຕາຍເປັນຈໍານວນຫຼວງຫຼາຍໂດຍສະເພາະປະເທດທີ່ຖືກປະລາໄຊໃນສງຄາມເດັ່ນກວ່າໝູ່ແມ່ນຢູ່ເຢຍລະມັນ,ຍີ່ປຸ່ນ.ປະຊາຊົນມີຄວາມທຸກຍາກ,ຂາດທີ່ພັກພາອາໃສ,ຂາດສະບຽງອາຫານ.ຈິດໃຈຂອງປະຊາຊົນສ່ວນຫຼາຍກໍ່ໝົດຫວັງ,ສົງຄາມຂອງບາງປະເທດກໍ່ມີການປ່ຽນແປງອັນເນື່ອງຈາກການປ່ຽນແປງຂອງລັດຖະບານ ແລະ ຮູບແບບການປົກຄອງ. ບັນດາຕົວເມືອງຕ່າງໆໄດ້ຮັບຜົນກະທົບຈາກການໃຊ້ລະເບີດທີ່ຮ້າຍແຮງຂອງບັນດາປະເທດມະຫາອໍານາດ.

**ຄ. ປະເທດຍີ່ປຸ່ນພາຍຫຼັງສົງຄາມໂລກຄັ້ງທີ II**

ສົງຄາມໂລກຄັ້ງທີ II ເຖິງຈະສິ້ນສຸດລົງແລ້ວກໍ່ຕາມແຕ່ມັນກໍ່ສົ່ງຜົນສະທ້ອນຢ່າງໃຫ່ຍຫຼວງຕໍ່ກັບເວທີການເມືອງໂລກໃນໄລຍະຕໍ່ມາ.ເພື່ອເຮັດໃຫ້ໂລກມີສະຖຽນລະພາບ ແລະ ມີຄວາມໝັ້ນຄົງຈາເປັນຕ້ອງໄດ້ມີການສ້າງຕັ້ງອົງການລະຫວ່າງຊາດຂຶ້ນເພື່ອໄກ່ເກ່ຍບັນຫາຕ່າງໆ ແລະ ຫຼີກລຽງຄວາມຮຸນແຮງທີ່ຈະເກີດຂຶ້ນຄັ້ງໃໝ່ດັ່ງນັ້ນ,ອົງການສະຫະປະຊາຊາດຈຶ່ງໄດ້ຖືກກຳເນີດຂຶ້ນໃນປີ 1945.ແຕ່ລະບົບການເມືອງໂລກຍັງມີຂໍ້ຂັດແຍ່ງຢ່າງກ້ວາງຂວາງໂດຍສະເພາະອຸດົມການທາງດ້ານການເມືອງເຮັດໃຫ້ໂລກແບ່ງອອກເປັນສອງຂົ້ວລະບອບການເມືອງຄື: ລະບອບການເມືອງເສລີປະຊາທິປະໄຕທຶນນິຍົມມີອາເມຣິກາເປັນແກນນຳ ແລະ ລະບອບການເມືອງສັງຄົມນິຍົມເຊິ່ງມີສະຫະພາບສາທາລະນະລັດ ສັງຄົມນິຍົມໂຊວຽດເປັນແກນນຳ.ທັງສອງລະບົບການເມືອງໄດ້ມີຂໍ້ຂັດແຍ່ງກັນຮອບດ້ານບໍ່ວ່າທາງດ້ານເສດຖະກິດ,ການເມືອງ,ສັງຄົມ,ກໍ່ຄືການທະຫານ ແລະ ໄດ້ແຂ່ງກັນສະແຫວງຫາພັນທະມິດ,ການຂະຫຍາຍກາລັງທາງທະຫານ ແລະ ສະສົມອາວຸດທີ່ຮ້າຍແຮງ.ນອກນີ້ຍັງມີການປະເຊີນໜ້າກັນລະຫວ່າງສອງລະບອບການເມືອງໂດຍເອົາປະເທດທີ່ສາມເປັນສະໜໍລະພູມເຊັ່ນ : ວິກິດການເຢຍລະມັນ,ເຮັດໃຫ້ເຢຍລະມັນແບ່ງອອກເປັນ 2 ປະເທດໃນປີ 1947 ,ວິກິດການແຫຼມເກົາຫຼີໃນປີ 1951-1952,ວິກິດການອິນດູຈີນ ແລະ ອື່ນໆ...ເຊິ່ງນັກປະຫວັດສາດເອີ້ນຂໍ້ຂັດແຍ່ງທີ່ກ່າວມານີ້ວ່າ:"ສົງຄາມເຢັນ"ເລີ່ມເກີດຂຶ້ນໃນປີ 1947ເປັນຕົ້ນມາຈົນເຖິງປີ 1974 ຈຶ່ງຄ່ອຍໆຄາຍຄວາມຄຽດຕຶງລົງ.

ເມື່ອສະພາບການທາງດ້ານການເມືອງຂອງໂລກມີການປ່ຽນແປງຄືກ່າວມາຂ້າງເທິງນັ້ນໄດ້ເຮັດໃຫ້ເກີດມີອີກກຸ່ມປະເທດໜຶ່ງເຊິ່ງເປນປະເທດທີ່ກຳລັງພັດທະນາ ແລະ ປະເທດທີ່ດ້ອຍພັດທະນາເຊິ່ງເອີ້ນວ່າ : ກຸ່ມປະເທດໂລກທີສາມ ຫຼື ກຸ່ມປະເທດທີ່ບໍ່ຝັກໄຝ່ຝ່າຍ ( ກຸ່ມປະເທດເປັນກາງ).

ພາຍຫຼັງສົງຄາມໂລກຄັ້ງທີ II ສິ່ງທີ່ພົ້ນເດັ່ນອີກບັນຫາໜຶ່ງແມ່ນຂະບວນການປົດປ່ອຍຊາດຂອງປະເທດທີ່ຕົກເປັນອານານິຄົມຂອງປະເທດຈັກກະພັດໃນເມື່ອກ່ອນໄດ້ມີຄວາມພະຍາຍາມຈະປົດປ່ອຍຕົນເອງອອກຈາກແອກຄອບຄອງຂອງຈັກກະພັດໂດຍສະເພາະຢູ່ຂົງເຂດ. ອາຟຣິກາໃນຊຸມປີ 1950 ຫາ 1965,ຂົງເຂດອາເມຣິກາລາຕິນໃນຊຸມປີ 1950,ຂົງເຂດອາຊີຕາເວັນອອກສ່ຽງໃຕ້ ແລະ ເຂດອື່ນໆ.ໄດ້ມີການຕໍ່ສູ້ເພື່ອຄວາມເປັນເະລາດ ແລະ ສິດທິອັນຊອບທາຂອງຕົວເອງ.

ການປະລາໄຊຂອງຍີ່ປຸ່ນໃນສົງຄາມໂລກຄັ້ງທີ II ໄດ້ສ້າງຄວາມເສື່ອມເສຍຢ່າງໃຫຍ່ຫຼວງ ມາ ສູ່ບ້ານເມືອງເຊັ່ນ: ນາຍທະຫານ ແລະ ຜູ້ກ່ຽວຂ້ອງຫຼາຍຄົນໄດ້ກາຍເປັນອາດຊະຍາກອນສົງຄາມ ເຖິງຢ່າງໃດກໍຕາມຍີ່ປຸ່ນກໍບໍ່ຍອມຈຳນົນຕໍ່ໂຊກຊະຕາກຳ ແລະ ການສິ້ນສັກສີໃດໆ ຊາວຍີ່ ປຸ່ນຍັງມີມານະຈິດເຂັ້ມແຂງຢືນຢັນຄວາມເປັນຊາດຂອງຕົນ ພັດທະນາປະເທດຕາມສະຖານະ ໃຫມ່ທີ່ຝ່າຍຊະນະສົງຄາມໂລກເປັນຜູ້ກຳນົດ.

ການພັດທະນາເສດຖະກິດຂອງຍີ່ປຸ່ນພາຍຫຼັງສົງຄາມໂລກ ຄັ້ງທີ II ເສດຖະກິດຂອງຍີ່ປຸ່ນຖືກທຳລາຍຢ່າງໜັກເໝືອນກັບບັນດາປະດາປະເທດອື່ນໆ ເຮັດໃຫ້ຜູ້ຄົນອຶດຫິວ ແລະ ທຸກຍາກລຳບາກຢາງແສນສາຫັດ, ລະບົບການຄົມ ມະນາຄົມຂົນສົ່ງຖືກທຳລາຍ, ຜູ້ຄົນຫວ່າງງານ, ການຜະລິດທັງກະສິກຳ ແລະ ອຸດສາຫະກຳຫຼຸດ ລົງ, ສິນຄ້າຂຶ້ນລາຄາ ແລະ ຫາຊື້ຍາກ, ຜົນປະໂຫຍດ ແລະ ອານານິຄົມຕ່າງແດນສິ້ນສຸດລົງ ການຄ້າຕົກຕໍ່າ ແລະ ອື່ນໆ ໂດຍສະເພາະຜະລິດຕະພັນອຸດສາຫະກຳໃນປີ ຄ.ສ 1946 ຫຼຸດລົງ 1/4 ທຽບໃສ່ໄລຍະກ່ອນສົງຄາມ. ນັ້ນສະແດງວ່າການພັດທະນາເສດຖະກິດມີຄວາມຫຍຸ້ງຍາກ

ລຳບາກທີ່ສຸດສະຫະລັດອາເມຣິກາຕ້ອງໄດ້ຊ່ວຍເຫຼືອຊາວຍີ່ປຸ່ນໃຫ້ສາມາດຢືນຍົງໄດ້ຕໍ່ໄປ ໂດຍ ການຂົນສົ່ງທະຫານເຂົ້າມາຄວບຄຸມ-ຄຸ້ມຄອງສະຖານະການ ແລະ ຊັບສິນຢ່າງມະຫາສານມາ ລ້ຽງດູຊາວຍີ່ປຸ່ນ. ເຖິງຢ່າງໃດກໍຕາມ,

ຍີ່ປຸ່ນກໍເປັນປະເທດຫນຶ່ງທີ່ມີການພັດທະນາເສດຖະກິດມາ ແຕ່ດົນນານແລ້ວເມື່ອທຽບກັບບັນດາປະເທດຕ່າງໆໃນ ຂົງເຂດອາຊີ ແລະ ເຖິງວ່າສົງຄາມໄດ້ທຳ ລາຍຊັບສິນ ແຕ່ກໍບໍ່ໄດ້ທຳລາຍຂີດຄວາມສາມາດຂອງຄົນຍີ່ປຸ່ນ.

ສວນຂະແຫນງອຸດສາຫະກຳທີ່ມີການເຕີບໃຫຍ່ຂະຫຍາຍຕົວໄວອາແມ່ນອຸດສາຫະກຳເຄມີ, ເຄື່ອງຈັກກົນ ແລະ ການຜະລິດສິນຄ້າເຫຼັກກ້າສຳເລັດຮູບເຊັ່ນ: ລົດຍົນ, ຕໍ່ເຮືອ, ເຄື່ອງໄຟຟ້າ, ກອງຖ່າຍຮູບ, ແວ່ນຕາ, ເຄື່ອງຫຍິບຜ້າ , ເຄື່ອງສຽງ, ຄອມພິວເຕີ ແລະ ການຜະລິດນ້ຳມັນເປັນຕົ້ນ. ໃນຂະແຫນງການກະສິກຳ ໄດ້ມີການປະຕິຮູບທີ່ດິນໃນປີ ຄ.ສ 1947 ດ້ວຍການກຳຈັດການ ເຊົ່າທີ່ດິນເພື່ອໃຫ້ຊາວນາມີທີ່ດິນເປັນຂອງຕົນເອງ, ສິ່ງເສີມໃຫ້ຊາວນາມີກຳລັງໃຈທີ່ ຈະລົງທຶນເພີ່ມຜົນຜະລິດ ລັດໄດ້ສະຫນັບສະຫນູນທຶນໃນການປັບປຸງລະບົບຊົນລະປະທານເພື່ອການປູກພືດ ຊະນິດ ຕ່າງໆ, ປັບປຸງວິທີການເພາະປູກ, ການຮັກສາດິນ ແລະ ເພີ່ມຜົນຜະລິດຕາມຫຼັກການວິທະ ຍາການອັນກ້າວຫນ້າ, ການ ທີ່ເສດຖະກິດຂອງຍີ່ປຸ່ນມີການຈະເລີນເຕີບໂຕຢ່າງໄວອາ ໂດຍມີປັດ ໄຈພິເສດດັ່ງນີ້ຄື: ລັດບໍ່ຕ້ອງສີ້ນເປືອງງົບປະມານ ແຫ່ງຊາດໃນການບຳລຸງ ແລະ ສ້າງກອງທັບເພາະຍີ່ປຸ່ນຖືກ ຫ້າມໃນການຜະລິດ, ມີອາວຸດຂະຫນາດໃຫ່ຍໄວ້ຄອບຄອງດ , ຫ້າມບໍ່ໃຫ້ມີກອງທັບຂະຫນາດໃຫ່ຍຢູ່ໃຕ ຮົ່ມນິວເຄລຍຂອງສະຫະລັດອາເມຣິກາ. ສະນັ້ນ, ຍີ່ປຸ່ນຈຶ່ງເນັ້ນການ ພັດທະນາເສດຖະກິດພາກພົນລະເຮືອນຍີ່ປຸ່ນບໍ່ມີບັນຫາເລື່ອງປະຊາກອນລົ້ນປະເທດ ເຊິ່ງການຄວບຄຸມກຳເນີດໄດ້ຈຳ ກັດປະລິມານປະຊາກອນໄວ້ໄດ້ເປັນຜົນສຳເລັດ

ຍີ່ປຸ່ນ ສາມາດນຳເອົາຜະລິດຕະພັນ ທີ່ຕົນຜະລິດໄດ້ໄປແລກປ່ຽນເອົາວັດຖຸດິບທີ່ຕົນມີ ຄວາມຕ້ອງການໃນ ຕ່າງປະເທດໄດ້ຢ່າງງ່າຍດາຍ ແລະ ການສົ່ງອອກຂອງຍີ່ປຸ່ນກໍປະສົບຜົນສຳ ເລັດ ເພາະສິນຄ້າຍີ່ປຸ່ນມີຄຸນນະພາບ ແລະ ລາຄາກໍຢູ່ໃນລະດັບປານກາງ.

ການພັດທະນາເສດຖະກິດຂອງຍີ່ປຸ່ນ ໃນລະຫວ່າງປີ ຄ.ສ 1954-1967 ໃນປະລິມານການ ຜະລິດທັງຫມົດ ມີອັດຕາໄວກວ່າທຸກປະເທດປະມານ 10% ແລະ ໄວເປັນ 3 ເທົ່າເມື່ອທຽບກັບສະ ຫະລັດ. ດັ່ງນັ້ນ, ໃນປີ ຄ.ສ 1967 ຍີ່ປຸ່ນ ໄດ້ກ້າວເຂົ້າມາເປັນປະເທດມະຫາອຳນາດທາງດ້ານເສດ ຖະກິດອັນດັບທີ 3 ຂອງໂລກຖັດຈາກສະຫະລັດອາເມຣິ ກາ ແລະ ສະຫະພາບໂຊວຽດ ແລະ ໃນປີ ຄ.ສ 2007 ຍີ່ປຸ່ນ ກັບມາເປັນມະຫາອຳນາດທາງດ້ານເສດຖະກິດອັນດັບທີ 2 ຂອງໂລກຮອງຈາກ ສະຫະລັດອາເມຣິກາ

ການທີ່ເສດຖະກິດມີການຂະຫຍາຍຕົວຢ່າງກ້າວກະໂດດຂັ້ນມີປັດໄຈດັ່ງນີ້: ປະຊາກອນມີການສຶກສາສູງເປັນ ແຮງງານ ແລະ ມີມັນສະຫມອງສຳລັບການພັດທະນາ

ເສດຖະກິດຄວາມຊຳນານໃນດ້ານວິຊາການ ແລະ ວິທະຍາການແຜ່ຫຼາຍໃນທົ່ວປະເທດພາໃຫ້ເສດ ຖະກິດ ພັດທະນາໄປຢ່າງມີປະສິດທິພາບ.

- ຊາວຍີ່ປຸ່ນ ມີຄວາມເຊື່ອຫມັ້ນວ່າ ການຮ່ວມມືກັນພັດທະນາເສດຖະກິດຈະມີຄວາມຜາສຸກ

ໃນອານາຄົດຊົນຊັ້ນທີ່ຈັດການທຸລະກິດ ມີປະສົບການສູງລັດມີການສະຫນັບສະຫນູນການພັດທະນາເສດຖະກິດທຸກ ຂັ້ນຕອນ ຕັ້ງແຕ່ການກຳນົດແຜນ ພັດທະນາ, ນະໂຍບາຍ, ວິທີການຈັດຫາວິທະຍາການ, ແຫຼ່ງເງິນກູ້, ຈັດຫາການ ຕະຫຼາດ, ຈັດຫາ ທຶນ, ວັດຖຸດິບ ແລະ ແຮງງານ.

ສຳລັບການຕະຫຼາດຂອງຍີ່ປຸ່ນ ໃນເບື້ອງຕົ້ນໄດ້ປະສົບບັນຫາຢ່າງຫນັກຫນ່ວງເນື່ອງຈາກວ່າ

ການຄ້າລະຫວ່າງປະເທດມີການໃຊ້ທັງລະບົບເງິນຕາສະກຸນປອນສະເຕີລິງ (Sterling) ແລະ ໂດ ລາ ສະຫະລັດ (Dollars). ໃນລະຫວ່າງປີ ຄ.ສ 1952-1956 ສະຫະລັດອາເມຣິກາ ເປັນລູກຄ້າລາຍ ໃຫຍ່ສັ່ງຊື້ສິນຄ້າ ແລະ ບໍລິການຈາກຍີ່ປຸ່ນເປັນອັດຕາ 1/4 ຂອງມູນຄ່າການສົ່ງອອກຂອງຍີ່ປຸ່ນ.

**ຂ. ການພົວພັນຕ່າງປະເທດຂອງຍີ່ປຸ່ນ.**

ນັບແຕ່ປີ ຄ.ສ 1945-1970, ການຕ່າງປະເທດຂອງຍີ່ປຸ່ນ ໄດ້ຖືກກຳນົດຂຶ້ນໂດຍປັດໄຈສຳ ພັນທະພາບ ລະຫວ່າງຍີ່ປຸ່ນກັບສະຫະລັດອາເມຣິກາ. ຄວາມເປັນພັນທະມິດກັບສະຫະລັດອາເມຣິກາ ເຮັດໃຫ້ຍີ່ປຸ່ນສັງກັດໃນກຸ່ມ ປະເທດໂລກເສລີແຕ່ຍີ່ປຸ່ນກໍມີຄວາມປາຖະຫນາມີຄວາມສຳພັນ ອັນດີກັບປະເທດອື່ນໆ. ສຳພັນທະພາບລະຫວ່າງຍີ່ປຸ່ນ ກັບໂລກກອມມູນິດມີຄວາມເປັນໄດ້ຢ່າງ ຍາກລຳບາກ ໂດຍສະເພາະເຖິງແມ່ນວ່າ ຍີ່ປຸ່ນຈະປະລາໄຊໃນສົງຄາມໂລກຄັ້ງ ທີ II ແຕ່ຍັງຄົງ ເປັນໄພຄຸກຄາມສະຖຽນລະພາບຄວາມຫມັ້ນຄົງຂອງຈີນ ແລະ ຣັດເຊຍ ໂດຍສະເພາະແມ່ນພາຍຫຼັງ ສົງຄາມເຢັນເກີດຂຶ້ນໃນເອີຣົບ.ຄວາມສຳພັນລະຫວ່າງຍີ່ປຸ່ນກັບຣັດເຊຍ ເປັນໄປແບບທຳມະດາ ອັນເນື່ອງມາຈາກຍີ່ປຸ່ນ ໄດ້ສູນເສຍດິນແດນ ແລະ ຜົນປະໂຫຍດໃຫ້ແກ່ຣັດເຊຍ ຕາມການຕົກລົງທີ່ກອງປະຊຸມຢັນຕາ (ເກາະກະຣິນເມ, ທະເລດຳ) ໃນປີ ຄ.ສ 1945 ແລະ ຄວາມສຳພັນທາງການທູດຣັດເຊຍມີສິດຄັດ ຄ້ານການລົງປະຊາມະຕິຂອງຄະນະ ມົນຕີຄວາມຫມັ້ນຄົງ ໃນການບໍ່ອະນຸຍາດໃຫ້ຍີ່ປຸ່ນສະຫມັກ ເຂົ້າເປັນສະມາຊິກຂອງອົງການສະຫະປະຊາຊາດ ແລະ ອື່ນໆ. ເຖິງຢ່າງໃດກໍຕາມ ຍີ່ປຸ່ນຍິນ ຍອມບໍ່ພິຈາລະນາເລື່ອງດິນແດນ ແລະ ໄດ້ຕົກລົງຈາລະຈາກັບຣັດເຊຍໃນການຟື້ນ ຟູຄວາມສຳ ພັນທາງການທູດໃນເດືອນ ຕຸລາ ປີ ຄ.ສ 1945 ແຕ່ຣັດເຊຍ ແລະ ຍີ່ປຸ່ນຍັງບໍ່ໄດ້ຕົກລົງເລື່ອງການ ລົງນາມ ໃນສົນທິສັນຍາສັນຕິພາບ. ດັ່ງນັ້ນ, ໃນເດືອນ ທັນວາ ປີ ຄ.ສ 1956 ຍີ່ປຸ່ນ ຈຶ່ງສາມາດເຂົ້າເປັນສະມາຊິກຂອງອົງການ ສະຫະປະຊາຊາດ. ສ່ວນຄວາມສຳພັນກັບຈີນ-ຍີ່ປຸ່ນກໍປະສົບບັນຫາຫນັກ ໂດຍສະເພາະຄວາມເປັນປໍລະປັກຕໍ່ ກັນໃນ ລະຫວ່າງປີ ຄ.ສ 1895-1945, ຊາວຍີ່ປຸ່ນມີຄວາມຮູ້ສຶກລະອາຍໃນພຶດຕິກຳທີ່ບໍ່ມີມະນຸດ ສະທຳທີ່ໄດ້ປະຕິບັດຕໍ່ຊາວ ຈີນໃນລະຫວ່າງສົງຄາມ ແຕ່ກໍປາຖະຫນາຈະມີຄວາມສຳພັນອັນດີກັບ ຈີນ. ໃນຂະນະດຽວກັນຍີ່ປຸ່ນ ໄດ້ສ້າງອຸປະສັກ ກີດຂວາງຄວາມປາຖະຫນານັ້ນເອງ ໂດຍສະເພາະ ຍີ່ປຸ່ນຍອມຢູ່ໃຕ້ຮົ່ມນິວເຄລຍຂອງສະຫະລັດອາເມຣິກາເພື່ອຄວາມ ຫມັ້ນຄົງຂອງຕົນ, ຍີ່ປຸ່ນເດີນ ຕາມຮອຍສະຫະລັດອາເມຣິກາໃນການຖືນະໂຍບາຍຈີນດຽວຄື: ບໍ່ຮັບຮອງຈີນແຕ່ຫາກ ຮັບຮອງ ຈີນຊາດນິຍົມແຫ່ງໄຕຫວັນ. ສຳລັບຈີນກໍມີການກ່າວຫາຍີ່ປຸ່ນວ່າ ມີການສ້າງກຳລັງແສນຍານຸ ພາບໃຫມ່ ແລະ ໄດ້ຕັ້ງເງື່ອນໄຂໃຫ້ຍີ່ປຸ່ນຍອມຮັບກ່ອນຄື: ຍີ່ປຸ່ນຕ້ອງຮັບຮອງຈີນ, ບໍ່ຮັບຮອງໄຕ້ ຫວັນ ແລະ ຍີ່ປຸ່ນຕ້ອງຖືວ່າ ໄຕ້ຫວັນ ເປັນສ່ວນຫນຶ່ງຂອງຈີນ. ພຽງແຕ່ສາມເລື່ອງດັ່ງກ່າວກໍເກີນພໍທີ່ຈະໃຫຍີ່ປຸ່ນປະຕິບັດຕາມຄວາມຕ້ອງການຂອງຈີນ.

**ຄ. ການປ້ອງກັນຊາດຂອງຍີ່ປຸ່ນພາຍຫຼັງສົງຄາມໂລກຄັ້ງທີ II**

ພາຍຫຼັງສົງຄາມໂລກຄັ້ງທີ II ປະເທດຍີ່ປຸ່ນຖືກສະຫະລັດອາເມຣິກາຍຶດຄອງ ແລະ ປົກ ຄອງໂດຍກອງບັນຊາ ການສູງສຸດສຳລັບມະຫາອຳນາດພັນທະມິດ (Supreme Command for the Allied Powers-SCAP) ອົງການ ດັ່ງກ່າວໄດ້ສ້າງຍີ່ປຸ່ນໃຫ້ເປັນລັດປອດທະຫານ ໂດຍການທຳ ລາຍແສນຍານຸພາບ ໂດຍສະເພາະແມ່ນທຳລາຍກອງທັບ, ອາວຸດຍຸດໂທປະກອນ, ຍຸບຫນ່ວຍລາ ຊະການທະຫານ, ສະຫຼາຍກຳລັງພົນ 2 ລ້ານກວ່າຄົນໃຫ້ຄືນບ້ານເກີດເມືອງນອນ , ອົບພະຍົບທະ ຫານ 3 ລ້ານຄົນຈາກດິນແດນໄກພົ້ນທະເລທີ່ຍີ່ປຸ່ນຍຶດຄອງໃຫ້ກັບຄືນປະເທດ. ໃນມາດຕາທີ 9 ແຫງ ລັດຖະທຳມະນູນຍີ່ປຸ່ນໄດ້ກີດກັ້ນບໍ່ໃຫຍີ່ປຸ່ນສ້າງກຳລັງທະຫານຕໍ່ໄປອີກ.

# ບົດທີ 7
# ປະເທດຍີ່ປຸ່ນໃນສັງຄົມໂລກຄັ້ງທີ II

## 1. ໂຄງສ້າງຂອງສັງຄົມຍີ່ປຸ່ນໃນປັດຈຸບັນ

### 1.1 ໂຄງສ້າງທາງດ້ານປະຊາກອນ

**ກ. ດ້ານເຊື້ອຊາດ**

ເຊື້ອຊາດຍີ່ປຸ່ນໃນທາງປະຫວັດສາດໂດຍທົ່ວໄປເຊື່ອກັນວ່າ ບັນພະບູລຸດຂອງຊາວຍີ່ປຸ່ນໄດ້ແກ່ເຜົ່າພັນໜຶ່ງທີ່ເອີ້ນໃນປັດຈຸບັນວ່າ: ເຜົ່າພັນຍາມາໂຕປະສົມກັບຄົນທີ່ອົບພະຍົບມາຈາກແຜ່ນດິນໃຫຍ່ໄດ້ແກ່ຈີນ ແລະ ເກົາຫຼີ. ປັດຈຸບັນ ບັນດາຄົນຕ່າງຊາດກຸ່ມໃຫຍ່ທີ່ຢູ່ໃນຍີ່ປຸ່ນໄດ້ແກ່ຊາວເກົາຫຼີ ແລະ ຊາວຈີນລວມທາງເຜົ່າ ໄອນຸ ເຊິ່ງອາໄສຢູ່ເກາະ ຮັອກໄກໂດ ທັງນີ້ຍີ່ປຸ່ນບໍ່ຖືວ່າປະເທດຂອງຕົນມີຊົນເຜົ່າກຸ່ມນ້ອຍ ມີຈຳນວນດັ່ງຕໍ່ໄປນີ້: ຍີ່ປຸ່ນ 98,5%, ເກົາຫຼີ 0,5%, ຈີນ 0,4% ແລະ ອື່ນໆອີກ 0,6% .

**ຂ. ສາສະໜາ**

ສາສະໜາທີ່ສຳຄັນໃນຍີ່ປຸ່ນມີສອງສາສະໜາໄດ້ແກ່: ສາສະໜາຊິນໂຕ ແລະ ສາສະໜາພຸດ ນອກຈາກນັ້ນຍັງມີສາສະໜ າຄຣິດ ແລະ ລັດທິຂົງຈື້ ເຖິງວ່າຄົນສ່ວນໃຫ່ຍໃນປັດຈຸບັນ ເວົ້າວ່າພວກເຂົາບໍ່ມີຄວາມເຊື່ອໃນສາສະໜາເປັນພິເສດແຕ່ສ່ວນໃຫ່ຍປະຕິບັດຕາມປະເພນີ ແລະ ພິທີກຳຂອງສາສະໜາຊິນໂຕ ແລະ ພຸດທະສາສະໜາຈຳນວນກຸ່ມຄົນໃນການເຊື່ອຖືສາສະໜາມີດັ່ງນີ້: ສາສະໜາຊິນໂຕ 83%, ສາສະໜາພຸດ 71,4%, ສາສະໜາຄຣິດ 2% (ສັງລວມສັດສ່ວນລວມກັນທັງໝົດແມ່ນສູງກວ່າ 100% ເນື່ອງຈາກປະຊາກອນບາງສ່ວນນັບຖືທັງສອງສາສະໜາຄື: ນັບຖືທັງສາສະໜາພຸດ ແລະ ສາສະໜາຊິນໂຕ).

**ຄ. ດ້ານການສຶກສາ**

ລະບົບການສຶກສາໃນລະດັບປະຖົມ, ມັດທະຍົມ ແລະ ອຸດົມສຶກສາຖືກນຳມາໃຊ້ແຕ່ປີ ຄສ 1908 ເຊິ່ງເປັນຜົນຈາກການປະຕິຮູບເມຈິຕັ້ງແຕ່ ຄສ 1947 ການສຶກສາພາກບັງຄັບຂອງຍີ່ປຸ່ນມີໄລຍະເວລາ 9 ປີ ຕັ້ງແຕ່ປະຖົມສຶກສາຈນຈົບມັດທະຍົມສຶກສາຕອນຕົ້ນ (ປ1-ປ6 ແລະ ມ1-ມ3) ເຊິ່ງເກືອບທັງໝົດຈະຮຽນມັດທະຍົມສຶກສາຕອນປາຍຕໍ່ຈາກຂໍ້ມູນກະຊວງການສຶກສາຂອງຍີ່ປຸ່ນ ໃນ ຄສ 2004 ພົບວ່າ ຮ້ອຍລະ 75,9 ຂອງຜູ້ຈົບການສຶກສາລະດັບມັດທະຍົມສຶກສາຕອນປາຍຈະຮຽນຕໍ່ໃນມະຫາວິທະຍາໄລ ຫຼື ສະຖາບັນອຸດົມສຶກສາອື່ນໆ. ການສຶກສາໃນຍີ່ປຸ່ນເຕັມໄປດ້ວຍການແຂ່ງຂັນ ໂດຍສະເພາະຢ່າງຍິ່ງການສອບເສັງເຂົ້າເພື່ອຮຽນຕໍ່ໃນມະຫາວິທະຍາໄລ ໂຄງການປະເມີນຜົນການສຶກສານາໆຊາດເຊິ່ງຈັດຂຶ້ນໂດຍ ໂອອີຊີດີ ຈັດລະດັບໃຫ້ເດັກຍີ່ປຸ່ນມີຄວາມຮູ້ ແລະ ທັດສະນະ ທັກສະເປັນອັນດັບທີ 6 ຂອງໂລກ ມະຫາວິທະຍາໄລທີ່ມີຊື່ສຽງໃນຍີ່ປຸ່ນເຊັ່ນ: ມະຫາວິທະຍາໄລໂຕກຽວ, ມະຫາວິທະຍາໄລເຄໂອ ແລະ ມະຫາວິທະຍາໄລຄຽວໂຕະເປັນຕົ້ນ.

ການສຶກສາພື້ນຖານມີຢູ່ 3 ຂັ້ນຄື:

- ຊັ້ນປະຖົມ 6 ປີ ອາຍຸແຕ່ 6-12 ປີ
- ຊັ້ນມັດທະຍົມຕົ້ນ 3 ປີ ອາຍຸແຕ່ 12-15 ປີ
- ຊັ້ນມັດທະຍົມປາຍ 3 ປີ ອາຍຸແຕ່ 15-18 ປີ

ການສຶກສາຈະເລີ່ມແຕ່ ວັນທີ 1 ກັນຍາ ຫາ 31 ມີນາ ຂອງປີຕໍ່ມາການຮຽນຈະແບ່ງເປັນ 3 ເທີມນັກຮຽນເຂົ້າຮຽນຕັ້ງແຕ່ ວັນຈັນເຖິງວັນສຸກເຕັມວັນ ແລະ ວັນເສົາອີກເຄິ່ງວັນຂໍ້ກຳນົດຂອງກົດໝາຍໃຫ້ຮຽນໃນໄລຍະ 1 ປີ ຢ່າງໜ້ອຍຕ້ອງເຖິງ 210 ວັນ ແຕ່ສ່ວນຫຼາຍຢູ່ໃນໂຮງຮຽນຈະເພີ່ມອີກ 30 ວັນ. ສຳລັບຫຼັກສູດການຮຽນໃຫ້ນັກຮຽນໄດ້ຮັບການຮຽນທີ່ເໝາະສົມ ແລະ ການຮຽນພາກບັງຄັບຖືເປັນການປະຕິບັດຕໍ່ນັກຮຽນດ້ວຍຄວາມສະເໝີພາບ, ມີການຢາຍງົບປະມານໄປຕາມໂຮງຮຽນຕ່າງໆຢ່າງເທົ່າທຽມກັນ ແລະ ມີເປົ້າໝາຍນັ້ນໃຫ້ນັກຮຽນມີແນວຄວາມຄິດທີ່ສ້າງສັນ ແລະ ເພີ່ມໃຫ້ນັກຮຽນໄດ້ສະແດງອອກໃນເລື່ອງທີ່ຕົນເອງມັກ ການສອນຄູຈະເນັ້ນໃຫ້ນັກຮຽນຈື່ເນື້ອໃນຂອງບົດຮຽນທີ່ຈະອອກຂໍ້ສອບ. ນັກຮຽນທີ່ຮຽນໃນພາກບັງຄັບຈະໄດ້ຮັບປຶ້ມແບບຮຽນຟີ ຄະນະອຳນວຍການໂຮງຮຽນເປັນຜູ້ເລືອກປຶ້ມແບບຮຽນທຸກໆ 3 ປີ ໂດຍເລືອກຈາກລາຍຊື່ໜັງສືທີ່ກະຊວງການສຶກສາໄດ້ຮັບຮອງແລ້ວ ຫຼື ໜັງສືທີ່ກະຊວງຈັດຂຶ້ນເອງກະຊວງຈະເປັນຜູ້ຮັບພາລະຄ່າປຶ້ມທັງໂຮງຮຽນລັດ ແລະ ໂຮງຮຽນເອກະຊົນມີປຶ້ມຮຽນຂະໜາດນ້ອຍຖືໄປໄດ້ໂດຍງ່າຍ ແລະ ຖືວ່າເປັນສົມບັດຂອງນັກຮຽນ. ໂຮງຮຽນສ່ວນໃຫ່ຍຈະມີລະບົບເບິ່ງແຍງດູແລສຸຂະພາບ, ມີສິ່ງຂອງດ້ານການຮຽນ ແລະ ບ່ອນພັກຢູ່ພໍປະມານໂຮງຮຽນປະຖົມສ່ວນໃຫຍ່ມີບ່ອນເດັກຫຼິ້ນກາງແຈ້ງປະມານຮ້ອຍລະ 90% ແລະ 75% ມີສະລອຍນ້ຳກາງແຈ້ງ ຫ້ອງຮຽນສ່ວນຫຼາຍຍັງຂາດແຄນຄອມພິວເຕີ ແລະ ເຄື່ອງສາຍທີ່ໃຊ້ເຂົ້າໃນການຮຽນ-ການສອນຂອງນັກຮຽນມັກບໍ່ໃຊ້ເຕັກໂນໂລຢີເຂົ້າໃນການຮຽນອິນເຕີເນັດຍັງບໍ່ທັນນຳໃຊ້. ການຮຽນການສອນຄູຈະເປັນຜູ້ຮັບຜິດຊອບຕໍ່ໂຮງຮຽນ ແລະ ນັກຮຽນບໍ່ວ່າຈະຢູ່ໃນຫ້ອງຮຽນ ຫຼື ນອກຊົ່ວໂມງຮຽນ. ຄູປະຈຳຫ້ອງຈະໄປຢ້ຽມນັກຮຽນທີ່ບໍ່ຍອມໄປໂຮງຮຽນເພື່ອໃຫ້ນັກຮຽນໄປໂຮງຮຽນ ຄູທີ່ເຮັດໃຫ້ນັກຮຽນກະທຳຜິດກົດໝາຍນອກໂຮງຮຽນຈະຖືກຮຽກຮ້ອງໃຫ້ສະແດງຄວາມຮັບຜິດຊອບ ແລະ ຂໍໂທດເຊັ່ນດຽວກັນກັບນາຍຈ້າງທີ່ເຮັດໃຫ້ລູກຈ້າງເຮັດຜິດກົດໝາຍ. ສຳລັບເງິນເດືອນຂອງຄູເລີ່ມຕົ້ນຈະໄດ້ຫຼາຍກວ່າພະນັກງານທົ່ວໄປ ນອກຈາກເງິນເດືອນແລ້ວຄູຍັງມີເງິນພິເສດຕ່າງໆ ແລະ ໂບນັດຈ່າຍເປັນ 3 ງວດເຊິ່ງມີຈຳນວນປະມານ 5 ເທົ່າຂອງເງິນເດືອນຄູຈະໄດ້ຮັບການເບິ່ງແຍງສຸຂະພາບ ແລະ ສະຫວັດດີການພາຍຫຼັງໝົດການຮຽນ.

**ງ. ດ້ານເພດ**

ຈຳນວນປະຊາກອນມີ:

- ອາຍຸແຕ່ 0-14 ປີ ເພດຊາຍ 8.927.803 ຄົນ,ເພດຍິງ 8.268.937 ຄົນ
- ອາຍຸແຕ່ 15-24 ປີ ເພດຊາຍ 6.385.033 ຄົນ, ເພດຍິງ 6.046.609 ຄົນ
- ອາຍຸແຕ່ 25-54 ປີ ເພດຊາຍ 24.299.387 ຄົນ, ເພດຍິງ 24.686.224 ຄົນ
- ອາຍຸແຕ່ 55-64 ປີ ເພດຊາຍ ໑.116.11 ຄົນ, ເພດຍິງ 9.177.11 ຄົນ
- ອາຍຸແຕ່ 65 ປີ ຂຶ້ນໄປ ເພດຊາຍ 13.097.55 ຄົນ, ເພດຍິງ 17.313.15 ຄົນ ເພດຍິງຈະມີຈຳນວນຫຼາຍກວ່າເພດຊາຍ.

**ຈ. ດ້ານອາຍຸ**

ໂຄງສ້າງດ້ານອາຍຸຂອງປະຊາກອນມີຜົນກະທົບຕໍ່ສັງຄົມ ແລະ ເສດຖະກິດຂອງປະເທດ ໂຄງສ້າງດ້ານປະຊາກອນສະແດງເຖິງການດຳລົງຊີວິດຂອງປະຊາກອນເພດຊາຍສະແດງທາງດ້ານຊ້າຍ, ເພດຍິງແມ່ນດ້ານຂວາ ໃນນັ້ນໄດ້ແບ່ງອອກເປັນ 5 ກຸ່ມອາຍຸທີ່ສະແດງເປັນແຖບແນວນອນ ແລະ ແນວຕັ້ງລັກສະນະແຜນການສະແດງຈະມີການປ່ຽນແປງໄປຕະຫຼອດເວລາຂຶ້ນກັບຄວາມອຸດົມສົມບູນຂອງປະຊາກອນທີ່ມີອັດຕາການຕາຍ ແລະ ການຍ້າຍຖິ່ນລະຫວ່າງປະເທດໃນນັ້ນອາຍຸຂອງປະຊາກອນມີ.

**ສ. ພາສາ**

ປະຊາກອນຍີ່ປຸ່ນຫຼາຍກວ່າ 95% ໃຊ້ພາສາຍີ່ປຸ່ນເປັນພາສາແມ່. ພາສາຍີ່ປຸ່ນມີທີຜັນຄຳກິລິຍາ ແລະ ຄຳສັບທີ່ສະແດງເຖິງສະຖານະລະຫວ່າງຜູ້ເວົ້າ ແລະ ຜູ້ຟັງ, ເຊິ່ງສະແດງເຖິງລັກສະນະສັງຄົມທີ່ມີລະດັບຂັ້ນຂອງຍີ່ປຸ່ນ, ພາສາເວົ້ານັ້ນມີທັງພາສາກາງ ແລະ ສຳນຽງຂອງແຕ່ລະທ້ອງຖິ່ນ. ພາສາຍີ່ປຸ່ນເປັນພາສາທາງການຂອງຍີ່ປຸ່ນເຊິ່ງມີຄວາມສຳຄັນຢ່າງຍິ່ງໃນການໃຊ້ຊີວິດໃນປະເທດຍີ່ປຸ່ນ ແລະ ພາສາອັງກິດສ່ວນໃຫ່ຍແມ່ນຈະຖືກນຳໃຊ້ເຂົ້າໃນການບໍລິການເປັນຕົ້ນແມ່ນ: ໃນສະໜາມບິນ, ໂຮງແຮມໂດຍການຕິດຕໍ່ສື່ສານກັບຕ່າງປະເທດເທົ່ານັ້ນ. ພາສາຍີ່ປຸ່ນເປັນພາສາລາຊະການ. ໃນແຕ່ລະພູມີພາກຈະໃຊ້ພາສາກາງພຽງເລັກນ້ອຍ

**1.2ໂຄງສ້າງທາງດ້ານການເມືອງ ແລະ ການປົກຄອງ**

ປະເທດຍີ່ປຸ່ນປົກຄອງດວ້ຍລະບອບປະຊາທິປະໄຕໃນຮູບແບບຂອງສະພາແຫ່ງຊາດ, ພາຍໃຕ້ລັດຖະທຳມະນູນ. ໂດຍມີສົມເດັດພະເຈົ້າຈັກກະພັດຊົງເປັນປະມຸກແຫ່ງລັດ, ແຕ່ບໍ່ມີອຳນາດໃນການບໍລິຫານປະເທດຕາມທີ່ລັດຖະທຳມະນູນສະບັບປັດຈຸບັນຂອງຍີ່ປຸ່ນ ເຊິ່ງມີຜົນບັງຄັບໃຊ້ຕັ້ງແຕ່ປີ ຄສ 1947 ນັ້ນໄດ້ໃຫ້ອຳນາດອະທິປະໄຕແກ່ປະຊາຊົນ ແລະ ໃຫ້ “ສົມເດັດພະຈັກກະພັດຊົງເປັນສັນຍາລັກຂອງຊາດ” ໂດຍບໍ່ມີອຳນາດໃນລັດຖະບານ ແຕ່ຊົງປະຕິບັດພາລະກິດຕາມທີ່ສະພາແຫ່ງຊາດ ຫຼື ຄະນະມົນຕີກຳນົດ ແລະ ຊົງຖືກຈຳກັດໃຫ້ປະຕິບັດພາລະກິດສະເພາະທີ່ກ່ຽວກັບພະລາຊະພິທີຢ່າງເປັນທາງການເທົ່ານັ້ນ,ແນວໃດກໍຕາມພະອົງຍັງຄົງໄດ້ຮັບການຍົກຍ້ອງໃນຖານະເປັນພະປະມຸກຂອງປເທດເພື່ອຈຸດປະສົງທາງການທູດ. ສົມເດັດພະຈັກກະພັດອົງປັດຈຸບັນຄື: ສົມເດັດພະຈັກກະພັດດິອາກິຮິໂຕະ,ເຊິ່ງຂຶ້ນຄອງລາດໃນວັນທີ 7 ມັງກອນ ຄສ 1989. ລະບົບການເມືອງຂອງຍີ່ປຸ່ນຍຶດຖືຫຼັກການແຍກອຳນາດໃນການປົກຄອງປະເທດອອກເປັນ 3 ອຳນາດຄື:

- ອຳນາດນິຕິບັນຍັດ ຫຼື ສະພາແຫ່ງຊາດ
- ອຳນາດບໍລິຫານ ,ແບ່ງອອກເປັນ 2 ພາກສວ່ນຄື: ອຳນາດບໍລິຫານຂັ້ນສູນກາງ ແລະ ອຳນາດບໍລິຫານຂັ້ນທ້ອງຖິ່ນ
- ອຳນາດຕຸລາການ ແບ່ງອອກເປັນ 2 ພາກສ່ວນຄື: ສານຍຸດຕິທຳ ແລະ ອົງການໄອຍະການ

## 2. ຍີ່ປຸ່ນກັບການເປັນມະຫາອຳນາດທາງເສດຖະກິດ

ຍີ່ປຸ່ນເປັນປະເທດທີ່ປະລາໄຊໃນສົງຄາມໂລກຄັ້ງທີ II ຊໍ້າພັດຖືກສູນເສຍຫົວເມືອງຂຶ້ນທັງໝົດ ແລະ ຖືກອາເມລິການຳກຳລັງທະຫານມາຢຶດຄອງຕາມການຕົກລົງຂອງຝ່າຍສຳພັນທະມິດ. ພື້ນຖານເສດຖະກິດຍີ່ປຸ່ນຖືກສົງຄາມທຳລາຍຢ່າງໜັກໜ່ວງຜະລິດຕະພັນອຸດສະຫະກຳໃນປີ 1946 ເທົ່າກັບຂອງໄລຍະກ່ອນສົງຄາມ.

ແຕ່ປີ 1945-1950 ພື້ນຖານເສດຖະກິດຂອງຍີ່ປຸ່ນຂະຫຍາຍຕົວຊັກຊ້າ ແລະ ໄດ້ຕິດພັນແໜ້ນແຟ້ນກັບເສດຖະກິດຂອງອາເມລິກາ ແຕ່ວ່າພາຍຫຼັງທີ່ອາເມລິກາດຳເນີນສົງຄາມຮຸກຮານເກົາຫຼີ (1950) ອຸດສະຫະກຳຂອງຍີ່ປຸ່ນກໍໄດ້ຂະຫຍາຍຕົວຂຶ້ນຢ່າງວ່ອງໄວ ຍ້ອນໄດ້ຜະລິດອຸປະກອນທາງການທະຫານໃຫ້ແກ່ ອາເມລິກາ ຮອດຊຸມປີ 60 ເມື່ອອາເມລິກາມົວເມົາໃນສົງຄາມຮຸກຮານອິນດູຈີນ ຍີ່ປຸ່ນກໍມີໂອກາດຂະຫຍາຍຕົວຢ່າງດະໂດດຂັ້ນ ແລະ ເປັນໜ້າມະຫັດສະຈັນທີ່ສຸດ.

ປະລິມານການຜະລິດລວມຍອດແຫ່ງຊາດໃນປີ 1950 ໄດ້ພຽງແຕ່ 20 ຕື້ໂດລາ ແຕ່ຮອດປີ 1968 ກໍ່ລື່ນກາຍບັນດາປະເທດເອີຣົບຕາເວັນຕົກ ແລະ ເປັນອັນດັບທີ II ຂອງໂລກທຶນນິຍົມໃນຕະຫຼອດ 20 ກວ່າປີ (1950-1973) ປະລິມານການພະລິດລວມຍອດແຫ່ງຊາດເພີ້ມຂຶ້ນ 20 ກວ່າເທື່ອ.

ໃນຂະແໜງອຸດສະຫະກຳຍີ່ປຸ່ນກໍມີບົດບາດຂະຫຍາຍຕົວຢ່າງເຂັ້ມແຂງ ແລະ ໄວກວ່າໝູ່ປັດຈຸບັນຍີ່ປຸ່ນເປັນຜູ້ນຳກ່ຽວກັບການຜະລິດກຳປັ່ນ (ເທົ່າກັບ 50% ຂອງຈຳນວນກຳປັ່ນໃນທົ່ວໂລກ) ເຫຼັກກ້າ, ລົດຈັກ, ລົດຍົນ, ເທັບ, ໂທລະພາບ, ກ້ອງຖ່າຍຮູບ, ໂມງ....

ສ່ວນທາງດ້ານກະສິກຳແຕ່ປີ 1967-1969 ປະລິມານເຂົ້າສາມາດຜະລິດໄດ້ 80% ຂອງຈຳນວນເຂົ້າທັງໝົດຢູ່ພາຍໃນປະເທດ ສະເພາະການລ້ຽງສັດສະໜອງໄດ້ 2/3 ຂອງຄວາມຕ້ອງການໃນທົ່ວປະເທດ ຂະແໜງການປະມົງຂະຫຍາຍຕົວໃຫ້ສຸດເປັນອັນດັບ 2 ຮອງຈາກປະເທດເປຣູ.

ນັບແຕ່ຊຸມປີ 70 ເປັນຕົ້ນມາຍີ່ປຸ່ນໄດ້ກາຍເປັນ 1 ໃນ 3 ສູນກາງເສດຖະກິດການເງິນຂອງໂລກ (ອາເມລິກາ, ເອີລົບຕາເວັນຕົກ, ຍີ່ປຸ່ນ) ໃນນັ້ນຄັງເງິນສົດ ແລະ ຄຳສົດຂອງຍີ່ປຸ່ນເພີ້ມຂຶ້ນຫຼາຍກວ່າອາເມລິກາ ສິນຄ້າຂອງຍີ່ປຸ່ນໄດ້ແຊກຊຶມ ແລະ ຂັດແຍ່ງຢູ່ໃນຕະຫຼາດໂລກຢ່າງກວ້າງຂວາງ ພຽງແຕ່ພາຍໃນຊ່ວງໄລຍະເວລາສັ້ນໆເທົ່ານັ້ນ ຍີ່ປຸ່ນກໍສູ້ຊົນບືນຕົວຂຶ້ນໃຫ້ກາຍເປັນມະຫາອຳນາດທາງດ້ານເສດຖະກິດ ເຊິ່ງໃນໂລກໄດ້ຂະໜານນາມວ່າ "ຍີ່ປຸ່ນມະຫັດສະຈັນ"

❖ ສາເຫດທີ່ເຮັດໃຫ້ເສດຖະກິດຂອງຍີ່ປຸ່ນຂະຫຍາຍຕົວຢ່າງກະໂດດຂຶ້ນແມ່ນມາຈາກຫຼາຍສາເຫດດັ່ງນີ້:

- ໄດ້ນຳໃຊ້ແຫຼ່ງທຶນຂອງຕ່າງປະເທດ ເພື່ອສຸມໃສ່ການລົງທຶນໃນຂະແໜງອຸດສະຫະກຳທີ່ສຳຄັນຄື: ກົນຈັກ, ຫຼອມໂລຫະ...ຫຼຸດຜ່ອນການໃຊ້ຈ່າຍທາງການທະຫານ ກົນໄກໃນກົງຈັກຂອງລັດກະທັດລັດເບົາບາງ.
- ໝູນໃຊ້ຜົນງານທາງດ້ານວິທະຍາສາດເຕັກນິກ ເພື່ອເພີ້ມສະມັດຖະພາບຂອງການອອກແຮງງານດັດແປງດ້ານເຕັກນິກ ແລະ ຫຼຸດລາຄາສິນຄ້າ
- ການເປີດກວ້າງປະຊາທິປະໄຕພາຍຫຼັງສົງຄາມໄດ້ເປັນການຊຸກຍູ້ໃຫ້ເສດຖະກິດຂະຫຍາຍຕົວ
- ຮູ້ນຳໃຊ້ສິນຄ້າຂອງຕົນແຊກຊຶມເຂົ້າຕະຫຼາດຂອງປະເທດຕ່າງໆໃນໂລກຢ່າງຄ່ອງແຄ້ວ.
- ນັບແຕ່ການປະຕິຮູບເມຈິ (Meji) ເປັນຕົ້ນມາຊ່ວຍໃຫ້ຍີ່ປຸ່ນໄດ້ເສີມຂະຫຍາຍມູນເຊື້ອ " ເພິ່ງຕົນເອງສ້າງຄວາມເຂັ້ມແຂງດ້ວຍຕົນເອງ" ບຸກໜ້າເພື່ອສ້າງປະເທດຊາດໃຫ້ຮັ່ງມີເຂັ້ມແຂງ.

ລັດຖະບານຍີ່ປຸ່ນເວລາໃດກໍຖືເອົາວຽກງານການຂະຫຍາຍວິທະຍາສາດເຕັກນິກ ແລະ ປະຕິຮູບພື້ນຖານການສຶກສາແຫ່ງຊາດເປັນໜ້າທີ່ສຳຄັນ ປັດຈຸບັນຍີ່ປຸ່ນເປັນໜຶ່ງໃນຈຳນວນປະເທດທີ່ນຳໜ້າໝູ່ໃນການຂະຫຍາຍວິທະຍາສາດເຕັກນິກ (ປຶ້ມປະຫວັດສາດ ມ 6 ໜ້າທີ 61 ປີ 2003) .

## 3. ແນວທາງການຕ່າງປະເທດຂອງຍີ່ປຸ່ນ

ທາງດ້ານການເມືອງ ແລະ ການທະຫານຍີ່ປຸ່ນໄດ້ມີການເຊັນສັນຍາກັບອາເມລິກາວ່າດ້ວຍສົນທິສັນຍາປ້ອງກັນຄວາມສະຫງົບ ອາເມລິກາ-ຍີ່ປຸ່ນ ໃນເດືອນ 9 ຄສ 1951 ສົນທິສັນຍາສະບັບນີ້ໄດ້ຮັບຮອງວ່າຍີ່ປຸ່ນຍອມຢູ່ໃຕ້ການປ້ອງກັນອາວຸດນິວເຄຣຍຂອງອາເມລິກາ ແລະ ໃຫ້ກອງທະຫານຂອງອາເມລິກາມີສິດຕັ້ງຖານທັບທະຫານຢູ່ເທິງດິນແດນຂອງຕົນ ສົນທິສັນຍາດັ່ງກ່າວໄດ້ກາຍເປັນສຳພັນທະມິດ ຕ້ານບັນດາປະເທດສັງຄົມນິຍົມ ແລະ ຂະບວນປົດປ່ອຍຊາດຢູ່ເຂດຕາເວັນອອກໄກພາຍຫຼັງສົງຄາມໂລກ

ຍີ່ປຸ່ນມີການພົວພັນທາງການທູດກັບເກືອບທຸກປະເທດທີ່ເປັນເອກະລາດໃນໂລກ. ປະເທດນີ້ເປັນສະມາຊິກຂອງສະຫະປະຊາຊາດໃນປັດຈຸບັນນັບຕັ້ງແຕ່ເດືອນທັນວາ 1956. ຍີ່ປຸ່ນເປັນສະມາຊິກຂອງ G7, APEC ແລະ "ອາຊຽນບວກສາມ" ແລະເຂົ້າຮ່ວມກອງປະຊຸມສຸດຍອດອາຊີຕາເວັນອອກ. ຍີ່ປຸ່ນໄດ້ລົງນາມໃນຂໍ້ຕົກລົງດ້ານຄວາມປອດໄພກັບອົດສະຕຣາລີໃນເດືອນມີນາ 2007[79] ແລະກັບອິນເດຍໃນເດືອນຕຸລາ 2008[80] ແລະເປັນຜູ້ໃຫ້ທຶນຊ່ວຍເຫຼືອດ້ານການພັດທະນາທີ່ໃຫຍ່ທີ່ສຸດອັນດັບ 5 ຂອງໂລກ. ໂດຍການບໍລິຈາກ 9.2 ຕື້ໂດລາສະຫະລັດໃນປີ 2014[81]

ຍີ່ປຸ່ນມີຄວາມສໍາພັນທີ່ໃກ້ຊິດກັບສະຫະລັດ. ນັບຕັ້ງແຕ່ສະຫະລັດແລະພັນທະມິດໄດ້ເອົາຊະນະຍີ່ປຸ່ນໃນສົງຄາມໂລກຄັ້ງທີສອງ, 2 ປະເທດຮັກສາການພົວພັນດ້ານເສດຖະກິດ ແລະ ການປ້ອງກັນປະເທດຢ່າງໃກ້ຊິດ. ອາເມລິກາແມ່ນຕະຫຼາດທີ່ສໍາຄັນຂອງການສົ່ງອອກຂອງຍີ່ປຸ່ນແລະແຫຼ່ງການນໍາເຂົ້າຕົ້ນຕໍຂອງຍີ່ປຸ່ນ. ແລະຜູກມັດການປ້ອງກັນປະເທດຍີ່ປຸ່ນ ກັບບາງຖານທັບທະຫານໃນປະເທດຍີ່ປຸ່ນສໍາລັບເຫດຜົນນັ້ນ[82]

ຍີ່ປຸ່ນໄດ້ຕໍ່ສູ້ກັບການຄວບຄຸມຂອງຣັດເຊຍໃນໝູ່ເກາະ Kuril ພາກໃຕ້ (ຄືກຸ່ມ Itorofu, Kunashiri, Shitokan, ແລະ Habomai). ມັນໄດ້ຖືກຍຶດຄອງໂດຍສະຫະພາບໂຊວຽດໃນປີ 1945. ຍີ່ປຸ່ນໄດ້ຮັບຮູ້ການຢືນຢັນຂອງເກົາຫຼີໃຕ້ຕໍ່ສານ Lean (ຫຼື "Takeshima" ໃນພາສາຍີ່ປຸ່ນ), ແຕ່ບໍ່ຍອມຮັບມັນ, ຍີ່ປຸ່ນໄດ້ສ້າງຄວາມເຄັ່ງຕຶງກັບຈີນແລະໄຕ້ຫວັນກ່ຽວກັບຫມູ່ເກາະ Senkaku. ແລະກັບຈີນເຫນືອ, ສະຖານະພາບຂອງ Okino Torishima

ການພົວພັນຂອງຍີ່ປຸ່ນກັບເກົາຫຼີໃຕ້ໄດ້ຮັບຄວາມເຄັ່ງຕຶງໃນປະຫວັດສາດເນື່ອງຈາກການທີ່ຍີ່ປຸ່ນໄດ້ປະຕິບັດຕໍ່ເກົາຫຼີໃນລະຫວ່າງການປົກຄອງອານານິຄົມຍີ່ປຸ່ນ. ໂດຍສະເພາະແມ່ນການໃຊ້ແມ່ຍິງເປັນຊ່ອງທາງທາງເພດ.[83] ໃນປີ 2015, ຍີ່ປຸ່ນໄດ້ອອກຄໍາຂໍໂທດຢ່າງເປັນທາງການ ແລະໃຫ້ເງິນແກ່ແມ່ຍິງທຸກຄົນທີ່ຕົກເປັນເຫຍື່ອຂອງຄວາມຮຸນແຮງດັ່ງກ່າວ.[84] ໃນປີ 2019, ຍີ່ປຸ່ນເປັນຜູ້ນໍາເຂົ້າເພງເກົາຫຼີ (K-pop), ຊີຣີໂທລະທັດ ແລະກິດຈະກໍາວັດທະນະທໍາອື່ນໆທີ່ມີຄວາມສໍາຄັນຂອງເກົາຫຼີໃຕ້[85][86]

ການບັງຄັບໃຊ້ກົດຫມາຍ

ຄວາມປອດໄພພາຍໃນປະເທດຍີ່ປຸ່ນແມ່ນການຊີ້ນໍາຕົ້ນຕໍໂດຍພະແນກຕໍາຫຼວດ Prefectural. ພາຍໃຕ້ການຊີ້ນໍາຂອງຕໍາຫຼວດຕໍາຫຼວດໄທ [87] ເປັນອົງການປະສານງານສູນກາງຂອງພະແນກຕໍາຫຼວດແຂວງ. ອົງການຕໍາຫຼວດແຫ່ງຊາດແມ່ນຄຸ້ມຄອງໂດຍຄະນະກໍາມາທິການຄວາມປອດໄພສາທາລະນະແຫ່ງຊາດ.[88] ກອງກໍາລັງພິເສດປະກອບດ້ວຍໜ່ວຍງານຍຸດທະວິທີຕ້ານການກໍ່ການຮ້າຍແຫ່ງຊາດທີ່ຮ່ວມມືກັບໜ່ວຍງານຕ້ານການກໍ່ການຮ້າຍຂອງ NBC ແລະໜ່ວຍງານຕ້ານການກໍ່ການຮ້າຍຂອງ NBC. ກອງຍາມຝັ່ງຂອງຍີ່ປຸ່ນປົກປ້ອງເຂດນ່ານນໍ້າທີ່ອ້ອມຮອບຍີ່ປຸ່ນແລະໃຊ້

ມາດຕະການລະມັດລະວັງເພື່ອຄວບຄຸມການລັກລອບຄ້າມະນຸດ. ອາດຊະຍາກຳທາງທະເລ, ການລັກລອບ, ການລັກລອບ, ເຮືອສອດແນມ, ເຮືອຫາປາຕ່າງປະເທດທີ່ບໍ່ໄດ້ຮັບອະນຸຍາດ[89]

ກົດໝາຍຄວບຄຸມປືນ ແລະດາບ ຄວບຄຸມຄວາມເປັນເຈົ້າຂອງພົນລະເຮືອນຢ່າງເຂັ້ມງວດກ່ຽວກັບອາວຸດປືນ, ດາບ ແລະອາວຸດອື່ນໆ,[90] ອີງຕາມອົງການສະຫະປະຊາຊາດກ່ຽວກັບຢາເສບຕິດ ແລະອາດຊະຍາກຳ. ໃນບັນດາປະເທດສະມາຊິກສະຫະປະຊາຊາດລາຍງານສະຖິຕິໃນປີ 2018, ອັດຕາການເກີດຂອງອາຊະຍາກຳຮຸນແຮງເຊັ່ນການຄາດຕະກຳ, ລັກພາຕົວ, ຄວາມຮຸນແຮງທາງເພດແມ່ນສູງຂຶ້ນ. ແລະ ການລັກຂະໂມຍແມ່ນຕ່ຳຫຼາຍໃນປະເທດຍີ່ປຸ່ນ.

**ກອງທັບ**

ເຮືອພິຄາດຊັ້ນ Kongo ຂອງກຳລັງປ້ອງກັນຕົນເອງທາງທະເລຂອງຍີ່ປຸ່ນ.

ການທະຫານຂອງຍີ່ປຸ່ນຖືກຈຳກັດໂດຍມາດຕາ 9 ຂອງລັດຖະທຳມະນູນຍີ່ປຸ່ນ. ເຊິ່ງໄດ້ຍົກເລີກສິດຂອງຍີ່ປຸ່ນໃນການປະກາດສົງຄາມ ແລະການໃຊ້ກຳລັງທະຫານໃນການພິພາດສາກົນ ດັ່ງນັ້ນ, "ກອງກຳລັງປ້ອງກັນຕົນເອງຂອງຍີ່ປຸ່ນ" ບໍ່ເຄີຍຕໍ່ສູ້ຢູ່ນອກປະເທດຍີ່ປຸ່ນ. ວ່າກະຊວງປ້ອງກັນປະເທດປົກຄອງກຳລັງປະກອບອາວຸດ ແລະສ່ວນໃຫຍ່ແມ່ນປະກອບດ້ວຍກອງກຳລັງປ້ອງກັນຕົນເອງທາງບົກຍີ່ປຸ່ນ. ກຳລັງປ້ອງກັນຕົນເອງທາງທະເລຂອງຍີ່ປຸ່ນ ກອງທັບປ້ອງກັນຕົນເອງທາງອາກາດຂອງຍີ່ປຸ່ນ ກອງກຳລັງປ້ອງກັນຕົນເອງທາງທະເລຂອງຍີ່ປຸ່ນແມ່ນຜູ້ເຂົ້າຮ່ວມເປັນປະຈຳໃນການຊ້ອມຮົບທາງທະເລ RIMPAC (RIMPAC). ການສົ່ງກຳລັງທະຫານຢູ່ອີຣັກແມ່ນການສົ່ງທະຫານຍີ່ປຸ່ນໄປຕ່າງປະເທດເທື່ອທຳອິດນັບແຕ່ສົງຄາມໂລກຄັ້ງທີ 2. ສະຫະພັນທຸລະກິດຍີ່ປຸ່ນຮຽກຮ້ອງໃຫ້ລັດຖະບານຍົກເລີກການຫ້າມບໍ່ໃຫ້ມີອາວຸດຍຸດໂທປະກອນ. ເພື່ອເຮັດໃຫ້ຍີ່ປຸ່ນເຂົ້າຮ່ວມໃນໂຄງການສາກົນເຊັ່ນ: ການຕໍ່ສູ້ກັບການໂຈມຕີຮ່ວມກັນ [97]

ໃນສະຕະວັດທີ 21, ການດຸ່ນດ່ຽງອຳນາດຂອງທົ່ວໂລກພວມປ່ຽນແປງຢ່າງວ່ອງໄວໂດຍສົມທົບກັບການຫັນເປັນໂລກາພິວັດ. ສະພາບແວດລ້ອມຄວາມປອດໄພໃນທົ່ວປະເທດຍີ່ປຸ່ນເພີ່ມຂຶ້ນ. ເປັນທີ່ໂດດເດັ່ນສຳລັບການພັດທະນານິວເຄລຍ ແລະລູກສອນໄຟຂອງເກົາຫຼີເໜືອ ໄພຂົ່ມຂູ່ຂ້າມຊາດທີ່ເກີດຈາກຄວາມກ້າວໜ້າທາງດ້ານເຕັກໂນໂລຢີ ລວມທັງການກໍ່ການຮ້າຍສາກົນແລະການໂຈມຕີທາງອິນເຕີເນັດແມ່ນມີຄວາມສຳຄັນເພີ່ມຂຶ້ນ.[98] ຍີ່ປຸ່ນ, ລວມທັງກຳລັງປ້ອງກັນຕົນເອງ, ໄດ້ມີສ່ວນຮ່ວມຫຼາຍທີ່ສຸດ. ໃນຄວາມພະຍາຍາມເພື່ອຮັກສາແລະຟື້ນຟູສັນຕິພາບແລະຄວາມປອດໄພສາກົນ

ຍີ່ປຸ່ນມີສາຍພົວພັນທາງການທະຫານທີ່ໃກ້ຊິດກັບສະຫະລັດ. ພັນທະມິດດ້ານຄວາມໝັ້ນຄົງສະຫະລັດ-ຍີ່ປຸ່ນໄດ້ເປັນພື້ນຖານຂອງນະໂຍບາຍການຕ່າງປະເທດຂອງປະເທດຊາດ. ແລະ 2010.

ໃນເດືອນພຶດສະພາ 2014, ນາຍົກລັດຖະມົນຕີ Shinzo ທ່ານອາເບະກ່າວວ່າ, ຍີ່ປຸ່ນຈຳເປັນຕ້ອງຖອນຕົວອອກຈາກຄວາມບໍ່ລົງລອຍກັນຂອງຕົນ. ທີ່ມີມານັບຕັ້ງແຕ່ສົງຄາມໂລກຄັ້ງທີ 2 ສິ້ນສຸດລົງແລະມີຄວາມຮັບຜິດຊອບຕໍ່ຄວາມໝັ້ນຄົງຂອງພາກພື້ນ ທ່ານກ່າວວ່າຍີ່ປຸ່ນຕ້ອງການທີ່ຈະມີບົດບາດສຳຄັນແລະສະເໜີການຊ່ວຍເຫຼືອແກ່ປະເທດເພື່ອນບ້ານຂອງຍີ່ປຸ່ນ.[100] ຄວາມເຄັ່ງຕຶງທີ່ຜ່ານມາ, ໂດຍສະເພາະກັບເກົາຫລີເໜືອ, ໄດ້ເຮັດໃຫ້ເກີດການໂຕ້ວາທີຮອບໃໝ່. ປ່ອຍອອກມາເມື່ອເດືອນທັນວາ 2010, ຂໍ້ແນະນຳໃໝ່ຂອງກອງທັບອາວຸດຂອງຍີ່ປຸ່ນຈະຊີ້ນຳ JSDF ຈາກການເອົາໃຈໃສ່ໃນຍຸກສົງຄາມເຢັນກັບອະດີດສະຫະພາບໂຊຫວຽດໄປຫາຈີນ. ໂດຍສະເພາະແມ່ນກ່ຽວກັບການພິພາດພາກເໜືອ.

ເວົ້າລວມແລ້ວປະເທດຍີ່ປຸ່ນເປັນ ປະເທດໜຶ່ງທີ່ນອນໃນທະວີບອາຊີ ທີ່ມີເສດຖະກິດຂະຫຍາຍຕົວ ແລະ ພັດທະນາປະເທດຊາດໄປສູ່ຄວາມຈະເລີນຮຸ່ງເຮືອງທີ່ມີຄວາມທັນສະໄໝ ດ້ານເຕັກໂນໂລຢີ ຍີ່ປຸ່ນມີເສດຖະກິດຂະຫຍາຍຕົວຕັ້ງແຕ່ມີ ການປະຕິຮູບເມຈິ ເຮັດໃຫ້ເສດຖະກິດຍີ່ປຸ່ນຂະຫຍາຍຕົວເລື້ອຍມາ.

ຍີ່ປຸ່ນເປັນປະເທດຟາດຊິດທີ່ປາລາໄຊໃນສົງຄາມໂລກຄັ້ງທີ 2 ເຮັດໃຫ້ຍີ່ປຸ່ນສູນເສຍຫົວເມືອງຂຶ້ນທັງໝົດ ແລະ ຖືກອາເມຣິກາໃຊ້ກຳລັງທະຫານປາບປາມຍຶດຄອງ ຕາມກົດເກນຂອງຝ່າຍສຳພັນທະມິດ. ພື້ນຖານເສດຖະກິດຂອງຍີ່ປຸ່ນແມ່ນຖືກທຳລາຍຢ່າງໜັກໜ່ວງ ຜະລິດຕະພັນອຸດສາຫະກຳໃນປີ ຄ.ສ 1946 ເທົ່າກັບ1/4 ຂອງໄລຍະສົງຄາມ

ປີ ຄ.ສ 1945 – 1950 ພື້ນຖານເສດຖະກິດຍີ່ປຸ່ນ ການຂະຫຍາຍຕົວແມ່ນຊັກຊ້າ ແລະ ມີຄວາມຕິດພັນແໜ້ນແຟ້ນກັບເສດຖະກິດ ອາເມຣິກາ. ພາຍຫຼັງທີ່ອາເມຣິກາໄດ້ດຳເນີນສົງຄາມຮຸກຮານ ເກົາຫຼີ ( ຄ.ສ 1950 ) ເຮັດໃຫ້ ຍີ່ປຸ່ນສາມາດຂະຫຍາຍໄດ້ຢ່າງວ່ອງໄວ ຍ້ອນວ່າໄດ້ມີການຜະລິດອຸປະກອນຮັບໃຊ້ທາງ ການທະຫານຂາຍໃຫ້ອາເມຣິກາ. ຮອດຊຸມປີ 60 ໃນເມື່ອອາເມຣິກາພວມເມົາໃນການເຮັດສົງຄວາມຮຸກຮານອິນດູຈີນ, ເຮັດໃຫ້ ຍີ່ປຸ່ນສວຍໃຊ້ໂອກາດດັ່ງກ່າວ ເພື່ອຂະຫຍາຍເສດຖະກິດຢ່າງວ່ອງໄວກະໂດດຂັ້ນ ແລະ ໜ້າມະຫັດສະຈັນທີ່ສຸດ.

ຂະແໜງອຸດສາຫະກຳ ຍີ່ປຸ່ນກໍ່ມີບາດກ້າວການຂະຫຍາຍຕົວຢ່າງເຂັ້ມແຂງ ແລະ ໄວກວ່າໝູ່. ປະຈຸບັນ ຍີ່ປຸ່ນກາຍເປັນຜູ້ນຳໜ້າກ່ຽວກັບການຜະລິດກຳປັ່ນ ( ເທົ່າກັບ 50% ຂອງຈຳນວນກຳປັ່ນໃນທົ່ວໂລກ ), ການຜະລິດເຫຼັກກ້າ, ເຄື່ອງຈັກ, ລົດຍົນ, ເທັບ, ໂທລະພາບ, ກ້ອງຖ່າຍຮູບ, ໂມງ...

ດ້ານການກະສິກຳ ປະລິມານການຜະລິດເຂົ້າແມ່ນ 80% ( ຄ.ສ 1967 – 1969 ) ຂອງຈານວນເຂົ້າໃນທົ່ວປະເທດ. ການລ້ຽງສັດສະໜອໄດ້ 2/3 ຂອງຄວາມຕ້ອງການພາຍໃນປະເທດ ສ່ວນການປະມົງແມ່ນມີການຂະຫຍາຍຕົວຮອງອັນດັບສອງຮອງຈາກປະເທດເປຣູ

ນັບແຕ່ຊຸມປີ 70 ເປັນຕົ້ນມາ ຍີ່ປຸ່ນໄດ້ກາຍເປັນປະເທດໜຶ່ງໃນ 3 ປະເທດທີ່ເປັນສູນກາງທາງດ້ານເສດຖະກິດ ແລະ ການເງິນຂອງໂລກ ( ອາເມຣິກາ, ເອີຣົບຕາເວັນຕົກ ແລະ ຍີ່ປຸ່ນ ) ໃນນັ້ນຄັງເງິນສົດ ແລະ ຄາສົດຂອງຍີ່ປຸ່ນລື່ນກາຍອາເມຣິກາ.

- ການຄ້າຍີ່ປຸ່ນ ສິນຄ້າໄດ້ແຊກຊຶມ ແລະ ແກ້ງແຍ້ງຢູ່ໃນຕະຫຼາດໂລກຢ່າງກ້ວາງຂວາງ ພຽງແຕ່ໄລຍະເວລາສັ້ນໆເທົ່ານັ້ນ, ຍີ່ປຸ່ນກໍ່ສາມາດສູ້ຊົນບົ້ນຕົວຂຶ້ນໃຫ້ກາຍເປັນມະຫາອຳນາດທາງດ້ານເສດຖະກິດ ເຊິ່ງໂລກໄດ້ໃຫ້ຂະໜານນາມວ່າ " ຍີ່ປຸ່ນມະຫັດສະຈັນ ".

ປັດໃຈທີ່ເຮັດໃຫ້ຍີ່ປຸ່ນມີເສດຖະກິດຂະຫຍາຍຕົວຢ່າງວ່ອງໄວກະໂດດຂັ້ນມາຈາກ

- ໄດ້ນຳໃຊ້ແຫຼ່ງທຶນຂອງອຕ່າງປະເທດ ເພື່ອສຸມໃສ່ການລົງທຶນໃນຂະແໜງການອຸດສາຫະກຳທີ່ສຳຄັນເຊັ່ນ: ເຄື່ອງກົນຈັກ, ຫຼອມໂລຫະ...ຫຼຸດຜ່ອນຄ່າໃຊ້ຈ່າຍທາງດ້ານການທະຫານ ກົນໄກກົງຈັກລັດໃຫ້ກະທັດຮັດລົງ.
- ໝູນໃຊ້ຜົນງານທາງດ້ານວິທະຍາຍສາດ ເຕັກນິກ ເພື່ອເພີ່ມສະມັດທະພາບຂອງການອອກແຮງງານການຜະລິດໃຫ້ດີຂຶ້ນ, ດັດແປງເຕັກນິກ ແລະ ຫຼູດລາຄາສິນຄ້າ.



ຮູບທ  ສະໜາມບິນນິວຊິໂຕເຊະ ໃນຍີ່ປຸ່ນ

- ການເປີດກວ້າງປະຊາທິປະໄຕພາຍຫຼັງສົງຄາມ ໄດ້ຮັບການກະຕຸກຊຸກຍູ້ໃຫ້ເສດຖະກິດຂຫຍາຍຕົວ
- ຮູ້ນຳເອົາສິນຄ້າຂອງຕົນແຊກຊຶມເຂົ້າ ຕະຫຼາດປະເທດຕ່າງໆໃນໂລກໄດ້ຢ່າງຄ່ອງແຄ້ວ
- ນັບແຕ່ການປະຕິຮູບເມຈິ ( Meji ) ເປັນຕົ້ນມາຄົນ ຍີ່ປຸ່ນໄດ້ເສີມຂະຫຍາຍມູນເຊື້ອ ( ເພິ່ງຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ) ເພື່ອບຸກບືນຕົວໃນການສ້າງສາພັດທະນາປະເທດຊາດໃຫ້ຮັ່ງມີເຂັ້ມແຂງ.

ລັດຖະບານ ຍີ່ປຸ່ນ ເວລາໃດກໍ່ຖືເອົາວຽກງານການຂະຫຍາຍຕົວທາງ ດ້ານວິທະຍາສາດເຕັກນິກ ແລະ ປະຕິຮູບພື້ນຖານການສຶກສາແຫ່ງຊາດເປັນໜ້າທີ່ສຳຄັນ. ປັດຈຸບັນນີ້ ຍີ່ປຸ່ນໄດ້ກາຍເປັນປະເທດໜຶ່ງໃນຈານວນປະເທດທີ່ນາໜ້າໝູ່ໃນການຂະຫຍາຍຕົວທາງດ້ານວິທະຍາສາດເຕັກນິກ.

ຂະແໜງການຄ້າ ແມ່ນໄມ້ງັດທີ່ສຳຄັນຂອງເສດຖະກິດ ຍີ່ປຸ່ນ ເພາະວ່າ ຍີ່ປຸ່ນຕ້ອງມີການຊື້ ວັດຖຸດິບຫຼາຍຢ່າງຈາກຕ່າງປະເທດເປັນຈຳນວນຫຼວງຫຼາຍເຊັ່ນ: ແຮ່ເຫຼັກ 100%, ແຮ່ທອງ 99.9%, ຖ່ານຫີນ 97.1%, ບົກຊິດ 100%, ແຮ່ກົ່ວ 87.7%, ເກືອກິນ 85.5%, ນ້ຳມັນເຊື້ອໄຟ 99..7%... ແຕ່ກໍ່ເປັນປະເທດທີ່ມີການສົ່ງສິນຄ້າອອກຂາຍປະເພດວັດຖຸສຳເລັດຮູບ, ຜະລິດຕະພັນອຸດສາຫະກຳທີ່ມີລາຄາແພງໄດ້ເປັນຈຳນວນຫຼວງຫຼາຍເຊັ່ນ: ເຄື່ອງຈັກແມ່, ເຄື່ອງກົນຈັກຕ່າງໆ, ເຄື່ອງໄຟຟ້າ-ເອເລັກໂທນິກ, ລາງລົດໄຟ, ເຫຼັກເສັ້ນ, ເຄື່ອງແກ້ວ, ເຄື່ອງກະປ໋ອງ ແລະ ອື່ນໆ ເຊິ່ງເຮັດໃຫ້ການຄ້າຕ່າງໆໄດ້ດູນການຄ້າຕະຫຼອດມາ

ສະຫຼຸບລວມແລ້ວເສດຖະກິດທຶນນິຍົມແມ່ນເປັນເສດຖະກິດເອກະຊົນການຂະຫຍາຍຕົວ ເສດຖະກິດສະແດງອອກໃນດ້ານການຊ່ວຍເຫຼືອກັນທາງ ດ້ານເສດຖະກິດແກ່ບັນ ດາປະເທດພັນ ທະມິດເຊັ່ນ: ການໃຫ້ກູ້ຢືມເງິນ ຫຼື ການໃຫ້ຊ່ວຍເຫຼືອລ້າ.

ນອກນັ້ນຍັງມີການໃຊ້ມາດຕະການທາງດ້ານເສດຖະກິດເພື່ອຕອບໂຕ້ ຝ່າຍກົງກັນຂ້າມເຊັ່ນ: ການປິດລ້ອມທາງດ້ານເສດຖະກິດ, ການຈັດຕັ້ງກຸ່ມທາງ ດ້ານເສດຖະກິດເຊິ່ງກັນ ແລະ ກັນ.  ໂດຍມີການສ້າງຕັ້ງ “ ອົງການຕະຫຼາດຮ່ວມ ” ເປັນການຮ່ວມກຸ່ມທາງດ້ານເສດຖະກິດຂອງເອີຣົບຕາເວັນຕົກ ເພື່ອເປັນການສົ່ງເສີມເສດຖະກິດ ແລະ ກາຍຄ້າຮ່ວມກັນພາຍໃນປະເທດສະມາຊິກ ເຊິ່ງມີການຫຼຸດຜ່ອນລະບົບພາສີລຫວ່າງປະເທດສະມາຊິກ, ລົບລ້າງຂໍ້ກີດກັ້ນດ້ານການຄ້າ

ຕ່າງປະເທດສະມາຊິກດ້ວຍຍກັນເວົ້າໄດ້ວ່າເປັນ " ເປັນລະບົບການຄ້າເສລີ " ນອກຈາກການຮ່ວມກຸ່ມທາງດ້ານເສດຖະກິດແລ້ວ ນອກນັ້ນບັນດາປະເທດສະມາຊິກຍັງຮ່ວມກັນສ້າງຕັ້ງອົງການປະລາມະນູເອີຣົບ ( European Atomic Energy Community :EORTOM ) ເພື່ອພັດທະນາພະລັງງານປາລາມະນູ ແລະ ການນຳໃຊ້ໂດຍສັນຕິ ການຮ່ວມກຸ່ມທາງດ້ານເສດຖະກິດ ໄດ້ເຮັດໃຫ້ມີຜົນກະທົບຕໍ່ກັບປະເທດທີ່ບໍ່ແມ່ນປະເທດສະມາຊິກ ອັນກ້າວໄປເຖິງການ ຈັດຕັ້ງກຸ່ມເສດຖະກິດຫຼາຍໆຂຶ້ນ ເພື່ອແກ້ງແຍ່ງກັດທາງດ້ານເສດຖະກິດ,

ເວົ້າລວມແລ້ວ ການຮ່ວມກຸ່ມທາງດ້ານເສດຖະກິດຂອງບັນດາປະເທດທຶນນິຍົມແມ່ນ ເພື່ອປົກປ້ອງຕົນເອງຈາກການແຊກແຊງ ແລະ ການເອົາລັດເອົາປຽບທາງດ້ານການຄ້າ ແລະ ດ້ານເສດຖະກິດ.

# ບົດທີ 8
# ການຮ່ວມມືລາວ-ຍີ່ປຸ່ນ

## 1. ປະຫວັດຄວາມເປັນມາຂອງການຮ່ວມມືລາວ-ຍີ່ປຸ່ນ

ແນວທາງການເມືອງຕ່າງປະເທດຂອງ ສປປລາວ ພາຍຫຼັງການສະຖາປະນາ ສປປລາວ ລັດຖະບານກໍ່ໄດ້ປະກາດນະໂຍບາຍຕ່າງປະເທດຂອງຕົນຄື: ສັນຕິພາບ, ມິດຕະພາບ ບໍ່ຮ່ວມມື ແລະ ຮ່ວມມືກັນຢ່າງມີສະເໝີພາບ. ຕ່າງຝ່າຍຕ່າງມີຜົນ ເພີ່ມທະວີມິດຕະພາບ ແລະ ຄວາມສາມັກຄີແບບພິເສດຮອບດ້ານກັບຫວຽດນາມ ແລະ ກຳປູເຈຍ. ສາມັກຄີຢ່າງແໜ້າແຟ້ນກັບບັນດາປະເທດສັງຄົມນິຍົມອ້າຍນ້ອງອື່ນໆ. ເສີມຂະຫຍາຍການພົວພັນອັນດີງາມກັບທຸກປະເທດໃນໂລກບົນພື້ນຖານການເຄົາລົບເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອິນຄົບຖ້ວນ ເປັນຕົ້ນບັນດາປະເທດບ້ານໄກ້ເຮືອນຄຽງ. ລັດຖະບານ ສປປ ລາວ ໄດ້ອອກແຮງປົກປັກຮັກສາສັນຕິພາບໃນອິນດູຈີນ ແລະ ໃນອາຊີອາຄະເນ, ສ້າງເງື່ອນໄຂສາກົນທີ່ອຳນວຍຄວາມສະດວກໃຫ້ແກ່ພາລະກິດປົກປັກຮັກສາ ແລະ ກໍ່ສ້າງສາປະເທດຊາດ. ເດັດດ່ຽວເຮັດ

ໃຫ້ນະໂຍບາຍບໍລະປັກຂອງພວກຂະຫຍາຍອານາເຂດ, ທີ່ສົມຮູ້ຮ່ວມຄິດກັບຈັກກະພັດລ່າເມືອງຂຶ້ນ ແລະ ອິດທິກໍາລັງ ປໍລະປັກ, ກໍາລັງປະຕິການອື່ນໆເຊິ່ງພວມຊຸ້ນຂ້ຽວເຄື່ອນໄຫວທ້າງເພທໍາລາຍພາລະກິດການປະຕິວັດຂອງພວດເຮົາ ໃນ ຫຼາຍດ້ານນັ້ນຖືກປາລາໄຊລົງ, ປົກປັກຮັກສາເອກະລາດ, ອິທິປະໄຕຂອງຊາດໄວ້ໃຫ້ ໝັ້ນຄົງ. ປະກອບສ່ວນເຂົ້າໃນ ການຕໍ່ສູ້ລວມຂອງບັນດາປະຊາຊາດໃນໂລກ ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ສັງສົມນິຍົມ.

ການປະຕິບັດລາວເປັນພາກສ່ວນໜຶ່ງຂອງການປະຕິວັດອິນໂດຈີນ ແລະ ຂອງການປະຕິວັດໂລກ. ທ່ານປະທານ ໄກສອນ ພົມວິຫານ ເຄີຍໄດ້ໄຈ້ແຍກຢ່າງຈະແຈ້ງເຖິງແນວທາງການຕ່າງປະເທດລາວເຮົາໄວ້ດັ່ງນີ້: ສົມທົບຜົນປະໂຫຍດ ຂອງຊາດກັບຜົນປະໂຫຍດຂອງການປະຕິວັດໂລກ, ສົມທົບກັບແຮງງານຂອງຊາດ ກັບກໍາລັງແຮງງານຂອງຍຸກສະໄໝ ບົນພື້ນຖານລັດທິມາກ-ເລນິນ ແລະ ລັດທິສາກົນຊົນຊັ້ນກໍາມະຊີບ. ນັ້ນແມ່ນຈິດໃຈຕົ້ນຕໍຂອງແນວທາງສາກົນຂອງພັກ ເຮົາ, ພ້ອມກັນນັ້ນກໍ່ເປັນບົດຮຽນໃຫຍ່ຫຼວງຂອງພວກເຮົາເພື່ອຍາດເອົາໄຊຊະນະໃນການຕໍ່ສູ້ການປະຕິວັດອັນດຸເດືອດ, ຂ້ຽວຂາດ ແລະ ສັບສົນດ້ານສັດຕູ ທັງພາຍໃນ ແລະ ນອກປະເທດ. (10.239-240 )

ປະຕິບັດແນວທາງຕ່າງປະເທດອັນຖືກຕ້ອງດັ່ງກ່າວນັ້ນຂອງລັດຖະບານ ສປປ ລາວ ແນວຣິບການຕ່າງປະເທດໃນ ໄລຍະຕໍ່ມາ ແມ່ນໄດ້ຮັບຜົນສໍາດລັດອັນໃຫຍ່ຫຼວງອັນເຮັດໄດ້ເຮັດໃຫ້ຖານະບົດບາດຂອງປະເທດລາວເຮົາ ສູງເດັ່ນຂຶ້ນ ໃນເວທີສາກົນຢ່າງບໍ່ຢຸດຢັ້ງ.

ຍ້ອນແນວທາງທາງດ້ານການເມືອງຕ່າງປະເທດອັນຖືກຕ້ອງເປັນທໍາຂອງ ສ.ປ. ປ .ລາວ ໄດ້ຮັບການພົວພັນທາງ ດ້ານການທູດລະຫວ່າງ ສ.ປ.ປ. ລາວ ກັບປະຊາຊາດຕ່າງ ໄດ້ຮັບຂະຫຍາຍຕົວຢ່າງໄວອາຈາກ 49 ປະເທດກ່ອນປົດ ປ່ອຍເປັນ 110 ປະເທດໃນປີ 1999 .

ລາວເຮົາເຄີຍລົບອອກຈາກແຜນທີ່ແຜນທີ່ໂລກ ໃນສະໄໝສະຫຍາມ ແລະ ຝຣັ່ງຍຶດຄອງ ( 1779-1954 ) ດັ່ງນັ້ນ , ໄລຍະນີ້ບໍ່ມີນັກການທູດໃດຂອງປະເທດໃດໃນໂລກຮັບຮູ້ຄວາມເປັນລາວ. ການປະກາດເອກະລາດຂອງປະຊາຊົນລາວ ນໍາໂດຍຄະນະລາວອິດສະຫຼະ ໃນປີ 1945 ໄດ້ມີພຽງປະເທດດຽວເທົ່ານັ້ນ ທີ່ຮັບຮູ້ຄວາມເປັນລາວ ຄື: ລັດຖະບານສສ ຫວຽດນາມ . ພາຍຫຼັງຈາກລາວອິດສະຫຼະ ຖືກໂຄ່ນລົ້ມໄປແລ້ວ ຝຣັ່ງກໍ່ກັບເຂົ້າມາຄອບຄອງຄືນໃໝ່ ແຕ່ລາວ ອິດສະຫຼະກໍ່ຍັງສືບຕໍ່ເຄື່ອນໄຫວຕ້ານອໍານາດການປົກຄອງຝຣັ່ງຕໍ່ໄປ ຕາມແຂວງຕ່າງໆ ໂດຍສະເພາະຢູ່ຕາມເຂດຊາຍ ແດນ ລາວ-ຫວຽດນາ ເຮັດໃຫ້ຝຣັ່ງຕ້ອງໄດ້ຫັນປ່ຽນນະໂຍບາຍຄອງລາວໂດຍມອບເອກະລາດໃຫ້ລາວ ແຕ່ຢູ່ໃນເຄືອ ຈັກກະພົບຝຣັ່ງ ໃນຕົ້ນທົດສະຕະວັດ 50 ໄດ້ມີພຽງ 6 ປະເທດ ທີ່ມີການພົວພັນການທູດກັບລາວຄື:

1. ໄທ ( 21.12. 1950 ) 2. ຝຣັ່ງ ( 1951 )

3. ອິນເດຍ(1951 ແລະ 02.12.1956 ) 4. ເບນຢ້ຽມ (1951 )

5. ອິດສະຕາລີ ( 16.01.1952 ) 6. ຍີ່ປຸ່ນ ( 12. 1952 )

ພາຍຫລັງສັນຍາເຊີແນວ 1954 ຝຣັ່ງຖືກປະລາໄຊຢູ່ອິນດູຈີນ ແຕ່ອະເມລິກາຊໍ້າພັດ ໂດດເຂົ້າມາແທນທີ່ ແລະ ເອົາ ລາວເປັນຫົວເມືອງຂຶ້ນແບບໃຫມ່ ພ້ອມທັງກໍ່ສົງຄາມຕ້ານ ປະຊາຊົນລາວ ສຸດທ້າຍ ອະເມລິກາ ກໍ່ຕ້ອງປະລາໄຊ ເມື່ອ ປະຊາຊົນລາວ ໄດ້ຮັບໄຊຊະນະ ໃນປີ 1975 ໃນໄລຍະນີ້ ການພົວພັນທາງການທູດ ລະຫວ່າງລາວ ກັບຕ່າງປະເທດ ໄດ້ ເພີ່ມຈາກ 6 ປະເທດ ໃນຊຸມປີ 1950 ເປັນ 49 ປະເທດ ໃນຊຸມປີ 1960-1970 ຄື : 7. ມຽນມາ , 8 ສະຫະຣັດ ອະເມລິກາ (1955) (1955) 9. ສະຫະຣາຊະອານາຈັກອັງກິດ(05.09.1955) 10. ກໍາປູເຈັຍ(15.06.1956) 11. ເດັນ ມາກ (01.11.1956 ແລະ 27.11.1976) 12. ອິນໂດເນເຊັຍ(30.08.1957) 13. ຕຣະກີ(20.06.1958) 14. ສະຫະພັນຣັດເຊັຍ(07.10.1960) 15. ສາທາລະນະຣັດປະຊາຊົນຈີນ(25.04.1961) 16. ຟີລິບປິນ(06.02.1962) 17. ສາທາລະນະຣັດເຊັກໂກ( 09.09.1962) 18.ສາທາລະນະຣັດສະໂລວັກ(09.09.1962) 19. ສາທາລະນະຣັດ

ສັງຄົມນິຍົມຫວຽດນາມ (06.09.1962) 20. ສາທາລະນະຣັດໂປໂລຍ(08.09.1962) 22. ຮົງກາລີ (12.09.1962) 24. Sunບ (25.11.1962) 26. ສະວິດ (1963) 28. ແອດສະປາຍ (20.03.1964) 30. ນິວຊີແລນ (15.17.1965) 32. ເວນິຊູເອລາ (15.07.1965) 34. ອິຕາລີ (07.12.1965) 36. ອອດສະເຕຣັຍ (01.09.1967) 38. CU(20.05.1970) 40. ອັນຈີເລັຍ ( 15.05.1973) 21. ມົງໂກລີ (12.09.1962) 23. ບູນກາລີ (14.10.1962) 25. ຍູໂກສະລາວີ (14.10.1962) 27. 30g (15.07.1963) 29. ຊູແອດ (10.10.1964) 31.ປາກີດສະຖານ (15.07.1965) 33. gn (20.07.1965) 35. ມາເລເຊັຍ (01.07.1966) 37. ອີຣ່ານ (1967) 39. ສະຫະພັນເຢັຍລະມັນ(19.03.1973) 41. ແຄນນາດາ(15.06.1974) 42. ສາທາລະນະຣັດປະຊາຊົນປະຊາທິປະໄຕເກົາຫລີ (24.06.1974) 43.ສາທາລະນະລັດຄູບາ(04.11.1974) 44.ສາທາລະນະລັດສິງຄະໂປ(04.11.1974) 45. uccau(21.01.1975) 46. ອັນບານີ(18.06.1975) 47. ອາເຍນຕິນາ(24.07.1975 ) 48. ອີຣັກ (1975) 49. ເປ-ບາ (17.11.1975)

ພາຍຫຼັງປະເທດໄດ້ຮັບການປົດປ່ອຍຢ່າງສົມບູນໃນວັນທີ 2 ທັນວາ 1975 ມາຮອດປະຈຸບັນ ການພົວພັນທາງການທູດຂອງ ສ.ປ.ປ ລາວ ໄດ້ຮັບການຂະຫຍາຍຕົວເພີ່ມຈາກ 49 ປະເທດເປັນ 110 ປະເທດ ດັ່ງນີ້:

56. ຕັງຊານີ (15.05.1978) 58. ເອທີ ໂອເປຍ (27.02.1980) 60. ກຣີນາດາ (04.03.1980) 62. ນິກາຣາກົວ (30.05.1980)57. ມາດາກັດສະກາ (27.02.1980) 59. ໂຊມາເລີຍ(27.02.1980) 61. Tugun (16.04.1980) 63. ອັງໂກລາ(11.07.1980) 64. ສາທາລະນະຣັດກີນີ(15.10.1981 65. ອັບຟະການິດສະຖານ( 11.03.1983) 66. ຊິມບາເວ( 14.08.1986) 68. 278798(03.08.1987) 67. ວານົວຕູ (18.02.1987) 69. ສະຫະພາບຍ ໂຮບ (1987)70. ບັງກະລາເທດ(1988) 71. ສາທາລະນະຣັດໂຄລຳເບັຍ(30.09.1988)72. ເປຣູ(27.04.1989) 73. ປາເລັດຕິນ (15.05.1989)74. ເກຣັກ (15.06.1989) 75. ຕູນີຊີ (30.11.1989)76. ປາປົວນິວກີນີ (06.04.1990) 77. ອາຣາບີຊາອູດີ (29.05.1990) 78. 23 (06.12.1991) 79. ນໍເວ (12.11.1991) 80. ບຣູນາຍ (23.07.1993) 81. ອິສະຣາເອນ (06.12.1993) 82 ອກະເຣນ (1993) 83. ອສະເບດິດສະຖານ (1993)84. ຕວັກເມນິດສະຖານ (04.02.1994) 85. ເບເຣລຸດ (07.02.1994) 86. ລິດທົວເນຍ(01.09.1994) 87. ອັບຟະຣິກາໃຕ້ (07.09.1994) 97.ບອສນີ ເຮີເຊໂກວີນາ (07.03.1996)88. ປານາມາ (09.09.1994) 89. ເອສໂຕເນຍ (29.03.1995) 90. ລັດເວຍ (27.04.1995) 91. ອາເຊີໄບຈານ (22.05.1995) 92. ໂປຕຍການ (31.05.1995) 93. ບຣາຊິລ (12 06. 1995) 94. ເກີນີຊີ (13.07.1995) 95.ສາທາລະນະລັດເກົາຫລີ(25. 10. 1995) 96. ມາເຊໂດເນຍ (06.03.1996) 98. ໂຄຣເອເທັຍ (04.03.1996) 99. ຊະໂລເວເນັຍ (28.03.1996) 100. ອາຣັບອາເມຣິດ (15.10.1996) 101. 2 (09.11.1996) 102. ມາຣົກ (30.01.1997) 103.ມົນດາວີ (29.05.1997) 104. ກາຊັກສະຖານ (19.09.1997) 105. ລກຊໍາບວກ (25.09.1997) 106. ຕາຊິກ ກິສຖານ (29.09.1997) 107. ອາກເມເນຍ (21.04 1998) 108. ອຽກລັງ (07.08.1998) 109. ນິເຊ (10.06.1999)

110. ຈາໄມກາ (27.08.1999)

### 1.1. ການພົວພັນລາວ-ຍີ່ປຸ່ນສະໄໝພະລາຊະອານາຈັກລາວ

ຫຼັງຈາກສົງຄາມໂລກຄັ້ງທີ II ໄດ້ສິ້ນສຸດລົງໃນປີ 1945 ຕໍ່ມາອີກ 10 ປີຄື: ວັນທີ 5 ມີນາ ຄສ 1955ປະເທດລາວ ແລະ ຍີ່ປຸ່ນມີຄວາມສໍາພັນກັນມາຍາວນານ,ທັງສອງປະເທດສະຖາປານາຄວາມສໍາພັນທາງການທູດນໍາກັນຢ່າງເປັນທາງການໃນນາມປະຊາຊາດທີ່ຕັ້ງຢູ່ອາຊີ ນັບຖືສາສະໜາພຸດຄືກັນ ແລະ ມີປະເພນີປູກເຂົ້າຄ້າຍຄືກັນ.ນັບຕັ້ງແຕ່ໄດ້ມີ

ການສ້າງຕັ້ງສາຍພອພັນການທູດເປັນຕົ້ນມາ ການຮ່ວມມືລະຫວ່າງ ລາວ-ຍີ່ປຸ່ນ ໄດ້ມີການຂະຫຍາຍຕົວເປັນບາດກ້າວຢ່າງຕໍ່ເນື່ອງບົນພື້ນຖານແຫ່ງການພົວພັນແບບມິດຕະພາບຂອງການຮ່ວມມືຕ່າງຝ່າຍຕ່າງມີຜົນ.ໂດຍອີງໃສ່ພື້ນຖານແຫ່ງການພົວພັນແບບມິດຕະພາບຂອງການຮ່ວມມືຕ່າງຝ່າຍຕ່າງມີຜົນປະໂຫຍດນັ້ນ ລັດຖະບານຍີ່ປຸ່ນກໍ່ໄດ້ໃຫ້ການຊ່ວຍເຫຼືອແກ່ລາວເປັນຈຳນວນຫຼວງຫຼາຍເຊັ່ນ: ໃນປີ ຄສ 1965 ຍີ່ປຸ່ນໄດ້ສົ່ງອາສາສະໝັກຂອງຕົນເຂົ້າມາລາວເປັນຄັ້ງທຳອິດ ແລະ ກໍເປັນເທື່ອທຳອິດຂອງລັດຖະບານຍີ່ປຸ່ນທີ່ໄດ້ສົ່ງອາສາສະໝັກອອກໄປຊ່ວຍເຫຼືອຕ່າງປະເທດ.

ໂດຍອີງໃສ່ການພົວພັນການທູດດັ່ງກ່າວນັ້ນ ລາວ-ຍີ່ປຸ່ນ ກໍໄດ້ສືບຕໍ່ເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມືໃຫ້ໜັກແໜ້ນຂຶ້ນຕື່ມ ເຊິ່ງສະແດງອອກໃຫ້ເຫັນໃນບາງໄລຍະທີ່ລາວ ແລະ ຍີ່ປຸ່ນ ມີການແລກປ່ຽນ,ການຢ້ຽມຢາມ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ເປັນຕົ້ນແມ່ນການຢ້ຽມຢາມຂອງຄະນະຜູ້ແທນລະດັບສູງ ແລະ ລະດັບວິຊາການຂັ້ນຕ່າງໆນັບມື້ນັບເພີ່ມທະວີຂຶ້ນ ໃນປີ 1957 ຄະນະຜູ້ແທນຂັ້ນສູງຂອງຍີ່ປຸ່ນເຊິ່ງນຳພາໂດຍທ່ານ ນາຍົກລັດຖະມົນຕີ ກິຊິ (Kishi) ກໍໄດ້ເດີນທາງມາຢ້ຽມຢາມລາວ ແລະ ໃນປີ ຄສ 1967 ທ່ານ ຊາໂຕ (Sato) ນາຍົກລັດຖະມົນຕີຂອງຍີ່ປຸ່ນກໍໄດ້ເດີນທາງມາຢ້ຽມຢາມລາວເຊັ່ນດຽວກັນ.

### 1.2 ການພົວພັນລາວ-ຍີ່ປຸ່ນ ສະໄໝ ສປປລາວ

ພາຍຫຼັງປະເທດລາວໄດ້ສະຖາປານາມາເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວໃນວັນທີ 2 ທັນວາ 1975 ແລ້ວ ລາວ-ຍີ່ປຸ່ນກໍຍັງສືບຕໍ່ມີສາຍພົວພັນທີ່ດີນຳກັນແຕ່ເນື່ອງຈາກວ່າແນວທາງການພົວພັນຕ່າງປະເທດຂອງພັກ ແລະ ລັດຖະບານລາວໃນຊ່ວງນີ້ ສ່ວນໃຫຍ່ແມ່ນພົວພັນກັບປະເທດສັງຄົມນິຍົມຫຼາຍກວ່າ ແຕ່ພາຍຫຼັງທີ່ລັດຖະບານລາວດຳເນີນນະໂຍບາຍເປີດກວ້າງການຮ່ວມມືກັບຕ່າງປະເທດຕາມແນວທາງນະໂຍບາຍ “ຈິນຕະນາການໃໝ່” (ກົນໄກເສດຖະກິດໃໝ່) ການພົວພັນລາວ-ຍີ່ປຸ່ນ ໄດ້ຮັບການປັບປຸງ ແລະ ມີບາດກ້າວຂະຫຍາຍຕົວຂຶ້ນ. ລັດຖະບານຍີ່ປຸ່ນກໍໄດ້ເພີ່ມທະວີການຮ່ວມມືຊ່ວຍເຫຼືອໃຫ້ແກ່ລັດຖະບານ ສປປ ລາວ ເພື່ອສະດວກໃນການຕິດຕໍ່ພົວພັນ ການຄ້າຂາຍແລກປ່ຽນສິນຄ້າ.

## 2. ຮູບແບບການຮ່ວມມື

ໂດຍອີງຕາມຄວາມຮຽກຮ້ອງຕ້ອງການ, ຕາມແຜນພັດທະນາໃນດ້ານເສດຖະກິດ-ສັງຄົມ ຂອງລັດຖະບານ ສປປລາວ ແລະ ແຜນການຮ່ວມມືຊ່ວຍເຫຼືອຂອງລັດຖະບານຍີ່ປຸ່ນເພື່ອຊ່ວຍເຫຼືອບັນດາປະເທດຕ່າງໆໃຫ້ຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ, ລັດຖະບານຍີ່ປຸ່ນກໍໄດ້ກຳນົດການຊ່ວຍເຫຼືອລາວດ້ວຍຫຼາຍຮູບແບບເຊັ່ນ: ລັດຖະບານຍີ່ປຸ່ນໄດ້ໃຫ້ການຊ່ວຍເຫຼືອລາວໃນຫຼາຍຮູບແບບ ທັງໃນຮູບແບບການຊ່ວຍເຫຼືອລ້າ ແລະ ຮູບແບບການໃຫ້ທຶນກູ້ຢືມເປັນຈຳນວນຫຼວງຫຼາຍໃນແຕ່ລະປີ. ການຊ່ວຍເຫຼືອນັ້ນຄອບຄຸມໄປໃນທຸກພາກສ່ວນທັງການຊ່ວຍເຫຼືອ ທາງດ້ານເສດຖະກິດ, ການເມືອງ, ສັງຄົມ ແລະ ວັດທະນະທຳ.

- ການຊ່ວຍເຫຼືອລ້າ ໝາຍເຖິງການຊ່ວຍເຫຼືອໂດຍປາສະຈາກການຄິດໄລ່ດອກເບ້ຍ ແລະ ບໍ່ຫວັງຜົນຕອບແທນແຕ່ປະການໃດ, ຄວາມຕ້ອງການໃນດ້ານການພັດທະນາ, ການພົວພັນສອງຝ່າຍ ແລະ ຂໍ້ສະເໜີຂໍການຊວ່ຍເຫຼືອ.ຮູບການຊ່ວຍເຫຼືອລ້າທີ່ລັດຖະບານຍີ່ປຸ່ນໃຫ້ການຊ່ວຍເຫຼືອລາວນັ້ນ,ທຸກຢ່າງແມ່ນຕ້ອງໄດ້ຜ່ານການສຳຫຼວດຕາມແຜນການພັດທະນາເສດຖະກິດສັງຄົມຂອງ ສປປລາວ ຮູບການຊ່ວຍເຫຼືອລາວ ຂອງຍີ່ປຸ່ນມີສອງປະເພດຄື:ການຊ່ວຍເຫຼືອລ້າສຳລັບໂຄງການ ແລະ ການຊ່ວຍເຫຼືອລ້ານອກໂຄງການ. ໂດຍພື້ນຖານແລ້ວ, ຂະແໜງການຊ່ວຍເຫຼືອລ້າແມ່ນຂະແໜງການທີ່ໃຫ້ຜົນກຳໄລຕ່ຳ,ຂໍເງິນກູ້ໄດ້ຍາກ ແລະ ເພື່ອແກ້ໄຂຄວາມຕ້ອງການຂອງມະນຸດ (Basic Human Needs) ເຊັ່ນ ການປິ່ນປົວ ແລະ ການຮັກສາສຸຂະພາບ, ການສະໜອງນ້ຳ,

ການອະນາໄມ, ການປ້ອງກັນສິ່ງແວດລ້ອມ, ການພັດທະນາຊົນນະບົດ ແລະ ກະສິກຳນອກນີ້ກໍຍັງມີການພັດທະນາຊັບພະຍາກອນມະນຸດ.ການຊ່ວຍເຫຼືອລ້ານີ້ປະກອບດວ້ຍ:

- ການຊ່ວຍເຫຼືອລ້າສຳລັບໂຄງການ
- ການຊວ່ຍເຫຼືອລ້ານອກໂຄງການ
- ການຊ່ວຍເຫຼືອລ້າສຳລັບໂຄງການຂັ້ນຮາກຖານ
- ການສະໜັບສະໜູນການຟື້ນຟູ ແລະ ພັດທະນາ

➢ ການຮ່ວມມືດ້ານເຕັກນິກນີ້ ຄືການຊ່ວຍເຫຼືອເພື່ອພັດທະນາຊັບພະຍາກອນມະນຸດທີ່ເປັນພື້ນຖານຂອງການອອກແຮງສ້າງສາປະເທດຊາດ, ການຖ່າຍທອດຄວາມຮູ້ຂອງຍີ່ປຸ່ນ “ຜູ້ຮ່ວມງານ” ນັ້ນກໍຄືຜູ້ມີບົດບາດນໍາພາດ້ານຕ່າງໆພາຍໃນປະເທດ, ມີຈຸດປະສົງເຜີຍແຜ່ເຕັກໂນໂນໂລຍີຢ່າງກວ້າງຂວາງ ແລະ ປະກອບສ່ວນພັດທະນາເສດຖະກິດສັງຄົມພາຍໃນປະເທດເຮົາ, ໃນປັດຈຸບັນການຮ່ວມມືດ້ານເຕັກນິກກວມເອົາຫຼາຍຂົງເຂດວຽກງານເຊິ່ງເລີ້ມຈາກຄວາມຕ້ອງການພື້ນຖານຂອງມະນຸດ (Basic Human Needs) ເຊັ່ນ: ການສະໜອງການບໍລິການດ້ານສາທາລະນະສຸກ, ນໍ້າສະອາດ ຈົນເຖິງການຮ່ວມມືລະດັບສູງເພື່ອຖ່າຍທອດເຕັກໂນໂລຍີ, ຄອມພິວເຕີ.

- ແຜນງານການເຝິກອົບຮົມໃຫ້ພະນັກງານ
- ການອະນຸລັກຮັກສາສິ່ງແວດລ້ອມ

➢ ຂະແໜງໂຄງລ່າງ ແລະ ພະລັງງານ (Infrastructure And Energy) ໃນວຽກງານການພັດທະນາໂຄງລ່າງການຄົມມະນາຄົມ ແລະ ຂົນສົ່ງແຫ່ງຊາດແມ່ນວຽກງານໜຶ່ງທີ່ຈຳເປັນ ແລະ ຂາດບໍ່ໄດ້ໃນວຽກງານການພັດທະນາດ້ານເສດຖະກິດ-ສັງຄົມຢູ່ປະເທດເຮົາເພາະວ່າວຽກງານດ້ານການຄົມມະນາຄົມ ແລະ ການຂົນສົ່ງແມ່ນເປັນການເຊື່ອມຕໍ່ກັບຂົງເຂດອິນດູຈີນ ແລະ ກ້າວໄປສູ່ພາກພື້ນ.ເມື່ອມີຄວາມສຳຄັນຄືດັ່ງກ່າວນີ້, ຍີ່ປຸ່ນຈິ່ງມີຄວາມຈຳເປັນທັນເຂົ້າມາຮ່ວມມືຊ່ວຍເຫຼືອເພື່ອສ້າງຜົນປະໂຫຍດທາງດ້ານເສດຖະກິດໃຫ້ ສປປລາວ, ສົ່ງເສີມການອະນຸລັກຮັກສາເສັ້ນທາງທີ່ສຳຄັນ, ປົວແປງເສັ້ນທາງທີ່ເປ້ເພ, ກໍ່ສ້າງຂົວແນໃສ່ປັບປຸງເສັ້ນທາງຕົ້ນຕໍແຕ່ເໜືອຫາໃຕ້, ແຕ່ຕາເວັນຕົກຫາຕາເວັນອອກ ເພື່ອເປັນການເຊື່ອມຕໍ່ລະຫວ່າງເມືອງຕໍ່ເມືອງ, ແຂວງຕໍ່ແຂວງກ້າວໄປເຖິງການເຊື່ອມຕໍ່ລະຫວ່າງປະເທດອີກດວ້ຍ

➢ ດ້ານກະສິກຳ ແລະ ປ່າໄມ້ (Agricultural and Forestry) ໃນການຄາດຄະເນຂອງຍີ່ປຸ່ນບໍ່ສາມາດຮັບປະກັນວ່າ ສປປລາວ ເຮົາຈະກຸ້ມຕົນເອງໃນດ້ານສະບຽງອາຫານ ຫຼື ບໍ່ ສະນັ້ນການຊ່ວຍເຫຼືອຂອງຍີ່ປຸ່ນແມ່ນໄດ້ເນັ້ນໜັກໃສ່ຂົງເຂດວຽກງານສະເພາະດ້ານກະສິກຳເປັນຕົ້ນແມ່ນການວາງແຜນ ແລະ ການກຳນົດນະໂຍບາຍດ້ານກະສິກຳ ການປັບປຸງລະບົບຊົນລະປະທານ, ປັບປຸງມາດຕະການຫຼັງການເກັບກ່ຽວ, ການຫຼຸດຜ່ອນການຖາງປ່າເຮັດໄຮ່ ແລະ ປົກປັກຮັກສາປ່າໄມ້. ລວມເຖິງການພັດທະນາຊັບພະຍາກອນມະນຸດໃນຂົງເຂດນີ້.ການຮ່ວມມືຊວ່ຍເຫຼືອຂອງຍີ່ປຸ່ນໃນດ້ານກະສິກຳ-ປ່າໄມ້ນີ້ ຍີ່ປຸ່ນໄດ້ເອົາໃຈໃສ່ຮ່ວມມືຊ່ວຍເຫຼືອຕາມບູລິມະສິດຂອງລັດຖະບານ ສປປລາວ ທີ່ໄດ້ກຳນົດໄວ້ ການຮ່ວມມືແມ່ນເປັນຄວາມຕ້ອງການເຂົ້າໃນການທົດລອງ. ລວມໄປເຖິງຜົນປະໂຫຍດໃນດ້ານການຄ້າ

- ແຜນງານຊາວໜຸ່ມ (ແຜນງານມິດຕະພາບເພື່ອສະຕະວັດທີ 21)
- ແຜນງານສົ່ງຊ່ຽວຊານເພື່ອມີການແລກປ່ຽນບົດຮຽນ ແລະ ເຝິກອົບຮົມດ້ານວິຊາການຕ່າງໆ

- ການໃຫ້ທຶນກູ້ຢືມ (ເງິນກູ້ ODA) ເຊິ່ງເປັນສະກຸນເງິນເຢນຄືການປະກອບທຶນໃນໄລຍະຍາວດ້ວຍອັດຕາດອກເບ້ຍຕໍ່າ. ໃນການປະກອບທຶນດັ່ງກ່າວນີ້ ຍີ່ປຸ່ນໄດ້ອີງໃສ່ສະພາບຄວາມເປັນຈິງທາງດ້ານເສດຖະກິດດ ຄວາມສາມາດໃນການໃຊ້ໜີ້ສໍາລັບການກູ້ຢືມ ແລະ ຖານະຂອງປະເທດເຮົາ. ເງື່ອນໄຂການກູ້ຢືມ (ອັດຕາດອກເບ້ຍ, ຂໍ້ກໍານົດ) ຈະປ່ຽນແປງໃຫ້ສອດຄ່ອງກັບຄວາມສາມາດໃຊ້ໜີ້.

ຕົວຢ່າງ: ການຊ່ວຍເຫຼືອທາງດ້ານການພັດທະນາໂຄງລ່າງດ້ວຍການໃຫ້ເງິນກູ້ຢືມໃນດອກເບ້ຍຕໍ່າເຊັ່ນ: ການໃຫ້ທຶນກູ້ຢືມໃນການສ້າງຂົວຂ້າມແມ່ນໍ້າຂອງທີ່ສະຫວັນນະເຂດ-ມຸກດາຫານຈໍານວນ 4.044 ຕື້ເຢນ. ການຊ່ວຍເຫຼືອລ້າໃນການພັດທະນາການສຶກສາ ດ້ວຍການສ້າງໂຮງຮຽນປະຖົມສຶກສາໃນສົກປີ ຄສ 2003-2004 ຈໍານວນ 758 ລ້ານເຢນ. ນອກຈາກນີ້ຍັງໃຫ້ທຶນຊ່ວຍເຫຼືອໃນການພັດທະນາຊັບພະຍາກອນມະນຸດໃນຮູບແບບຂອງການຝຶກອົບຮົມ ແລະ ຍົກລະດັບທັງແບບກັບທີ່ ແລະ ຢູ່ຕ່າງປະເທດໃນແຕ່ລະຂະແໜງການ.

## 3. ແຜນການຮ່ວມມືລາວ-ຍີ່ປຸ່ນ (ນະໂຍບາຍການຮ່ວມມື ລາວ-ຍີ່ປຸ່ນ)

### 3.1 ນະໂຍບາຍການຮ່ວມມືຂອງລາວ



ເວັບໄຊຂ່າວໂຕກຽວ ເດລີ່ ນິວສ໌ຂອງຍີ່ປຸ່ນລາຍງານເມື່ອວັນທີ 7 ມິຖຸນາ 2017 ວ່າ ນາຍົກລັດະມົນຕີ ຊິນໂຊ ອາເບະ ຂອງຍີ່ປຸ່ນ ແລະ ນາຍົກລັດຖະມົນຕີ ສປປ ລາວ ທ່ານ ທອງລຸນ ສີສຸລິດ ໄດ້ພົບປະຫາລືກັນກ່ຽວກັບແຜນພັດທະນາໃນລາວ ແລະ ຫົວຂໍ້ທີ່ສໍາຄັນຫຼາຍດ້ານ.



ລະຫວ່າງການພົບປະກັນທີ່ນະຄອນຫຼວງວຽງຈັນ ເມື່ອເດືອນ ກັນຍາ 2016 ປີທີ່ຜ່ານມາ ທ່ານ ອາເບະ ແລະ ທ່ານ ທອງລຸນ ໄດ້ຕົກລົງການລົງທຶນດ້ານການຄົມມະນາຄົມຂົນສົ່ງ, ໂຮງງານຜະລິດກະແສໄຟຟ້າ, ຊັບພະຍາກອນມະນຸດ, ວຽກງານກະສິກຳ ແລະ ວຽກງານສາທາລະນະສຸກ ແລະ ຄາດວ່າການພົບປະຢ້ຽມຢາມໃນເທື່ອນີ້ທີ່ນະຄອນຫຼວງໂຕກຽວ ຜູ່ນຳທັງສອງປະເທດຈະຫາລືກ່ຽວກັບການດຳເນີນຕາມແຜນການທີ່ວາງໄວ້ຢ່າງເປັນຮູບປະທຳ ເຊິ່ງຈະຮວມໄປເຖິງການສະໜັບສະໜູນຂອງລັດຖະບານຍີ່ປຸ່ນ ຕໍ່ຄວາມພະຍາຍາມໃນການສ້າງຄວາມໝັ້ນຄົງທາງດ້ານການເງິນຂອງລັດຖະບານລາວ ຮວມທັງການຂະຫຍາຍອາຄານທີ່ພັກຜູ່ໂດຍສານສະໜາມບິນສາກົນວັດໄຕ ແລະ ທຶນການສຶກສາທີ່ຍີ່ປຸ່ນໃຫ້ກັບພະນັກງານ ແລະ ນັກສຶກສາຂອງລາວ ແລະ ໃນຕອນເຊົ້າຂອງວັນພຸດ ທ່ານ ຟູມິໂອະ ຄິຊິດະ ລັດຖະມົນຕີກະຊວງການຕ່າງປະເທດຍີ່ປຸ່ນ ແລະ ທ່ານ ສະເຫຼີມໄຊ ກົມມະສິດ ລັດຖະມົນຕີກະຊວງການຕ່າງປະເທດລາວ ໄດ້ຫາລືກ່ຽວກັບແຜນລິເລີ່ມທີ່ກຳລັງດຳເນີນການລະຫວ່າງ 2 ປະເທດ. ນາຍົກລັດຖະມົນຕີຍີ່ປຸ່ນ ເຂົ້າຢ້ຽມຂໍ່ານັບປະທານປະເທດ ແຫ່ງ ສປປ ລາວ ໃນວັນທີ 7 ກັນຍາ 2016 ທີ່ທຳນຽບປະທານປະເທດ, ທ່ານ ບຸນຍັງ ວໍລະຈິດ ປະທານປະເທດ ແຫ່ງ ສປປ ລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ຊິນໂຊ ອາເບະ ນາຍົກລັດຖະມົນຕີ ແຫ່ງ ຍີ່ປຸ່ນ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ໃນວັນທີ 6 ກັນຍາ 2016 ແລະ ເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ ຄັ້ງທີ 28 ແລະ 29, ໃນລະຫວ່າງວັນທີ 6-8 ກັນຍາ 2016 ທີ່ນະຄອນຫລວງວຽງຈັນ.

ໃນໂອກາດດັ່ງກ່າວ, ທ່ານປະທານປະເທດ ໄດ້ຝາກຄວາມຢື້ຢາມຖາມຂ່າວເຖິງ ເຈົ້າຈັກກະພັດອາກິຮິໂຕະ, ພະລາຊິນີ ແລະ ຣາຊະວົງຍີ່ປຸ່ນ; ສະແດງຄວາມປິຕິຍິນດີທີ່ ທ່ານ ຊິນໂຊ ອາເບະ ໄດ້ເດີນທາງມາເຂົ້າຮ່ວມ ກອງປະຊຸມສຸດຍອດອາຊຽນ ແລະ ກອງປະຊຸມທີ່ກ່ຽວຂ້ອງອື່ນໆທີ່ ສປປ ລາວ ເປັນເຈົ້າພາບ; ຕີລາຄາສູງຕໍ່ສາຍພົວພັນ ແລະ ການຮ່ວມມືສອງຝ່າຍ ຕະຫລອດໄລຍະ 60 ປີ ຜ່ານມາ; ພ້ອມທັງສະແດງຄວາມຊົມເຊີຍຜົນສຳເລັດ ການພົບປະສອງຝ່າຍລະຫວ່າງ ສອງນາຍົກລັດຖະມົນຕີ ສປປ ລາວ ແລະ ຍີ່ປຸ່ນ; ສະແດງຄວາມຍິນດີທີ່ສອງຝ່າຍ ໄດ້ຮັບຮອງເອົາແຜນການຮ່ວມມື ເພື່ອພັດທະນາປະເທດລາວແບບຍືນຍົງ.

ທ່ານ ບຸນຍັງ ວໍລະຈິດ ຍັງໄດ້ສະແດງຄວາມຂອບໃຈ ຕໍ່ການຊ່ວຍເຫລືອດ້ານຕ່າງໆຂອງລັດຖະບານຍີ່ປຸ່ນ ໃນໄລຍະຜ່ານມາ ແລະ ການຊ່ວຍເຫລືອໃນການເປັນເຈົ້າພາບ ຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 28 ແລະ 29 ແລະ

ກອງປະຊຸມທີ່ກ່ຽວຂ້ອງອື່ນໆ ໃນປີ 2016. ຫລັງຈາກນັ້ນ, ທ່ານນາຍົກລັດຖະມົນຕີຍີ່ປຸ່ນ ກໍໄດ້ນາເອົາຄວາມຢື້ຢາມຖາມຂ່າວ ຈາກເຈົ້າຈັກກະພັດອາກິຮິໂຕະ ເຖິງທ່ານ ບຸນຍັງ ວໍລະຈິດ ປະທານປະເທດ ແຫ່ງ ສປປ ລາວ; ສະແດງຄວາມຂອບໃຈຕໍ່ທ່ານປະທານປະເທດ ທີ່ໃຫ້ກຽດຕ້ອນຮັບໃນຄັ້ງນີ້ ແລະ ໄດ້ລາຍງານຫຍໍ້ກ່ຽວກັບ ການພົບປະສອງຝ່າຍກັບທ່ານ ທອງລຸນ ສີສຸລິດ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ.

## 4. ຄຸນປະໂຫຍດຂອງການຮ່ວມມືລາວ-ຍີ່ປຸ່ນ

ນັບຕັ້ງແຕ່ລາວ ແລະ ຍີ່ປຸ່ນໄດ້ມີການສ້າງຕັ້ງສາຍພົວພັນການທູດນຳກັນ. ການພົວພັນຮ່ວມມື ລາວ-ຍີ່ປຸ່ນ ເຖິງຈະມີຂໍ້ຫຍຸ້ງຍາກ ແລະ ປະສົບກັບບັນຫາຫຼາຍປານໃດກໍຕາມ. ແຕ່ຍີ່ປຸ່ນ ແລະ ສປປລາວ ກໍໄດ້ສຸມທຸກຄວາມພະຍາຍາມຂອງຕົນເຂົ້າໃນການປະຕິບັດວຽກງານ.

ຕົວຢ່າງ: ໝາກຜົນຈາກການຮ່ວມມື ແລະ ການຊ່ວຍເຫຼືອຈາກອົງການໄຈກາ (JICA) ປັດຈຸບັນນີ້ການຊ່ວຍເຫຼືອຮ່ວມມືເຊິ່ງກັນ ແລະ ກັນ ລະຫວ່າງສອງຊາດລາວ-ຍີ່ປຸ່ນນັ້ນແມ່ນກຳລັງຢືນຢູ່ຂັ້ນຕອນປະຫວັດສາດ, ການພັດທະນາບໍ່ມີຄວາມໝາຍພຽງແຕ່ການສະໜອງດ້ານອຸປະກອນ ແລະ ການກໍ່ສ້າງສິ່ງອຳນວຍຄວາມສະດວກເທົ່ານັ້ນ, ໃນທີ່ນີ້ການຮ່ວມມືດ້ານເຕັກນິກກໍແມ່ນວຽກງານໜຶ່ງທີ່ສຳຄັນຂອງວຽກງານການຮ່ວມມືຊ່ວຍເຫຼືອຂອງຍີ່ປຸ່ນ ເພາະວ່າການຮ່ວມມືທາງດ້ານເຕັກນິກຂອງຍີ່ປຸ່ນນີ້ ມັນແມ່ນການໂອນວິຊາຄວາມຮູ້ຂອງຍີ່ປຸ່ນໃຫ້ແກ່ຄົນລາວໂດຍຜ່ານການດຳເນີນງານຂອງອົງການ ໄຈກາ (JICA). ການຮ່ວມມືທາງດ້ານເຕັກນິກແມ່ນໄດ້ມີການປ່ຽນແປງໄປຕາມການກ້າວໄປຂອງປະຫວັດສາດ. ເຊິ່ງໃນໄລຍະຜ່ານມາການຮ່ວມມືຊ່ວຍເຫຼືອຂອງຍີ່ປຸ່ນມີຫຼາຍດ້ານ ນັບທັງດ້ານບໍລິການຈາກລົດເມ, ການກໍ່ສ້າງອາຄານຕ່າງໆ, ສິ່ງຊ່ຽວຊານມາສິດສອນ ແລະ ວິທີຮັກສານຳໃຊ້ໃຫ້ແກ່ລາວ ໃນປັດຈຸບັນນີ້. ບໍ່ມີພຽງແຕ່ການຮ່ວມມືທາງດ້ານເຕັກນິກເທົ່ານັ້ນທີ່ກຳລັງດຳເນີນຢູ່ ແຕ່ເວົ້າເຖິງທາງດ້ານເສດຖະກິດ ແລະ ດ້ານອື່ນໆກໍກຳລັງດຳເນີນຢູ່ເຊັ່ນດຽວກັນ ການດຳເນີນການຊ່ວຍເຫຼືອຂອງຍີ່ປຸ່ນທາງດ້ານເສດຖະກິດນີ້ບໍ່ພຽງແຕ່ຫາກໍເລີ້ມຕົ້ນຂຶ້ນໃນໄລຍະໜຶ່ງໆມານີ້ເທົ່ານັ້ນມັນຫາກມີມາແຕ່ ມີການສ້າງຕັ້ງສາຍພົວພັນການທູດນຳກັນ, ເປັນຕົ້ນແມ່ນນັບແຕ່ປີ 1986 ເປັນຕົ້ນມາເຊິ່ງເປັນປີທີ່ ສປປລາວ ໄດ້ເປີດກວ້າງນະໂຍບາຍໃໝ່ (ລະບົບເສດຖະກິດໃໝ່) ນັບແຕ່ນັ້ນມາຍີ່ປຸ່ນໄດ້ເອົາໃຈໃສ່ຮ່ວມມືກັນເປັນພິເສດ ໃນການພົວພັນຮ່ວມມືຊ່ວຍເຫຼືອໃຫ້ແກ່ ສປປລາວ ເຊິ່ງມີຈຸດປະສົງເປົ້າໝາຍໃນການພັດທະນາປະເທດລາວໃຫ້ຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ. ຍີ່ປຸ່ນໃຫ້ການຮ່ວມມືຊ່ວຍເຫຼືອ ສປປລາວເປັນຕົ້ນແມ່ນອົງການ ໄຈກາ (JICA) ເຊິ່ງເປັນອົງການຫຼັກທີ່ໄດ້ໃຫ້ການສະໜັບສະໜູນຄວາມພະຍາຍາມຂອງລັດຖະບານລາວເຮົາ ໃນການພັດທະນາປະເທດຊາດ, ຜ່ານມາອົງການ ໄຈກາ ໄດ້ໃຫ້ການຊ່ວຍເຫຼືອລາວ ລວມທັງໄລຍະຍາວ ແລະ ໄລຍະພັດທະນາເສດຖະກິດ-ສັງຄົມ ເພື່ອຊຸກຍູ້ສົ່ງເສີມໃນການປະຕິຮູບເສດຖະກິດຢູ່ ສປປລາວ ເພື່ອເປັນການຮັດແໜ້ນຄວາມສາມະຄີ, ສາຍພົວພັນອັນດີງາມ ແລະ ເພື່ອການຜູກພັນການຮ່ວມມືລາວຍີ່ປຸ່ນໃຫ້ມີຄວາມແໜ້ນແຟ້ນຂຶ້ນກວ່າເກົ່ານັ້ນ, ລັດຖະບານຍີ່ປຸ່ນກໍໄດ້ມີການເຊື້ອເຊີນລັດຖະບານ ສປປລາວ ໄປຢ້ຽມຢາມ ສັນທະວະໄມຕີມິດຕະພາບຢ່າງເປັນທາງການເຊັ່ນ: ໃນປີ ຄສ 1989 ພະນະ ທ່ານ ໄກສອນ ພົມວິຫານ ຜູ້ນຳສູງສຸດຂອງ ສປປລາວ ກໍໄດ້ເດີນທາງໄປຢ້ຽມຢາມຍີ່ປຸ່ນ. ຕໍ່ມາໃນປີ ຄສ 1995 ພະນະ ທ່ານ ຄຳໄຕ ສີພັນດອນດ,ໃນຖານະ ນາຍົກລັດຖະມົນຕີກໍໄດ້ເດີນທາງໄປຢ້ຽມຢາມ ຍີ່ປຸ່ນເຊັ່ນດຽວກັນ.

# ບົດຄວາມຕົວຢ່າງ:

ການຮ່ວມມືລາວ-ຍີ່ປຸ່ນດ້ານການສຶກສາ (ວິທະຍາໄລູສາລະວັນ ຮ່ວມກັນອົງການໄຈກາ JICA )

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໞໟໟໞໞໟ

ກະຊວງສຶກສາທິການ ແລະ ກິລາ

ກົມຄູ

ວິທະຍາໄລຄູສາລະວັນ

ເລກທີ.............ວຄ.ສລວ/2017

ລົງວັນທີ....20 APR 2017.........

## ໜັງສືແຈ້ງຕອບ

**ຄວາມຕ້ອງການອາສາສະໝັກຂອງອົງການ JICA**

- **ຮຽນ:** ທ່ານ ຫົວໜ້າກົມສ້າງຄູກະຊວງສຶກສາທິການ ແລະ ກິລາ ທີ່ເຄົາລົບ ແລະ ນັບຖືຢ່າງສູງ
- **ເລື່ອງ:** ຄວາມຕ້ອງການອາສາສະໝັກຂອງອົງການ JICA
- **ອີງຕາມ:** ໜັງສືແຈ້ງການຂອງກະຊວງສຶກສາທິການ ແລະ ກິລາສະບັບເລກທີ 207ສຄ ລົງວັນທີ 28 ມີນາ 2017

ຜູ້ອຳນວຍການວິທະຍາໄລຄູສາລະວັນຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ພວກຂ້າພະເຈົ້າມີຄວາມຕ້ອງການອາສາສະໝັກຂອງອົງການ JICA ໃນລາຍວິຊາຄູປະຖົມ ເນື່ອງຈາກວ່າວິທະຍາໄລຄູຂອງພວກຂ້າພະເຈົ້າຈະສ້າງສູນແຫ່ງຄວາມເປັນເລີດສາຍຄູປະຖົມ ແລະ ອາສາສະໝັກທີ່ມີໃນປັດຈຸບັນມີຈຳນວນ 1 ທ່ານ, ຍິງ 0 ທ່ານ ໃນລາຍວິຊາຄະນິດສາດ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

**ແຜນອາສາສະໝັກທີ່ມີຢູ່ໃນປະຈຸບັນ**

| ລ/ດ | ຊື່ວິຊາ | ຊື່ອາສາສະໝັກ | ຈຳນວນ |
|---|---|---|---|
| 01 | ຄະນິດສາດ | ທ. ທາກາຮິໂຕະ ນາການິຊິ | 1 ທ່ານ |

**ແຜນຄວາມຕ້ອງການອາສາສະໝັກ 1 ວິຊາຕົ້ນຕໍ:**

| ລ/ດ | ຊື່ວິຊາ | ຈຳນວນ |
|---|---|---|
| 01 | ຄູປະຖົມ | 1 ທ່ານ |

ດັ່ງນັ້ນ,ຈຶ່ງແຈ້ງມາຍັງທ່ານຮັບຊາບເພື່ອຄົ້ນຄວ້າພິຈາລະນາ ແລະ ໃຫ້ທິດຊີ້ນຳພວກຂ້າພະເຈົ້າດ້ວຍ.

(ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ)

ຜູ້ອຳນວຍການວິທະຍາໄລຄູສາລະວັນ

ສຸວິດ [illegible]

ຮຽນ: ທ່ານ ວັດທະນາ ໝັ້ນວິໄລ

ຂ້າພະເຈົ້າຫວັງວ່າທ່ານຄົງຈະໄດ້ຮັບຈົດໝາຍນີ້ທາງອີເມວ ໃນນາມຕ່າງໜ້າໂຄງການຂອງພວກເຮົາ, ຂ້າເຈົ້າຂໍສະແດງຄວາມຂອບໃຈຢ່າງສູງຕໍ່ການສະໜັບສະໜູນໂຄງການຂອງພວກເຮົາຢ່າງຕໍ່ເນື່ອງ.

ຂ້າພະເຈົ້າກໍາລັງລໍຖ້າເພື່ອຂໍການອະນຸມັດຈາກທ່ານ ແລະ ຈັດສົ່ງທ່ານ ນາງ ສຸລິພອນ ສີວິໄຊ ເດີນທາງໄປເຮັດວຽກທີ່ ແຂວງ ຈໍາປາສັກໃນລະຫວ່າງວັນທີ 23-24 ມິຖຸນາ 2022. ເພື່ອແລກປ່ຽນບົດຮຽນ ແລະ ແບ່ງປັນປະສົບການໆຮຽນທີ່ປະເທດຍີ່ປຸ່ນຮ່ວມກັບນັກສຶກສາລາວ ທີ່ມະະໄລຈໍາປາສັກ.

ລາຍລະອຽດຂໍໃຫ້ທ່ານເບິ່ງເອກະສານທີ່ຄັດຕິດມາພ້ອມ

ຂໍຂອບໃຈລ່ວງໜ້າທີ່ທ່ານໃຫ້ການສະໜັບສະໜູນ

ດ້ວຍຄວາມປາດຖະໜາດີ

ຢຸຊືເກະ ນິ

(FAX)856 21 241101 P.002/003

11/12/2017 09:56 Jica Laos Office

0117 11 DEC 2017

JICA

Japan International Cooperation Agency
ອົງການຮ່ວມມືສາກົນ ຍີ່ປຸ່ນ ປະຈໍາລາວ

ຮຽນທ່ານນາງ ສີສົມບຸນ ອຸນາວົງ
ຮັກສາການຫົວໜ້າກົມຮ່ວມມືສາກົນ
ກະຊວງແຜນການ ແລະ ການລົງທຶນ

ວັນທີ 7 ທັນວາ 2017
ເລກທີ. JICA-LA E20171207-01/ ML

ເລື່ອງ: ການຢ້ຽມຢາມແຂວງສາລະວັນ, ແຂວງຈໍາປາສັກ ແລະ ແຂວງສະຫວັນນະເຂດ ຂອງ ທ່ານ ຮຽວ ນາມິກິ, ຜູ້ປະສານງານ ອາສາສະໝັກຍີ່ປຸ່ນ

ເຖິງ ທ່ານນາງ ສີສົມບຸນ,

ອົງການຮ່ວມມືສາກົນຍີ່ປຸ່ນ (ໄຈກາ) ປະຈໍາລາວຂໍສະເໜີມາຍັງທ່ານເພື່ອຊາບວ່າ ທ່ານ ຮຽວ ນາມິກິ, ຜູ້ປະສານງານ ອາສາສະໝັກຍີ່ປຸ່ນ ແລະ ພະນັກງານ ອົງການໄຈກາປະຈໍາລາວ ມີແຜນຈະໄປຢ້ຽມຢາມ ແຂວງສາລະວັນ, ແຂວງຈໍາປາສັກ ແລະ ແຂວງສະຫວັນນະເຂດ ໃນລະຫວ່າງວັນທີ 20 ຫາ 22 ເດືອນທັນວາ 2017.

ຈຸດປະສົງໃນການໄປຄັ້ງນີ້ກໍ່ເພື່ອລົງສໍາຫຼວດການຮ້ອງຂໍອາສາສະໝັກ ແລະ ຕິດຕາມເບິ່ງວຽກງານອາສາສະໝັກຢູ່ແຂວງດັ່ງກ່າວ, ຕາມຕາຕະລາງ ແລະ ລາຍຊື່ແມ່ນຕິດຂັດມາພ້ອມນີ້.

ສະເໜີໃຫ້ພາກສ່ວນກ່ຽວຂ້ອງຮູ້ລ່ວງໜ້າ ເພື່ອກຽມຄວາມພ້ອມພົບກັບພວກກ່ຽວຕາມທີ່ໄດ້ສະເໜີມາ ກະລຸນາຕິດຕໍ່ຫາໂດຍກົງ ເພື່ອຄວາມສະດວກຂອງການນັດພົບໃນຄັ້ງນີ້.
ສໍາລັບຂໍ້ມູນເພີ່ມເຕີມ ແລະ ລາຍລະອຽດຕ່າງໆແມ່ນສາມາດຕິດຕໍ່ຫາ ທ່ານ ນາງ ມະລີ ວັນນະພາຈອນ ໂທ: 021-241100-ext: 224 ຫຼື ໂທລະສັບມືຖື: 020-28040503 ຫຼື ອີເມວ VannaphachoneMali.LA@jica.go.jp

ຂໍຂອບໃຈນໍາທ່ານທີ່ໃຫ້ຄວາມຮ່ວມມື,

ດ້ວຍຄວາມນັບຖືຢ່າງສູງ,

JAPAN INTERNATIONAL COOPERATION AGENCY JICA LAOS

for ໄຟຊິຕາ ໂຢໂນສະ
ຜູ້ຕາງໜ້າ ອົງການຮ່ວມມືສາກົນຍີ່ປຸ່ນ (ໄຈກາ) ຫ້ອງການໄຈກາປະຈໍາລາວ

Cc:

- ຫົວໜ້າອໍານວຍການວິທະຍາໄລຄູສາລະວັນ, ແຂວງສາລະວັນ
- ຫົວໜ້າອໍານວຍການວິທະຍາໄລຄູຈໍາປາສັກ, ແຂວງຈໍາປາສັກ
- ຫົວໜ້າພະແນກສຶກສາ ແລະ ກິລາ, ແຂວງຈໍາປາສັກ
- ຫົວໜ້າອໍານວຍການວິທະຍາໄລຄູສະຫວັນນະເຂດ, ແຂວງສະຫວັນນະເຂດ
- ຫົວໜ້າພະແນກສຶກສາ ແລະ ກິລາ, ແຂວງສະຫວັນນະເຂດ
- ຮອງປະທານ ມະຫາວິທະຍາໄລສະຫວັນນະເຂດ, ແຂວງສະຫວັນນະເຂດ

JICA Laos Office 2nd Floor, Sacom Bank Building, Hayaok Village, Chanthabouly District, Vientiane Capital, Lao PDR
Tel: (856-21) 241100/241095-9 Fax: (856-21) 241101-2 Email: la_oso_rep@jica.go.jp

11/12/2017 09:56 Jica Laos Office (FAX)856 21 241101 P.002/003

ເລກທີ 0117 11 DEC 2017

JICA

Japan International Cooperation Agency
ອົງການຮ່ວມມືສາກົນ ຍີ່ປຸ່ນ ປະຈຳລາວ

ຮຽນທ່ານນາງ ສີສົມບຸນ ອຸນາວົງ
ຮັກສາການຫົວໜ້າກົມຮ່ວມມືສາກົນ
ກະຊວງແຜນການ ແລະ ການລົງທຶນ

ວັນທີ 7 ທັນວາ 2017
ເລກທີ. JICA-LAE20171207-01/ML

ເລື່ອງ: ການຢ້ຽມຢາມແຂວງສາລະວັນ, ແຂວງຈຳປາສັກ ແລະ ແຂວງສະຫວັນນະເຂດ ຂອງ ທ່ານ ຮຽວ ນາມິກິ, ຜູ້ປະສານງານ ອາສາສະໝັກຍີ່ປຸ່ນ

ເຖິງ ທ່ານນາງ ສີສົມບຸນ,

ອົງການຮ່ວມມືສາກົນຍີ່ປຸ່ນ (ໄຈກາ) ປະຈຳລາວຂໍສະເໜີມາຍັງທ່ານເພື່ອຊາບວ່າ ທ່ານ ຮຽວ ນາມິກິ, ຜູ້ປະສານງານ ອາສາສະໝັກຍີ່ປຸ່ນ ແລະ ພະນັກງານ ອົງການໄຈກາປະຈຳລາວ ມີແຜນຈະໄປຢ້ຽມຢາມ ແຂວງສາລະວັນ, ແຂວງຈຳປາສັກ ແລະ ແຂວງສະຫວັນນະເຂດ ໃນລະຫວ່າງວັນທີ 20 ຫາ 22 ເດືອນທັນວາ 2017.

ຈຸດປະສົງໃນການໄປຄັ້ງນີ້ກໍ່ເພື່ອລົງສຳຫຼວດການຮ້ອງຂໍອາສາສະໝັກ ແລະ ຕິດຕາມເບິ່ງວຽກງານອາສາສະໝັກຢູ່ແຂວງດັ່ງກ່າວ, ຕາມຕາຕະລາງ ແລະ ລາຍຊື່ແມ່ນຕິດຂັດມາພ້ອມນີ້.

ສະເໜີໃຫ້ພາກສ່ວນກ່ຽວຂ້ອງຮູ້ລ່ວງໜ້າ ເພື່ອກຽມຄວາມພ້ອມພົບກັບພວກກ່ຽວຕາມທີ່ໄດ້ສະເໜີມາ ກະລຸນາຕິດຕໍ່ຫາໂດຍກົງ ເພື່ອຄວາມສະດວກຂອງການນັດພົບໃນຄັ້ງນີ້.
ສຳລັບຂໍ້ມູນເພີ່ມເຕີມ ແລະ ລາຍລະອຽດຕ່າງໆແມ່ນສາມາດຕິດຕໍ່ຫາ ທ່ານ ນາງ ມະລີ ວັນນະພາຈອນ ໂທ: 021-241100-ext: 224 ຫຼື ໂທລະສັບມືຖື: 020-28040503 ຫຼື ອີເມວ VannaphachoneMali.LA@jica.go.jp

ຂໍຂອບໃຈນຳທ່ານທີ່ໃຫ້ຄວາມຮ່ວມມື,

ດ້ວຍຄວາມນັບຖືຢ່າງສູງ,

JAPAN INTERNATIONAL COOPERATION AGENCY JICA LAOS

for ໄຟຊິຮາ ໂຢ[illegible]
ຜູ້ຕາງໜ້າ ອົງການຮ່ວມມືສາກົນຍີ່ປຸ່ນ (ໄຈກາ) ຫ້ອງການໄຈກາປະຈຳລາວ

Cc:

- ຫົວໜ້າອຳນວຍການວິທະຍາໄລຄູສາລະວັນ, ແຂວງສາລະວັນ
- ຫົວໜ້າອຳນວຍການວິທະຍາໄລຄູຈຳປາສັກ, ແຂວງຈຳປາສັກ
- ຫົວໜ້າພະແນກສຶກສາ ແລະ ກິລາ, ແຂວງຈຳປາສັກ
- ຫົວໜ້າອຳນວຍການວິທະຍາໄລຄູສະຫວັນນະເຂດ, ແຂວງສະຫວັນນະເຂດ
- ຫົວໜ້າພະແນກສຶກສາ ແລະ ກິລາ, ແຂວງສະຫວັນນະເຂດ
- ຮອງປະທານ ມະຫາວິທະຍາໄລສະຫວັນນະເຂດ, ແຂວງສະຫວັນນະເຂດ

JICA Laos Office 2nd Floor, Sacom Bank Building, Haysok Village, Chanthabouly District, Vientiane Capital, Lao PDR
Tel: (856-21) 241100/241095-9 Fax: (856-21) 241101-2 Email: la_oso_rep@jica.go.jp


ພວກເຮົາແມ່ນໃຜ?
ມະຫາວິທະຍາໄລໂອກາຢາມາ Okayama ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກກະຊວງສຶກສາທິການ, ວັດທະນະທຳ, ກິລາ, ວິທະຍາສາດ ແລະ ເຕັກໂນໂລຊີ "ໂຄງການສົ່ງເສີມການຮ່ວມມືລະຫວ່າງປະເທດຍີ່ປຸ່ນ (ອາຊີຕາເວັນອອກສ່ຽງໃຕ້)" ຂອງກະຊວງສຶກສາທິການ, ວັດທະນະທຳ, ກິລາ, ວິທະຍາສາດ ແລະ ເຕັກໂນໂລຊີ ຕັ້ງແຕ່ປີ 2019, ແລະ ພວມດຳເນີນງານເພື່ອເພີ່ມຈຳນວນນັກສຶກສາຍີ່ປຸ່ນຈາກອາຊຽນ ລວມທັງປະເທດລາວໃນຫ້າປີ.
OJEIC (Okayama University Japan Educational Information Center ຫຼື (ສູນຂໍ້ມູນຂ່າວສານການສຶກສາທີ່ປະເທດຍີ່ປຸ່ນຂອງມະຫາວິທະຍາໄລໂອກາຢາມາ), ປະເທດລາວ ແມ່ນຫ້ອງການປະຈຳຢູ່ນະຄອນຫຼວງວຽງຈັນຂອງໂຄງການນີ້. ພວກເຮົາສະໜັບ ສະໜູນທຸກຄົນທີ່ຢາກໄປຮຽນຕ່າງປະເທດໂດຍສະເພາະໃນປະເທດຍີ່ປຸ່ນ.
ກະລຸນາເວົ້າເລື່ອງການຮຽນຢູ່ຍີ່ປຸ່ນ, ສະຖາບັນການສຶກສາຂອງຍີ່ປຸ່ນ, ທຶນການສຶກສາ, ວິທີການຊອກຫາທຶນ, ແລະ ອື່ນໆ.
ທ່ານສາມາດໃຊ້ບໍລິການທັງໝົດໄດ້ເຊັ່ນ:ອຸປະກອນການຄົ້ນຫາ ແລະການປຶກສາຫາລືການສຶກສາຮຽນຕໍ່ຢູ່ຕ່າງປະເທດໄດ້ໂດຍບໍ່ເສຍຄ່າ.
ຟຼີ ( ບໍ່ເສຍຄ່າ )
ການເຂົ້າເຖິງ & ການຕິດຕໍ່ພົວພັນ
OJEIC (Okayama University Japan Educational Information Center
ຫຼື ສູນຂໍ້ມູນຂ່າວສານການສຶກສາຂອງຍີ່ປຸ່ນຂອງມະຫາວິທະຍາໄລ), ນະຄອນຫຼວງວຽງຈັນ
ທີ່ຢູ່: ສຳນະນາຫ້ອງເບີ1, ສະຖາບັນພັດທະນາຊັບພະຍາກອນມະນຸດລາວ-ຍີ່ປຸ່ນ, ມະຫາວິທະຍາໄລແຫ່ງຊາດລາວ, ວິທະຍາເຂດດົງໂດກ, ກຳແພງນະຄອນວຽງຈັນ.
ອີເມວ E-mail: ojeicvte@gmail.com
ເວັບໄຊ Website: https://studyinjapan-asean.jp/
ເຟດບຸກ Facebook @StudyinJapan.Laos
TEL: 020-5277-3971, 030-4805307
STUDY in JAPAN for ASEAN
JEIC
Study in Japan
Global Network Project
Regional Office in ASEAN,
ຫ້ອງການທີ່ນະຄອນຫຼວງວຽງຈັນ
ວັນທີເປີດ: ວັນຈັນ - ວັນສຸກ
ເວລາທີ່ເປີດ: 9 ໂມງຕອນເຊົ້າ - 5 ໂມງແລງ
ເຈົ້າຢາກໄປຮຽນຕໍ່ທີ່ປະເທດຍີ່ປຸ່ນບໍ່?

ຮູບພາບ:ຕົວຢ່າງການຮ່ວມມືລາວ-ຍີ່ປຸ່ນ ດ້ານການສຶກສາ



ເອກະສານອ້າງອີງ

- ສະເຫຼີມສັກ ພາບຸດດີ (ພ້ອມຄະນະ) ກະຊວງສຶກສາທິການ ແລະ ກິລາ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ 2016
- ປື້ມແບບຮຽນປະຫວັດສາດຊັ້ນມັດທະຍົມສຶກສາປີທີ 7 ໜ້າທີ 55-59
- https://th.wikipedia.org/wiki

| **ໂຄງຮ່າງຫຼັກສູດລາຍວິຊາ**<br>**ຊື່ວິຊາ: ປະຫວັດສາດຍີ່ປຸ່ນ**<br>**ຫຼັກສູດສ້າງຄູມັດທະຍົມລະບົບ 12+4**<br>**ລະຫັດວິຊາ: 0906107** | |
|---|---|
| ລະບົບ - ພາກຮຽນ | ລະບົບ 4 ປີ ພາກຮຽນ 1 ປີ 1 |
| ຈຳນວນຊົ່ວໂມງ | **32** ຊົ່ວໂມງ |
| ຈຳນວນໜ່ວຍກິດ | **2** (2-**2**-2) |
| ອະທິບາຍຄ່າໜ່ວຍກິດ | ວິຊານີ້ ປະກອບດ້ວຍ **2** ໜ່ວຍກິດໃນນັ້ນມີ **2** ຊົ່ວໂມງບັນລະຍາຍຕໍ່ອາທິດໃນ **16** ອາທິດເທົ່າກັບ **32** ຊົ່ວໂມງ |
| ຈຸດປະສົງ | ເມື່ອຮຽນວິຊານີ້ແລ້ວນັກສຶກສາຄູຈະສາມາດ:<br>**1.** ອະທິບາຍໄດ້ພັດທະນາການດ້ານຕ່າງໆຂອງຍີ່ປຸ່ນແຕ່ບູຮານເຖິງປັດຈຸບັນ.<br>**2.** ວິເຄາະ ແລະ ໄຈ້ແຍກກ່ຽວກັບວິທີການພັດທະນາປະເທດໄປສູ່ທັນສະ ໄໝຂອງຍີ່ປຸ່ນໄດ້.<br>**3.** ອະທິບາຍບົດບາດຂອງຍີ່ປຸ່ນທີ່ມີຕໍ່ກັບສັງຄົມໂລກປັດຈຸບັນໄດ້. |

| | |
|---|---|
| ເນື້ອໃນຫຍໍ້ | ວິຊານີ້ຮຽນຮູ້ກ່ຽວກັບປະຫວັດຄວາມເປັນມາຂອງຊາດຍີ່ປຸ່ນໂດຍເນັ້ນເຖິງ ການພັດທະນາທາງດ້ານເສດຖະກິດ,ສັງຄົມຂອງຍີ່ປຸ່ນແຕ່ສະໄໝບູຮານເຖິງປັດຈຸບັນ,ການຮ່ວມມືລະຫວ່າງລາວ-ຍີ່ປຸ່ນແລະບົດບາດຂອງຍີ່ປຸ່ນໃນສັງຄົມ ໂລກ. |
| ການດຳເນີນການສອນ | ວິຊານີ້ປະກອບມີ **8** ບົດ ແຕ່ລະບົດມີຫຼາຍຫົວຂໍ້ຍ່ອຍ. ໂດຍນຳໃຊ້ວິທີ ສອນແບບບັນລະຍາຍ, ອະທິບາຍ, ສຳມະນາ ແລະ ອະພິປາຍສົນທະນາ ພາຍໃນຫ້ອງຮຽນ ແລະຂຶ້ນລາຍງານເປັນກຸ່ມ ຫຼື ບຸກຄົນ ຈາກນັ້ນຄູສະຫຼຸບ ບົດຮຽນຄືນ. |
| ສື່ການສອນ/ອຸປະກອນ | ຄອມພິວເຕີ, ເຄື່ອງສາຍ **LCD** ບົດສອນ, ສື່ມີແຜນທີ່ໂລກ,, ແຜນທີ່ປະເທດຍີ່ປຸ່ນ, ແຜນທີ່ທະວີບເອີຣົບ... |
| ວິທີປະເມີນ/ຮູບແບບການປະເມີນ | - ສັງເກດການມີສ່ວນຮ່ວມຂອງນັກຮຽນ<br>- ການສົນທະນາຂອງນັກຮຽນ<br>- ການນຳສະເໜີຂອງນັກຮຽນ, ລາຍງານກິດຈະກຳຂອງນັກຮຽນ<br>- ການກວດຍ່ອຍ, ກວດກາງພາກ, ແລະ ການສັງລວມວິຊາ |
| ແຜນການສອນ<br>ອາທິດ 1 | ບົດທີ 1<br>ຮ່ອງຮອຍວັດທະນະທຳຂອງຍີ່ປຸ່ນ<br>1 ທີ່ຕັ້ງຂອບເຂດພູມສັນຖານຂອງປະເທດຍີ່ປຸ່ນ<br>2 ຍຸກຫີນໃໝ່ **(** Paleolithic Age **)**<br>3 ທາງດ້ານວັດທະນະທຳ |
| ອາທິດ 2 | ບົດທີ 2<br>ຍີ່ປຸ່ນສະໄໝບູຮານ**(** Ancient japan)<br>1 ຍຸກໂຈມົງ **(** Jomon period **)**<br>1.1 ດ້ານວັດທະນະທຳ<br>2 ຍຸກຍະໂຍອິ **(** yayoi period **)**<br>2.1 ດ້ານວັດທະນະທຳ |
| ອາທິດ 3 | ບົດທີ **2 (**ຕໍ່**)**<br>ການປະກົດຕົວ ແລະ ພັດທະນາການລັດບູຮານຍີ່ປຸ່ນ<br>**3** ຍຸກໂຄະຟຸ້ງ<br>**3.1** ດ້ານວັດທະນະທຳ |
| ອາທິດ **4** | ບົດທີ **3**<br>ການປະກົດຕົວ ແລະ ພັດທະນາການລັດບູຮານຍີ່ປຸ່ນ<br>**1.** ຍຸກ ອະຊູກະ **( Atsuka period)**<br>**1.2**. ດ້ານວັດທະນະທຳ<br>**2** ຍຸກນາຣະ**(Nara period)** |

| | |
|---|---|
| | 2.1 ດ້ານວັດທະນະທຳ |
| ອາທິດ **5** | **3.** ຍຸກ ເຮອັນ ( **Heian**)<br>**3.** 1 ດ້ານວັດທະນະທຳ |
| ອາທິດ 6 | ບົດທີ 4<br>ຍີ່ປຸ່ນໃນຍຸກກາງ(ຄສ. 1185-1868**)**<br>1 ຍຸກ ຄາມະກູຣະ **(** Kamakura period)<br>1.1 ການກໍ່ຕັ້ງລັດຖະບານໂຊກຸນ<br>1.2 ດ້ານວັດທະນະທຳ |
| ອາທິດ**7** | ບົດທີ **4(**ຕໍ່**)**<br>ຍີ່ປຸ່ນໃນຍຸກກາງ(ຄສ. **1185-1868)**<br>**2** ຍຸກ ມູໂຣະມະຊິ **( Murom chi period)**<br>**2.1** ດ້ານວັດທະນະທຳ |
| ອາທິດ **8** | ບົດທີ **4(**ຕໍ່**)**<br>ຍີ່ປຸ່ນໃນຍຸກກາງ(ຄສ. **1185-1868)**<br>**3** ຍຸກເຊັງໂກກຸ **( sengoku period )**<br>**3.1** ດ້ານວັດທະນະທຳ<br>**4** ຍຸກອະຊຸຈິໂມະຍະມະ **( Azuchimomoyama period )**<br>**4.1** ດ້ານວັດທະນະທຳ |
| ອາທິດ**9** | ບົດທີ **5**<br>ຍີ່ປຸ່ນສະໄໝ ເອໂດະ **Edo (**ຄສ. **1603 -1868 )**<br>**1** ສະພາບທາງດ້ານການເມືອງການປົກຄອງ<br>**2** ສະໄໝບາກຸໝັດສຸ **( Bakumatsu )**<br>**3** ດ້ານວັດທະນະທຳ |
| ອາທິດ**10** | ບົດທີ **6**<br>ຍີ່ປຸ່ນໃນ ສະໄໝການປົກຄອງຂອງຈັກກະພັດ**(** ຄສ **1868 -1945 )**<br>**1** ການປົກຄອງຂອງຈັກກະພັດເມຈິ **( Meiji Resstoration)**<br>**1.1** ສົງຄາມຍີ່ປຸ່ນກັບຈີນແລະຣັດເຊຍ**(Wars with china andRusia)** |

| | |
|---|---|
| ອາທິດ **11** | ບົດທີ **6** (ຕໍ່)<br>ຍີ່ປຸ່ນໃນ ສະໄໝການປົກຄອງຂອງຈັກກະພັດ( ຄສ **1868 -1945 )**<br>**2** ຍີ່ປຸ່ນໃນກຸ່ມພັນທະມິດ**(Anglo Japanese Alliance )**<br>**2.1** ການເຂົ້າຮ່ວມສົງຄາມໂລກຄັ້ງທີ**I ( World warl)**<br>ກິດຈະກຳປະຈຳບົດ **:** ຄູອະທິບາຍ ສົນທະນາກັບນັກຮຽນແລ້ວວາງຫົວຂໍ້ໃຫ້ ນັກ ຮຽນຄົ້ນຄ້ວາເປັນກຸ່ມເພື່ອແລກປ່ຽນຄວາມຄິດຄວາມເຫັນ ດ້ວຍກັນຈາກ ນັ້ນ ນັກຮຽນສະຫຼຸບແລ້ວນັກຮຽນຂຶ້ນລາຍງານຈາກນັ້ນຄູສະຫຼຸບຄືນ. |
| ອາທິດ**12** | ບົດທີ **6** (ຕໍ່)<br>ຍີ່ປຸ່ນໃນ ສະໄໝການປົກຄອງຂອງຈັກກະພັດ( ຄສ **1868 -1945 )**<br>**3** ການກາຍເປັນຟາຊິດ **( Fascism in Japan )**<br>**4** ການເຂົ້າຮ່ວມສົງຄາມໂລກຄັ້ງທີ**II** |
| ອາທິດ **13** | ບົດທີ **7**<br>ປະເທດຍີ່ປຸ່ນໃນສັງຄົມໂລກຄັ້ງທີ **II**<br>**1** ໂຄງສ້າງຂອງສັງຄົມຍີ່ປຸ່ນໃນປັດຈຸບັນ<br>**2** ຍີ່ປຸ່ນກັບການເປັນມະຫາອຳນາດທາງເສດຖະກິດ |
| ອາທິດ **14** | ບົດທີ **7** (ຕໍ່)<br>ປະເທດຍີ່ປຸ່ນໃນສັງຄົມໂລກຄັ້ງທີ **II**<br>**3.** ແນວທາງການຕ່າງປະເທດຂອງຍີ່ປຸ່ນ |
| ອາທິດ **15** | ບົດທີ **8**<br>ການຮ່ວມມື ລາວ **-** ຍີ່ປຸ່ນ<br>**1** ປະຫວັດຄວາມເປັນມາຂອງການຮ່ວມມື ລາວ **-** ຍີ່ປຸ່ນ<br>**2** ຮູບແບບການຮ່ວມມື |
| ອາທິດ **16** | ບົດທີ **8**(ຕໍ່)<br>ການຮ່ວມມື ລາວ **-** ຍີ່ປຸ່ນ<br>**3.** ແຜນການຮ່ວມມືລາວ **-** ຍີ່ປຸ່ນ<br>**4.** ຄຸນປະໂຫຍດຂອງການຮ່ວມມືລາວ **-** ຍີ່ປຸ່ນ |
| ການປະເມີນ | **1.** ການຂຶ້ນຫ້ອງຮຽນ **10%**<br>**2.** ນັກສຶກສາມີສ່ວນຮ່ວມ **30%**<br>**3.** ກວດກາກາງພາກ **20%**<br>**4** ເສັງຈົບໜ່ວຍກິດ **40%** |
| ເອກະສານອ້າງອີງ | ພາສາລາວ**:** |

| | |
|---|---|
| | **1.** ກະຊວງຕ່າງປະເທດ, ເອກະສານຕ່າງປະເທດ, ວຽງຈັນ, ບ.ປ.ພ.<br>**2.** ສະເຫຼີມສັກ ພາບຸດດີ, ປະຫວັດສາດຍີ່ປຸ່ນ, ຄວຄ **2005.**<br>**3.** ສະເຫຼີມສັກ ພາບຸດດີ.ປະຫວັດສາດໂລກສະໄໝໃໝ່ ສຳຫຼັບສ້າງຄູ **11+3 ,** ສູນ ພັດທະນາຄູ, **1998.**<br>**4.** ເຫຼີມສັກ ພາບຸດດີ,ດຳດວນ ຄວງວິຈິດ .ປະຫວັດສາດໂລກສະໄໝໃໝ່ ສຳ ຫຼັບສ້າງຄູ **11+3 ,**ສູນ ພັດທະນາຄູ, **1998.**<br>**5.** ວຽງວິຈິດ ສຸດທິເດດ ແບບຮຽນປະຫວັດສາດ ຊັ້ນ ມັດທະຍົມປີທີ **6** ພິມທີ່ ວິສະຫະກິດໂຮງພິມສຶກສາ, **2005.** ພາສາໄທ:<br>**6.** ທະນູແກ້ວ ໂອພາດ,ປະຫວັດສາດໂລກ,ໂຮງພິມ ສຸກຂະພາບໃຈ,ປີພ.ສ **2549**<br>**7.** ອໍລະ ພິນ ປານມາດ ພ້ອມຄະນະ, ອະລິຍະທຳຕາເວັນອອກ, ພິມທີ່ວິທະ ຍາໄລລາມຄຳແຫ່ງ, ພ.ສ **2546.** |
| ຊື່ຜູ້ຂຽນ | **1.** ຊອ ປານີ ມາໄລສານ ວິທະຍາໄລຄູຄັງໄຂ<br>ເບີໂທ **020 22344556 email Ppany @gmaill.com**<br>**2.** ຊອ ປທ ນ ເພັດສະໝອນ ພຸດສະດີ ວິທະຍາໄລຄູຄັງໄຂ<br>ເບີໂທ **020 54717783 email phetsasamonepsd@gmaill.com**<br>**3.** ທ່ານ ປທ ນ ບົວລີ ພັນທະພາ ວິທະຍາໄລຄັງໄຂ<br>ເບີໂທ **555487700 email phetsasamonepsd@gmaill.com**<br>**4.** ຊອ ປທ ນ ສຸວັນທອນ ຍົດສະຫວັດ ມະຫາໄລແຫ່ງຊາດ<br>ເບີໂທ **020** 5579 8939 **Email: thonesvt 2021 @gmaill.com**<br>**5.** ຊອ ປທ ນ ພິມໃຈ ອິນແປງ ວິທະຍາໄລດົງຄຳຊ້າງ<br>ເບີໂທ **020 28221124 Email: phiminpheng @gmaill.com**<br>**6.** ນ ວິໄລພອນ ສິມສຸດທິ ມະຫາໄລແຫ່ງຊາດ ( ຄະນະສຶກສາສາດ )<br>ເບີໂທ **020 77933567 Email: mam svk.119 @gmaill.com**<br>**7.** ຊອ ປທ ນ ສີງອຳໄພ ພິມພາພອນ ວິທະຍາໄລຄູສາລະວັນ<br>ເບີໂທ **030 9095686 Email: phimphasingsum @gmaill.com**<br>**8.** ປທ ອຸ່ນເຕົ້າ ໄຊຍະແສງ ສູນພັດທະນາຄູ<br>ເບີໂທ **020 56472846 Email: ountao76 @gmaill.com**<br>**9.** ນ ດາວອນ ສິດທິເດດ ສູນພັດທະນາຄູ<br>ເບີໂທ **020 2889 2323 Email: DavonesiTThided @gmaill.com** |